# ປະຫວັດສາດໂລກຕາເວັນຕົກ

# ສະໄໝໃໝ່ເຫຼັ້ມ 2




ວິທະຍາໄລຄູສາລະວັນ

**2024**

# ປະຫວັດສາດໂລກຕາເວັນ
# ຕົກສະໄໝໃໝ່
# ເຫຼັ້ມທີ 2

ຮຽບຮຽງໂດຍ: ວູ໊ເຢືອງນາມ
ຫາງວຽນວັນໂຮ່ງ

ແປ ແລະ ຕີພິມໂດຍ: ອຈ ປທ ນ ສີງອຳໄພ ພົມພາພອນ

ກວດແກ້ໂດຍ: ວັດທະນາ ໝັ້ນວິໄລ
ຊອ ນ ອິນປອນ ເພັງສຸວັນ
ປທ ບຸນທັນ ສຸກສະຫວັນ
ປທ ນ ລຸ້ງຟ້າ ຂັນຕິວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

໙໙໙໙໙໙໙໙


ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ພາກວິຊາປະຫວັດສາດ-ພູມສາດ


# ໃບຮັບຮອງ

## ການກວດແກ້ການແປເອກະສານປະກອບການສອນ

## ຫົວຂໍ້: ປະຫັວດສາດໂລກຕາເວັນຕົກສະໄໝໃໝ່ ເຫຼັ້ມ 2

( ແປຈາກພາສາຫວຽດມາເປັນພາສາລາວ)

**ພາກວິຊາ**: ປະຫວັດສາດ-ພູມສາດ

**ຜູ້ແປເອກະສານປະກອບການສອນ:**

ທ່ານ ອຈ ປທ ນາງ ສີງອຳໄພ ພິມມະສອນ

| **ຄະນະກຳມະການກວດແກ້ບົດ** | **ລາຍເຊັນ** |
|---|---|
| ທ່ານ ວັນທະນາ ໜັ້ນວິໄລ | ................................ |
| ທ່ານ ຊອ ນາງ ອິນປອນ ເພັງສຸວັນ | ................................ |
| ທ່ານ ປທ ບຸນທັນ ສຸກສະຫັວນ | ................................ |
| ທ່ານ ປທ ນາງ ລຸ້ງຟ້າ ຂັນຕິວົງ | ................................ |

**ທີ່ສາລະວັນ, ວັນທີ .....................**

**ຫົວໜ້າພາກວິຊາ..........................**

ບຸນທັນ ອົ໋ມວໍລະວົງ

Bounthanh OMVORAVONG

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຩຩຩຩຬຬຬຬ

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ເລກທີ 47 ສພ.ວສ

# ໃບຮັບຮອງ

## ອະນຸມັດຜ່ານການຮັບຮອງການແປເອກະສານປະກອບການສອນ ຫົວຂໍ້: ປະຫັວດສາດໂລກຕາເວັນຕົກສະໄໝໃໝ່ ເຫຼັ້ມ 2 (ແປຈາກພາສາຫວຽດມາເປັນພາສາລາວ)

- **ອີງຕາມ:** ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ.
- **ອີງຕາມ:** ແຜນປັບປຸງຄຸນນະພາບ QA ຂອງກະຊວງສຶກສາທິການ ແລະ ກິລາ, ໃນມາດຕະຖານທີ 10 ຕົວຊີ້ວັດທີ 48-50 ການຄົ້ນຄວ້າວິທະຍາສາດ ແລະ ການບໍລິການ.
- **ອີງຕາມ:** ຂໍ້ຕົກລົງວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ ສະພາວິທະຍາສາດຂອງວິທະຍາໄລຄູສາລະວັນ ສະບັບເລກທີ 05/ສພ.ວສ, ລົງວັນທີ 7 ມີນາ 2024.

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກຳມະການເຫັນວ່າ ບົດຄົ້ນຄວ້າຂຽນເອກະສານປະກອບການສອນຫົວຂໍ້: ປະຫັວດສາດໂລກຕາເວັນຕົກສະໄໝໃໝ່ ເຫຼັ້ມ 2 ມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳນົດ ແລະ ສະພາວິທະຍາສາດຈຶ່ງໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ - ການສອນໃນວິທະຍາໄລຄູສາລະວັນ.

| **ຄະນະກຳມະການກວດສອບ** | **ລາຍເຊັນ** |
|---|---|
| ທ່ານ ປອ ສຸພັນ ເທບພະວົງສາ | ........................ |
| ທ່ານ ອຈ ນາງ ຈັນໂທ ໄຊຍະເສນ | ........................ |
| ທ່ານ ບຸນທັນ ອິ້ມວໍລະວົງ | ........................ |

**ທີ່ສາລະວັນ, ວັນທີ ....................................**

**ປະທານສະພາວິທະຍາສາດ**

ອຈ. ບ ລົມປອງ ແສນທະວິສຸກ

# ຄຳນຳ

ການແປເອກະສານປະກອບການສອນ ປະຫວັດສາດໂລກຕາເວັນຕົກສະໄໝໃໝ່ເຫຼັ້ມ 2 ຈາກພາສາຫວຽດນາມມາເປັນພາສາລາວ ມີຈຸດປະສົງເພື່ອເປັນການຕອບສະໜອງເອກະສານເຂົ້າໃນການສອນປະຫວັດສາດໂລກໃນລະບົບ 12+4 ປະຫວັດສາດປີທີ 4.

ເນື້ອໃນເອກະສານປະກອບມີ 4 ບົດ ປະກອບມີ 112 ໜ້າ ຫວັງຢ່າງຍິ່ງວ່າເອກະສານສະບັບນີ້ຈະເປັນປະໂຫຍດແກ່ບັນດາທ່ານຄູອາຈານ, ນັກສຶກສາ ແລະ ຜູ້ທີ່ສົນໃຈໃນປະຫວັດສາດໂລກ.

ການແປເອກະສານຄັ້ງນີ້ບໍ່ສາມາດປາສະຈາກໄດ້ຂໍ້ຂາດຕົກບົກຜ່ອງ ໂດຍສະເພາະການນຳໃຊ້ສັບພາສາ , ການອອກແບບຮູບພາບ ແລະ ການຕີພິມ ແລະ ພ້ອມຮັບການການຕຳນິທີ່ມີລັກສະນະສ້າງສັນເພື່ອມາປັບປຸງການແປໃນຄັ້ງຕໍ່ໄປ.

# ສາລະບານ

ຄຳນຳ ........ a
ສາລະບານ ........ b
ບົດທີ 6 ........ 1
ການກຳເນີດລັດທະສັງຄົມນິຍົມວິທະຍາສາດ ........ 1
I. ການຂະຫຍາຍຕົວຂອງລັດທິທຶນນິຍົມ ແລະ ຂະບວນການລຸກຮື້ຂຶ້ນຕໍ່ສູ້ຂອງຊົນຊັ້ນກຳມະກອນ ........ 1
II. ໄລຍະເວລາໃນການກະກຽມໃຫ້ແກ່ການກຳເນີດລັດທິສັງຄົມນິຍົມວິທະຍາສາດ ........ 4
III. ຖະແຫຼງການພັກຄອມມູນິດ ແລະ ແນວທາງການປະຕິວັດຂອງຊົນຊັ້ນກຳມະຊີບ ........ 9
ບົດທີ 7 ........ 17
ຂະບວນການປະຕິວັດນາຍທຶນຢູ່ເອີຣົບກາງສະຕະວັດທີ 19 ........ 17
I. ຂະບວນການປະຕິວັດປີ 1848, ລະບອບສາທາລະນະລັດ ແລະ ຈັກກະພັດທີ 2 ຢູ່ປະ ເທດຝຣັ່ງ ........ 17
II. ການປະຕິວັດເດືອນກຸມພາ ແລະ ການສ້າງຕັ້ງລັດຖະບານຊົ່ວຄາວ ........ 17
III. ການສ້າງຕັ້ງລະບອບສາທາລະນະລັດ ແລະ ຂະບວນການປະຕິວັດເດືອນມິຖຸນາ ........ 21
V ປະເທດຝຣັ່ງໃນລະບອບຈັກກະພັດຄັ້ງທີ 2 ........ 27
ການປະຕິວັດໃນປີ 1848 ແລະ ການທ້ອນໂຮມຄວາມເປັນເອກະພາບໃນປະເທດປະເທດເອກະພາບ ........ 35
I. ສະພາບການຂອງປະເທດເຢຍລະມັນໃນຕົ້ນສະຕະວັດທີ 19 ........ 35
II.ການປະຕິວັດປີ 1848 ຢູ່ປະເທດເຢຍລະມັນ ........ 41
III.ຂະບວນການຕໍ່ສູ້ເພື່ອຄວາມເປັນເອກະພາບຂອງເຢຍລະມັນ ........ 45
ບັນດາປະເທດເອີຣົບໃນລະຫວ່າງສະຕະວັດທີ 19 ........ 53
I ການປຕິວັດປີ 1848-1849 ຢູ່ປະເທດຈັກະພັດສັກດິນາໂອຕຣິດ ........ 53
II.ຂະບວນການປະຕິວັດປີ 1848 ແລະ ຂະບວນການຕໍ່ສູ້ເພື່ອທ້ອນໂຮມແຜ່ນດິນໃຫ້ເປັນເອກະ ........ 57
ບົດທີ 8 ........ 81
ປະເທດອາເມຣິກາໃນຕົ້ນສະຕະວັດທີ 19 ແລະ ສົງຄາມພາຍໃນປີ 1861-1865 ........ 81
I. ປະເທດອາເມຣິກາໃນກາງຕົ້ນສະຕະວັດທີ 19 ແລະ ການດຳເນີນສົງຄາມພາຍໃນ ........ 81
II. ສົງຄາມພາຍໃນປະເທດອາເມຣິການໃນປີ 1861-1865 ........ 89
III. ປະເທດອາເມຣິກາພາຍຫຼັງສົງຄາມພາຍໃນ ........ 93
ບົດທີ 9 ........ 95
ສາກົນທີ 1 ........ 95
I.ການຟື້ນຟູ ແລະ ການພັດທະນາຂອງການປະຕິວັດກຳມະຊີບໃນກາງສະຕະວັດທີ 19 ........ 95
II.ການສ້າງຕັ້ງສາກົນທີ 1, ຖະແຫຼງການ ແລະ ກົດບັດ ........ 97
III.ໄລຍະການເຄື່ອນໄຫວ ແລະ ການຕໍ່ສູ້ຂອງສາກົນທີ1 ........ 99
ອໍກັດສ ເບແບລ August Bebel ........ 105

# ບົດທີ 6

# ການກຳເນີດລັດທິສັງຄົມນິຍົມວິທະຍາສາດ

ທິດສະດີສັງຄົມນິຍົມວິທະຍາສາດຂອງມາກ ແລະ ອັງແກນ ລິເລີ່ມປະກົດຕົວຂຶ້ນໃນຊຸມປີ 40 ຂອງສະຕະວັດທີ 19ທີ່ເປັນເຫດການທາງປະຫວັດສາດອັນຍິ່ງໃຫຍ່ໃນສັງຄົມມະນຸດ. ເຊິ່ງເກີດຂຶ້ນບົນພື້ນຖານ ແລະເງື່ອນໄຂແຫ່ງການຂະຫຍາຍຕົວຂອງເສດຖະກິດທຶນນິຍົມ ແລະ ແມ່ນໝາກຜົນຂອງຂໍ້ຂັດແຍ່ງກັນລະຫວ່າງຊົນຊັ້ນນາຍທຶນ ແລະ ຊົນຊັ້ນກຳມະຊີບທີ່ນັບມື້ນັບເພີ່ມທະວີຄວາມຮຸນແຮງຂຶ້ນເລື້ອຍໆ. ເຊິ່ງໄດ້ເປັນການປະກອບສ່ວນຕອບສະໜອງຄວາມຮູ້ທາງດ້ານວິທະຍາສາດໃຫ້ແກ່ມວນມະນຸດກ່ຽວກັບກົດເກນທຳມະຊາດ ແລະ ສັງຄົມ. ເປັນເຄື່ອງມື ແລະ ອາວຸດທາງດ້ານແນວຄິດຂອງຊົນຊັ້ນກຳມະຊີບໃນການຕໍ່ສູ້ຕ້ານກັບຊົນຊັ້ນນາຍທຶນ, ເພື່ອປົດປ່ອຍຊາວຜູ້ອອກແຮງງານ, ປົດແອກການກົດຂີ່ຂູດຮີດ, ຍົກສູງຄັນທຸງສັງຄົມນິຍົມ ແລະ ລັດທິຄອມມູນິດ.

## I. ການຂະຫຍາຍຕົວຂອງລັດທິທຶນນິຍົມ ແລະ ຂະບວນການລຸກຮື້ຂຶ້ນຕໍ່ສູ້ຂອງຊົນຊັ້ນກຳມະກອນ

### 1. ການຂະຫຍາຍຕົວຂອງລັດທິທຶນນິຍົມ

ການປະຕິວັດອຸດສະຫະກຳອັງກິດເລີ່ມຕົ້ນເມື່ອກາງສະຕະວັດທີ 18 ເຮັດໃຫ້ມີການປ່ຽນແປງ ຕໍ່ກັບການພັດທະນາກຳລັງແຮງໃນການຜະລິດ ແລະ ສາຍພົວພັນໃນການຜະລິດ. ຄວາມກ້າວໜ້າທາງດ້ານເຕັກນິກສິ່ງຜົນສະທ້ອນຕໍ່ພື້ນຖານເສດຖະກິດຄືປ່ຽນຈາກການອອກແຮງງານດ້ວຍກຳລັງເຮືອແຮງ ແລະ ຕີນມື ມາເປັນການອອກແຮງງານດ້ວຍເຄື່ອງກົນຈັກ (ປ່ຽນຈາກແຮງງານຂອງຄົນມາເປັນເຄື່ອງຈັກ), ປ່ຽນຈາກໂຮງງານຫັດຖະກຳມາເປັນໂຮງານອຸດສະຫະກຳທີ່ທັນສະໄໝ. ປ່ຽນຈາກການນຳໃຊ້ພະລັງງານຈາກລົມຈາກນ້ຳມາເປັນເຄື່ອງຈັດອາຍນ້ຳ. ຍ້ອນແນວນັ້ນພຽງແຕ່ເວລາສັ້ນໆເຮັດໃຫ້ປະເທດອັງກິດປະສົບຜົນສຳເລັດຫອັນໃຫຍ່ຫຼວງທາງດ້ານເສດຖະກິດ. ຮອດຊຸມປີ 30-40 ຂອງສະຕະວັດທີ 19 ປະເທດອັງກິດໄດ້ກາຍເປັນູນກາງທາງດ້ານອຸດສະຫະກຳຂອງໂລກ ແລະ ກ້າວເຂົ້າສູ່ຍຸກແຫ່ງອຸດສະຫະກຳໂດຍນຳໃຊ້ກຳລັງການຜະລິດດ້ວຍເຄື່ອງກົນຈັກໃນຊຸມປີ 50-60. ລັດທິທຶນນິຍົມຝຣັ່ງສາມາດຍາດເອົາໄຊຊະນະຢ່າງຫຼວງຫຼາຍໃນການເຮັດສົງຄາມ, ເຮັດໃຫ້ປະເທດຝຣັ່ງມີບົດບາດກວ່າປະເທດອື່ນໃນການລ່າອະນານິຍົມ. ການເລີ່ມຕົ້ນຂອງການປະຕິວັດອຸດສະຫະກຳຢູ່ຝຣັ່ງຈະຊ້າ ແລະ ລະດັບການປ່ຽນແປງຈະຊ້າກວ່າປະເທດອັງກິດ. ພື້ນຖານອຸດສະຫະກຳຢູ່ປະເທດເຢຍລະມັນມີການຂະຫຍາຍຕົວຢ່າງຈະແຈ້ງ, ໂດຍສະເພາະແມ່ນອຸດສະຫະກຳຖ່ານຫີນ ແລະ ຫຼອມໂລຫະຢູ່ເຂດ ແຮັງ ແວັດຟາແລນ , ອຸດສະຫະກຳຕ່ຳແຜ່ນຢູ່ເຊີເລຍຽນ ແລະ ຢັກແຢນ. ສູນກາງທ້າງດ້ານອຸດສະຫະກຳໄດ້ເກີດຂຶ້ນຫຼາຍແຫ່ງທີ່ມີໂຮງງານຜະລິດຂະໜາດໃຫຍ່.ເວົ້າລວມແມ່ນການປ່ຽນແປງທຳອິດກ່ຽວກັບກຳລັງແຮງການຜະລິດໃໝ່ທີ່ຍັງຖືກກົດໜ່ວງ ເພາະຍັງມີການພົວພັນການຜະລິດເຄິ່ງສັກດີນາ ແລະ ສະພາບການຖືກກົດຂວາງທາງດ້ານການເມືອງ. ໂຣນບັງ, ອາເມຣິກາເໜືອ ແລະ ເຂດອື່ນທີ່ມີເສດຖະກິດຂະຫຍາຍຕົວຊ້າໂດຍສະເພາະເຊັດເຊັກໂກສະໂລວາກີ, ໂອຕຣິດ, ຮົງກາລີ ແລະ ອີຕາລີ ໄດ້ຄ່ອຍໆກ້າວເຂົ້າສູ່ເສດຖະກິດອຸດສະຫະກຳ.

ການຂະຫຍາຍຕົວດີທີ່ກ່າວມານັ້ນໄດ້ສົ່ງຜົນຕໍ່ກັບການສ້າງຕັ້ງອຳນາດການປົກຄອງຂອງລັດທິທຶນນິຍົມໃນບັນດາປະເທດທີ່ໄດ້ເຮັດການປະຕິວັດສັງຄົມ ແລະ ສ້າງເງື່ອນໄຂເຮັດໃຫ້ລັດທິທຶນນິຍົມໄດ້ຮັບໄຊຊະນະລະບອບສັກ

ດົນນາໃນຊ່ວງເວລາອີກບໍ່ດົນ. ບົນພື້ນຖານດັ່ງກ່າວນັ້ນ, ມາຮອດປີ 50-ປີ 60 ຂອງສະຕະວັດທີ 19 ການປະຕິວັດອຸດສະຫະກຳໄດ້ປະສົບຜົນສຳເລັດຢູ່ບັນດາປະເທດທີ່ພັດທະນາຂອງທະວີບເອີຣົບ ແລະ ອາເມຣິກາເໜືອ. ພ້ອມດຽວກັນນັ້ນບັນດາຕົວເມືອງໃຫຍ່ມີການປ່ຽນແປງເຕັມໄປດ້ວຍໂຮງຈັກໂຮງງານທີ່ທັນສະໄໝທີ່ເຕັມໄປດ້ວຍເຄື່ອງກົນຈັກ ແລະ ເຕັມໄປດ້ວຍກຳມະກອນຫຼາຍສິບພັນຄົນ. ບັນດາເສັ້ນທາງຄົມມະນາຄົມຂົນສົ່ງໄດ້ຮັບການສ້າງຂຶ້ນເພື່ອເຊື່ອມຕໍ່ກັບສູນກາງອຸດສະຫະກຳດ້ວຍກັນ. ລົບລ້າງການຕັດແຍກອອກຈາກກັນ(ການບໍ່ໄດ້ຕິດຕໍ່ພົວພັນກັນ)ທີ່ມາແຕ່ດົນນານແລ້ວ ແຕ່ຄວາມຈະເລີນດັ່ງກ່າວນັ້ນພັດຖືກຈຳກັດກົດເກນມູນຄ່າສ່ວນເກີນຂອງສິນຄ້າ ແລະ ກົດເກນແຫ່ງການສະແຫວງຫາຜົນກຳໄລເຮັດໃຫ້ກຳມະກອນກາຍເປັນສິນຄ້າຂອງນາຍທຶນທີ່ຖືກກົດຂີ່ຂູດຮີດຫຼາຍທີ່ສຸດເຊິ່ງບໍ່ເຄີຍມີມາກ່ອນ. ພາບຄວາມແຕກຕ່າງທາງດ້ານຖານະຂອງຊົນຊັ້ນນາຍທຶນ ແລະ ຊະຕາກຳຂອງຊົນຊັ້ນກຳມະກອນທີ່ນັບມື້ນັບໄດ້ຮັບການກົດຂີ່ຂູດຮີດທີ່ນັບມື້ນັບຮຸນແຮງ ແລະ ເຫັນໄດ້ຢ່າງຈະແຈ້ງ. ການປະຕິວັດອຸດສະຫະກຳເຮັດໃຫ້ກຳມະກອນໜາແໜ້ນ ແລະ ລວມຕົວກັນຫຼາຍ ເພື່ອອອກແຮງງານ ແຕ່ຊີວິດການເປັນຢູ່ບໍ່ໄດ້ຮັບການປັບປຸງໃຫ້ດີຂຶ້ນ. ຊີວິດການເປັນຢູ່ຂອງເຂົາເຈົ້າແມ່ນທຸກຍາກລຳບາກ ແລະ ຂາດເຂີນທີ່ສຸດ. ຈຳນວນຊົ່ວໂມງໃນການອອກແຮງງານໃນແຕ່ລະມື້ແກ່ຍາວເວລາແຕ່ 12-16 ຊົ່ວໂມງ/ວັນ ແຕ່ໄດ້ຮັບເງິນເດືອນຕໍ່າ. ກຳມະກອນຜູ້ອອກແຮງງານທີ່ເປັນເດັກນ້ອຍ ແລະ ແມ່ຍິງຖືກນຳໃຊ້ຫຼາຍແຕ່ຄ່າແຮງງານຕໍ່າຍ້ອນວິກິດການທາງດ້ານເສດຖະກິດເຮັດໃຫ້ກຳມະກອນບໍ່ພໍໃຈ ແລະ ພ້ອມທີ່ຈະລວມຕົວກັນເດີນຂະບວນປະທ້ວງຕາມຖະໜົນຫົນທາງໃນຕົວເມືອງ. ບົດປະພັນທີ່ມີຊື່ວ່າ "ສະຕາກຳຂອງຊົນຊັ້ນຜູ້ອອກແຮງງານໃນປະເທດອັງກິດ" ຂອງທ່ານ ອັງແກນ ໄດ້ຮັບການຕີພິມໃນປີ 1815 ເປັນອີກໜຶ່ງບົດປະພັນທີ່ຍົກໃຫ້ເຫັນເຖິງການກົດຂີ່ຂູດຮີດຂອງຊົນຊັ້ນນາຍທຶນທີ່ມີຕໍ່ກຳມະກອນ. ທຸກຄວາມຂັດແຍ່ງຂອງຊົນຊັ້ນນາຍທຶນ ແລະ ຊົນຊັ້ນກຳມະກອນ ລ້ວນແຕ່ບໍ່ໄດ້ຮັບການແກ້ໄຂ ແລະ ຍິ່ງຈະເພີ່ມຄວາມຮຸນແຮງຂຶ້ນເລື້ອຍໆ.

**2. ບາດກ້າວທຳອິດແຫ່ງການລຸກຮື້ຂຶ້ນຕໍ່ສູ້ຂອງຊົນຊັ້ນກຳມະກອນ**

ຄວາມຂັດແຍ່ງຂອງຊົນຊັ້ນນາຍທຶນ ແລະ ຊົນຊັ້ນກຳມະຊີບນັບມື້ນັບເພີ່ມທະວີຂຶ້ນເລື້ອຍໆ, ຊົນຊັ້ນກຳມະກອນນັບມື້ຍິ່ງພາກັນລຸກຂຶ້ນຕໍ່ສູ້ເພື່ອທວງເອົາສິດຜົນປະໂຫຍດຂອງຕົນ. ທຳອິດແມ່ນເກີດຂຶ້ນໃນໂຮງງານຫັດຖະກຳ ແລະ ກຳມະກອນໄດ້ລຸກຂຶ້ນຕໍ່ສູ້ຕ້ານກັບເຈົ້າຂອງໂຮງງານພໍໃຜພໍລາວບໍ່ມີການນຳພາ ຫຼື ບໍ່ມີການຈັດຕັ້ງທີ່ແຂງແກ່ນ. ໃນເວລານັ້ນຂໍ້ຂັດແຍ່ງຕົ້ນຕໍໃນສັງຄົມແມ່ນຄວາມຂັດແຍ່ງລະຫວ່າງຮູບແບບການຜະລິດແບບທຶນນິຍົມກັບການພົວພັນການຜະລິດແບບສັກດີນາ. ກຳມະກອນຍັງບໍ່ທັນມີແນວຄິດຕໍ່ຕ້ານນາຍທຶນຊ້ຳບໍ່ໜຳຍັງປະຕິບັດຕາມຄຳສັ່ງຂອງພວກນາຍທຶນໃນການຕໍ່ສູ້ກັບສັດຕູຂອງນາຍທຶນອີກດ້ວຍ. ການເຂົ້າຮ່ວມຂະບວນການປະຕິວັດນາຍທຶນຢູ່ເອີຣົບ ແລະ ອາເມຣິກາເໜືອ ໄດ້ປະກອບສ່ວນຢ່າງຕັ້ງໜ້າໃນການຍາດເອົາໄຊຊະນະໃນການຕໍ່ສູ້ຕ້ານກັບລະບອບສັກດີນາ ແລະ ຜົນປະໂຫຍດຈາກການສະນະສົງຄາມໄດ້ມາຕົກຢູ່ໃນກຳມືຂອງຊົນຊັ້ນນາຍທຶນ.

ຮູບແບບການຕໍ່ສູ້ທຳອິດຂອງກຳມະກອນ ແມ່ນການລຸກຂຶ້ນປະທ້ວງຄັດຄ້ານການນຳໃຊ້ເຄື່ອງກົນຈັກ. ໃນໄລຍະທຳອິດຂອງການປະຕິວັດອຸດສະຫະກຳພວກກຳມະກອນມີແນວຄິດທີ່ວ່າ: ຕົ້ນເຫດຂອງຄວາມທຸກຍາກ ແລະ ຄວາມເຈັບປວດຕົ້ນຕໍແມ່ນມາຈາກບັນດາເຄື່ອງຈັກ ສະນັ້ນຈິ່ງເຮັດໃຫ້ມີຂະບວນການຕໍ່ສູ້ດ້ວຍການທຳລາຍເຄື່ອງຈັກ, ໂຮງງານ ແຜ່ຂະຫຍາຍຢ່າງໄວວາໄປທົ່ວສູນກາງທາງດ້ານອຸດສະຫະກຳ. ແຕ່ຕໍ່ມາພວກເຂົາຈິ່ງຄ່ອຍໆຄິດໄດ້ວ່າສັດຕູທີ່ແທ້ຈິງຂອງພວກເຂົາບໍ່ແມ່ນເຄື່ອງຈັກ ແລະ ຜົນຂອງການທຳລາຍເຄື່ອງຈັກ ຫຼື ໂຮງງານຂອງພວກ

ກຳມະກອນແມ່ນການປາບປາມຂອງພວກຊົນຊັ້ນປົກຄອງ. ພວກເຂົາຈຶ່ງດຳເນີນການລຸກຂຶ້ນຕໍ່ສູ້ ແລະ ສ້າງຕັ້ງສະຫະພັນກຳມະກອນຂຶ້ນ. ໃນຊຸ່ມປີທີ 20 ຫາ ປີ 30 ຂອງສະຕະວັດທີ 19. ບັນດາຂະແໜງການອອກແຮງງານຕ່າງໆຢູ່ອັງກິດລ້ວນແຕ່ມີການສ້າງຕັ້ງສະຫະພັນກຳມະກອນຂຶ້ນ ໂດຍມີນະໂຍບາຍເພື່ອປົກປ້ອງສິດຜົນປະໂຫຍດຂອງກຳມະກອນ ແລະ ຕໍ່ຕ້ານທຸກການເຄື່ອນໄຫວທີ່ເປັນປໍລະປັກຂອງພວກຊົນຊັ້ນນາຍທຶນ. ຈຸດປະສົງ ແລະ ເປົ້າໝາຍຂອງສະຫະພັນດັ່ງກ່າວນັ້ນແມ່ນການຮຽກຮ້ອງໃຫ້ປັບປຸງເງິນເດືອນ, ເຕົ້າໂຮມກັນຈັດຕັ້ງເປັນກ້ອນກຳລັງໜຶ່ງທີ່ຂຶ້ນກັບເຈົ້າຂອງໂຮງງານ, ການກຳນົດເງິນເດືອນແມ່ນຂຶ້ນກັບຜົນກຳໄລຂອງສິນຄ້າທີ່ຜະລິດອອກມາ, ເພີ່ມເງິນເດືອນກຳມະກອນໃຫ້ເໝາະກັບສະພາບການດຳລົງຊີວິດ. ຢູ່ປະເທດອັງກິດບໍ່ມີອາທິດໃດ, ບໍ່ມີມື້ໃດທີ່ບໍ່ມີຂະບວນການລຸກຂຶ້ນປະທ້ວງຕໍ່ສູ້ຕ້ານກັບບັນຫາເງິນເດືອນຕໍ່າ ຫຼື ເວົ້າຢ່າງໜຶ່ງວ່າພວກກຳມະກອນບໍ່ຍອມຮັບເງິນເດືອນທີ່ນາຍທຶນຕ້ອງການຈ່າຍໃຫ້, ຕ້ານກັບການທຸບຕີທຳລາຍຮ່າງກາຍ ແລະ ຕ້ານກັບລະບຽບການທີ່ເຄັ່ງຄັດຂອງເຈົ້າຂອງໂຮງງານ. ແຕ່ທຸກຂະບວນການລຸກຂຶ້ຮປະທ້ວງກໍ່ບໍ່ປະສົບຜົນສຳເລັດ, ມັນເປັນພຽງຮູບການຕໍ່ຕ້ານນ້ອຍຈຶ່ງບໍ່ສາມາດແກ້ໄຂບັນຫາໃຫຍ່ຫຍັງໄດ້.



ຂະບວນເດີນປະທ້ວງຂອງກຳມະກອນອັງກິດຕາມຖະໜົນຢູ່ຕົວເມືອງໃນກາງສະຕະວັດທີ 19

ຕະຫຼອດໄລຍະການຕໍ່ສູ້ຊົນຊັ້ນກຳມະກອນຈຶ່ງຄ່ອຍໆມີຄວາມຮູ້, ມີປະສົບ ການ ແລະ ມີການຈັດຕັ້ງຫຼາຍຂຶ້ນ, ພວກເຂົາໄດ້ດຳເນີນການຕໍ່ສູ້ຂະຫຍາຍເປັນວົງກວ້າງຂຶ້ນກວ່າເກົ່າ, ການຕໍ່ສູ້ບໍ່ໄດ້ເປັນພຽງການຕໍ່ສູ້ຕ້ານກັບເຈົ້າຂອງໂຮງງານເທົ່ານັ້ນແຕ່ມັນຍັງເປັນການຕໍ່ສູ້ຕ້ານກັບຊົນຊຸມນາຍທຶນທັງໝົດອີກດ້ວຍ.ບໍ່ພຽງແຕ່ຕໍ່ສູ້ເພື່ອຮຽກຮ້ອງສິດຜົນປະໂຫຍດທາງດ້ານເສດຖະກິດແຕ່ຍັງຕ້ອງການສິດທາງດ້ານການເມືອງຢ່າງຈະແຈ້ງ. ຂະບວນການລຸກຮື້ຂຶ້ນ

ທີ່ເມືອງ ລີອົງ ຢູ່ປະເທດຝຣັ່ງໃນປີ 1831 ແລະ ປີ 1834, ຂະບວນການຕໍ່ສູ້ເພື່ອກົດບັດຢູ່ອັງກິດແຕ່ປີ 1836 ຫາ 1848 ແລະ ຂະບວນການຕໍ່ສູ້ ເຊີເລຢຽນ ຢູ່ ເຢຍລະມັນໃນປີ 1844 ໄດ້ເປັນເຄື່ອງໝາຍແຫ່ງການຕໍ່ສູ້ທີ່ມີຈຸດອ່ອນ ແລະ ຂໍ້ຄົງຄ້າງອັນໃຫຍ່ຫຼວງຄື: ບໍ່ທັນມີແນວທາງຍຸດທະສາດໃນການຕໍ່ສູ້ທີ່ມີລັກສະນະວິທະຍາສາດຢ່າງແນ່ນອນ, ບໍ່ທັນມີການຈັດຕັ້ງນຳພາທີ່ສະຫຼາດສ່ອງໃສຂອງຊົນຊັ້ນກຳມະກອນ. ລັດທິສັງຄົມນິຍົມແບບໄຝ່ຝັນຂອງແຊັງຊີມົງ, ຟົວລີເອ, ໂອແວນບໍ່ສາມາດແກ້ໄຂຂໍ້ບົກຜ່ອງດັ່ງກ່າວນັ້ນໄດ້. ການກຳເນີດລັດທິສັງຄົມນິຍົມວິທະຍາສາດ ຜູ້ສ້າງທິດສະດີນີ້ແມ່ນທ່ານກາກມາກ ແລະ ທ່ານ ອັງແກນ ແມ່ນຜູ້ສ້າງພື້ນຖານແນວຄິດທິດສະດີກ່ຽວກັບການແກ້ໄຂບັນຫາຄວາມຕ້ອງການຂອງຊົນຊັ້ນກຳມະກອນ

## II. ໄລຍະເວລາໃນການກະກຽມໃຫ້ແກ່ການກຳເນີດລັດທິສັງຄົມນິຍົມວິທະຍາສາດ

### 1. ໄລຍະເວລາແຫ່ງການເຄື່ອນໄຫວປະຕິວັດໃນເບື້ອງຕົ້ນຂອງທ່ານ ກາກມາກ ແລະ ຟີເດຣິກ ອັງແກນ




ທ່ານ ກາກມາກ ຜູ້ສ້າງລັດທິສັງຄົມນິຍົມວິທະຍາສາດ

ທ່ານ ກາກມາກ ເກີດເມື່ອວັນທີ 5 ພຶດສະພາ ປີ 1818ທີ່ນະຄອນເຕີຣີເອ ຢູ່ບໍລິເວນແມ່ນ້ຳແຮ້ງ, ເປັນສູນກາງອຸດສະຫະກຳໜຶ່ງຂອງປະເທດເປຣັດເຊຍ (ເຢຍລະມັນໃນປັດຈຸບັນ), ພໍ່ຂອງທ່ານເປັນນັກກົດໝາຍ, ເປັນຊາວ ຢິວ ທີ່ມີການສຶກສາສູງ ແລະ ມີແນວຄິດກ້າວໜ້າ. ກາກມາກໄດ້ຮຽນຈົບຊັ້ນມັດທະຍົມສຶກສາຢູ່ ເຕີຣີເອໃນປີ 1835 ທ່ານໄດ້ຂຽນບົດຈົບຊັ້ນທີ່ມີຊື່ວ່າ “ ບັນດາຂໍ້ຄິດຂອງໄວໜຸ່ມໃນການຊອກວຽກເຮັດ” ໃນນັ້ນທ່ານໄດ້ຍົກໃຫ້ເຫັນວ່າຈຸດ

ສູງສຸດຂອງມະນຸດແມ່ນການດຳລົງຊີວິດ, ຫຼັງຈາກນັ້ນທ່ານໄດ້ເຂົ້າຮຽນຢູ່ມະຫາວິທະຍາໄລ ບອນ ຈາກນັ້ນຈຶ່ງກັບຄືນມາເບີລິນ ໄດ້ເຮັດການຄົ້ນຄວ້າບົດວິທະຍານິພົນຈົບຊັ້ນປະລິນຍາຕີ ໂດຍສະເພາະແມ່ນວິຊາປະຫວັດສາດ ແລະ ປັດຊະຍາ. ໃນປີ 1841 ທ່ານໄດ້ຂຶ້ນນຳສະເໜີບົດຈົບຊັ້ນປະລິນຍາເອກໃນຫົວຂໍ້" ຄວາມແຕກຕ່າງລະຫວ່າງປັດຊະຍາທຳມະຊາດ ເດໂມຄຣິດ ແລະ ປັດຊະຍາທຳມະຊາດ ເອປີກົວ" ໃນເວລານັ້ນທ່ານແມ່ນນັກຈິດຕະນິຍົມກຸ່ມເຮແກນຜູ້ໜຸ່ມນ້ອຍ (ກຸ່ມເຮແກນລຸ້ນໜຸ່ມ) ທ່ານໄດ້ຊອກວິທີການນຳສະເໜີປັດຊະຍາເຮແກນ ບັນດາຂໍ້ສະຫຼຸບກ່ຽວກັບການບໍ່ຫຼີກເຊື່ອງີມງາຍຈົນເຖິງແນວຄິດຂອງການປະຕິວັດ.

ເດືອນເມສາ ປີ 1842 ທ່ານໄດ້ກັບຄືນມາເຮັດວຽກຢູ່ສຳນັກພິມແມ່ນ້ຳແຮັງ, ເຊິ່ງເປັນສຳນັກພິມຂອງຝ່າຍນາຍທຶນທີ່ມີແນວຄິດກ້າວໜ້າ  ແລະ ມີແນວຄິດຄ້າຍຄືກັບກຸ່ມເຮແກນລຸ້ນໜຸ່ມ, 6 ເດືອນຕໍ່ມາທ່ານໄດ້ກາຍເປັນນັກຂຽນປະຈຳສຳນັກພິມທ່າອ່ຽງປະຊາທິປະໄຕປະຕິວັດຂອງໜັງສືພິມຄ່ອຍໆຖືກຍອມຮັບ. ທ່ານໄດ້ຍົກໃຫ້ເຫັນບັນຫາອັນຮີບດ່ວນທີ່ຈະຕ້ອງແກ້ໄຂຂອງປະເທດເຢຍລະມັນຄື: ການກົດຂີ່ຂູດຮີດຊາວກະສິກອນ, ເສັ້ນທາງສູ່ຄວາມເປັນເອກະພາບໃນເຢຍລະມັນ ແລະ ການຕໍ່ສູ້ລັດທິຊຸນສຶກປຣັດເຊຍ ແລະ ຕໍ່ສູ້ຕ້ານກັບຂະບວນການຕໍ່ຕ້ານທີ່ມີລັກສະນະຫຼ້າຫຼັງບໍ່ທັນສະໄໝຢູ່ປຣັດເຊຍ... ກາກມາກໄດ້ຜ່ານການທົດສອບຫຼາຍຢ່າງ, ມາໃນເດືອງມັງກອນ ປີ 1843 ລັດຖະບານຕໍ່ຕ້ານໄດ້ຕັດສິນໃຈສັ່ງປິດສຳນັກພິມນີ້ລົງ, ກາກມາກໄດ້ຖອນຕົວອອກຈາກຄະນະບັນນາທິການໜັງສືພິມ. ຮອດລະດູໃບໄມ້ຫຼົ່ນທ່ານໄດ້ເດີນທາງໄປນະຄອນຫຼວງ ປາຣີ ເຊິ່ງໃນເວລານັ້ນ ປາຣີແມ່ນສູນກາງເຕົ້າລວມບັນດານັກປະຕິວັດຂອງເອີຣົບ.

ຢູ່ທີ່ ປາຣີກາກມາກໄດ້ມີການພົບປະບັນດານັກເຄື່ອນໄຫວປະຕິວັດໃນຂະບວນການຕໍ່ສູ້ຂອງກຳມະກອນ, ຄຽງຄູ່ກັນນັ້ນທ່ານກໍ່ໄດ້ທຳການສຶກສາຄົ້ນຄວ້າປະຫວັດສາດແຫ່ງການປະຕິວັດຂອງປະເທດຝຣັ່ງ, ສຶກສາຄົ້ນຄວ້າກ່ຽວກັບປັດຊະຍາວັດຖຸນິຍົມຂອງຝຣັ່ງ ແລະ ບັນດາປຶ້ມທີ່ຂຽນໂດຍທ່ານ ພົວຣີເອ, ແຊັງຊີມົງ ເດຍາມີ... ຕະຫຼອດເວລາທີ່ທ່ານອາໄສຢູ່ຝຣັ່ງເຮັດໃຫ້ມາກມີການປ່ຽນແປງຈາກແນວຄິດປະຊາທິປະໄຕ ໄປສູ່ແນວຄິດແບບຄອມມູນິດ. ການປ່ຽນແປງທາງດ້ານແນວຄິດທາງການເມືອງດັ່ງກ່າວນັ້ນຕິດພັນກັບການປ່ຽນແປງທາງດ້ານແນວຄິດໃນປັດຊະຍາຈາກລັດທິຈິດຕະນິຍົມມາເປັນລັດທິວັດຖຸນິຍົມ. ທຳອິດທ່ານເປັນຄົນໜຶ່ງທີ່ຢູ່ໃນກຸ່ມເຮແກນຜູ້ໜຸ່ມນ້ອຍທ່ານກາກມາກໄດ້ສະຫຼຸບການປະຕິວັດ. ກາກມາກຄ່ອຍໆຮັບຮູ້ ຈຸດອ່ອນຂອງລະບົບປັດຊະຍາຈິດຕະນິຍົມ ແລະ ອະນຸລັກນິຍົມເຊິ່ງມັນໄດ້ສິ່ງຜົນສະທ້ອນສຳຄັນຕໍ່ກັບກາກມາກໃນເວລານັ້ນແມ່ນຜົນງານການປະພັນຂອງປັດຊະຍາເຢຍລະມັນ  ລູວິດ ເຟີແບັກ ທ່ານເປັນຄົນທຳອິດທີ່ສ້າງຊື່ສຽງໃຫ້ແກ່ຝ່າຍເຮແກນ. ກາກມາກຍັງເຫັນໄດ້ເຖິງຈຸດອ່ອນຂອງ ເຟແບັກທີ່ນອນໃນຝ່າຍວັດຖຸນິຍົມແຕ່ພັດປະຖິ້ມທັງໝົດວິທີການສັດຈະວິພາ. ກາກມາກໄດ້ວິພາກວິຈານຈຸດອ່ອນຂອງເຟີແບັກ ແລະ ເຮແກນ ນັ້ນແມ່ນການກຳເນີດໜໍ່ແໜ່ງຂອງວິທະຍາສາດເພື່ອສ້າງພື້ນຖານທາງດ້ານວັດຖຸນິຍົມພາວະວິໄຈ.

|  |  |
|---|---|
| **ທ່ານ ຟີເດຣິກ ອັງແກນ Frederick Engels** | |

ເດືອນກຸມພາ ປີ 1844 ມາກໄດ້ສ້າງສຳນັກວາລະສານທີ່ມີຊື່ວ່າວາລະສານຝຣັ່ງ-ເຢຍລະມັນປະຈຳປີ. ໃນຈຳນວນວາລະສານທຳອິດທີ່ມີເອກະລັກສະເພາະ, ເປັນວາລະສານເຜີຍແຜ່ການວິພາກວິຈານປຶ້ມປັດຊະຍາຂອງເຮແກນຂອງກາກມາກ. ຜົນງານການປະພັນນີ້ເປັນເຄື່ອງໝາຍສຳຄັນທາງດ້ານປະຫວັດສາດການຂະຫຍາຍຕົວຂອງໂລກພາວະວິໄສຂອງທ່ານກາກມາກ. ໃນນັ້ນທ່ານໄດ້ຍົກໃຫ້ເຫັນວ່າການວິພາກວິຈານແມ່ນທາດແທ້ຂອງການປະຕິວັດທາງສັງຄົມເຊິ່ງບໍ່ພຽງແຕ່ຈະເກີດຂຶ້ນກັບການວິພາກວິຈານສາສະໜາ ແຕ່ຍັງຕ້ອງຄຳນຶງເຖິງວ່າຈະເຮັດແນວໃດໃຫ້ຄົນຫຼຸດພົ້ນຈາກຄວາມທຸກ ແລະ ມີອິດສະຫຼະໃນການດຳລົງຊີວິດຢ່າງແທ້ຈິງ. ການວິພາກວະຈານກ່ຽວກັບເທບພະເຈົ້າ, ສາສະໜາ, ເທວະວິທະຍາຕ້ອງກາຍັປັນການວິພາກວິຈານກ່ຽວກັບດິນແດນ, ລະບຽບກົດໝາຍ ແລະ ການເມືອງ. ຍິ່ງໄປກວ່ານັ້ນຕ້ອງເຫັນວ່າການວິພາກວິຈານແມ່ນວິທີການບໍ່ແມ່ນຈຸດປະສົງຂອງບົດນິພົນ. ບັນດາວິທະຍານິພົນນັ້ນໄດ້ເປັນການສ້າງພື້ນຖານໃນການແກ້ໄຂບັນຫາດ້ວຍວິທະຍາສາດ ແລະ ບັນຫາວັດຖຸນິຍົມພົວພັນກັນລະຫວ່າງຈິດໃຈ, ຄົງຕົວຂອງມັນ ແລະ ທາດແທ້ຂອງມັນເອງ. ເມື່ອກ່າວເຖິງສະພາບການຂອງເຢຍລະ

ມັນ ມາກໄດ້ຍົກໃຫ້ເຫັນໜ້າທີ່ໃນການປົດປ່ອຍມະນຸດອອກຈາກແອກກົດຂີ່ຂູດຮີດ ແລະ ຄວາມທຸກຍາກຂອງຊົນຊັ້ນກຳມະຊີບ. ປັດຊະຍາມີໜ້າທີ່ໃນການຊຸກຍູ້ມະຫາຊົນເຊິ່ງກ່ອນອ່ນໝົດຊົນຊັ້ນກຳມະຊີບຢູ່ຕາໂຮງຈັກໂຮງງານຕ້ອງຕໍ່ສູ້ເພື່ອປົດປ່ອຍຕົນເອງ. ທ່ານກາກມາໄດ້ຂຽນວ່າ" ອາວຸດຂອງການຕໍ່ສູ້ແບບວິພາກວິຈານບໍ່ສາມາດປ່ຽນແທນເປັນການຕໍ່ສູ້ດ້ວຍກຳລັງອາວຸດໄດ້ກຳລັງແຮງທາງດ້ານວັດຖຸກໍ່ເປັນພຽງກຳລັງແຮງຂອງສິ່ງວັດຖຸ ແລະ ອີກບໍ່ດົນມັນກໍ່ຈະຫຍັງໝໍ່ເຂົ້າມາສູ້ກຳລັງຂອງມວນຊົນ ແລະ ກໍ່ຄືກັບປັດຊະຍາທີ່ເຫັນຊົນຊັ້ນກຳມະຊີບແມ່ນເຄື່ອງມື ຫຼື ອາວຸດໃນການຕໍ່ສູ້ຂອງຕົນ, ຊົນຊັ້ນກຳມະຊີບຖືວ່າປັດຊະຍາແມ່ນອາວຸດທາງດ້ານຈິດໃຈຂອງເຂົາເຈົ້າ".

ພ້ອມດຽວກັນນັ້ນມາກຍັງໄດ້ເອົາໃຈໃສ່ໃນການຄົ້ນຄວ້າວິທີການຢ່າງມີລະບົບຂອງບັນດາບັນຫາທາງດ້ານເສດຖະກິດ, ການເມືອງ ແລະ ຄວາມຈິງແລ້ວວຽກດັ່ງກ່າວນັ້ນໄດ້ປະກອບສ່ວນສຳຄັນປ່ຽນແປງແນວຄິດມາເປັນລັດທິຄອມມູນິດຂອງທ່ານ.

ໃນເວລາດຽວກັນນີ້ຊົນຊັ້ນກຳມະຊີບຍັງມີນັກເຄື່ອນໄຫວປະຕິວັດຜູ້ຍິ່ງໃຫຍ່ຕໍ່ມາໄດ້ເກີດມີນັກສືດທອດແນວຄິດຂອງມາກນັ້ນກໍ່ຄືທ່ານ ຟີເດຣິກ ອັງແກນນັ້ນເອງ. ທ່ານກຳເນີດເມື່ອວັນທີ 28 ພະຈິກ ປີ 1820 ຢູ່ນະຄອນແບັກມານຂຶ້ນກັບຊົງເຂດແມ່ນ້ຳ ແຣ້ງ ທີ່ເປັນສູນກາງອຸດສະຫະກຳຂອງ ປຣັດເຊຍ (ເຢຍລະມັນ)

ເດືອນພະຈິກ ປີ 1842 ທ່ານໄດ້ອອກເດີນທາງໄປອາໄສຢູ່ປະເທດອັງກິດ ດຳລົງຊີວິດຢູ່ເມືອງແມນເຊດເຕີເຊິ່ງເປັນສູນກາງອຸດສະຫະກຳທີ່ໃຫຍ່, ທ່ານຢຶດຖືອາຊີບຄ້າຂາຍຍ້ອນມີທຶນຮອນມາຈາກພໍ່ແມ່ ໃນເວລານັ້ນທ່ານໄດ້ເຂົ້າໄປເຫັນເຮືອນຕູບຂອງກຳມະກອນທີ່ສົກກະປົກ, ທ່ານໄດ້ເຫັນຄວາມທຸກຍາກລຳບາກຂອງກຳມະກອນຢ່າງປະຈັກຕາຂອງທ່ານເອງ. ທ່ານຈິ່ງຊອກຄົ້ນອ່ານປຶ້ມ, ໜັງສືພິມ ວາລະສານ, ບົດລາຍງານຂອງບັນດານັກປະພັນສະໄໝກ່ອນກ່ຽວກັບຊົນຊັ້ນກຳມະກອນອັງກິດ ນັບແຕ່ນັ້ນມາທ່ານຈິ່ງເລີ່ມລົງມືໃນການຂຽນບົດປະພັນທີ່ມີຊື່ວ່າ "ຊະຕາກະຂອງຊົນຊັ້ນຜູ້ອອກແຮງງານຢູ່ອັງກິດ".

ເດືອນສິງຫາ 18444 ທ່ານອັງແກນໄດ້ເດີນທາງໄປປາຣີເພື່ອພົບກັບ ທ່ານ ກາກມາກ. ການພົບກັນຄັ້ງທຳອິດເກີດຂຶ້ນໃນທ້າຍເດືອນພະຈິກປີ 1842 ຢູ່ຕຶກ ອາຄານສຳນັກພິມແມ່ນ້ຳແຣ້ງ ທັງສອງທ່ານລ້ວນແຕ່ຕົກລົງເປັນເອກະພາບກ່ຽວກັບບັນຫາສຳຄັນທີ່ສຸດໃນເວລານັ້ນພວກທ່ານທັງສອງໄດ້ປ່ຽນແນວຄິດຈາກແນວຄິດຈິດຕະນິຍົມໄປສູ່ແນວຄິດວັດຖຸນິຍົມ, ມີຈາກລັດທິປະຊາທິປະໄຕປະຕິວັດ ໄປສູ້ລັດຄອມມູນິດທີ່ມີວິທະຍາສາດ.

ຕະຫຼອດໄລຍະເວລາໃນການເຮັດວຽກຄົ້ນຄວ້າທ່ານທັງສອງໄດ້ສ້າງກົດເກນທິດສະດີໃຫ້ແກ່ລັດທິສັງຄົມນິຍົມວິທະຍາສາດ. ທ່ານເລນິນໄດ້ຊີ້ໃຫ້ເຫັນວ່າ: ເພື່ອເຂົາແມ່ນຜູ້ສືບທອດຢ່າງແທ້ຈິງຂອງບັນດາສິ່ງທີ່ດີງາມທີ່ສຸດທີ່ມະນຸດໄດ້ສ້າງຂຶ້ນມາໃນຊ່ວງສະຕະວັດທີ 19 ນັ້ນກໍ່ຄືປັດຊະຍາເຢຍລະມັນ, ເສດຖະສາດ-ການເມືອງຂອງອັງກິດ ແລະ ລັດທິສັງຄົມນິຍົມຝຣັ່ງ.

ໃນຊ່ວງເວລາທຳອິດແຫ່ງການສ້າງຫຼັກການພື້ນຖານຂອງລັດທິຄອມມູນິດວິທະຍາສາດ, ມາກ ແລະ ອັງແກນໄດ້ເອົາໃຈໃສ່ວຽກງານການໂຄສະນາເຜີຍແຜ່ ແລະ ການກໍ່ສ້າງອົງການຈັດຕັ້ງໃນຂະບວນການລຸກຮື້ຂຶ້ນຕໍ່ສູ້ຂອງກຳມະກອນ.

ຂະບວນການຕໍ່ສູ້ຂອງກຳມະກອນໃນເວລານັ້ນ, ລັດທິສັງຄົມນິຍົມແບບໄຝ່ຝັນ, ລັດທິທຶນນິຍົມຂອງວາຍເຕີລິງແຜ່ຂະຫຍາຍໄປທົ່ວທຸກບ່ອນ. ອົງການຈັດຕັ້ງ " ພັນທະມິດຂອງກຸ່ມຄົນອັນຊອບທຳ" ໄດ້ຮັບຜົນສະທ້ອນຈາກແນວຄິດຈອງ ວາຍເຕີລິງ ໄດ້ຮັບການສ້າງຕັ້ງຂຶ້ນຢູ່ ປາຣີ ໃນປີ 1836 ເບື້ອງຕົ້ນປະກອບມີຄົນເຢຍລະມັນລີ້ໄພຫຼາຍ

ກວ່າໝູ່ແມ່ນນາຍຊ່າງຕັດຫຍິບ ຕໍ່ມາກໍ່ຮັບເອົານາຍຊ່າງຫັດຖະກຳທີ່ມາຈາກຫຼາຍປະເທດແລະ ຂະຫຍາຍສາຂາອອກໄປສູ່ອັງກິດ, ເຢຍລະມັນ, ສະວິດເຊີແລັນ, ຮັດເຊຍ, ຮັງກາລີ, ເຊັກໂກສະໂລວາກີ, ຢູໂກສະລາວີ ແລະ ໂຮນລັງ... ມາກ ແລະ ອັງແກນປະຕິເສດບໍ່ເຂົ້າຮ່ວມພັນທະມິດດັ່ງກ່າວນີ້ຍ້ອນບໍ່ເຫັນດີກັບແນວທາງການເຄື່ອນໄຫວຂອງກຸ່ມພັນທະມິດ ໂດຍສະເພາະແມ່ນການເຄື່ອນໄຫວທີ່ມີລັກສະນະຄ້າຍຄືກັບການກໍ່ກະບົດຂອງອົງການຈັດຕັ້ງນີ້. ແຕ່ພວກທ່ານທັງສອງກໍ່ຍັງຕິດຕາມ ແລະ ຊອກຫາວິທີທາງທີ່ມີຜົນກະທົບຕໍ່ກັບແນວຄິດ, ທິດສະດີຂອງຜູ້ເຂົ້າຮ່ວມຂະບວນການຕໍ່ສູ້ດ້ວຍຈົດໝາຍ ແລະ ວາລະສານໜັງສືພິມ.

ເພື່ອສ້າງເງື່ອນໄຂອັນດີໃຫ້ແກ່ການໂຄສະນາເຜີຍແຜ່ລັດທິຄອມມູນິດ ແລະ ຂະບວນການຕໍ່ສູ້ຂອງກຳມະກອນ ພ້ອມກັບການສ້າງສາຍພົວພັນລະຫວ່າງນັກເຄື່ອນໄຫວທາງສັງຄົມນິຍົມ ມາກ ແລະ ອັງແກນໄດ້ສ້າງຕັ້ງຄະນະກຳມະການສຳນັກຂ່າວຄອມມູນິດຂຶ້ນ. ປີ 1846 ຄະນະກຳມະການໜຶ່ງໄດ້ຮັບການສ້າງຕັ້ງຂຶ້ນຢູ່ບຣຸຍແຊນພາຍໃຕ້ການຊີ້ນຳຂອງມາກ-ອັງແກນ. ຄະນະກຳມະການໄດ້ມີການຕິດຕໍ່ພົວພັນກັບບັນດາກຳມະກອນເຢຍລະມັນທີ່ມີທ່າອ່ຽງຄອມມູນິດທີ່ດຳລົງຊີວິດຢູ່ພາຍໃນ ແລະ ນອກປະເທດ. ໂດຍຜ່ານຄະນະກຳມະການດັ່ງກ່າວທັງສອງທ່ານໄດ້ມີການແລກປ່ຽນສົນທະນາກັບບັນດາຜູ້ນຳຝ່າຍຄ້ານຂອງກຸ່ມກົດບັດ ແລະ ນັກສັງຄົມນິຍົມຫຼາຍທ່ານໃນປະເທດອື່ນອີກ.

ວຽກງານໂຄສະນາເຜີຍແຜ່ ແລະ ຕໍ່ສູ້ຂອງມາກ-ອັງແກນ ບໍ່ດົນປານໃດກໍ່ໄດ້ເຫັນຜົນໃນຂະບວນການລຸກຂຶ້ນຕໍ່ສູ້ຂອງກຳມະກອນ. ບັນດາຜູ້ນຳຂອງສະຫະພັນອັນຊອບທຳເລີ່ມມີການຍອມຮັບພື້ນຖານທິດສະດີຂອງມາກ ແລະ ອັງແກນ.

ລະດູໃບໄມ້ປົ່ງຂອງປີ 1847 ໜຶ່ງໃນຜູ້ນຳຂອງພັນທະມິດອັນຊອບທຳ ນັ້ນກໍ່ຄື ໂກແຢັບໂມນໄດ້ເຂົ້າມາພົບຫັບ ມາກ  ແລະ ອັງແກນ ເພື່ອເຊີນຊວນທ່ານໃຫ້ເຂົ້າຮ່ວມຂະບວນການປັບປຸງ ພັນທະມິດ ແລະ ສ້າງຕັ້ງເປັນອົງການຈັດຕັ້ງໃໝ່ທີ່ໜ້າເຊື່ອຖື. ໂກແຢບໂມນໄດ່ປະກາດອອກມາວ່າ, ຜູ້ນຳທັງຫຼາຍ ພັນທະມິດມີຄວາມຮັບຮູ້ຢ່າງຖືກຕ້ອງຕໍ່ກັບທິດສະດີ ມາກຊິດ ແລະ ພ້ອມທີ່ຈະຖິ້ມວິທີການແບບກໍ່ກະບົດທີ່ເຄີຍປະຕິບັດໃນເມື່ອກ່ອນ. ທົບທວນຄືນບັນດາການປ່ຽນແປງທາງດ້ານແນວຄິດ ແລະ ຄວາມຕ້ອງການປັບປຸງ ແລະ ປະຕິຮູບຂອງບັນດາຜູ້ນຳ ມາກ ແລະ ອັງແກນຈຶ່ງຕັດສິນໃຈເຂົ້າຮ່ວມເຄື່ອນໄຫວໃນອົງການຈັດຕັ້ງດັ່ງກ່າວດ້ວຍເງື່ອນໄຂທີ່ແນ່ນອນ.

ຕົ້ນເດືອນມິຖຸນາປີ 1847 ພັນທະມິດດັ່ງກ່າວໄດ້ເປີດກອງປະຊຸມຂຶ້ນເປັນທາງການທີ່ ລອນດອນ ຕາມຄຳແນະນຳຂອງມາກ-ອັງແກນ ພັນທະມິດອັນຊອບທຳໄດ້ປ່ຽນຊື່ມາເປັນພັນທະມິດກອມມູນິດD

ກອງປະຊຸມພັນທະມິດຄອມມູນິດເປັນຂີດໝາຍແຫ່ງໄຊຊະນະອັນໃຫຍ່ຫຼວງທາງດ້ານແນວຄິດ ແລະ ອົງການຈັດຕັ້ງມັນເປັນການຢັ້ງຢືນວ່າແມ່ນບາດກ້າວທຳອິດຂອງຊົນຊັ້ນກຳມະກອນໃນການຮັບຮູ້ທິດສະດີປະຕິວັດມາກຊິດ ແລະ ຄ່ອຍໆຖອນຕົວອອກຈາກຂອງລັດທິສັງຄົມນິຍົມຂອງນາຍທຶນນ້ອຍ ເພື່ອພື້ຖານການຈັດຕັ້ງທີ່ເປັນເອກະລາດຂອງຕົນຂຶ້ນ.

ກອງປະຊຸມໃຫຍ່ຄັ້ງທີ 1 ຂອງພັນທະມິດກອມມູນິດໄດ້ໄຂຂຶ້ນໃນວັນທີ29 ພະຈິກ ຫາ ວັນທີ 8 ທັນວາ ປີ 1847 ພາບໃຕ້ການຊີ້ນຳຂອງມາກ-ອັງແກນ ບັນດາຜູ້ແທນຄອມມູນິດຂອງເຢຍລະມັນ, ອັງກິດ, ຝຣັ່ງ, ແບນຊິກ, ໂປແລນ,ສະວິດເຊີແລນ ໄດ້ພາກັນຫຼັ່ງໄຫຼເຂົ້າມາປະຊຸມ ພາຍຫຼັງທີ່ມີການສົນທະນາແລກປ່ຽນກ່ຽວກັບບັນຫາພື້ນຖານແລ້ວກອງປະຊຸມກໍ່ໄດ້ຜະກາດຂໍ້ກຳນົດຢ່າງເປັນທາງການຂອງພັນທະມິດ. ກອງປະຊຸມໄດ້ມອບໝາຍໃຫ້ມາກ-ອັງ

ແກນ ຮ່າງແນວທາງການເຄື່ອນໄຫວພາຍໃຕ້ຮູບແບບບົດຖະແຫຼງການ. ການລົງມະຕິດັ່ງກ່າວນັ້ນ ມາກ ແລະ ອັງແກນໄດ້ເຮັດສຳເລັດໜ້າທີ່ໃນການຄົ້ນຄວ້າທິດສະດີ. ເດືອນກຸມພາປີ 1848 ບົດຖະແຫຼງການພັກຄອມມູນິດຄັ້ງທີ 1 ໄດ້ຖືກຮັບຮອງທີ່ລອນດອນ.



ກອງປະຊຸມທີ່ລອນດອນໄດ້ປ່ຽນຊື່ພັນທະມິດອັນຊອບທຳມາເປັນພັນທະມິດກອມມູນິດ

## III. ຖະແຫຼງການພັກຄອມມູນິດ ແລະ ແນວທາງການປະຕິວັດຂອງຊົນຊັ້ນກຳມະຊີບ

ໃນການກ່າວເປີດພິທີຂອງມາກ ແລະ ອັງແກນໄດ້ຍົກໃຫ້ເຫັນຈຸດປະສົງໃນການຂຽນບົດຖະແຫຼງການແມ່ນການປະກາດໃຫ້ໂລກຮູ້ຢ່າງເປັນທາງການກ່ຽວກັບແນວຄິດ, ຈຸດປະສົງ ແລະ ບັນດາໂຄງການຂອງຕົນຂຶ້ນ[1] ເພື່ອຕໍ່ຕ້ານຄືນກັບເລື່ອງລາວທີ່ບໍ່ມີສາລະຂອງຊົນຊັ້ນນາຍທຶນກ່ຽວກັບເລື່ອງ "ຜີຄອມມູນິດ".

**ພາກທີ 1** ຍົກໃຫ້ເຫັນລັກສະນະທົ່ວໄປຂອງກົນເກນການຂະຫຍາຍຕົວພື້ນຖານຂອງສັງຄົມນາຍທຶນ, ຍົກໃຫ້ເຫັນຢ່າງຈະແຈ້ງກ່ຽວກັບຜົນປະໂຫຍດທີ່ກົງກັນຂ້າມກັນລະຫວ່າງຊົນຊັ້ນນາຍທຶນ ແລະ ຊົນຊັ້ນກຳມະຊີບ.

ກ່ອນອື່ນໝົດ ມາກ ແລະ ອັງແກນ ໄດ້ສະເໜີກົດເກນແຫ່ງການຂະຫຍາຍຕົວຂອງປະຫວັດສາດທັງລະບອບສະຫະຊີບປະຖົມບູຮານແມ່ນປະຫວັດສາດແຫ່ງການຕໍ່ສູ້ຊົນຊັ້ນ. ສັງຄົມນາຍທຶນເກີດຂຶ້ນຍ້ອນລະບອບສັກດີນາຖືກກຳຈັດລົງຢ່າງຊິ້ນເຊີງ, ແຕ່ບໍ່ສາມາດລົບລ້າງຄວາມເປັນປໍລະປັກ ຫຼື ຂໍ້ຂັດແຍ່ງຊົນຊັ້ນ ພຽງແຕ່ປ່ຽນແປງຊົນຊັ້ນໃໝ່ຂຶ້ນມາແທນຊົນຊັ້ນເກົ່າ, ປ່ຽນເງື່ອນໄຂໃນການກົດຂີ່ຂູດຮີດໃໝ່ແທນເງື່ອນໄຂຂູດຮີດເກົ່າ, ປ່ຽນຮູບແບບການຕໍ່ສູ້ໃໝ່ແທນຮູບແບບການຕໍ່ສູ້ແບບເກົ່າທີ່ມີໃນເມື່ອກ່ອນເທົ່ານັ້ນ. ເຖິງຢ່າງໃດກໍ່ຕາມທາດແທ້ຂອງຍຸກສະໄໝຈະ

---

1 ມາກ ແລະ ອັງແກນ: ຖະແຫຼງການຂອງພັກຄອມມູນິດ, ຮຽບຮຽງ, ເຫຼັ້ມທີ 1 ໂຮງພິມ ຄວາມເປັນຈິງ, ຮ່າໂນ້ຍ, 1980 ໜ້າທີ 539 (ບົດຄັດຫຍໍ້ຈາກບົດຖະແຫຼງການ)

ເຮັດໃຫ້ເຫັນຄວາມແຕກຕ່າງຂອງຊົນຊັ້ນ. ສັງຄົມໄດ້ແບ່ງອອກເປັນ 2 ຊົນຊັ້ນໃຫຍ່ທີ່ລ້ອນແຕ່ມີຂໍ້ຂັດແຍ່ງກັນນັ້ນກໍ່ຄືຊົນຊັ້ນນາຍທຶນ ແລະ ຊົນຊັ້ນກຳມະຊີບ.

ມາກ ແລະ ອັງແກນໄດ້ຍົກໃຫ້ເຫັນກົດເກນການຂະຫຍາຍຕົວຂອງລັດທິທຶນນິຍົມ, ຕີລາຄາບົດບາດທາງດ້ານການເມືອງ ແລະ ດ້ານເສດຖະກິດຂອງຊົນຊັ້ນນາຍທຶນ. ໃນການຕໍ່ສູ້ຕ້ານກັບລະບອບສັກດີນາຊົນຊັ້ນນາຍທຶນໄດ້ທຳການຊຸກຍູ້ສົ່ງເສີມຢ່າງຕັ້ງໜ້າໃຫ້ມີການສ້າງຕັ້ງປະເທດຊາດຕາມແບບລັດທິທຶນນິຍົມ ແລະ  ສ້າງກຳລັງການຜະລິດອັນໃຫຍ່ໂຕມະໂຫລານກວ່າກຳລັງການຜະລິດໃດໆທີ່ເຄີຍມີມາກ່ອນ.

ການຂະຫຍາຍຕົວຢ່າງແຂງແຮງຂອງກຳລັງການຜະລິດຄ່ອຍໆກາຍເປັນປັດໄຈສຳຄັນທີ່ພາໃຫ້ຊົນຊັ້ນນາຍທຶນເດີນເຂົ້າສູ່ເສັ້ນທາງແຫ່ງຄວາມຫາຍານະ. ຄວາມຂັດແຍ່ງລະຫວ່າງກຳລັງການຜະລິດທີ່ສະແດງເຖິງທາດແທ້ທາງສັງຄົມ ແລະ ການຢຶດຄອງກຳມະສິດສ່ວນຕົວກ່ຽວກັບວັດຖຸດິບທີ່ໃຊ່ເຂົ້າໃນການຜະລິດນັບມື້ມີການກົດຂີ່ຂູດຮີດຢ່າງເຫັນໄດ້ຊັດເຈນຍ້ອນວິກິດການທາງດ້ານວົງຈອນນັບມື້ຍິ່ງມີຄວາມຮຸນແຮງຂຶ້ນເຊິ່ງຊົນຊັ້ນນາຍທຶນບໍ່ສາມາດແກ້ໄຂໄດ້.

ຊົນຊັ້ນກຳມະຊີບມີການເຕີບໃຫຍ່ຂະຫຍາຍຕົວຄຽງຄູ່ກັບການຂະຫຍາຍຕົວຂອງລັດທິທຶນນິຍົມພວກເຂົາບັງຄັບໃຫ້ມີການຂ່ສຍແຮງງານເພື່ອຄວາມຢູ່ລອດໃນການດຳລົງຊີວິດ. ຍ້ອນແນວນັ້ນໃນສາຍຕາຂອງພວກນາຍທຶນ ກຳມະກອນກໍ່ປຽບສະເໝີນສິນຄ້າຊະນິດໜຶ່ງທີ່ຖືກນຳມາຂາຍຄືກັນກັບສິນຄ້າປະເພດອື່ນໆເທົ່ານັ້ນ. ພວກເຂົາຕ້ອງຜູ້ຂາດກັຍເຄື່ອງກົນຈັກ, ຕ້ອງຍອມຮັບເອົາການຂູດຮີດຢ່າງໄຮ້ມະນຸດສະທຳຂອງຊົນຊັ້ນນາຍທຶນ ສະນັ້ນຈິ່ງເຮັດໃຫ້ຊີວິດການເປັນຢູ່ຂອງຊົນັ້ນກຳມະຊີບມີຄວາມທຸກຍາດລຳບາກ.

ໃນເງື່ອນໄຂໃນການການຂູດຮີດຢ່າງໜັກນັ້ນ ເຮັດໃຫ້ຊົນຊັ້ນກຳມຊີບຈຳຕ້ອງລຸກຂຶ້ນຕໍ່ສູ້ ໃນເບື້ອງຕົ້ນເປັນພຽງການລຸກຂຶ້ນປະທ້ວງຂອງກຳມະກອນຜູ້ໃດຜູ້ໜຶ່ງເທົ່ານັ້ນຕໍ່ມາຈິ່ງລວມຕົວກັນຕໍ່ສູ້ຕາມໂຮງຈັກໂຮງງານທີ່ເຂົາເຈົ້າເຮັດວຽກຮ່ວມກັນໃນຂະແໜງດຽວກັນໃນຂົງເຂດດຽວກັນເພື່ອຕໍ່ສູ້ຕ້ານກັບພວກນາຍທຶນໂດຍກົງທີ່ກົດຂີ່ຂູດຮີດພວກເຂົາ. ພວກເຂົາໄດ້ທຳການຈູດເຜົາໂຮງຈັກໂຮງງານຖິ້ມ. ຊົນຊັ້ນກຳມະຊີບເປັນພຽງກຳລັງມະຫາຊົນທີ່ເຄື່ອນໄຫວກະແຈກກະຈາຍ, ພວກເຂົາຍັງບໍ່ທັນເຂົ້າໃຈທາດແທ້ຂອງຊົນຊັນນາຍທຶນຈິ່ງເຮັດໃຫ້ໄຊຊະນະທີ່ຍາດມາໄດ້ຕົກຢູ່ໃນກຳມືຂອງຊົນຊັ້ນນາຍທຶນ


C. MÁC VÀ PH. ĂNG-GHEN
TUYÊN NGÔN
CỦA ĐẢNG CỘNG SẢN
ST
NHÀ XUẤT BẢN CHÍNH TRỊ QUỐC GIA SỰ THẬT

ເມື່ອການຂູດຮີດເພີ່ມທະວີຂຶ້ນໃນໄລຍະຕໍ່ມາ ເຮັດໃຫ້ຊີວິດການເປັນຢູ່ຂອງກຳມະກອນພົບຄວາມທຸກຍາກລຳບາກຍິ່ງຂຶ້ນ, ເງື່ອນໄຂການອອກແຮງງານແມ່ນສຸມໃສ່ລະດັບການຮັບຮູ້ເຖິງຄວາມທຸກຍາກນັບມື້ນັບເພີ່ມຂຶ້ນສູງ, ຂໍ່ຂັດແຍ່ງສ່ວນຕົວລະຫວ່າງຊົນຊັ້ນກຳມະຊີບ ແລະ ຊົນຊັ້ນນາຍທຶນນັບມື້ຍິ່ງມີລັກສະນະຂໍ້ຂດແຍ່ງຂອງສັງຊົນຊັ້ນ. ກຳມະກອນລວມຕົວກັນຕໍ່ສູ້ຕ້ານກັບນາຍທຶນ ເພື່ອປົກປັກຮັຍສາ ແລະ ປັບປຸງຊີວິດການເປັນຢູ່ ພວກເຂົາໄດ້ສ້າງຕັ້ງສະມາຄົມຂຶ້ນເພື່ອນຳພາການຕໍ່ສູ້ໂດຍເລີ່ມຈາກນະໂຍບາຍທາງດ້ານເສດເຖິງກດພວກເຂົາຍັງຍົກໃຫ້ເຫັນນະໂຍບາຍທາງດ້ານການເມືອງ, ມີຄວາມຮັບຮູ້ຈະແຈ້ງຂຶ້ນກວ່າເກົ່າ.

ຜ່ານຂະບວນການຕໍ່ສູ້ ຊົນຊັ້ນກຳມະຊີບຄ່ອຍໆຮັບຮູ້ເຖິງບົດບາດຄວາມສຳຄັນຂອງປະຫວັດການເຄື່ອນໄຫວຂອງຕົນ. ໃນຈຳນວນຊົນຊັ້ນທີ່ເປັນປໍລະປັກກັບຊົນຊັ້ນນາຍທຶນນັ້ນມີພຽງແຕ່ຊົນຊັ້ນກຳມະຊີບເທົ່ານັ້ນທີ່ຕ້ອງການເຮັດການປະຕິວັດຢ່າງແທ້ຈິງຍ້ອນເຫັດຜົນດັ່ງລຸ່ມນີ້:

ໜຶ່ງ: ຊົນຊັ້ນກຳມະຊີບມີການພົວພັນກັນຢ່າງສະໜິດແໜ້ນກັບຮູບແບບການຜະລິດທີ່ມີຄວາມກ້າວໜ້າທັນສະໄໝ, ຕິດພັນກັບຮູບແບບການຜະລິດທີ່ໃຫຍ່. ສະນັ້ນ, ພວກເຂົາຈິ່ງເປັນຊົນຊັ້ນທີ່ມີຄຸນຄ່າທີ່ສຸດໃນເວລານັ້ນ, ມີຈຳນວນພົນຫຼາຍທີ່ສຸດຄຽງຄູ່ກັບການຂະຫຍາຍຕົວຂອງອຸດສະຫະກຳ.

ສອງ: ເປົ້າໝາຍແບບອັດຕະວິໄສຂອງຊົນຊັ້ນກຳມະຊີບແມ່ນມີຄວາມເໝາະສົມກັບການຂະຫຍາຍຕົວພາວະວິໄສຂອງປະຫວັດສາດ. ຂໍ້ຂັດແຍ່ງພາຍໃນຂອງພື້ນຖານເສດຖະກິດແບບລັດທິທຶນນິຍົມນຳພາໃຫ້ລະບອບທຶນນິຍົມກ້າວໄປເຖິງຈຸດສິ້ນສຸດ. ຈຸດປະສົງຂອງຊົນຊັ້ນກຳມະຊີບແມ່ນໂຄ່ນລົ້ມລັດທິທຶນນິຍົມເພື່ອໃຫ້ສອດຄ່ອງກັບກົດເກນການຂະຫຍາຍຕົວຂອງສັງຄົມມະນຸດ. ສິ່ງດັ່ງກ່າວນັ້ນເປັນປັດໄຈຕັດສິນໄຊຊະນະ ແລະ ບົດບາດສຳຄັນຂອງຊົນຊັ້ນກຳມະຊີບຕໍ່ກັບປະຫວັດສາດຂອງໂລກ.

ສາມ: ຊົນຊັ້ນກຳມະຊີບແມ່ນເປັນຊົນຊັ້ນທີ່ບໍ່ມີຊັບສົມບັດ, ດັ່ງນັ້ນພວກເຂົາຈິ່ງມີຄວາມພ້ອມທີ່ຈະລຸກຂຶ້ນຕໍ່ສູ້ກັນນາຍທຶນໂດຍບໍ່ລັງເລໃຈຫຍັງອີກ. ໃນການຕໍ່ສູ້ຕ້ານກັບນາຍທຶນພວກເຂົາຈະບໍ່ໄດ້ສູນເສຍຊັບສິນສ່ວນຕົວຫຍັງໄປນອກຈາກການຫຼຸດພົ້ນອອກຈາກການເປັນທາດຮັບໃຊ້.

ສີ່: ຊົນຊັ້ນນາຍທຶນມີອຳນາດການປົກຄອງ, ຕຳຫຼວດ ແລະ ທະຫານ ໃນກຳມືຖ້າຕ້ອງການເອົາຊະນະພວກເຂົາຊົນຊັ້ນນາຍທຶນຕ້ອງມີການຈັດຕັ້ງທີ່ແຂງແກ່ນ. ເຊິ່ງຄວາມຈິງແລ້ວຊົນຊັ້ນກຳມະຊີບເປັນກ້ອນກຳລັງໜຶ່ງທີ່ມີການຈັດຕັ້ງ, ເປັນກຳລັງທະຫານທີ່ກ້າແກ່ນທີ່ເຕົ້າໂຮມກັນຢູ່ຕາມໂຮງຈັກໂຮງງານໃຫຍ່. ດ້ວຍເງື່ອນໄຂການອອກແຮງງານນັ້ນເຮັດໃຫ້ພວກເຂົາມີປະສົບການໃນການສ້າງຕັ້ງອົງການຈັດຕັ້ງທີ່ໝັ້ນຄົງ ແລະ ແຂ່ງແກ່ນໄດ້.




# TƯ TƯỞNG CHỦ YẾU VÀ NỘI DUNG của tác phẩm "Tuyên ngôn của Đảng Cộng sản"

*Cách đây 170 năm, ngày 24-2-1848, được sự ủy nhiệm của những người Cộng sản, "Tuyên ngôn của Đảng Cộng sản" do Karl Marx và Friedrich Engels soạn thảo lần đầu tiên được công bố trước toàn thế giới.*
*Sự ra đời của tác phẩm vĩ đại này đánh dấu sự hình thành về cơ bản lý luận của chủ nghĩa Mác bao gồm ba bộ phận hợp thành: triết học, kinh tế chính trị học và chủ nghĩa cộng sản khoa học.*

## Tư tưởng cơ bản và chủ đạo



**Người soạn thảo Karl Marx và Friedrich Engels**

Trong mỗi thời đại lịch sử, sản xuất kinh tế và cơ cấu xã hội - cơ cấu này tất yếu phải do sản xuất kinh tế mà ra, - cả hai cái đó cấu thành cơ sở của lịch sử chính trị và lịch sử tư tưởng của thời đại ấy; do đó toàn bộ lịch sử là lịch sử các cuộc đấu tranh giai cấp, đấu tranh giữa những giai cấp bị trị và những giai cấp thống trị, qua các giai đoạn của sự phát triển của họ; những cuộc đấu tranh ấy hiện nay đã đến một giai đoạn mà giai cấp bị bóc lột và bị áp bức (tức là giai cấp vô sản) không còn có thể tự giải phóng khỏi tay giai cấp bóc lột và áp bức mình (tức là giai cấp tư sản) được nữa, nếu không đồng thời và vĩnh viễn giải phóng toàn thể xã hội khỏi ách bóc lột, ách áp bức và khỏi những cuộc đấu tranh giai cấp, - tư tưởng chủ chốt ấy hoàn toàn là của Marx".

## Tuyên ngôn chia làm 4 chương

Chương I: Tư sản và vô sản



Chương II: Những người vô sản và những người cộng sản



Chương III: Văn học xã hội chủ nghĩa và cộng sản chủ nghĩa



Chương IV: Thái độ của những người cộng sản đối với các đảng độc lập



Nguồn: http://tuyengiao.vn; http://dangcongsan.vn

ຫ້າ: ໃນໄລະຍະດຳເນີນການຕໍ່ສູ້ນຕ້ານກັບແອກປົກຄອງຂອງນາຍທຶນ, ຊົນຊັ້ນກຳມະຊີບບໍ່ພຽງແຕ່ຊົມໃຊ້ກຳລັງແຮງຕົວຂອງຕົນເທົ່ານັ້ນ ແຕ່ຍັງນຳໃຊ້ກຳລັງແຮງຊ່ວຍເຫຼືອກປະຊາຊົນຊາວຜູ້ອອກແຮງງານທັງໝົດເພື່ອຕ້ານກັບການກົດຂີ່ຂອງພວກນາຍທຶນ.

ຍ້ອນເຫດຜົນຕໍ່ຄືທີ່ໄດ້ກ່າວມາຂ້າງງເທິງນັ້ນ, ຊົນຊັ້ນກຳມະຊີບບໍ່ແມ່ນຊົນຊັ້ນທີ່ຈະຍອມຮັບເອົາຄວາມທຸກຍາກລຳບາກ, ແຕ່ຫາກແມ່ນຊົນຊັ້ນດຳເນີນການປະຕິວັດທີ່ໄດ້ສ້າງຂີດໝາຍສຳຄັນທາງປະຫວັດສາດໃນການໂຄ່ນລົ້ມລັດທິທຶນນິຍົມ, ແມ່ນຜູ້ຂຸດຫຼູມຝັງພວກນາຍທຶນ ແລະ ປົດປ່ອຍມວນມະນຸດອອກຈາກຄວາມທຸກຍາກ.

ສິ້ນສຸດການວິເຄາະວິຈານດ້ວຍວິທີການທີ່ເລິກເຊິ່ງແນບນຽນບົນພື້ນຖານແນວຄິດວັດຖຸນິຍົມພາວະວິໄສ ແລະວັດຖຸນິຍົມປະຫວັດສາດສັງຄົມມະນຸດຕາມແບບລັດທິທຶນນິຍົມ ແລະ ຄວາມແຕກຕ່າງທາງດ້ານຊົນຊັ້ນໃນສັງຄົມນັ້ນ. ມາກ ແລະ ອັງແກນໄດ້ຢັ້ງຢືນວ່າ “ການພັງທະລາຍຂອງພວກນາຍທຶນ ແລະ ໄຊຊະນະຂອງຊົນຊັ້ນກຳມະຊີບລ້ວນແຕ່ມີຄວາມຈຳເປັນເຊັ່ນກັນ”

**ພາກທີ2:** ມາກ ແລະ ອັງແກນ ໄດ້ຍົກໃຫ້ເຫັນຄວາມຕ້ອງການສຳເລັດໜ້າທີ່ທາງປະຫວັດສາດໃນການທັບມ້າງຊົນຊັ້ນນາຍທຶນ ແລະສ້າງຕັ້ງສັງຄົມໃຫມ່. ຊົນຊັ້ນກຳມະຊີບຕ້ອງມີພັກຂອງຊົນຊັ້ນກຳມະຊີບ, ຜະເດັດການກຳມະຊີບຕ້ແງຖືກຕ້ອງກັບວິທີການໃນການປົກປັກຮັກສາຫມາກຜົນຂອງການປະຕິວັດ. ຈຳແນກຂອບເຂດລະຫວ່າງພວກຄອມມູນິດ ແລະ ນຊັ້ນກຳມະຊີບ, ມາກແລະອັງແກນໄດ້ຍົກໃຫ້ເຫັນວ່າພວກຄແມມູນິດບໍ່ມີຫຍັງແຕກຕ່າງ,ບໍ່ມີການຕັດແຍກອອກຈາກຊົນຊັ້ນກຳມະຊີບແຕ່ຫາກແມ່ນຕົວແທນໃຫ້ແກ່ສິດຜົນປະໂຫຍດຂອງຂະບວນການຕໍ່ສູ້ໃນຄວາມເປັນຈິງແລ້ວພວກຄອມມູນິດແມ່ນພາກສ່ວນກຸ່ມຄົນທີ່ມີຄວາມເດັດດ່ຽວ,ສາມາດດຶງດູດໃຫ້ທຸກຄົນໃນສັງຄົມດຳເນີນການເຄື່ອນໄຫວປະຕິວັດ.ດ້ານທິດສະດີ,ພວກຄອມມູນິດແມ່ນຜູ້ຮອບຮູ້ສິດຜົນປະໂຫຍດຂອງຊົນຊັ້ນ,ທີ່ເຄື່ອງມືຂອງທິດສະດີການປະຕິວັດ.ຮັບຮູ້ກ່ຽວກັບເງື່ອນໄຂໃນການເຮັດການປະຕິວັດແລະຜົນລວມຂອງການປະຕິວັດຄອມມູນິດ.ຍ້ອນແນວນັ້ນຈິ່ງສາມາດນຳພາຂະບວນການປະຕິວັດໃຫ້ກ້າວຂຶ້ນສູ່ລະດັບສູງ. ພວກຄອມມູນິດຍັງແມ່ນພວກທີ່ມີນ້ຳໃຈສາກົນ,ເຫັນຄວາຫສຳຄັນ ແລະປົກປ້ອງຜົນປະໂຫຍດລວມຂອງຊົນຊັ້ນກຳມະຊີບ

ຈຸດພິເສດສະເພາະຂອງພັກຄອມມູນິດແມ່ນລັກສະນະຊົນຊັ້ນ,ມີລັກສະນະຕັ້ງຫນ້າແລະ ລັກສະນະມີການລົງໂທດ.ຂະບວນການປະຕິວັດຂອງຊົນຊັ້ນກຳມະຊີບຕົ້ນຕໍແມ່ນເກີດຂຶ້ນໃນແຕ່ລະປະເທດ.ຖ້າຕ້ແງການຍາດເອົາໄຊຊະນະຊົນຊັ້ນກຳມະຊີບຕ້ອງຍົກສູງຄັນທຸງຂອງປະຊາຊົນບັນດາເຜົ່າປະຊາທິປໄຕຈະເກີດຂຶ້ນໄດ້ກໍ່ຕໍ່ເມື່ອຄົນໃນຊາດມີຄວາມສາມັກຄີລຸກຂຶ້ນຕໍ່ສູ້.ມາກ່ອນ ແລະອັງແກນ ໄດ້ດວ້າວ່າຊົນຊັ້ນກຳມະຊີບກ່ອນອື່ນຫມົດຕ້ອງຍາດເອົາສິດຜົນປະໂຫຍດ, ເພື່ແຕ້ງເປັນອີງການຈັດຕັ້ງບັນດາເຜົ່າ ແລະເຮັດໃຫ້ຕົນເອງເປັນກຳລັງຂອງປະຊາຊົນບັນດາເຜົາສະນັ້ນພວກເຂົາຈິ່ງມີລັກສະນະຊົນເຜົ່າ ເຖິງແມ່ນວ່າຈະບໍ່ມີລັກສະນະທີ່ຄືກັບແນວຄິດຂອງຊົນຊັ້ນນາຍທຶນເຂົ້າໃຈກໍ່ຕາມ. ບັນຫາກໍ່ມີຢູ່ວ່າເຮັດແນວໃດຈິ່ງຈະສາມາດຍາດເອົາໄຊຊະນະໃນການປະຕິວັດຂອງຊົນຊັ້ນກຳມະຊີບໄດ້, ຄວາມຈິງແລ້ວມາກ ແລະ ອັງແກນໄດ້ມີການສ້າງບັນດາທິດສະດີພື້ນຖານທີ່ມີຄວາມສຳຄັນຂອງທິດສະດີແຫ່ງສິດຜົນປະໂຫຍດຂອງຊົນຊັ້ນກຳມະຊີບ ແລະ ການປະຕິວັດກຳມະຊີບ. ຕ້ອງການລົບລ້າງຮູບແບບການຜະລິດແບບທຶນນິຍົມກ່ອນອື່ນຫມົດຕ້ອງລົບລ້າງສິດອຳນາດການປົກຄອງຂອງນາຍທຶນສ້າງຕັ້ງອຳນາດກາຮປົກຄອງຂອງຊົນຊັ້ນກຳມະຊີບ. ຖະແຫລງການໄດ້ຍົກໃຫ້ເຫັນເປົ້າຫມາຍພວກກຳມະຊີບແມ່ນເຮັດໃຫ້ພວກຄແມມູນິດກາຍເປັນຊົນຊັ້ນ, ໂຄ່ນລົ້ມອຳນາດການປົກຄອງຂອງພວກນາຍທຶນ.ຊົນຊັ້ນກະມະຊີບຕ້ອງຍາດເອົາອຳນາດການປົກຄອງມາສູ່ຕົນ.

ຕ້ອງການຍາດເອົາສິດອຳນາດ ແລະ ນຳໃຊ້ສິດອຳນາດນັ້ນເພື່ອເປົ້າໝາຍຊົນຊັ້ນກຳມະຊີບຕ້ອງໄດ້ຜ່ານການຕໍ່ສູ້ເຮັດການປະຕິວັດກຳມະຊີບແລະນຳໃຊ້ຜົນປະໂຫຍດຂອງການປະຕິວັດເພື່ອປົກປ້ອງຫມາກຜົນຂອງການປະຕິວັດ.ສິດອຳນາດນັ້ນກໍ່ເພື່ອປົກປ້ອງອີງການຈັດຕ້ອງຫນື່ງເພື່ອນາບຄູ່ຊົນຊັ້ນອື່ນ.ດັ່ງນັ້ນພາຍຫລັງກຳອຳນາດແລ້ວ ຊົນຊັ້ນກຳມະຊີບຕ້ອງນຳໃຊ້ອຳນາດເພື່ອກຳຈັດລະບອບການຜະລິດແບບເກົ່າ. ໃນໄລຍະຕໍ່ມາ ມາກ,ອັງແກນ ແລະ ເລນິນ ບໍ່ໄດ້ຢຸດໃນການຂະຫຍາຍທິດສະດີກ່ຽວກັບສິດອຳນາດຂອງຊົນຊັ້ນກຳມະຊີບທີ່ແນໃສ່ເພື່ອສ້າງອຳນາດການປົກຄອງຂອງຊົນຊັ້ນກຳມພຊີບ ແລະ ປົດປ່ອຍຊາວຜູ້ອອກແຮງງານ.

ສະຫລຸບພາກທີ2: ຖະແຫລງການໄດ້ຍົກໃຫ້ເຫັນບາງວິທີການທີ່ນັກຄອມມູນິດຕ້ອງດຳເນີນການເພື່ອກຳຈັດລະບອບຍຶດຖືກຳມະສິດສ່ວນຕົວ,ກ່ຽວກັບວັດຖຸດິບໃນການຜະລິດ ແລະ ສ້າງຕັ້ງລະບອບສັງຄົມໃຫມ່

**ໃນພາກທີ 3**: ເພື່ອຂະຫຍາຍ ແລະ ປົກປ້ອງທິດສະດີສັງຄົມນິຍົມວິທະຍາສາດ, ມາກ ແລະ ອັງແກນໄດ້ຄັດຄ້ານບັນດາແນວຄິດທີ່ບໍ່ມີລັກສະນະຊົນຊັ້ນກຳມະຊີບ. ຍ້ອນແນວນັ້ນທ່ານຈຶ່ງເອົາໃຈໃສ່ລັດທີສັງຄົມນິຍົມແບບໄຝ່ຝັນເຊິ່ງຕົວແທນແກ່ກຸ່ມນີ້ແມ່ນທ່ານ ແຊັງຊີໂມງ, ພົວຣິເອ ແລະ ໂອແວນ. ບັນດານັກສັງຄົມນິຍົມແບບໄຝ່ຝັນເຫັນໄດ້ເຖິງຄວາມຂັດແຍ່ງຊົນຊັ້ນໃນສັງຄົມ. ພວກເຂົາຈິ່ງໄດ້ຄັດຄ້ານການສ້າງຕັ້ງສັງຄົມໃໝ່ ແລະ ມີການສະຫຼຸບຢ່າງຕັ້ງໜ້າກ່ຽວກັບສັງຄົມໃນອະນາຄົດ. ແຕ່ພວກເຂົາບໍ່ຄຳນຶງເຖິງບົດບາດ ແລະ ທາດແທ້ຂອງການປະຕິວັດຂອງຊົນຊັ້ນກຳມະຊີບພວກເຂົາພຽງແຕ່ຕ້ອງການສ້າງຕັ້ງສັງຄົມໃໝ່ຕາມແຜນການແບບອັດຕະວິໄສ. ຕ້ອງການຕໍ່ສູ້ດ້ວຍສັນຕິວິທີ ເຊິ່ງບົດທົດສອບເຫຼົ່ານັ້ນລ້ວນແຕ່ປະສົບກັບຄວາມຫຼົ້ມເຫຼວ. ເຖິງຢ່າງໃດກໍ່ຕາມການຖົກຖຽງຂອງບັນດານັກສັງຄົມນິຍົມແບບໄຝ່ຝັນກໍ່ໃຫ້ເກີດມີກະແສແນວຄິດອັນໃໝ່. ສະນັ້ນຈິ່ງເຮັດໃຫ້ລັດທິສັງຄົມນິຍົມຢູ່ຝຣັ່ງຖືກເບິ່ງວ່າເປັນກົກເຄົ້າລັດທິດສະດີມາກ.

**ໃນພາກທີ4:** ມາກ ແລະ ອັງແກນໄດ້ນຳສະເໜີກ່ຽວກັບຫຼັກການພື້ນຖານຂອງຍຸດທະສາດພັກຄອມມູນິດໃນການດຳເນີນການຕໍ່ສູ້ເພື່ອປະຊາທິປະໄຕ ແລະ ສັງຄົມນິຍົມ.

ໃນທາງທິດສະດີ ແລະ ການປະຕິບັດຕົວຈິງ ພວກຄອມມູນິດໄດ້ເປັນເຈົ້າການໃນການນຳພາການຕໍ່ສູ້ຂອງຊົນຊັ້ນກຳມະຊີບ. ໃນສັງຄົມທີ່ເຕັມໄປດ້ວຍຂໍ້ຂັດແຍ່ງຕ່າງໆນັ້ນບໍ່ພຽງແຕ່ຊົນຊັ້ນກຳມະຊີບເທົ່ານັ້ນທີ່ຕົກທຸກໄດ້ຍາກ ແຕ່ຍັງມີຫຼາຍຊັ້ນຄົນໃນສັງຄົມທີ່ຕົກທຸກໄດ້ຍາກ ແລະ ທົນທຸກທໍລະມານຕໍ່ແອກກົດຂີ່ຂູດຮີດ, ຍ້ອນຖືກຈຳກັດສິດເສລີພາບ ແລະ ມີຄວາມເບື່ອໜ່າຍຕໍ່ອຳນາດການປົກຄອງແຫ່ງຍຸກສະໄໝ. ຍ້ອນແນວນັ້ນຂະບວນການຕໍ່ສູ້ຂອງຊົນຊັ້ນກຳມະຊີບຈິ່ງສາມາດຍາດເອົາໄຊຊະນະໄດ້ຫຼືບໍ່ນັ້ນ ຂຶ້ນຢູ່ກັບວ່າຊົນຊັ້ນກຳມະຊີບຈະຕ້ອງຮ່ວມມືກັບກຳລັງມະຫາຊົນທີ່ຢູ່ອ້ອມຂ້າງໂດຍສະເພາະແມ່ນປະຊາຊົນທີ່ຖືກກົດຂີ່ ຫຼື ຈະສວຍໂອກາດເອົາຕອນທີ່ມີກຳລັງຕໍ່ຕ້ານອຳນາດການປົກຄອງພວກນາຍທຶນໄດ້ຫຼືບໍ່. ຖະແຫຼງການຍັງຊີ້ໃຫ້ເຫັນວ່າ ພວກຄອມມູນິດລ້ວນແຕ່ພ້ອມທີ່ຈະໃຫ້ການຊ່ວຍເຫຼືອທຸກຂະບວນການຕໍ່ສູ້ເພື່ອປັບປຸງສັງຄົມ ແລະ ການເມືອງໃນເວລານັ້ນ. ຍ້ອນແນວນັ້ນມີຫຼາຍຄັ້ງຊົນຊັ້ນກຳມະຊີບຕ້ອງຮ່ວມກຸ່ມເປັນພັນທະມິດກັບພວກນາຍທຶນກ້າວໜ້າ. ແຕ່ວ່າການຊ່ວຍເຫຼືອ ແລະ ການເປັນພັນທະມິດນັ້ນບໍ່ສາມາດຊື້ມາດ້ວຍເງິນໄດ້ແຕ່ມັນຕ້ອງອີງໃສ່ຫຼັກການອັນຖືກຕ້ອງເປັນທຳ ແລະ ມີຄວາມເປັນເອກະພາບໃນການດຳເນີນການຕໍ່ສູ້ຕ້ານກັບພວກນາຍທຶນ. ພັກຄອມມູນິດບໍ່ລືມທີ່ຈະຕ້ອງຄັດຄ້ານຄວາມບໍ່ຈິງຈັງໃນການຕໍ່ສູ້ຂອງຜູ້ຮ່ວອຸດົມການ. ພ້ອມດຽວກັນນັ້ນກໍ່ດຳເນີນກາສຶກສາອົບຮົມໃຫ້ຊົນຊັ້ນກຳມະຊີບຮູ້ໄດ້ເຖິງເປົ້າໝາຍສຸດ

ທ້າຍຂອງຕົນກໍ່ຄືຕໍ່ສູ້ເພື່ອລັດທິຄອມມູນິດ. ພວກເຂົາຕ້ອງຮັບປະກັນຄວາມເປັນເອກະລາດທາງດ້ານການເມືອງ ແລະ ການຈັກຕັ້ງຂອງຕົນຂຶ້ນເພື່ອໃຫ້ສາມາດສືບຕໍ່ນຳພາການປະຕິວັດໄປສູ່ໄຊຊະນະຢ່າງສົມບູນ.

ບົດຖະແຫຼງການຂອງພັກຄອມມູນິດສິ້ນສຸດລົງໂດຍ ພວກຄອມມູນິດໄດ້ຂຶ້ນປະກາດວ່າ: ຈຸດປະສົງຂອງພວກເຂົາພວກແຕ່ຢາກຫຼຸດພົ້ນຢາກຄວາມທຸກຍາກ ແລະ ມີສິດປະກອບສ່ວນໃນວຽກງານຕ່າງໆກໍ່ເທົ່ານັ້ນ. ມາກໄດ້ໄດ້ສ້າງຄວາມຢ້ານກົວໃຫ້ແກ່ຊົນຊັ້ນປົກຄອງໃນເວລາທີ່ພວກເຂົານຶກເຖິງເຫດການຕໍ່ສູ່ເພື່ອການປະຕິວັດຂອງຊົນຊັ້ນກຳມະຊີບ. ໃນຂະບວນການປະຕິວັດຊົນຊັ້ນກຳມະຊີບບໍ່ໄດ້ມີການສູນເສຍວັດຖຸສ່ວນຕົວຫຍັງນອກຈາກໂສ້ຮ່ວງແຫ່ງການຂູຣີດທີ່ເຄີຍຜູ້ກມັດພວກເຂົາໄວ້. ໃນຂະບວນການປະຕິວັດດັ່ງກ່າວນັ້ນພວກເຂົາສາມາດຍາດເອົາໂລກໃໝ່ມາໄດ້ໃຫ້ແກ່ຕົນເອງ (ໂລກແຫ່ງຄວາມສຸກ)

”ກຳມະຊີບທັງໝົດຈົ່ງສາມັກຄີກັນໄວ”

# ບົດທີ 7

# ຂະບວນການປະຕິວັດນາຍທຶນຢູ່ເອີຣົບກາງສະຕະວັດທີ 19

ຂະບວນການປະຕິວັດຕ້ານກັບລະບອບສັກດີນາ, ຂະບວນການລຸກຮື້ຂຶ້ນຕໍ່ສູ້ຂອງມວນຊົນຕ້ານແອກປົກຄອງຂອງພວກທຶນນິຍົມໄດ້ເກີດຂຶ້ນຕະຫຼອດຊຸມປີ 30-40 ຂອງສະຕະວັດທີ 19 ແລະ ວິກິດການທາງດ້ານເສດຖະກິດໃນປີ 1845-1847 ເຮັດໃຫ້ທະວີບເອີຣົບກ້າວເຂົ້າສູ່ຍຸກໃຫ້ການປະຕິວັດ. ຕົ້ນປີ 1848 ຄວັນໄຟແຫ່ງການປະຕິວັດໄດ້ລະເບີດຂຶ້ນຢູ່ປະເທດຝຣັ່ງ ຈາກນັ້ນກໍ່ແຜ່ລາມອອກໄປທົ່ວເອີຣົບນັບຕັ້ງແຕ່ປາຣີຈົນເຖິງ ບູດາແປດ, ແຕ່ແບັກແລັງຈົນເຖິງປາແລັກໂມ ເປັນການຕໍ່ສູ້ເຖິງຈຸດສຸດຍອດຂອງກຳລັງມວນຊົນ. ຂະບວນການປະຕິວັດປີ 1848-1849 ເປັນຂີດໝາຍອັນໃໝ່ທີ່ສົ່ງຜົນສະທ້ອນອັນໃຫຍ່ຫຼວງຕໍ່ກັບປະຫວັດສາດທະວີບເອີຣົບໃນກາງສະຕະວັດທີ 19.

## I. ຂະບວນການປະຕິວັດປີ 1848, ລະບອບສາທາລະນະລັດ ແລະ ຈັກກະພັດທີ 2 ຢູ່ປະເທດຝຣັ່ງ

ການປະຕິວັດໃນປີ 1848 ຢູ່ປະເທດຝຣັ່ງໄດ້ໂຄ່ນລົ້ມລະບອບລາຊາທິປະໄຕໃນເດືອນກໍລະກົດ, ສ້າງຕັ້ງລະບອບສາທາລະນະລັດ ຄັ້ງທີ 2 ຂຶ້ນ. ນັບແຕ່ປີ 1848-1852 ໄລຍະປະຫວັດສາດໃນຍຸກນີ້ແບ່ງອອກເປັນ 3 ໄລຍະຄື:

1) ຍຸກເດືອນກຸມພາ ນັບແຕ່ວັນທີ 24 ກຸມພາ 1848ຫາວັນທີ 4 ພຶດສະພາ 1848.
2) ຍຸກແຫ່ງການສ້າງຕັ້ງລະບອບສາທາລະນະລັດ ແລະ ສະພາລັດຖະທຳມະນູນແຕ່ວັນທີ 4 ພຶດສະພາ ຫາວັນທີ 29 ພຶດສະພາ ປີ 1848.
3) ຍຸກສາທາລະນະລັດພາຍໃຕ້ລັດຖະທຳມະນູນ ແລະ ສະພານິຕິບັດຍັດແຕ່ວັນທີ 29 ພຶດສະພາ ປີ 1848 ຫາວັນທີ 2 ທັນວາ ປີ 1851

## II. ການປະຕິວັດເດືອນກຸມພາ ແລະ ການສ້າງຕັ້ງລັດຖະບານຊົ່ວຄາວ

ຕົ້ນປີ 1848 ໜໍ່ແໜງຂອງການປະຕິວັດເລີ່ມປະກົດຕົວໃຫ້ເຫັນຢູ່ປະເທດຝຣັ່ງ, ຊັ້ນຄົນຕ່າງໆໃນສັງຄົມເລີ່ມມີຄວາມເບື່ອໜ່າຍຕໍ່ກັບນະໂຍບາຍໃນການຕໍ່ຕ້ານການປະຕິວັດຂອງລະບອບລາຊາທິປະໄຕເດືອນກໍລະກົດໂດຍມີກະສັດ ຫຼຸຍ ຟີລິບຂຶ້ນຄອງລາດ. ຂະບວນການຕໍ່ສູ້ເພື່ອຮຽກຮ້ອງໃຫ້ປັບປຸງລະບອບການເລືອກຕັ້ງໄດ້ຂະຫຍາຍຕົວຢ່າງເຂັ້ມແຂງ. ຍ້ອນມີການສັງເກດ ແລະ ຕິດຕາມຢ່າງເຄັ່ງຄັດຈຶ່ງເຮັດໃຫ້ບັນດາຜູ້ເຂົ້າຮ່ວມການປະຕິວັດມີຄວາມລະມັດລະວັງສູງ, ສ່ວນຫຼາຍຈະເຕົ້າໂຮມກັນດ້ວຍຮູບແບບການລວມຕົວກັນ ”ກິນເຂົ້າສາມັກຄີ”. ສະນັ້ນ, ລັດຖະບານຈຶ່ງອອກຂໍ້ຫ້າມບໍ່ໃຫ້ພວກປະຕິວັດເພື່ອການປະຕິຮູບການເລືອກຕັ້ງຈັດພາເຂົ້າສາມັກຄີຂຶ້ນໃນວັນທີ 22 ກຸມພາ. ກຳລັງມະຫາຊົນໄດ້ຕອບໂຕ້ຂໍ້ຫ້າມດັ່ງກ່າວນັ້ນດ້ວຍການລຸກຂຶ້ນຕໍ່ສູ້, ດຳເນີນການໂຮມຊຸມນຸມມິດຕິງປະທ້ວງຂະໜາດໃຫຍ່ຢູ່ທີ່ ປາຣີ ເພື່ອຮຽກຮ້ອງໃຫ້ ກີໂຊ ເຊິ່ງເປັນນາຍົກລັດຖະມົນຕີລາອອກຈາກຕຳແໜ່ງ ແລະ ຮຽກຮ້ອງໃຫ້ມີການປະຕິຮູບລະບົບການເລືອກຕັ້ງ. ການປະທະກັນສັງຄົມລະຫວ່າງຕຳຫຼວດ-ທະຫານ ແລະ ກຸ່ມຜູ້ປະທ້ວງ ເກີດຂຶ້ນລຽນຕິດ. ຂະບວນການເດີນປະທ້ວງເກີດຂຶ້ນເຕັທຖະໜົຮທົນທາງ, ຕາມສາມແຍກ. ຕອນບ່າຍຂອງ

ວັນທີ 23 ກຸມພາ ກຳລັງຕຳຫຼວດ ແລະ ທະຫານໄດ້ນຳກຳລັງເຂົ້າປາບປາມຝູງຊົນ ແຕ່ວ່າກຳມະກອນກໍບໍ່ຍອມຖອຍ, ຮີບຮ້ອນຍຶດເອົາຈຸດຍຸດທະສາດທີ່ສຳຄັນໃນປາຣີເຂົ້າມາໄວ້ໃນກຳມືຂອງມະຫາຊົນ. ເຮັດໃຫ້ພະເຈົ້າ ຫຼຸຍ ຟີລິບຮີບຮ້ອນໂຕນໜີໄປລີ້ໄພຢູ່ປະເທດ ອັງກິດ.




ກະສັດ ຫຼຸຍ ຟີລິບ

ລາດຊະບັນລັງຖືກໂຄ່ນລົ້ມລົງຢູ່ຕໍ່ໜ້າຈະຕຸລັດ (ສະໜາມຫຼວງ)ທີ່ເຕັມໄປດ້ວຍສຽງຮ້ອງຊົມເຊີຍ" ລະບອບສາທາລະນະລັດຈົ່ງຈະເລີນ".

ຕະຫຼອດໄລຍະ 18 ປີ ແຫ່ງການປົກຄອງພາຍໃຕ້ລະບອບລາຊາທິປະໄຕເດືອນກໍລະກົດ (1838-1848)ອຳນາດການປົກຄອງທັງໝົດໄດ້ຖືກໂຄ່ນລົງຢ່າງຊິ້ນເຊີງ. ພາຍຫຼັງການຢຶດອຳນາດສິ້ນສຸດລົງລັດຖະບານຊົ່ວຄາວກໍ່ໄດ້ຮັບການສ້າງຕັ້ງຂຶ້ນເຊິ່ງປະກອບມີຄະນະລັດຖະບານ 11 ທ່ານ. ໃນນັ້ນ 7 ທ່ານແມ່ນຂຶ້ນກັບພວກສາທາລະນະລັດນາຍທຶນຝ່າຍຂວາ, 2 ຄົນຂຶ້ນກັບພວກນາຍທຶນນ້ອຍ ແລະ ອີກ 2 ຄົນຂຶ້ນກັບກຸ່ມສັງຄົມນິຍົມນັ້ນກໍ່

ຄື ລຸຍບັງ ແລະ ອານແບ. ປະທານລັດຖະບານຊົ່ວຄາວແມ່ນ ທະນາຍ ດຸຍປົງແຕ່ຜູ້ນຳທີ່ແທ້ຈິງແມ່ນນັກເສລີພາບທີ່ມັກສະຫງົບ. ລັດຖະມົນຕີກະຊວງການຕ່າງປະເທດແມ່ນ ລາມາຕິນ. ນັ້ນກໍ່ຄືເຫດການປະນີປະນອມລະຫວ່າງບັນດາຊົນຊັ້ນທີ່ແຕກຕ່າງກັນໃສັງຄົມທີ່ເຄີຍໂຄ່ນລົ້ມລະບອບລາຊທິປະໄຕເດືອນກໍລະກົດ, ແຕ່ສິດຜົນປະໂຫຍດກົງກັນຂ້າມກັນສ່ວນຫຼາຍຈະແມ່ນບັນດາຕົວແທນຂອງຊົນຊັ້ນນາຍທຶນໄດ້ຮັບສິດຜົນປະໂຫຍດ.

ວັນທີ 25ກຸມພາ ລະບອບສາທາລະນະລັດທີ2 ໄດ້ປະກາດສ້າງຕັ້ງຂຶ້ນ, ແຕ່ຍັງບໍ່ທັນແມ່ນລະບອບສາທາລະນະລັດສັງຄົມນິຍົມທີ່ຊົນຊັ້ນກຳມະກອນຕ້ອງການແຕ່ຫາກແມ່ນສາທາລະນະລັດນາຍທຶນດັ່ງນັ້ນຊົນຊັ້ນກຳມະກອນຈິ່ງບັງຄັບໃຫ້ນາຍທຶນຕ້ອງ ມີການປັບປຸງລະບອບສັງຄົມໃຫ້ມີຄວາມເທົ່າທຽມກັນ.

ວັນທີ 25 ກຸມພາລັດຖະບານຜ່ານຂໍ້ຕົກລົງສ້າງຕັ້ງຄະນະກຳມະການແຮງງານຂຶ້ນທີ່ມີລຸຍບັງ ແລະ ອານແບເປັນຜູ້ຮັບຜິດຊອບຊີ້ນຳ, ມີສຳນັກງານໃຫຍ່ຕັ້ງຢູ່ພະລາດຊະວັງລຸກຊຳບົວ



ພະລາດຊະວັງລຸກຊຳບົວໃນປັດຈຸບັນ

ລຸຍບັງໄດ້ຮຽກປະຊຸມຄະນະກຳມະຜູ້ແທນເຈົ້າຂອງໂຮງຈັກໂຮງງານ, ໄດ້ສ້າງແຜນການແບບໄຝ່ຝັນຂອງນາຍທຶນນ້ອຍ, ຜັນຂະຫຍາຍແນວທາງນະໂຍບາຍແບບສັນຕິພາບ, ອ່ອມມືລະຫວ່າງຊົນຊັ້ນໃນສັງຄົມ ແລະ ເພື່ອຄອຍຖ້າກ້າວເຂົ້າສູ່ສະພາລັດຖະທຳມະນູນ ລຸຍບັງໄດ້ປະກອບສ່ວນສຳຄັນເຂົ້າໃນການແກ້ໄຂຄວາມຂັດແຍ່ງລະຫວ່າງຊົນຊັ້ນກຳມະກອນ ກັບເຈົ້າຂອງໂຮງຈັກໂຮງງານ. ຢຸດຕິການຂະບວນການລຸກຂຶ້ນປະທ້ວງເຮັດໃຫ້ຈິດໃຈປະຕິວັດຂອງກຳລັງມວນຊົນຄ່ອຍໆຫຼຸດລົງ.

ສະພາບການຫວ່າງງານນັບມື້ນັບເພີ່ມຂຶ້ນຢ່າງຮຸນແຮງ ລັດຖະບານຊົ່ວຄາວໄດ້ຕັດສິນໃຈສ້າງຕັ້ງໂຮງງານແຫ່ງຊາດຂຶ້ນ ຮອດກາງເດືອນພຶດສະພາບັນດາໂຮງງານດັ່ງກ່າວນັ້ນໄດ້ດຶງດູດເອົາກຳມະກອນຈຳນວນ1. ພັນຄົນເຂົ້າມາເຮັດວຽກ. ໜ້າວຽກຂອງພວກເຂົາບໍ່ແມ່ນທຳການຜະລິດແຕ່ຫາກແມ່ນການປູກຕົ້ນໄມ້, ປູເສັ້ນທາງ ແລະ ປັດກວາດພະລາດຊະວັງ. ເງິນເດືອນໃນແຕ່ລະວັນແມ່ນ 23 ຊູ. ບັນດາໂຮງງານແຫ່ງຊາດໄດ້ຮັບສ້າງຕັ້ງຂຶ້ນທີ່ ປາຣີ, ລີອົງ, ນັງເຕີ ແລະ ບ່ອນອື່ນໆ. ອີງໃສ່ບົດຮຽນໃນການແກ້ໄຂບັນຫາໄພຫວ່າງງານ, ບັນດາໂຮງຈັກໂຮງງານນັ້ນໄດ້ທຳການຖ່ວງເວລາໃນການດຳເນີນການຕໍ່ສູ້ຊົນຊັ້ນ, ສ້າງພາບລັດທີ່ສວຍງາມເພື່ອລໍໃຫ້ໄດ້ເຂົ້າບັນຈຸໃນລັດຖະບານ ແລະ ສອດຄ່ອງກັບການຜັນຂະຫຍາຍຂອງ ລຸຍບັງ. ໃນສາຍຕາຂອງພວກນາຍທຶນໃຫຍ່ , ພວກນາຍທຶນນ້ອຍ, ແລະ ຊາວນາ ສຳລັບກຳມະກອນຢູ່ໃນໂຮງຈັກໂຮງງານແຫ່ງຊາດເປັນພຽງກຸ່ມຄົນທີ່ບໍ່ມີວຽກເຮັດ, ຂີ້ຄ້ານ ແລະ ເປັນລູກຈ້າງຂອງພວກເຂົາ. ຍ້ອນແນວນັ້ນຈຶ່ງເຮັດໃຫ້ຊົນຊັ້ນອື່ນມີຄວາມສັບສົນໃນການທີ່ຈະໃຫ້ການຊ່ວຍເຫຼືອແກ່ຊົນຊັ້ນນາຍທຶນໃນການກຳຈັດຊັ້ນຄົນທີ່ມີຈຳນວນຫຼາຍໃນເວລາທີ່ມີເງື່ອນໄຂພຽງພໍ.

ລັດຖະບານຊົ່ວຄາວໄດ້ສ້າງກອງກຳລັງພຣິຊົບປະກອບມີ 24 ກອງທັບທະຫານທີ່ຄັດເລືອກມາຈາກຊາຍສະກັນອາຍຸແຕ່ 15-20ປີ ສ່ວນຫຼາຍພວກເຂົາມາຈາກຊົນຊັ້ນກຳມະຊີບທີ່ມີຄວາມແຂງແຮງ, ພ້ອມທີ່ຈະຂາຍຕົນເອງໃຫ້ກັບພວກນາຍທຶນທີ່ໄດ້ຮັບການຝຶກຊ້ອມເປັນພິເສດ. ແຕ່ສິ່ງທີ່ເປັນອັນຕະລາຍກໍ່ຄືຊົນຊັ້ນກຳມະຊີບເຫັນວ່າພວກເຂົາແມ່ນກອງກຳລັງທີ່ຈະປົກປ້ອງຕົນທີ່ເປັນປໍລະປັກກັບກອງກຳລັງແຫ່ງຊາດຂອງພວກນາຍທຶນໃຫຍ່, ເຫັນພວກເຂົາເປັນນັກຮົບທີ່ຈະປົກປ້ອງຕົນໃນຍາມທີ່ຈະເດີນປະທ້ວງຕາມຖະໜົນຫົນທາງ. ແຕ່ຄວາມຈິງແລ້ວມັນເປັນພຽງກອງກຳລັງປົກປ້ອງສິດຜົນປະໂຫຍດຂອງນາຍທຶນຈາກພວກຊົນຊັ້ນກຳມະຊີບ.

ບັນຫາການຂາດແຄນທາງດ້ານການເງິນເປັນອີກບັນຫາໜຶ່ງທີ່ລັດຖະບານຊົ່ວຄາວຕ້ອງປະເຊີນ. ລັດຖະບານໄດ້ປະກາດໃຊ້ຂໍ້ກຳນົດຫຼາຍຢ່າງເຊັ່ນ: ຮັກສາລະບອບການເກັບພາສາທີ່ເຄີຍເກັບໃນເມື່ອກ່ອນໄວ້ໃຫ້ປະຊາຊົນຕ້ອງໄດ້ຈ່າຍທະນາບັດໃຫ້ຜູ້ທີ່ຕ້ອງການຊື້ (ສ່ວນຫຼາຍແມ່ນພວກນາຍທຶນໃຫຍ່) ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ຊົນຊັ້ນນາຍທຶນຕໍ່ກັບຄວາມສາມາດໃນການຈ່າຍຄ່າໜີ້ສິນຂອງປະເທດຊາດ. ການເດີນທາງຕ້ອງນຳໃຊ້ບັນທະນາຄານເທົ່ານັ້ນ, ເພື່ອທົດແທນການນຳໃຊ້ເງິນຕາ, ວັນທີ 16 ມີນາ ໄດ້ປະກາດເພີ່ມເພີ່ມການເກັບພາສີ 45% ໃນ 4 ປະເພດພາສີໂດຍສະເພາະແມານເຂດຊົນນະບົດ. ໜັງສືພິມນາຍທຶນເຮັດໃຫ້ກຳມະກອນຄິດວ່ານັ້ນເປັນການເພີ່ມພາສີທີ່ເກັບກັບພວກເຈົ້າທີ່ດິນເທົ່ານັ້ນແຕ່ຄວາມຈິງແລ້ວພາສີດັ່ງນັ້ນແມ່ນຊົນຊັ້ນຊາວນາເປັນຜູ້ແບກຫາບມັນ ແລະ ເຮັດໃຫ້ຊາວນາເຂົ້າໃຈຜິດວ່າພາສີທີ່ເພີ່ມຂຶ້ນນັ້ນຍ້ອນຕ້ອງການນຳເອົາເງິນໄປລ້ຽງດູເບິ່ງແຍງໃຫ້ຊົນຊັ້ນກຳມະຊີບຜູ້ກຽດຄ້ານທີ່ອາໄສຢູ່ຕົວເມືອງ. ນັ້ນຄືພາລະອັນໜັກໜ່ວງທີ່ລະບອບສາທາລະນະລັດນຳມາໃຫ້ພວກເຂົາແບກຫາບ. ສຳລັບພາສີ 45% ນັ້ນນໍ້າມັນແອັດຊັງແມ່ນບັນຫາໜັກໜ່ວງສຳລັບຊາວນາຝຣັ່ງ ພວກເຂົາໄດ້ປັບປ່ຽນບັນຫາພາສີມາເປັນບັນຫາທີ່ໃຫຍ່ເອົາເປັນເອົາຕາຍຕໍ່ກັບລະບອບສາທາລະນະລັດ. ນັບແຕ່ນັ້ນມາຊາວນາຝຣັ່ງໃນລະບອບສາທາລະນະລັດແລ້ວພາສີ 45% ທີ່ເກັບໄປນັ້ນຖືວ່າຊົນຊັ້ນກຳມະຊີບໃນປາຣີປັນຊົນຊັ້ນທີ່ເຮັດໃຫ້ມີຄ່າສິ້ນເປືອງ, ຫຼິ້ນກິນຟຸມເຟືອຍ ພວກນີ້ມີຄວາມສຸກບົນຄວາມທຸກຂອງຄົນອື່ນ.

ດ້ານນະໂຍບາຍການຕ່າງປະເທດລັດຖະບານໄດ້ດຳເນີນວິທີການຕໍ່ຕ້ານຫຼາຍຮູບແບບເຊັ່ນ: ບໍ່ຍອມຮັບຂະບວນການຕໍ່ສູ້ປົດປ່ອຍປະຊາຊົນບັນດາເຜົ່າຢູ່ບັນດາປະເທດຕ່າງໆ, ປົກປ້ອງຄວາມເປັນເອກະພາບໃນປະເທດອີຕາລີ ແລະ ເຢຍລະມັນ. ຊອກວິທີການພົວພັນຢ່າງສະໜິດແໜ້ນກັບລາດຊະວົງ ແລະ ລັດຖະບານນາຍທຶນອັງກິດ.

ເຖິງຢ່າງໃດກໍ່ຕາມຊົນຊັ້ນກຳມະກອນກໍ່ສາມາດຍາດເອົາບາງວິທີການປະຕິວັດປະຊາທິປະໄຕທີ່ເປັນເອກະພາບ ປະກາດຂໍ້ກຳນົດອອກມາໃນວັນທີ 2 ມີນາກຳນົດການເຮັດວຽກໃນມື້ໜຶ່ງ 10 ຊົ່ວໂມງເທົ່ານັ້ນຢູ່ປາຣີ ແລະ ບັນດາແຂວງອື່ນແມ່ນ 11 ຊົ່ວໂມງ, ມອບສິດລົງຄະແນນສຽງໃຫ້ເພດຊາຍທີ່ມີອາຍຸ 21 ປີຂຶ້ນໄປ. ການລົບລ້າງພາສີສະແຕມເປັນເຄື່ອງໝາຍໃຫ້ບັນດາໜັງສືພິມມີທ່າອ່ຽງປະຊາທິປະໄຕໄດ້ຮັບການພິມຈຳໜ່າຍ ແລະ ກະຈາຍໄປຢ່າງກວ້າງຂວາງ ສິດເສລີພາບໃນການສ້າງຕັ້ງສະມາຄົມຕໍ່ມາຈິ່ງເກີດມີຫຼາຍສະມາຄົມ ແລະ ຫຼາຍສະໂມສອນປະຊາທິປະໄຕ. ໂດຍສະເພາະໃນລະດູໃບໄມ້ປົ່ງຂອງປີ 1848ທີ່ປາຣີມີເຖິງ 30 ສະໂມສອນ, ອີງການຈັດຕັ້ງທີ່ແຍກຕາມສາຂາວິຊາຊີບ ແລະ ສະຫະພັນທີ່ມີທ່າອຽງໄປຕາມລະບອບການເມືອງ. ວັນທີ 27 ເມສາ ລັດຖະບານປະກາດລົບລ້າງລະບອບຂ້າທາດຜິວດຳຢູ່ບັນດາປະເທດຫົວເມືອງຂຶ້ນຂອງຝຣັ່ງ.

## III. ການສ້າງຕັ້ງລະບອບສາທາລະນະລັດ ແລະ ຂະບວນການປະຕິວັດເດືອນມິຖຸນາ

### 1. ສະພາລັດຖະທຳມະນູນ

ພາຍຫຼັງເຫິງນານໃນການຕໍ່ສູ້ກ່ຽວກັບບັນການການຈັດການເລືອກຕັ້ງ, ວັນທີ 5 ເມສາ ປີ 1848 ສະພາລັດຖະທຳມະນູນໄດ້ເລີ່ມປະກາດຍຸກແຫ່ງການສ້າງຕັ້ງລະບອບສາທາລະນະລັດນາຍທຶນ.

ກະຊວງແຮງງານ, ຈຳກັດສິດໃນການສະແດງຄວາຄິດເຫັນ.




ຂໍ້ຕົກລົງສ້າງຕັ້ງຄະນະກຳມະການແຮງງານທີ່ມີລຸຍບັງ ແລະ ອີແບຮັບຜິດຊອບ.

ຈຳນວນພົນທັງໝົດໃນສະພາແມ່ນ 880 ຄົນໃນນັ້ນກວມຈຳນວນພົນຫຼາຍກວ່າໝູ່ແມ່ນພວກສາທາລະນະລັດຝ່າຍຂວາ ເອີ້ນຢ່າງໜຶ່ງວ່າສາທາລະນະລັດການເງິນຊົ່ວຄາວ ຫຼື ສາທາລະນະລັດບໍລິສຸດມີຈຳນວນພົນ 550 ທີ່ນັ່ງ, ພວກປົກປ້ອງສະຖາບັນກະສັດທີ່ເປັນເຊື້ອສາຍລາດຊະວົງບອກບົງ ແລະ ອັອກໂກລີອັງກວາມ 2012 ບ່ອນນັ່ງ,

ພວກໂບນາປາກກວມສ່ວນໜ້ອຍບໍ່ຫຼາຍ. ພວກປະຊາທິປະໄຕນາຍທຶນນ້ອຍກວມ 80 ບ່ອນນັ່ງ ສ່ວນກຳມະກອນມີພຽງແຕ່ 18 ບ່ອນນັ່ງເທົ່ານັ້ນ.

ສະພາລັດຖະທຳມະນູນສ້າງຕັ້ງຄະນະກຳມະການໜຶ່ງຂຶ້ນເອີ້ນວ່າ: ກຳມະການບໍລິຫານ. ບັນດາກະຊວງສັງຄົມນິຍົມຖືກຕັດ ແລະ ແຍກອອກນອກປະເທດ. ສາທາລະນະລັດນາຍທຶນຝ່າຍກວ່າກວມຈຳນວນພົນຫຼາຍກວ່າໝູ່ໃນຄະນະກຳມະການບໍລິຫານທີ່ມີການພົວພັນກັນຢ່າງສະໜິດແໜ້ນກັບຊົນຊັ້ນນາຍທຶນໃຫຍ່. ລັດຖະບານປະກາດລົບລ້າງຂໍ້ຕົກລົງແຕ່ງຕັ້ງ. ສິດອິດສະຫຼະພາບທາງດ້ານວາລະສານໜັງສືພິມ, ຂັດຂວາງການເຄື່ອນໄຫວຂອງສະໂມສອນປະຊາທິປະໄຕ.

ຍ້ອນຄວາມເບື່ອໜ່າຍສະພາລັດຖະທຳມະນູນ ແລະ ລັດຖະບານມາໃນວັນທີ 15 ພຶດສະພາປີ 1848 ສະໂມສອນປະຕິວັດຢູ່ປາຣີໄດ້ທຳການລຸກຮື້ຂຶ້ນປະທ້ວງຂະໜາດໃຫຍ່ມີຈຳນວນພົນເຖິງ 20 ພັນຄົນເຂົ້າຮ່ວມ, ຂະບວນການໂຮມຊຸມນຸມແກ່ຍາວໄປເຖິງຫ້ອງການສະພາ, ຫຼັງໄຫຼເຂົ້າສູ່ຫ້ອງປະຊຸມ, ແຣັກໄປ, ບລັງກີ, ບາກແບເຊີ ... ໄດ້ຂຶ້ນປາໄສຢູ່ເທິງເວທີ ຕັ້ງການກຳນົດການເກັບພາສີນຳພວກນາຍທຶນທີ່ມີທຶນຮອນ 1 ຕື້ ຟໜັງຂຶ້ນໄປ, ສ້າງຕັ້ງຄະນະກຳມະການກວດກາການເຄື່ອນໄຫວວຽກງານຂອງລັດຖະບານ, ໃຫ້ກຳລັງທະຫານຖອນອອກຈາກປາຣີ, ໃຫ້ການຊ່ວຍເຫຼືອແກ່ພວກຫວ່າງງານ, ຜູ້ທຸກຍາກຂາດເຂີນ. ໃຫ້ການຊ່ວຍເຫຼືອແກ່ກຳລັງທະຫານຝ່າຍປະຕິວັດຢູ່ໂປແລນແຕ່ບໍ່ມີຂໍ້ຮຽກຮ້ອງໃດເລີຍຖືກຍອມຮັບ ເຮັດໃຫ້ຜູ້ແທນກອງປະຊຸມພາກັນຫຼັ່ງໄຫຼກັນກັບອອກມາຈາກງານຊຸມນຸມ. ຜູ້ນຳບາງຄົນຂອງຂະບວນການປະທ້ວງດຳເນີນການຍົກເລີກສະພາ ແລະ ສ້າງຕັ້ງລັດຖະບານໃໝ່ຂຶ້ນ ທຳອິດບລັງກີ ແລະ ຣາກໄປໄດ້ແນະນຳວ່າສະຖານະການຍັງບໍ່ທັນສຸກງອມ. ຂະບວນການປະທ້ວງເດີນໜ້າໄປເຖິງຫ້ອງການເມືອງປະກາດສ້າງຕັ້ງລັດຖະບານໃໝ່ໃນນັ້ນມີບັນຜູ້ຕາງແທນຂອງລັດທິສັງຄົມນິຍົມ ແລະ ພວກປະຊາທິປະໄຕນາຍທຶນນ້ອຍ, ບໍ່ພໍເທົ່າໃດຊົ່ວໂມງກຳລັງທະຫານກໍ່ອອກມາປາບປາມກຸ່ມຜູ້ປະທ້ວງ, ບັນດາຜູ້ນຳຂະບວນປະທ້ວງເຊັ່ນ: ບລັງກີ, ຣາກໄປ, ບາກແບເຊີ, ອານແບ... ກໍ່ໄດ້ຖືກຈັບ.

ຂະບວນການປາບປາມໃນຄັ້ງວັນທີ 15 ພຶດສະພາ 1848 ເປັນການປິດສາກຂະບວນການປາບປາມຊົນຊັ້ນກຳມະກອນຂອງຊົນຊັ້ນນາຍທຶນ. ບັນດາສະໂມສອນຕ່າງໆຖືກສັ່ງໃຫ້ປິດຕົວລົງ ນາຍພົນ ໂກແວນຍັກ ຜູ້ໂຫດຫ້ຽມຖືກເລືອກເປັນລັດຖະມົນຕີກະຊວງການຕໍ່ສູ້. ລັດຖະບານອອກຄຳສັ່ງຫ້າມບໍ່ໃຫ້ມີການເຕົ້າໂຮມຊຸມນຸມກັນຕາມຖະໜົນຫົນທາງໃນຕົວເມືອງຕ່າງໆ. ຂະບວນການປະຕິວັດຈິ່ງຫັນທິດໄປສູ່ການເຕົ້າລວມຕາມໂຮງງານແຫ່ງຊາດ ຍ້ອນຢູ່ທີ່ນັ້ນມີຈຳນວນກຳມະກອນຫຼວງຫຼາຍມີການພົວພັນກັນຢ່າງສະໜິດແໜ້ນກັບບັນດາສະໂມສອນການປະຕິວັດ. ພວກນາຍທຶນໄດ້ທຳການຊຸກຍູ້ໃຫ້ບັນດາໂຮງງານໄດ້ທະການສົມຮູ້ຮ່ວມຄິດກັນເພື່ອເຮັດໃຫ້ກຳມະກອນປະຕິວັດທຳການກໍ່ກະບົດເພື່ອງ່າຍຕໍ່ການປາບປາມ.

## 2. ຂະບວນການປະຕິວັດເດືອນມິຖຸນາ

ວັນທີ 22 ມິຖຸນາ ລັດຖະບານປະກາດບັງຄັບຫ້າມຜູ້ຊາຍທີ່ຍັງບໍ່ມີເມຍຕັ້ງແຕ່ອາຍຸ 18-25 ທີ່ຢູ່ໃນໂຮງງານແຫ່ງຊາດ ແລະ ບໍ່ມີທີ່ຢູ່ທີ່ໝັ້ນຄົງຢູ່ໃນປາຣີຕ້ອງອອກໄປເປັນທະຫານພັນທະຮັບໃຊ້ຊາດ ສ່ວນກຳມະກອນທີ່ອາຍຸສູງກວ່າ 25 ປີຕ້ອງກັບຄືນບ້ານເກີດເມືອງນອນເພື່ອໄປເຮັດໄຮ່ນາຮົ້ວສວນ.

ພວກກຳມະກອນເຂົ້າໃຈທັນທີວ່ານີ້ແມ່ນຮູບແບບການບຸກໂຈມຕີເພື່ອປາບປາບຂະບວນການລຸກຮື້ຂຶ້ນຕໍ່ສູ້ຂອງຊົນຊັ້ນກຳມະກອນ. ພວກນາຍທຶນປະຕິເສດຄັດຄ້ານການສ້າງຕັ້ງບັນດາໂຮງງານແຫ່ງຊາດ. ຕໍ່ກັບການສົມຮູ້

ຮ່ວມຄິດກໍ່ກະບົດກັບກໍາລັງທະຫານນາຍທຶນປະຕິການຂາຍຊາດຄຽງຄູ່ກັບກໍາລັງປ້ອງກັນຊາດ. ແຕ່ໃນຄວາມເປັນຈິງແລ້ວພວກກໍາມະກອນສາມາດຍາດເອົາສະຖານະການນັ້ນມາໄດ້ເພື່ອເຕົ້າລວມດໍາເນີນການຕໍ່ສູ້ຕ້ານກັບລັດຖະບານ. ບັນດາຂໍ້ກໍານົດຂ້າງເທິງນັ້ນພຽງແຕ່ຕ້ອງການແຍກກໍາມະກອນອອກຈາກປາຣີ ແລະ ທໍາລາຍມ້າງຂະບວນການປະຕິວັດ. ແຕ່ກໍາມະກອນປາຣີປະກາດຂຶ້ນມາທັນທີ່ວ່າພວກເຂົາຈະບໍ່ຍອມຖອນຕົວອອກຈາກຕົວເມືອງຖ້າຫາກບໍ່ມີການຜ່ານລັດຖະທໍາມະນູນ ປະຊາທິປະໄຕສັງຄົມນິຍົມ ແລະ ປະຊາຊົນ ແລະ ລັດຖະທໍາມະນູນວ່າດ້ວຍການຮັບປະກັນການລ່ວງລະເມີດສິດທິຂອງລະບອບສາທາລະນະລັດ.

ໃນຕອນແລງຂອງມື້ນັ້ນເອງ, ແລະ ຕອນເຊົ້າຂອງມື້ຕໍ່ມາກຫຼືວັນທີ 23 ມິຖຸນາ ໃນພະລາດຊະວັງ ຟັງເຕອີງ ກໍາມະກອນໄດ້ໂຮມຊຸມນຸມມິດຕິງກັນເພື່ອຕ້ານກັບນະໂຍບາຍຂໍ້ຫ້າມຕ່າງໆຂອງລັດຖະບານ ແລະ ຕັດສິນໃຈຈັບອາວຸດລຸກຂຶ້ນຕໍ່ສູ້ ບໍ່ພໍເທົ່າໃດຊົ່ວໂມງກໍ່ມີສະໜາມຮົບເກີດຂຶ້ນຫຼາຍກວ່າ 600 ແຫ່ງທົ່ວທຸກບ່ອນຕາມຖະໜົນຫົນທາງ, ແຜນການສູ້ຮົບໄດ້ຖືກສະເໜີຂຶ້ນ. ແກກໂຊຊີ ເຊິ່ງເປັນເພື່ອນຮ່ວມຮົບກັບຣາກໄປໄດ້ເອົາເຂດຊານເມືອງດ້ານຕະເວັນອອກຂອງປາຣີເປັນບ່ອນຕັ້ງຖານທັບແນ່ນອນວ່າມັນເປັນເຂດຂອງພວກກໍາມະກອນ. ຕັ້ງແຕ່ນັ້ນກໍ່ດໍາເນີນການບຸກໂຈມຕີເປັນ 4 ປີກ, ກອງກໍາລັງກະບົດຈະປິດລ້ອມຫ້ອງວ່າການເມືອງ ແລະ ບຸກເຂົ້າຍຶງເຂດຂອງພວກນາຍທຶນທີ່ຢູ່ທາງພາກຕາເວັນຕົກຂອງນະຄອນປາຣີ.

ບັນດາຂະບວນເດີນປະທ້ວງຂອງກໍາມະກອນລ້ວນແຕ່ຍົກສູງຄັນທຸງສີແດງສະບັດປິວໄປມາພາຍໃຕ້ຄໍາຂວັນທີ່ວ່າ"ເຂົ້າຈີ່ ແລະ ຂີ່ຝຸ່ນ", "ຂີ້ຝຸ່ນ ແລະ ວຽກງານທີ່ເຮັດ", "ມີຊີວິດຕ້ອງມີວຽກເຮັດ" ຫຼື ຕາຍໃນສະໜາມຮົບ, ໂຄ່ນລົ້ມລະບອບຄົນກົດຂີ່ຄົນ, ລະບັບສາທາລະນະລັດສັງຄົມຈົ່ງໝັ້ນຢືນ…ບັນຊີລາຍຊື່ກໍາມະກອນຂອງລັດຖະບານຈະໄດ້ຮັບການສ້າງຂຶ້ນພາຍຫຼັງໄດ້ຮັບໄຊຊະນະ. ໃນນັ້ນມີບັນດາຜູ້ແທນກໍາມະກອນລັດທິສັງຄົມນິຍົມເຊັ່ນ: ບລັງກີ, ຣາກໄປ, ກາເບ, ບາກແບເຊີ, ອານແບ…ໃນຄໍາຮຽກຮ້ອງຂອງຕົນ, ກໍາລັງກະບົດໄດເນັ້ນໜັກຄວາມໝາຍຂອງສາກົນຂອງຂະບວນການປະຕິວັດແມ່ນອາຊີບທີ່ພວກເຮົາປົກປ້ອງໄວ້ກໍ່ຄືອາຊີບຂອງໝົດທຸກຄົນໃນໂລກ ຖ້າປາຣີຕົກຢູ່ໃນຮ່ວງໂສ້ຂອງຄວາມຫຍຸ້ງຍາກກໍ່ເທົ່າກັບວ່າທົ່ວເອີຣົບກໍ່ຈະຕົກເປັນຂ້າທາດເຊັ່ນກັນ.

ຕອນທ່ຽງຂອງວັນທີ 23 ມິຖຸນາ ສຽງປືນແຫ່ງການສູ້ຮົບໄດ້ດັງຂຶ້ນສະໜັ່ນ, ນະຄອນປາຣີຖືກແບ່ງອອກເປັນ 2 ສະໜາມຮົບຄື: ບັ້ນຮົບຕາເວັນອອກ ແລະ ບັ້ນຮົບຕາເວັນຕົກຖ້າຫາກວ່າໃນການປະຕິວັດເດືອນກຸມພາຊົນຊັ້ນນາຍທຶນຮ່ວມມືກັບຂະບວນການຕໍ່ສູ້ຂອງຊົນຊັ້ນກໍາມະຊີບເພື່ອຕ້ານກັບລະບອບລາຊາທິປະໄຕເດືອນກໍລະກົດ ແລະ ຄໍານຶງເຖິງການສະຫຼະເລືອດເນື້ອຂອງປະຊາຊົນທີ່ໄດ້ສະຫຼະຊີວິດ ນັ້ນໃນເດືອນມິຖຸນາຊົນຊັ້ນນາຍທຶນກໍ່ຄົງຈະບໍ່ໄດ້ລຸກຂຶ້ນຕໍ່ສູ້ບົນເສັ້ນທາງທີ່ກົງກັນຂາມກັບຊົນຊັ້ນກໍາມະກອນຄືແບບນີ້ອີກ. ພວກນາຍທຶນໄດ້ຍິງປືນກວາດໃສ່ຝູງຊົນເຊິ່ງເປັນວິທີທີ່ໂຫດຫ້ຽມເພື່ອຫວັງດັບມອດຂະບວນການຕໍ່ສູ້.

ໃນຕອນເຊົ້າຂອງວັນທີ 26 ມິຖຸນາ ຂະບວນການຕໍ່ສູ້ໄດ້ຢຸດຕິລົງ, ເປັນຄັ້ງທໍາອິດທີ່ຄາແວນຍັກນໍາໃຊ້ປືນໃຫຍ່, ລູກສອນໄຟຍິງສຸມໃສ່ຝູງຊົນທີ່ລວມຕົວກັນຕາມຖະໜົນຫົນທາງໃນຕົວເມືອງ, ທໍາລາຍເຮືອນຊານບ້ານຊ່ອງ, ເຖິງແມ່ນວ່າອາວຸດດັ່ງກ່າວນັ້ນຈະທໍາລາຍມ້າງເພຊັບສົມບັດຂອງພວກເຂົາກໍ່ຕາມ. ຂະບວນການປະຕິວັດຈົມຢູ່ໃນທະເລແຫ່ງເລືອດ, ກໍາມະກອນ 25 ພັນຄົນຖືກຈັບ, ຈໍານວນ 3 ພັນຄົນຖືກນໍາໄປລີ້ໄພ. ທົ່ວປະເທດຝຣັ່ງເຕັມໄປດ້ວຍການປາບປາບພວກກໍາມະກອນຢ່າງນອງເລືອດ.

ຂະບວນການປະຕິວັດໃນເດືອນມິຖຸນາປະສົບກັບຄວາມຫຼົ້ມເຫຼວຍ້ອນການການນຳທີ່ເປັນຈຸດໃນກາງໃນການຊີ້ນຳນຳພາທີ່ເປັນເອກະພາບກັນ. ໃນຂະບວນການຕໍ່ສູ້ມີນັກຮົບຜູ້ໜຸ່ມນ້ອຍທີ່ມີຄວາມສາມາດ ແລະ ມີຄວາມອົງອາດກ້າຫານໄດ້ປະກົດຕົວຂຶ້ນໃຫ້ເຫັນເພື່ອຊີ້ນຳໃນຂະບວນການຕໍ່ສູ້ໃນແຕ່ລະຂົງເຂດ. ແຕ່ບັນດາຜູ້ນຳພາການຕໍ່ສູ້ນັ້ນບໍ່ມີການຕິດຕໍ່ພົວພັນກັນ, ຈຶ່ງບໍ່ສາມາດປະຕິບັດຕາມແຜນການຕໍ່ສູ້ຂອງແກກໂຊຊີຄົນທຳອິດທີ່ດຳເນີນການຕໍ່ສູ້ຕາມຖະໜົນຫົນທາງ, ບໍ່ມີການຈັດຕັ້ງທີ່ມີຄວາມເປັນເອກະພາບ, ຂາດການນຳພາທີ່ເຂັ້ມແຂງ ແລະ ໜັກແໜ້ນ. ຊົນຊັ້ນກຳມະກອນປາຣີດຳເນີນການປະຕິວັດມີລັກສະນະໂດດດ່ຽວພໍໃຜພໍລາວ. ເວລາມີສຽງປືນຕໍ່ສູ້ກັນຢູ່ຕາມຖະໜົນຫົນທາງໃນນະຄອນຫຼວງຫຼາຍສູນກາງອຸດສະຫະກຳກໍ່ບໍ່ຢື່ນມືເຂົ້າມາຊ່ວຍ.

ເຖິງວ່າຂະບວນການປະຕິວັດເດືອນມິຖຸນາຈະປະສົບກັບຄວາມຫຼົ້ມເຫຼວກໍ່ຕາມແຕ່ມັນກໍ່ມີຄວາມໝາຍປະຫວັດສາດອັນໃຫຍ່ຫຼວງຕໍ່ກັບຂະບວນການຕໍ່ສູ້ໃນໄລຍະຕໍ່ມາ. ມາກ ແລະ ອັງແກນ ຍອມຮັບຢ່າງເປີດແປນວ່າການຮ່ວມມືກັບກຳລັງກະບົດ, ຕິດຕາມທຸກສະນາມຮົບ ຮຽກຮ້ອງໃຫ້ກຳມະກອນທຸກພາກສ່ວນໃນໂລກຈົ່ງໃຫ້ການຊ່ວຍເຫຼືອກຳມະກອນທີ່ປາຣີ ທັງສອງທ່ານໄດ້ຍົກໃຫ້ເຫັນທາດແທ້ກຳມະຊີບຂອງຂະບວນການຕໍ່ສູ້ ມາກໄດ້ກຳນົດອອກມາວ່ານັ້ນແມ່ນຂະບວນການສູ້ຮົບຂະໜາດໃຫຍ່ທຳອິດໄດ້ເກີດຂຶ້ນລະຫວ່າງສອງຊົນຊັ້ນທີ່ປໍລະປັກກັນໃນສັງຄົມປັດຈຸບັນ. ແມ່ນຂະບວນການຕໍ່ສູ້ເພື່ອຮັກສາ ຫຼື ເພື່ອໂຄ່ນລົ້ມລະບອບນາຍທຶນ.

**3. ການຈັດການເລືອກຕັ້ງປະທານາທິບໍດີ ແລະ ການປລາໄຊຂອງຝ່າຍນາຍທຶນສາທາລະນະລັດ.**

ພາຍຫຼັງປາບປາມຂະບວນການປະຕິວັດເດືອນມິຖຸນາ, ລັດຖະບານສາທາລະນະລັດໄດ້ສ້າງຕັ້ງລະບອບການເມືອງຕໍ່ຕ້ານກັບການກໍ່ການຮ້າຍຢ່າງຮຸນແຮງ, ລົບລ້າງສິດປະຊາທິປະໄຕ, ລວບລວມອຳນາດທັງໝົດໃຫ້ຢູ່ໃນກຳມືຂອງຜູ້ກຳອຳນາດສູງສຸດນັ້ນກໍ່ຄືປະທານາທິບໍດີ.

ການເລືອກຕັ້ງໃນຄັ້ງວັນທີ 10 ທັນວາ 1848 ເຮັດໃຫ້ ຫຼຸບ ໂບນາປັດຂຶ້ນເປັນປະທານາທິບໍດີ, ສ້າງຕັ້ງອຳນາດການປົກຄອງຂອງພວກນາຍທຶນໃຫຍ່ທີ່ມີທ່າອ່ຽງໃນການປົກປ້ອງພະມະຫາກະສັດ, ຮອບຮວມອຳນາດຂອງພັກຄວາມໝັ້ນຄົງ. ໃນພັກຄວາມໝັ້ນຄົງກໍ່ແບ່ງອອກເປັນ 2 ຝ່າຍຄື: ຝ່າຍທາງການທີ່ປະກອບດ້ວຍເຈົ້າທີ່ດິນທີ່ເຄີຍປົກຄອງໃນຍຸກກາງ (ປີ ຄ.ສ 1815-1830) ແລະ ຝ່າຍ ອໍອກເລອັງ ທີ່ປະກອບດ້ວຍພວກຂຸນນາງການເງິນ ແລະ ພວກອຸດສະຫະກຳໃຫຍ່ໃນລະບອບລາຊາທິປະໄຕເດືອກໍລະກົດ (ປີ ຄ.ສ 1830-1848) ເຊິ່ງມັນກໍ່ສອດຄ່ອງກັບຊື່ຂອງພັກ ເພາະວ່າພວກເຂົາຕ້ອງການຟື້ນຟູ ຄວາມໝັ້ນຄົງຂອງລະບອບລາຊາທິປະໄຕຕໍ່ກັບອຳນາດຂອງພວກນາຍົນໃຫຍ່ ແລະ ເຈົ້າທີ່ດິນ. ຕໍ່ໜ້າສະພາບການກົດດັນຂອງພວກລາດຊະວົງ, ສະພາລັດຖະທຳມະນູນຕ້ອງໄດ້ປະກາດລົ້ມລະລາຍລົງໃນວັນທີ 29 ມັງກອນປີ 1848.

## IV.ລະບອບສາທະລະນະລັດໃຕ້ລັດຖະທຳມະນູນແລະການເຮັດລັດຖະປະຫານຂອງຫຼຸຍໂບນາປາກ

ການເລືອກຕັ້ງສະພານິຕິບັນຍັດໃນຄັ້ງວັນທີ 29 ພຶດສະພາ 1849 ເຊິ່ງພັກຄວາມໝັ້ນຄົງມີບ່ອນນັ່ງໃນສະພາກວມຫຼາຍກວ່າໝູ່ມີຈຳນວນ 500 ບ່ອນນັ່ງ, ຝ່າຍ ໂບງປາກເຕີເປັນພຽງຄູ່ແຂ່ງທີ່ອ່ອນນ້ອຍຂອງພັກຄວາມໝັ້ນຄົງເທົ່ານັ້ນ, ຝ່າຍສາທາລະນະລັກນາຍທຶນຝ່າຍຂວາມີ 70 ບ່ອນນັ່ງ, ຝ່າຍປະຊາທິປະໄຕ ແລະ ສັງຄົມນິຍົມ ຫຼື ຝ່າຍ ພູສູງ ກວມ 180 ບ່ອນນັ່ງ.

ຕໍ່ໜ້ານະໂຍບາຍຕໍ່ຕ້ານຂອງລັດຖະບານໂບນາປາກບັນດານັກປະຊາທິປະໄຕນາຍທຶນນ້ອຍຄ່ອຍໆເຫັນ ແລະ ຮັບຮູ້ໄດ້ວ່າຕົນນັ້ນກໍາລັງຖືກໂກງຈາກການປະຕິວັດໃນເດືອນມິຖຸນາ ພວກເຂົາຈິ່ງກັບຄືນມາຮ່ວມມືກັນກໍາມະກອນ ທ້າຍເດືອນກຸມພາ 1849 ຊົນຊັ້ນກາມະກອນ ແລະ ກຸ່ມປະຊາທິປະໄຕນາຍທຶນນ້ອຍໄດ້ຮ່ວມພາເຂົ້າສາມັກຄີເພື່ອ ສານສໍາພັນກັນ. ພວກເຂົາໄດ້ສ້າງຕັ້ງກຸ່ມພູສູງຄືນໃໝ່ ເອີ້ນວ່າຝ່າຍຊາໂກແບັງໃໝ່ທີ່ໄດ້ຮັບຄະແນນຫຼາຍ ແລະ ສ້າງ ຄວາມຢ້ານກົວໃຫ້ແກ່ພັກຄວາມໝັ້ນຄົງ. ກຸ່ມພູສູງຄິດວ່າພວກເຂົາຕ້ອງສືບທອດມູນເຊື້ອຂອງພວກຊາໂກແບັງທີ່ມີ ອໍານາດໃນທ້າຍສະຕະວັດທີ 18. ພວກເຂົາໄດ້ສ້າງຕັ້ງລະບອບສາທາລະນະລັດປະຊາທິປະໄຕ ເພື່ອຫຼຸດຜ່ອນຄວາມ ຂັດແຍ່ງກັນລະຫວ່າງຊາວຜູ້ອອກແຮງງານກັບນາຍທຶນ, ເພື່ອປະຕິຮູບສັງຄົມຕາມລະບອບປະຊາທິປະໄຕພາຍໃນ ກຸ່ມນາຍທຶນນ້ອຍ. ຄວາມຈິງແລ້ວເງື່ອນໄຂປະຫວັດສາດໃນເວລານັ້ນພວກເຂົາບໍ່ໄດ້ປະຕິບັດຫຼືດໍາເນີນຕາມແນວຄິດ ຂອງພວກຊາໂກແບັງໃນເມືອກ່ອນອີກແລ້ວ.

ສະພານິຕິບັນຍັດໄດ້ຕໍ່ຕ້ານກັບກໍາລັງແຮງຂອງສັງຄົມໃນເວລານັ້ນ, ສັດຕູຕົວສໍາຄັນຂອງພັກຄວາມໝັ້ນຄົງແມ່ນຝ່າຍ ພູສູງ. ຊົນຊັ້ນນາຍທຶນທີ່ປົກປ້ອງລາດຊະວົງເຫັນວ່າຕ້ອງທໍາການລົບລ້າງ ແລະ ກໍາຈັດຝ່າຍນາຍທຶນປະຊາທິປະໄຕ.

ເພື່ອປາບປາມຂະບວນການປະຕິວັດຂອງປະຊາຊົນຢູ່ ອີຕາລີ ກອງທະຫານຝຣັ່ງໄດ້ບຸກຕີເຂົ້າກຸງໂຣມ. ວັນທີ 11 ມິຖຸນາ ບັນດາສະມາຊິກນາຍທຶນນ້ອຍ ທີ່ມີ ເລີດຣຸຍ ໂຣແລັ້ນເປັນຕົວແທນໄດ້ທໍາການຮ້ອງຟ້ອງປະທານາທິບໍດີ ແລະ ສະພາແຫ່ງຊາດຍ້ອນການລ່ວງລະເມີດຂໍ້ກໍານົດໃນລັດຖະທໍາມະນູນທີ່ຫ້າມບໍ່ໃຫ້ມີການເຂົ້າຮ່ວມຂະບວນ ການປະຕິວັດຢູ່ຕ່າງປະເທດ.

|  |  |
|---|---|
| ວິກຕໍ ຮຸຍໂກໃນໄວໜຸ່ມ | ນັກປະພັນ ວິກຕໍ ຮຸຍໂກຂອງຝຣັ່ງ |

ທາງສຽງສ່ວນຫຼາຍຂອງພວກເຄື່ອນໄຫວຕໍ່ຕ້ານປະຕິເສດທຸກຂໍ້ກ່າວຫານັ້ນ. ພວກປະຊາທິປະໄຕນາຍທຶນນ້ອຍໄດ້ຮຽກຮ້ອງກໍາລັງມວນຊົນເດີນຂະບວນປະທ້ວງຕາມຫ້ອງຖະໜົນໃນຕົວເມືອງ. ວັນທີ 13 ມິຖຸນາຂະບວນການລຸກຈໍ ຂຶ້ນປະທ້ວງແບບສັນຕິວິທີໄດ້ເກີດຂຶ້ນທີ່ປາຣີ ແຕ່ກໍ່ຖືກກໍາລັງທະຫານປາບປາມລົງ. ບັນດາຜູ້ນໍາຝ່າຍພູສູງບໍ່ສາມາດລະດົມກໍາລັງມວນຊົນໄດ້, ເພາະຂາດຄວາມເຊື່ອໝັ້ນ. ສຸດທ້າຍພວກເຂົາຖືກຂັບໄລ່ອອກຈາກສະພາແຫ່ງຊາດຍ້ອນນໍ້າມືຂອງສະມາຊິກທີ່ນິຍົມລາດຊະວົງ ຊັງກາໂອນີເອ ເຊິ່ງເປັນໄປຕາມແຜນການຂອງພວກພັກຄວາມໝັ້ນຄົງ.

ການຫຼົ້ມສະຫຼາຍຂອງຝ່າຍພູສູງເຮັດໃຫ້ບົດບາດຂອງພັກຄວາມໝັ້ນຄົງສູງຂຶ້ນ ພວກເຂົາດໍາເນີນການເຄື່ອນໄຫວຕາມນະໂຍບາຍຕໍ່ຕ້ານຄື: ປິດສໍານັກງານໜັງສືພິມທີ່ມີແນວຄິດກ້າວໜ້າ, ຟື້ນຟູພາສີຕົ້ມເຫຼົ້າຂອງປະຊາຊົນສ້າງລະບົບການສຶກສາພາຍໃຕ້ການຕິດຕາມກວດກາຂອງສະສະໜາຈັກ ໂດຍສະເພາະແມ່ນການເພີ່ມເງື່ອນໄຂສໍາລັບຜູ້ທີ່ຈະໄປເລືອກຕັ້ງຕ້ອງອາໄສຢູ່ໃນສະຖານທີ່ນັ້ນ 3 ປີ ຂຶ້ນໄປ, ຄັດກໍາມະກອນອອກຈາກບັນຊີລາຍຊື່ໃນການລົງຄະແນນສຽງເລືອກຕັ້ງເກືອບ 3 ລ້ານຄົນ.

ຖືກຈັບເຂົ້າຄຸກເທື່ອລະໜ້ອຍ. ກຸ່ມສາທາລະນະລັດຝ່າຍຊ້າຍທີ່ມີນັກປະພັນ ວິກຕໍ ຮຸຍໂກ

ທີ 2 ທັນວາ 1851 ເຮັດລັດຖະປະຫານພາຍໃຕ້ການຊ່ວຍເຫຼືອຂອງກອງກໍາລັງປືນໃຫຍ່.

|  |  |
|---|---|
| ນາໂປລີອົງ3 | ນາໂປລີອົງ3 ສິ້ນພະຊົນ |

ຍ້ອນແນວນັ້ນໃນໄລຍະ 2 ປີກວ່າ ຊົນຊັ້ນກຳມະຊີບ, ນາຍທຶນສາທາລະນະລັດ, ນາຍທຶນນ້ອຍປະຊາທິປະໄຕຄ່ອຍໆຖືກຕັດແຍກອອກຈາກການເມືອງ. ເມື່ອການປະຕິວັດສິ້ນສຸດລົງຂໍ້ຂັດແຍ່ງພາຍໃນຊົນຊັ້ນປົກຄອງລະຫວ່າງປະທານາທິບໍດີ ແລະ ສະພາແຫ່ງຊາດ (ສ່ວນຫຼາຍແມ່ນພວກພັກຄວາມໝັ້ນຄົງ)ເກີດຂຶ້ນອີກຄັ້ງ. ພັກຄວາມໝັ້ນຄົງເຫັນວ່າບໍ່ຕ້ອງການອຳນາດຂອງ ພະເຈົ້າ ຫຼຸຍ ໂບນາປາກອີກ, ຕ້ອງການຟື້ນຟູລະບອບລາຊາທິປະໄຕ. ຫຼຸຍ ໂບນາປາກກໍ່ຕ້ອງການຟື້ນຟູອຳນາດຂອງຕົນຈິ່ງໄດ້ສ້າງຕັ້ງສະພາ ວັນທີ 10 ທັນວາ ເພື່ອເປັນບ່ອນອີງ. ໂດຍສວມໃຊ້ໂອກາດທີ່ທັງສອງຝ່າຍມີແນວຄິດຕ່າງກັນນັ້ນພາຍໃນພັກ ຄວາມໝັ້ນຄົງຄື: ພວກບອກບົງ ແລະ ອໍອກລີອົງ, ຫຼຸບໂບນາປາກ ຄ່ອຍໆຂັບໄລ ແລະ ກຳຈັດສັດຕູອອກຈາກຈຸດຍຸດທະສາດສຳຄັນຂອງຊາດ, ຈຳກັດສິດທິຂອງສະມາຊິກ ແລະ ສຸດທ້າຍມາໃນວັນ

ບັນດາສະມາຊິກຂອງພັກຄວາມໝັ້ນຄົງບໍ່ກ້າທີ່ຈະໃຫ້ການຊ່ວຍເຫຼືອຂະບວນການຕໍ່ສູ້ຂອງກຳມະກອນ ແລະ ພວກເຂົາ ເປັນຜູ້ນຳພາໃນການສ້າງຕັ້ງຄະນະກຳມະການໃນການສູ້ຮົບ (ເຮັດສົງຄາມ) ຮຽກຮ້ອງໃຫ້ປະຊາຊົນລຸກຂຶ້ນຕໍ່ສູ້ດ້ວຍກຳລັງປະກອບອາວຸດເພື່ອປົກປ້ອງລະບອບສາທາລະນະລັດ. ວັນທີ 3 ແລະ ວັນທີ 4 ທັນວາ ຂະບວນການລຸກຂຶ້ນປະທ້ວງໄດ້ເກີດຂຶ້ນຢູ່ເຂດຊານເມືອງແຊ້ງ ອັງຕວານ ແລະ ໃນຕົວເມືອງ, ບັນດານັກຕໍ່ສູ້ຂອງຊົນຊັ້ນກຳມະກອນໄດ້ລຸກຂຶ້ນຕໍ່ສູ້ອີກຄັ້ງ. ແຕ່ຍ້ອນກຳລັງຂອງພວກເຂົາຍັງອ່ອນນ້ອຍຫຼາຍພາຍຫຼັງການປະຕິວັດເດືອນມິຖຸນາຈິ່ງເຮັດໃຫ້ຂະບວນການຕໍ່ສູ້ຖືກທຳລາຍລົງໃນວັນທີ 5 ທັນວາ. ະບວນການຕໍ່ສູ້ໃນບັນດາເມືອງ ແລະ ແຂວງຕ່າງໆຢູ່ທາງພາກຕາເວັນອອກສ່ຽງໃຕ້ຂອງປະເທດຝຣັ່ງກໍ່ແກ່ຍາວເວລາໄດ້ບໍ່ດົນ. ຂະບວນການກໍ່ການຮ້າຍເກີດຂຶ້ນທົ່ວປະເທດຖືກຈັບ 26.000 ຄົນ ແລະ ຖືກຂັບໄລ່ອອກນອກປະເທດຝຣັ່ງ.

ວັນທີ 14 ມັງກອນ ປີ 1852 ລັດຖະທຳມະນູນສະບັບໃໝ່ໄດ້ຮັບການສ້າງຂຶ້ນທີ່ລວບລວມອຳນາທັງໝົດໄວ້ໃນກຳມືຂອງປະທານາທິບໍດີຄົນດຽວມີໄລຍະເວລາໃນການດຳລົງຕຳແໜ່ງ 10 ປີ.

ວັນທີ 2 ທັນວາ 1852 ຄົບ 1 ປີພໍດີທີ ຫຼຸຍ ໂບນາປາກຂຶ້ນຄອງລາດ ຂະໜານນາມຕົນເອງວ່າ ນາໂປລີອົງ 3 ລະບອບສາທາລະນະລັດຄັ້ງທີ 2 ພັງທະລາຍລົງ. ລະບອບຈັກກະພັດຄັ້ງທີ 2 ໄດ້ຮັບການສ້າງຕັ້ງຂຶ້ນ.

## V ປະເທດຝຣັ່ງໃນລະບອບຈັກກະພັດຄັ້ງທີ 2

### *1.* ສະພາບການທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມ

ລະບອບຈັກກະພັດ ໂບນາປາກໄດ້ຍຶດສິດເສລີພາບທີ່ມອບໃຫ້ປະຊາຊົນໃນຊຸມປີ 1848 . ລັດຖະບານໄດ້ລົບລ້າງອົງການຈັດຕັ້ງປະຊາທິປະໄຕ ແລະ ຫ້າມສະໂມສອນການເມືອງເຄື່ອນໄຫວ, ຈຳກັດສິດຂອງໜັງສືພິມ, ສັ່ງປິດໂຮງພິມທີ່ມີແນວຄິດກົງກັນຂ້າມກັບລັດຖະບານ ແລະ ໂຮງລະຄອນເວລທີແມ່ນຖືກກວດກາຕິດຕາມຢ່າງເຄັ່ງຄັດຈາດຕຳຫຼວດໃນເວລາດຳເນີນການສະແດງ. ພວກສາທາລະນະລັດຖືກໄລ່ລ່າ ແລະ ຈັບກຸມຢ່າງໜັກໜ່ວງ. ລະບົບການປົກຄອງ ແລະ ຕຳຫຼວດໄດ້ເພີ່ມທະວີການປັບປຸງໃຫ້ເຂັ້ມແຂງເຊິ່ງບໍ່ເຄີຍມີມາກ່ອນ. ສາສະໜາຄິຣສ ມີອິດທິພົນອັນໃຫຍ່ຫຼວງຕໍ່ກັບການດຳລົງຊີວິດຂອງປະຊາຊົນພາຍໃນປະເທດ.

ຂະບວນການປະຕິວັດອຸດສະຫະກຳຢູ່ປະເທດຝຣັ່ງສຳເລັດໃນຊຸມປີ 50 ຫາ ປີ 60 ຂອງສະຕະວັດທີ 19 , ໂດຍຜ່ານໄລຍະການຂະຫຍາຍຕົວເທິງນານ. ເກືອບທຸກຂະໜງອຸດສະຫະກຳລ້ວນແຕ່ມີການນຳໃຊ້ເຄື່ອງກົນຈັກ, ບໍ່

ນັບເຄື່ອງຈັກທີ່ໃຊ້ໃນຫົວລົດໄຟ ແລະ ກຳປັ່ນ. ການນຳໃຊ້ເຄື່ອງຈັກອາຍນ້ຳເພີ່ມຂຶ້ນເປັນ 4 ເທົ່າ ຈາກ 6080 ເຄື່ອງ ເພີ່ມຂຶ້ນເປັນ 26.221 ເຄື່ອງ(ໃນປີ ຄ.ສ 1852-1869).

ຂະແໜງອຸດສະຫະກຳໜັກມີການຂະຫຍາຍຕົວຢ່າງໄວວາ, ທຳອິດລະດັບການຂະຫຍາຍຕົວຂອງຂະແໜງອຸດສະຫະກຳເບົາປະລິມານການຜະລິດອຸດສະຫະກຳຍັງຕ່ຳກວ່າ.

ການຂະຫຍາຍຕົວຂອງການຄົມມະນາຄົມທາງບົກ ແລະ ທາງນ້ຳກໍ່ດຳເນີນການຂະຫຍາຍຕົວໄປຄຽງຄູ່ກັບການຂະຫຍາຍຕົວຂອງຂະແໜງອຸດສະຫະກຳຢູ່ໃນຊ່ວງເວລາ 20 ປີ. ປະມານປີ 1850-1870 ເສັ້ນທາງລົດໄຟເພີ່ມຂຶ້ນ 5 ເທົ່າ, ມີລົດໄຟທີ່ແລ່ນດ້ວຍຈັກອາຍນ້ຳເພີ່ມຂຶ້ນ 3,5 ເທົ່າທີ່ມີຄວາມສາມາດໃນການຂົນສົ່ງ 10 ເທົ່າ.

ໃນເວລານີ້ເອງປະເທດຝຣັ່ງໄດ້ເລີ່ມມີການຜະລິດໃນຂົງເຂດຂະໜາດໃຫຍ່ ປະມານປີ 1856-1868 ເຕົາຫຼໍ່ເຫຼັກທີ່ຂຶ້ນກັບຂະແໜງຫຼອມໂລຫະຫຼຸດລົງເກືອບເຄິ່ງໜຶ່ງ ແຕ່ຜົນຜະລິດເພີ່ມຂຶ້ນ 3 ເທົ່າຕົວ. ໂຮງງານຜະລິດໂລຫະເກຣີໂຍ ມີກຳມະກອນຮັບຈ້າງເຖິງ 10.000 ຄົນ ບັນດາພື້ນຖານທຸລະກິດທາງລົດໄຟມີຈຸດສຸມທີ 6 ບໍລິສັດ. ສ່ວນດ້ານການຄ້າເລີມປະກົດມີຮ້ານຄ້າຮຸ້ນສ່ວນຢູ່ປາຣີ. ເຖິງແມ່ນວ່າກິດຈະການການຄ້າຂະໜາດກາງ ແລະ ຂະໜາດນ້ອຍກໍ່ຍັງປະກົດມີໃຫ້ເຫັນເປັນຈຳນວນຫຼວງຫຼາຍ ແລະ ຍັງມີບົດບາດສຳຄັນຢູ່. ຕາມສະຖະຕິໃນຊຸມປີ 60 ຂແງສະຕະວັດທີ 19 ເກືອບ 75% ແມ່ນເຈົ້າຂອງທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ. ກຳມະກອນ60%ເຮັດວຽກໃນຫົວໜ່ວຍທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ. ສະເພາະຢູ່ ປາຣີ ມີກຳມະກອນປະມານ 44 ພັນຄົນ ໃນນັ້ນ ມີພຽງແຕ່ 5 ພັນຄົນທີ່ເຮັດວຽງໃນຫົວໜ່ວຍທຸລະກິດຂະໜາດໃຫຍ່ (ຫຼາຍກວ່າ 11%) ທີ່ທີ່ເຫຼືອແມ່ນເຮັດວຽກຢູ່ໃນໂຮງງານຂະໜາດນ້ອຍເພື່ອຜະລິດເກີບ, ສະບຽງອາຫານ, ເສື້ອຜ້າອາພອນ... ແຕ່ລະໂຮງງານມີນາຍຊ່າງບໍ່ເກີນ 10 ຄົນ, ອຸດສະຫະກຳປຸງແຕ່ງ ແລະ ໂຮງງານອຸດສະຫະກຳກໍ່ຍັງຄົງຕົວຢູ່.

ການຂະຫຍາຍຕົວຂອງຂະແໜງການຄ້າຕ່າງປະເທດໄດ້ປະກອບສ່ວນໃນການຊຸກຍູ້ໃຫ້ພື້ນຖານເສດຖະກິດທຶນນິຍົມຝຣັ່ງຂະຫຍຍຕົວ: ໃນປີ 1851 ຈຳນວນອັດຕາການແລກປ່ຽນເງິນຕຣາຕ່າງປະເທດແມ່ນ 2, 615 ລ້ານຟຣັງ, ຮອດປີ 1869 ເພີ່ມຂຶ້ນເປັນ 8.003 ລ້ານຟຣັງ ເພີ່ມຂຶ້ນກວ່າ 3 ເທົ່າຕົວ. ດ້ວຍວິທີການເຊັນສັນຍາຮ່ວມມືກັນກັບບັນດາປະເທດຕ່າງໆ. ຝຣັ່ງໄດ້ເພີ່ມທະວີການຄ້າຂາຍກັບປະເທດອັງກິດ, ແບນຊິກ, ເຢຍລະມັນ, ອີຕາລີ, ສະວິດເຊີແລັນ, ແອັດສະປາຍ, ໂຮນລັງ, ປຣັດເຊຍ, ປ້ອກຕຸຍການ... ໃນນັ້ນປະເທດອັງກິດກວມເອົາຫຼາຍກວ່າໝູ່.

ການຂະຫຍາຍຕົວຂອງນາຍທຶນທະນາຄານໄດ້ປະກົດຕົວຂຶ້ນໄວກວ່າການຂະຫຍາຍຕົວຂອງອຸດສະຫະກຳນາຍທຶນອີກ. ການເຄື່ອນໄຫວຂອງທະນາຄານຝຣັ່ງເພີ່ມຂຶ້ນ 5 ເທົ່າຕົວ(ປີ 1851ເທົ່າກັບ 1592 ລ້ານຟຣັງ, ປີ 1869 ເທົ່າກັບ 8.325 ລ້ານຝຣັ່ງ. ບັນດາພື້ນຖານທຸລະກິດເຄື່ອນໄຫວຢ່າງແຂງແຮງ. ພະແນກຈໍລະລະຈອນສິນຄ້າຢູ່ປາຣີ ໄດ້ກາຍເປັນຕະຫຼາດຄ້າຂາຍສິນຄ້າຢູ່ເອີຣົບ ເປັນຄູ່ແຂ່ງກັບພະແນການຈໍລະຈອນສິນຄ້າຢູ່ ລອນດອນ. ຈຳນວນທຶນຮອນອັນຫຼວງຫຼາຍຂອງປະເທດຝຣັ່ງບໍ່ໄດ້ຖືກນຳໃຊ້ເຂົ້າໃນວຽກງານການການພັດທະນາດ້ານອຸດສະຫະກຳ ແລະ ກະສິກຳ. ສ່ວນຫຼາຍຖືກນຳສົ່ງອອກນອກປະເທດທີ່ກຳລັງດ້ອຍພັດທະນາໃນທະວີບເອີຣົບ ແລະ ບັນດາອະນານິຄົມພາຍໃຕ້ຮູບແບບເປັນທະນາຄານໃຫ້ກູ້ຢືມເງິນ ຫຼື ການລົງທຶນໃສ່ການຂຸດຄົ້ນບໍ່ແຮ່ຢູ່ໃນປະເທດນັ້ນ. ປີ ຄ.ສ 1868 ລັດຖະບານຂອງ 14 ປະເທດໄດ້ກູ້ຢືມເງິນຈາກທະນາຄານຂອງຝຣັ່ງເຖິງ 33 ຕື້ ຟຣັງ ເຮັດໃຫ້ຝຣັ່ງກາຍເປັນປະເທດທີ່ມີບົດບາດໃນການໃຫ້ເງິນກູ້ຢືມໃນຕະຫຼາດໂລກ.

ຍ້ອນໄດ້ຮັບຜົນສະທ້ອນຈາກການຂະຫຍາຍຕົວຂອງອຸດສະຫະກຳຈິ່ງເຮັດໃຫ້ນະຄອນປາຣີ ແລະ ຕົວເມືອງອື່ນໆມີການປ່ຽນແປງຢ່າງເຫັນໄດ້ຈະແຈ້ງບັນດາຖະໜົນຫົນທາງ, ສະຖານີຂົນສົ່ງ ແລະ ບັນດາຫ້າງຮ້ານໄດ້ເກີດຂຶ້ນມາແທນທີ່ບັນດາຕົວເມືອງທີ່ຄັບແຄບໃນເມື່ອກ່ອນ.

ເບິ່ງລວມແລ້ວ,ຮອດຊຸມປີ 50- ປີ 60 ຂອງສະຕະວັດທີ 19 ປະເທດຝຣັ່ງໄດ້ສຳເລັດການເຮັດການປະຕິວັດອຸດສະຫະກຳທີ່ຜ່ານໄລຍະເວລາໃດໜຶ່ງຈຸດພິເສດກໍ່ຄືການເພີ່ມທະວີກຳລັງການຜະລິດໃນຂະແໜງອຸດສະຫະກຳທີ່ມີຫົວໜ່ວຍທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍຍັງກວມຈຳນວນຫຼາຍຢູ່. ທຶນຮອນສ່ວນຫຼາຍບໍ່ໄດ້ລົງທຶນໃສ່ຂະແໜງອຸດສະຫະກຳ ແຕ່ຈະມີໄວ້ສະເພາະໃຫ້ກູ້ຢືມຄືກັນກັບບັນດາປະເທດທຶນນິຍົມອື່ນ. ການປະຕິວັດອຸດສະຫະກຳຂອງຝຣັ່ງດຳເນີນໄປດ້ວຍທຳມະຊາດຕາມກົດເກນມູນຄ່າສ່ວນເກີນ, ກົດເກນສ້າງຜົນກຳໄລ. ທີ່ຂະຫຍາຍຕົວຈາກຂະແໜງອຸດສະຫະກຳເບົາ. ແຫຼ່ງທຶນສະສົມຂອງນາຍທຶນແມ່ນໄດ້ມາຈາກການຂູດຮີດປະຊາຊົນໃນປະເທດ, ປະຊາຊົນໃນບັນດາຫົວເມືອງຂຶ້ນ ແລະ ປະຊາຊົນໃນປະເທດອື່ນໆ.

ໃນຍຸກອຸດສະຫະກຳຕາມລັດທິທຶນນິຍົມໄດ້ນຳເອົາກຳໄລອັນມະຫາສານມາສູ່ພວກນາຍທຶນບົນຄວາມທຸກຍາກລຳບາກຂອງປະຊາຊົນຜູ້ອອກແຮງງານ. ປີ ຄ.ສ 1958 ຢູ່ຝຣັ່ງມີ 3 ລ້ານເປັນຂໍທານ ແລະ 6 ລ້ານຄົນທຸກຍາກລຳບາກ. ເງິນເດືອນຫຼຸດລົງ, ຍ້ອນການຂຶ້ນລາຄາແປ້ງເຂົ້າຈີ່ ແລະ ສິນຄ້າອື່ນ ເພີ່ມຂຶ້ນ 50%, ເງິນເດືອນພັດເພີ່ມຂຶ້ນພຽງແຕ່ 10% ເທົ່ານັ້ນ. ຊົ່ວໂມງເຮັດວຽກຂອງກຳມະກອນແມ່ນ 13-16 ຊົ່ວໂມງຕໍ່ວັນ, ພິເສດແມ່ນແມ່ຍິງກັບເດັກນ້ອຍຖືກກົດຂີ່ຂູດຮີດຢ່າງໜັກ. ປີ 1867 ເງິນເດືອນຂອງກຳມະກອນເພດຍິງແມ່ນເທົ່າກັບ 55% ແລະເດັກນ້ອຍແມ່ນ 12% ຂອງເງິນເດືອນກຳມະກອນຊາຍ. ບາງໂຮງງານຈ້າງຮອດເດັກນ້ອຍທີ່ມີອາຍຸຕໍ່າກວ່າ 8 ປີ ຍ້ອນຄ່າແຮງງານຕໍ່າ. ພວກເຈົ້າຂອງໂຮງງານມັກຈະຈ້າງແຮງງານກຳມະກອນເພດຍິງ ແລະ ເດັກນ້ອຍຫຼາຍກວ່າກຳມະກອນເພດຊາຍ. ຜົນຂອງການກົດຂີ່ຂູດຮີດດັ່ງກ່າວນັ້ນເຮັດໃຫ້ພວກນາຍທຶນສາມາດສະສົມທຶນນັບມື້ນັບຫຼາຍຂຶ້ນ ສ່ວນກຳມະກອນນັບມື້ນັບທຸກຍາກລຳບາກ. ພະຍາດວັນນະໂລກ, ພະຍາດກະດູກາສັນຫຼັງຂົດ (ຫຼັງຂົດ), ພະຍາດໄຂ້ຫວັດ ແລະ ພະຍາດອື່ນໆໄດ້ຄຸກຄາມຊີວິດການເປັນຢູ່ຂອງກຳມະກອນ. ສະພາບການແກ່ສະລາຕາມໄວອາຍຸ ແລະ ການເສຍຊີວິດ... ເກີດຂຶ້ນຢ່າງຫຼວງຫຼາຍ. ບັນດາອຸບັດຕິເຫດໃນການອອກແຮງງານເກີດຂຶ້ນເປັນປະຈຳ. ຍ້ອນເຈົ້າຂອງໂຮງງານບໍ່ໄດ້ເອົາໃຈໃສ່ໃນການຮັບປະກັນຄວາມປອດໄພໃຫ້ແກ່ກຳມະກອນ. ລະບອບການຄຸ້ມຄອງໃນໂຮງຈັກໂຮງງານມີຄວາມເຄັ່ງຄັດທີ່ສຸດ. ມີຜູ້ກວດກາຕິດຕາມຢ່າງເຄັ່ງຄັດໃນເວລາອອກແຮງງານໃນໂຮງງານຖ້າຫາກໃຜຢຸດທຳການຜະລິດ ຫຼື ຂາດວຽກຈະຕ້ອງໄດ້ເສຍເງິນຄ່າປັບໄໝ. ລະບຽບກ່ຽວກັບການຈົດບັນທຶກປະຫວັດຂອງກຳມະກອນແມ່ນຍັງຖືກນຳໃຊ້ຄືກັນກັບສະໄໝການປົກຄອງຂອງ ນາໂປລີອົງ 1.

ຄວາມມຸ້ງຫວັງອັນແຮງກ້າຂອງຊາວນາຄືການມີສິດໃນການເລືອກຕັ້ງນັ້ນໂບນາປາກເຮັດໃຫ້ມັນຫາຍໄປພາຍໃນພິບຕາ(ບໍ່ໄດ້ຮັບການຕອບສະໜອງ). ບັນຫາການຂາດທີ່ດິນທຳການຜະລິດ, ການກູ້ຢືມເງິນໃນອັດຕາດອກເບ້ຍສູງ, ແອກການກົດຂີ່ຂູດຮີດຂອງພວກເຈົ້າທີ່ດິນ ແລະ ຊາວນາຜູ້ຮັ່ງມີ, ບັນດາຮູບແບບການເກັບພາສີຂ້າທາດ, ການເກັບພາສີແມ່ນໜັກໜ່ວງຫຼາຍ... ເພື່ອເພີ່ມພາລະໃຫ້ແກ່ຊາວກະສິກອນ. ມີຊາວນາຫຼາຍສິບພັນຄົນປະສົບຄວາມຫຼົ້ມເຫຼວໃນຊີວິດ ເປັນການກົດໜ່ວງການຂະຫຍາຍຕົວຂອງຕົວເມືອງ, ມີການສ້າງຕັ້ງກອງທັບອຸດສະຫະກຳໃນປີ 1851 ຈຳນວນຊາວກະສິກອນກວມ 74% ແຕ່ມາຮອດ ປີ 1866 ເຫຼືອພຽງ 69,5%. ບັນດາຊາວກະສິກອນໄດ້ຫຼຸດພົ້ນອອກຈາກແອກປົກຄອງໃນຊົນນະບົດຊໍ້າພັດຕົກຢູ່ໃຕ້ແອກການກົດຂີ່ຂູດຮີດຂອງພກນາຍທຶນ. ມີພຽງພວກທີ່ມີ

ຖານະໃນຊົນນະບົດເທົ່ານັ້ນທີ່ສາງລາຍຮັບດ້ວຍການຄ້າຂາຍຜະລິດຕະພັນທາງການກະເສດທີ່ຍັງສືບຕໍ່ຊ່ວຍເຫຼືອລະບອບການປົກຄອງຂອງ ໂບນາປາກ.

ຊົນຊັ້ນນາຍທຶນນ້ອຍກໍ່ກາຍເປັນຊົນຊັ້ນເສຍສະຫຼະຜົນປະໂຫຍດໃຫ້ຊົນຊັ້ນນາຍທຶນໃຫຍ່ໃນຂະບວນການຫັນປ່ຽນເປັນອຸດສະຫະກຳ. ລະບອບຈັກກະພັດເຮັດໃຫ້ຊົນຊັ້ນນີ້ລົ້ມລະລາຍຢ່າງໄວວາດ້ວຍວິທີການປົ້ນສະດົມ ແລະ ກຳຈັດພວກເຂົາດ້ວຍວິທີການແຂ່ງຂັນກັນໃນການລົງທຶນ. ພື້ນຖານການຜະລິດນ້ອຍຖືກບີບຮັດຢ່າງໜັກໜ່ວງຈາກລັດທິທຶນນິຍົມ.

*2.* **ນະໂຍບາຍລ່າຫົວເມືອງຂຶ້ນ.**

ພາຍຫຼັງຂຶ້ນກຳອຳນາດ, ນາໂປລີອົງ 3 ໄດ້ປະກາດວ່າ"ຈັກກະພັດແມ່ນສັນຕິພາບ" ແຕ່ນະໂຍບາຍກັບຕ່າງປະເທດແມ່ນກົງກັນຂ້າມທັງໝົດກັບຄຳເວົ້າຂ້າງເທິງນັ້ນ. ຈັກກະພັດທີ 2 ໄດ້ດຳເນີນສົງຄາມເພື່ອປົ້ນເອົາຊັບສິນ ແລະ ວັດຖຸດິບມາສູ່ພວກນາຍທຶນທະນາຄານ ແລະ ນາຍທຶນອຸດສະຫະກຳ, ໄດ້ນຳເອົາຊື່ສຽງ ແລະ ເງິນຄຳມາສູ່ພວກຂຸນເສິກ (ທະຫານ) ໂດຍອາໄສການເຮັດສົງຄາມກັບພາຍນອກເພື່ອຫ້ອນໂຮມອຳນາດການປົກຄອງພາຍໃນປະເທດ.

**ການພົວພັນການຕ່າງປະເທດຂອງຝຣັ່ງກັບບັນດາປະເທດໃນທະວີບເອີຣົບ**

ພາຍຫຼັງຫ້ອນໂຮມອຳນາດການປົກຄອງປະເທດແລ້ວ ນາໂປລີອົງ 3 ເຂົ້າຮ່ວມສົງຄາມ Crimean ທັນທີ (ແຕ່ປີ ຄ.ສ 1853-1856) ປະເທດຝຣັ່ງໄດ້ຮ່ວມມືເປັນພັນທະມິດກັບອັງກິດ ເພື່ອຕໍ່ສູ້ຕ້ານກັບຣັດເຊຍແນ່ໃສ່ເພື່ອຍາດແຍ່ງອິດທິພົນໃນເຂດທະເລດຳໃນສົງຄາມຄັ້ງນີ້ ຣັດເຊຍເປັນຝ່າຍປຣາໄຊ ຈິ່ງຍອມເຊັນສັນຍາສັນຕິພາບທີ່ປາຣີໃນຄັ້ງວັນທີ 30 ມີນາ 1856. ທຳອິດແມ່ນປະເທດອັງກິດໄດ້ຮັບສິດຜົນປະໂຫຍດສູງສຸດໃນການເຮັດສົງຄາມຄັ້ງນີ້. ນາໂປຣີອົງ 3ໄດ້ເພີ່ມທະວີການຂະຫຍາຍອິດທິພົນທັງພາຍໃນ ແລະ ຕ່າງປະເທດ. ຍ້ອນຢ້ານວ່າອັງກິດຈະແປພັກ (ຫັກຫຼັງ) ຝຣັ່ງຈິ່ງພົວພັນກັບຣັດເຊຍຢ່າງປິດລັບເພື່ອຕ້ານກັບອັງກິດ. ກ່ອນການປະຕິວັດນາຍທຶນຈະເຖິງຈຸດສຸດຍອດ, ນາໂປລີອົງ 3 ໄດ້ນຳກຳລັງອາວຸດບຸກຕີເຂົ້າປະເທດອີຕາລີ, ຂັດຂວາງຄວາມເປັນເອກະພາບຂອງປະເທດເຢຍລະມັນເຊິ່ງນຳໄປສູ່ການເຮັດສົງຄາມຝຣັ່ງ-ເຢຍລະມັນໃນປີ 1870.

**ນະໂຍບາຍລ່າຫົວເມືອງຂຶ້ນ**

ລັດຖະບານນາໂປລີອົງ 3 ໄດ້ສືບຕໍ່ເປີດກວ້າງການດຳເນີນສົງຄາມຮຸກຮານ ອານເຊຣີ. ນັບແຕ່ປີ 1830 ການລວມຕົວຂອງຂຸນນາງການເງິນສະໄໝຫຼຸບ ຟີລິບ ໄດ້ນຳກຳລັງປະກອບອາວຸດ ບຸກຕີ ອານເຊຣີ ໃນສົງຄາມຄັ້ງນີ້ ພວກເຂົາໄດ້ປະທະກັບກຳລັງຂອງທະຫານ ແລະ ປະຊາຊົນ ອານເຊຣີ ພາຍໃຕ້ການນຳພາຂອງພົນທະຫານທີ່ມີຄວາມເກັ່ງກ້າສາມາດທີ່ມີຊື່ວ່າອາບແດນ ຄາແດ



ຂະບວນການຕໍ່ສູ້ຂອງປະຊາຊົນ ອານເຊຣີ ຕ້ານຝຣັ່ງໃຕ້ການນຳພາຂອງອາບແດນ ຄາແດ

ປີ 1837 ຝຣັ່ງຖືກບັງຄັບໃຫ້ ເຊັນສັນຍາສະຫງົບເສິກ ແລະ ຍອມຮັບຮູ້ອຳນາດການປົກຄອງ ກາແດເຊິ່ງກວມດິນແດນ 2/3 ຂອງດິນແດນທັງໝົດ, ຍ້ອນແນວນັ້ນສົງຄາມຮຸກຮານ ແລະ ຕ້ານການຮຸກຮານຈຶ່ງເກີດຂຶ້ນລຽນຕິດ. ຮອດຊຸມປີ 50 ນາໂປລີອົງ3 ຫັນທິດລົງມາທາງທິດໃຕ້ ຍຶດຄອງປະເທດຝຣັ່ງ ດິນແດນສ່ວນໃຫຍ່ຂອງ ຊາຮາຣາ ແລະ ຕີຊະນະເອົາດິນແດນເຂດປ່າຕຶບ ແລະ ພູສູງໄດ້ສຳເລັດ.

ເພື່ອຂະຫຍາຍອະນານິຄົມ, ນາໂປລີອົງ 3 ໄດ້ເຊັນສັນຍາກັບອັງກິດ, ສະຫະລັດອາເມຣິກາ...ຫຼາຍຄັ້ງບຸກໂຈມຕີເຂົ້າປະເທດຈີນ ບັງຄັບໃຫ້ລາດຊະວົງແມນຈູ ເຊັນສັນຍາບໍ່ສະເໝີພາບ.

ທ້າຍ ຊຸມປີ 50 ກອງກຳລັງທະຫານຝຣັ່ງເລີ່ມຕົ້ນຮຸກຮານປະເທດຫວຽດນາມດ້ວຍກຳລັງອາວຸດ. ນັບແຕ່ສະຕະວັດທີ 17 ກຸ່ມຄົນທຳອິດທີ່ເຂົ້າມາຫວຽດນາມເພື່ອຕ້ອງການຄອບຄອງຫວຽດນາມຢ່າງເປີດແປນ. ຜ່ານໄລຍະດົນນານພໍ່ສົມທີ່ພວກເຂົາທັງກະກຽມກຳລັງທັງຖືກປະຊາຊົນພາຍໃນປະເທດຝຣັ່ງຂັດຂວາງ (ການປະຕິວັດໃນປີ 1789, ຂະບວນການຕໍ່ສູ້ຂອງນາໂປລີອົງ, ຍຸກກາງ, ການປະຕິວັດປີ 1830 ແລະ ການປະຕິວັດໃນປີ 1848...) ຝຣັ່ງຈຶ່ງຖືກຈຳກັດເຄື່ອນໄຫວທາງການທູດ, ການເຜີຍແຜ່ສາສະໜາ, ການສອດແນມ ແລະ ຂໍ້ຂັດແຍ່ງຂະໜາດນ້ອຍ. ລະບອບຈັກກະພັດທີ 2 ເປັນຍຸກທີ່ອຳນວຍຄວາມສະດວກທີ່ສຸດໃນການລ່າຫົວເມືອງຂຶ້ນຢູ່ຫວຽດນາມ. ໃນເວລານັ້ນລັດທິທຶນນິຍົມຂະຫຍາຍຕົວ ນັບມື້ນັບມີການຮຽກຮ້ອງໃຫ້ມີການຂະຫຍາຍຕະຫຼາດຈຳໜ່າຍສິນຄ້າ ແລະ ຊອກແຫຼ່ງວັດຖຸດິບ. ອຳນາດການປົກຄອງຊົ່ວຄາວເລີ່ມໝັ້ນຄົງ, ມີສັນຍານບົ່ງບອກຄວາມໝັ້ນຄົງເພື່ອດຳເນີນການອອກເດີນທາງໄປສູ່ດິນແດນອື່ນໆ. ປະເທດຫວຽດນາມເປັນປະເທດໜຶ່ງທີ່ມີຄວາມສຳຄັນໃນຕາເວັນອອກ, ສາມາດຕັ້ງເປັນຖານທັບໃນການບຸກໂຈມຕີຈີນ. ສະນັ້ນ ນາໂປລີອົງ 3 ຈຶ່ງຮຸກຮານ ແລະ ຍຶດຄອງຫວຽດນາມດ້ວຍກຳລັງປະກອບອາວຸດ.

ໃນປີ 1858 ພາຍຫຼັງບຸກໂຈມຕີເຂົ້າ ກວາງເຈົາ, ທະຫານຝຣັ່ງໄດ້ບຸກເຂົ້າທ່າເຮືອຢູ່ທະເລ ດາໜັງເຊິ່ງເປັນຈຸດຍຸດທະສາດທີ່ສຳຄັນຂອງປະເທດຫວຽດນາມ. ເດືອນກຸມພາ 1859 ທະຫານຝຣັ່ງບຸກໂຈມຕີເຂົ້າໄປເລື້ອຍໆຈົນສາມາດຍຶດຄອງ ຊາດົ້ງ. ປີ 1861 ຫວຽດນາມໄດ້ສູນເສຍ 3 ແຂວງທາງພາກຕາເວັນອອກສ່ຽງໃຕ້ໃຫ້ຝຣັ່ງ

(ແຂວງບ໊ຽນຫ໊ວ. ຊາດິ໊ງ) ແລະ ດິ໊ງເຈື່ອງ) ບົນເສັ້ນທາງການຣຸກຣານ, ທະຫານຝຣັ່ງໄດ້ປະທະກັບກຳລັງຕໍ່ຕ້ານຂອງປະຊາຊົນຫວຽດນາມບັນດາເຜົ່າ. ແຕ່ລະຊະວົງຫງວຽນບໍ່ເຊື່ອວ່າຫວຽດນາມຈະສາມາດເອົາຊະນະຝຣັ່ງໄດ້ຈິ່ງຍອມເຊັນສັນຍາຍອມຈຳນົນກັບຝຣັ່ງໃນປີ 1862. ການເຊັນສັນຍາດັ່ງກ່າວນັ້ນແມ່ນຖືດຕໍ່ຕ້ານຈາກກຳລັງມວນຊົນຫວຽດນາມເປັນຢ່າງຍິ່ງ. ເຈື່ອງດິ໊ງ, ຫງວຽນຈູງຈິກ, ທຽນໂຮ້ະເຢືອງ ໄດ້ກາຍເປັນຜູ້ນຳໃນການຕໍ່ສູ້ຕ້ານກັບຝຣັ່ງເຮັດໃຫ້ຊື່ສຽງຂອງພວກເຂົາຖືກບັນທຶກໄວ້ໃນປຶ້ມປະຫວັດສາດຫວຽດນາມ.



ເຈືອງດິ໊ງ(1820 – 1864)

ໃນເວລານັ້ນຝຣັ່ງກໍ່ດຳເນີນການສັງເກດການປະເທດກຳປູເຈຍ, ພາຍຫຼັງປະສົບກັບຄວາມລົ້ມເຫຼວໃນການການເຄື່ອນໄຫວທາງການທູດຝ ຣັ່ງໄດ້ບັງຄັບໃຫ້ເຈົ້າຊີວິດ ໂນລະດົມໃຫ້ຍອມຮັບເອົາກຳປູເຈຍຍອມຮັບເອົາການຊ່ວຍເຫຼືອຂອງນາໂປລີອົງ 3 . ຝຣັ່ງງໄດ້ບຸກໂຈມຕີເຂົ້າກຳປູເຂຍໃນທ້າບປີ 1963 ສາມາດບຸກເຂົ້າຮອດພະລາດຊະວັງ

, ປັກຫຼຸງຝຣັ່ງຂຶ້ນເສົາ ບັງຄັບໃຫ້ເຈົ້າຊີວິດກຳປູເຈຍຍອມຢູ່ໃຕ້ອຳນາດຂອງຕົນ. ເພື່ອຕ້ານກັບຈັກກະພັດລ່າຫົວເມືອງ ຂຶ້ນປະຊາຊົນສອງຊາດ ຫວຽດນາມ-ກຳປູເຈຍໄດ້ຮ່ວມມືກັນຕີສັດຕູຕົວດຽວກັນຄື: ເຈືອງດິ້ງຮ່ວມມືກັບ ອາຈາຊວາ , ເຈືອງກວ່ຽນຮ່ວມມືກັບ ປູໂກມໂບ ໄດ້ດຳເນີນການຕໍ່ຕ້ານຝຣັ່ງຢ່າງສຸດຂີດເຊິ່ງຂະຫຍາຍອະນາເຂດກວ້າງອອກທົ່ວ ພາກໃຕ້ຂອງຫວຽດນາມ ແລະ ກຳປູເຈຍ. ຂະບວນການຕໍ່ສູ້ສາມາດຍາດເອົາໄຊຊະນະຫຼາຍແຫ່ງ ແຕ່ສຸດທ້າຍ ຂະບວນການຕໍ່ສູ້ກໍ່ຖືກປາບປາມຢ່າງນອງເລືອດ.

ພາຍຫຼັງຍຶດຄອງ3 ແຂວງພາກຕາເວັນອອກສ່ຽງໃຕ້ ແລະ ກຳປູເຈຍ ຝຣັ່ງກໍ່ສືບຕໍ່ຮຸກຮານບັນດາແຂວງທາງ ພາກຕາເວັນຕົກເປັນຕົ້ນແມ່ນ ວິ້ງລ້ອງ, ອານຊາງ, ຮ່າຕຽນໃນເດືອນມິຖຸນາປີ 1867 ເປັນອີກຄັ້ງທີ່ລາດຊະວົງ ຫວຽດນາມສະແດງຄວາມຈຳນົນບໍ່ກ້ານຳພາປະຊາຊົນຕໍ່ສູ້ຕ້ານກັບຝຣັ່ງ. ເຖິງຢ່າງໃດກໍ່ຕາມຍ້ອນນ້ຳໃຈຮັກຊາດ ແລະ ມີມູນເຊື້ອອົງອາດກ້າຫານຂອງປະຊາຊົນບັນດາເຜົ່າຂອງປະຊາຊົນພາກຕາເວັນຕົກສ່ຽງໃຕ້ຈຶ່ງພ້ອມກັນລຸກຂຶ້ນຕໍ່ສູ້ ກັບກຳລັງທະຫານຂອງສັດຕູ.

ປີ 1862 ລັດຖະບານ ນາໂປລີອົງ3 ໄດ້ທຳການບ່ອນບັດເລືອກຕັ້ງຢູ່ເຂດມະຫາສະໝຸດແອດລັນຕິກ. ຝຣັ່ງ ຮ່ວມກັບອັງກິດ ແລະ ແອັດສະປາຍ ໄດ້ນຳກຳລັງທະຫານຮຸກຮານເມັກຊິໂກ, ສະໜັບສະໜູນກຳລັງຕໍ່ຕ້ານການ ປະຕິວັດ ແລະ ນັກບວດເພື່ອຕີຕ້ານກັບບັນດາປະເທດສາທາລະນະລັດ, ປີ 1863 ຝຣັ່ງສາມາດຍຶດຄອງ ນະຄອນຫຼວງຂອງເມັກຊິໂກ ລົບລ້າງລະບອບສາທາລະນະລັດ ແຕ່ຕັ້ງ ແມກຊິມິລຽງ ຂຶ້ນເປັນກະສັດ(ເປັນຫຸ່ນ ໃຫ້ຝຣັ່ງໃນການປົກຄອງເມັກຊິໂກ)



ແມກຊິມິລຽງ

ແຕ່ລະບອບປະຊາທິປະໄຕນັ້ນກໍ່ຄົງຕົວໄດ້ບໍ່ດົນ, ປະທານປະເທດສາທາລະນະລັດ ເບນິໂຕ ຮົວ ປະຊາທິປະໄຕນາຍທຶນນ້ອຍ, ນັກຮົບຜູ້ເກັ່ງກ້າໄດ້ທຳພາມວນຊົນລຸກຂຶ້ນຕໍ່ສູ້ປົດປ່ອຍປະຊາຊົນ, ຂັບໄລ່ພວກຮຸກ

ຮານອອກຈາກຊາຍອດນປະເທດ. . ປີ 1867 ກຳລັງທະຫານຝຣັ່ງໄດ້ຖອນກຳລັງອອກຈາກແມັກຊີໂກ ເຮັດໃຫ້ລາດຊະວົງແມກຊີມີລຽງ ພັງທະລາຍລົງຢ່າງໄວວາ. ເປັນອີກຄັ້ງໜຶ່ງທີ່ປະເທດສາທາລະນະລັດ ແມັກຊີໂກຫຼຸດພົ້ນອອກຈາກຄວາມອັນຕະລາຍ. ການປຣາໄຊຂອງຝຣັ່ງຢູ່ແມັກຊີໂກ ເປັນດັ່ງລູກລະເບີດທີ່ທຳລາຍຊື່ສຽງຂອງພວກຈັກກະພັດທີ 2 ຂອງຝຣັ່ງ.

### *3.* ການຂະຫຍາຍຕົວຂອງຂະບວນການຕໍ່ສູ້ຂອງກຳມະ ກອນໃນຊຸມປີ60

ສະພາບການນັບມື້ນັບບີບບັງຄັບ ແລະ ກົດດັນກຳມະກອນຝຣັ່ງໃຫ່ມີຄວາມເບື່ອໜ່າຍຕໍ່ລັດຖະບານຝຣັ່ງ, ພາຍຫຼັງການປະຕິວັດໃນປີ 1848 ປຣາໄຊລົງຂະບວນການຕໍ່ສູ້ຂອງກຳມະກອນກໍ່ຢຸດສະງົກລົງໄລຍະໜຶ່ງ. ແຕ່ສະພາບວິກິດການໃນປີ 1957 ແລະ ຂະບວນການກໍ່ການຮ້າຍຂອງຕຳຫຼວດໃນປີ 1858 ເຮັດໃຫ້ຂະບວນການຕໍ່ສູ້ລະເບີດຂື້ນໃໝ່. ການເລືອກຕັ້ງປົກກະຕິຂອງສະພານິຕິບັນຍັດໃນປີ 1863 ແມ່ນຕ້ອງອາໄສການຊ່ວຍເຫຼືອຂອງກຳມະກອນເພື່ອຕໍ່ຕ້ານກັບລະບອບສາທາລະນະລັດສາມາດຍາດເອົາຄະແນນສຽງ 2 ລ້ານຄະແນນໃນຈຳນວນ 7,2 ລ້ານຫາງສຽງ. ກຳມະກອນກຸ່ມໜຶ່ງໃນປາຣີ ໄດ້ສະເໜີຊື່ຜູ້ແທນຂອງຕົນ ແລະ ຮ່າງ ຖະແຫຼງການຂອງ 60 ຄົນ. ຢືນຢັນວ່າຕົນເປັນຊົນຊັ້ນໜຶ່ງທີ່ມີຄວາມເປັນເອກະລາດ, ຕ້ອງມີຕົວແທນຂອງຕົນເຂົ້າໄປນັ່ງໃນສະມາຊິກສະພາ. ຕໍ່ໜ້າກຳລັງມະຫາຊົນທີ່ມີຄວາມເຂັ້ມແຂງ ລັດຖະບານນາໂປລີອົງ3 ໄດ້ດຳເນີນການປະຕິຮູບແນໃສ່ເພື່ອສະກັດກັ້ນ ແລະ ຂັດຂວາງຂະບວນການຕໍ່ສູ້ຂອງຂອງປະຊາຊົນ ໂດຍຫຼອກລວງວ່າ ກຳມະກອນສາມາດເປັນພັນທະມິດກັນກັບລັດຖະບານໄດ້ ໃນການແກ້ໄຂບັນຫາໃນສັງຄົມ. ປີ 1862 ກຳມະກອນໃນໂຮງພິມຖືກຈັບໃນການເຮັດການປະທ້ວງໃນຄັ້ງກ່ອນແມ່ນຖືກອະພຍະໂທດໃຫ້. ໃນປີ 1864 ກົດໝາຍ ຊາເພີເລຍ ຖືກປະກາດໃຊ້ນັບແຕ່ທ້າຍສະຕະວັດທີ 18 ແມ່ນຖືກລົບລ້າງ ແລະ ຍຸບເລີກໃຊ້. ປີ 1969 ລັດຖະບານໄດ້ອະນຸຍາດໃຫ້ກຳມະກອນເຕົ້າລວມກັນໄດ້ ແຕ່ບໍ່ອະນຸຍາດໃຫ້ສົນທະນ ແລະ ແລກປ່ຽນຄວາມຄິດເຫັນກ່ຽວກັບການເມືອງ ແລະ ຕ້ອງມີເຈົ້າໜ້າທີ່ ຫຼື ພະນັກງານຂອງລັດຖະບານເຂົ້າຮ່ວມໃນກອງປະຊຸມ.

ເຫດການທີ່ມີຊື່ສຽງທີ່ສຸດໃນຊຸມປີ 60 ຢູ່ປະເທດຝຣັ່ງແມ່ນການສ້າງຕັ້ງ ສາກົນທີ 1ຢູ່ປາຣີ ແລະ ບັນດານະຄອນອື່ນໆ. ກຳມະກອນຝຣັ່ງໄດ້ມີບົດບາດຢ່າງຕັ້ງໜ້າໃນການພົວພັນອົງການຈັດຕັ້ງສາກົນໃນບັນດາປະເທດ. ແຕ່ໃນໄລຍະທຳອິດສິດໃນການນຳພາຂອງສາຂາສາກົນທີ່ປະເທດຝຣັ່ງຂຶ້ນກັບກຸ່ມພຣູດົງ.

ຄຽງຄູ່ກັບຝ່າຍ ພຣູດົງ ກໍ່ຍັງມີຝ່າຍ ຟຣັງກີ ທີ່ມີລັກສະນະແນວຄິດຂອງການ ປະຕິວັດທີ່ເດັດດ່ຽວກວ່າແຕ່ເດີນຕາມທີ່ບໍ່ຖືກຕ້ອງ ມີລັກສະນະຄ້າຍຄືກັບການກະບົດ ຫຼື ເປັນປໍລະປັກຕໍ່ກັບທິດສະດີປະຕິວັດ ແລະ ກົງກັນຂ້າມກັບແນວຄິດຂອງກຳລັງມະຫາຊົນ.

ເຖິງຢ່າງໃດກໍ່ຕາມໃນເວລານັ້ນພວກສາກົນທີ 1 ຢູ່ຝຣັ່ງໄດ້ສະແດງບົດບາດສຳຄັນ. ເດືອນ່ະຈິກ ປີ 1867 ມີກຳມະກອນກຸ່ມໜຶ່ງໃຕ້ການນຳພາຂອງສະມາຊິກສາກົນທີ 1ໄດ້ມີການລຸກຂຶ້ນປະທ້ວງເພື່ອຕ້ານກັບການເກນທະຫາຍເພື່ອເຮັດສົງຄາມກັບປະເທດ ອີຕາລີ . ປີ 1868 ລັດຖະບານໄດ້ດຳເນີນການພິພາກສາຜູ້ນຳຂອງສາກົນທີ 1ເຖິງ 2 ຄັ້ງ ຢູ່ປາຣີ. ແຕ່ຄວາມຈິງແລ້ວການຕັດສິນຄະດີໃນຄັ້ງນັ້ນເປັນການເວົ້າຂອງນາຍຊ່າງເພື່ອສ້າງປົ້ມ ແວັກລັງ ພາໃຫ້ເກີດມີຄວາມປະທັບໃຈຢ່າງເລິກເຊິ່ງ ແລະ ເຕັມໄປດ້ວຍຄວາມສັດທາເຊື່ອໝັ້ນໃນໄຊຊະນະສຸດທ້າຍຂອງຊົນຊັ້ນກຳມະກອນ.

ວິກິດການທາງດ້ານເສດຖະກິດໃນປີ 1966-1867 ເຮັດໃຫ້ສະຕາກຳ ຂອງກຳມະກອນນັບມື້ນັບຫຍຸ້ງຍາກ ສະນັ້ນຂະບວນການຕໍ່ສູ້ຍິ່ງເພີ່ມທະວີຄວາມຮຸນແຮງ. ໃນປີ 1967 ຂະບວນການບຸກໂຈມຕີຂອງກຳມະກອນໄດ້ເກີດຂຶ້ນຢູ່ປາຣີ. ອາມຽງ, ແມັກໄຊ, ຣູແບ... ຊຸມປີຕໍ່ມາກຳມະກອນບໍ່ຖ່ານຫີນ, ໂຮງງານຂອງທະຫານ ເຄີຣໂຄສືບຕໍ່ບຸກໂຈມຕີ ແຕ່ກໍ່ຖືກກຳລັງທະຫານປາບປາມຢ່າງໜັກໜ່ວງ, ບັນດາອົງການສະຫະພາບແຮງງານໄດ້ກຳເນີດເກີດຂຶ້ນ, ພົວພັນກັນຢ່າງສະໜິດແໜ້ນກັບບັນດາສາຂາຂອງສາກົນທີ 1 ເຊິ່ງເປັນເສົາຄ້ຳໃຫ້ແກ່ຂະບວນການຕໍ່ສູ້ຂອງກຳມະກອນ, ນັບມື້ນັບຂົ່ມຂູ່ອຳນາດການປົກຄອງຂອງລະບອບຈັກກະພັດທີ 2.

*4.* **ແນວທາງຂອງລະບອບສາທາລະນະລັດຕໍ່ຕ້ານ ແລະ ລະບອບຈັກກະພັດທີ 2 ຕົກຢູ່ໃນສະຖານະການອັນຕະລາຍ**

ໃນຊຸມປີ 60 ຍ້ອນຄວາມບໍ່ພໍ່ໃຈຂອງພວກນາຍທຶນໃຫຍ່ ແລະ ພວກນາຍທຶນນ້ອຍທີ່ມີຕໍ່ອຳນາດການປົກຄອງເຮັດໃຫ້ອຳນາດການປົກຄອງແບບຈັກກະພັດນັບມື້ນັບກ້າວເຂົ້າສູ່ວິກິດການ. ນາໂປລີອົງ3 ຕ້ອງໄດ້ປະກາດປະຕິຮູບໃນບາງຢ່າງຄື: ລົບລ້າງບາງຂໍ້ຈຳກັດກ່ຽວກັບສິດເສລີພາບໃນການໂຮມຊຸມນຸມ, ຈຳກັດອິດສະຫຼະພາບຂອງໜັງສືພິມ, ເປີດກວ້າງສິດອຳນາດຂອງສະພານິຕິບັນຍັດ ແລະ ແລະ ອຳນາດຂອງວຸດທິສະພາ ແຕ່ວ່າບໍ່ສາມາດກຳຈັດຂະບວນການລຸກຮື້ຂຶ້ນຕໍ່ຕ້ານໃນຝ່າຍສາທາລະນະລັດນາຍທຶນ ແລະ ນາຍທຶນນ້ອຍ.

ພວກຝ່າຍຊ້າຍຂອງຝ່ານນາຍທຶນນ້ອຍໄດ້ລວມຕົວກັນເປນກຸ່ມ ຊາໂກແບັງໃໝ່, ພວກເຂົາຖືວ່າໜ້າທີ່ຕົ້ນຕໍຂອງພວກເຂົາແມ່ນສືບຕໍ່ດຳເນີນການປະຕິວັດໃຫ້ສຳເລັດສົມບູນໃນທ້າຍສະຕະວັດທີ 18 ພາຍໃຕ້ຄຳຂວັນທີ່ວ່າ ອິດສະຫຼະພາບ, ສະເໝີພາບ ແລະ ເພື່ອການກຸສົນ (ເພື່ອເຮັດບຸນ). ພວກເຂົາຮຽກຮ້ອງໃຫ້ມີອິດສະຫຼະໃນການລົງໜັງສືພິມ, ຮຽກຮ້ອງໃຫ້ມີການສ້າງຕັ້ງໂຮງຮຽນສາມັນ ແລະ ດຳເນີນການປັບປຸງລະບອບປະຊາທິປະໄຕ. ພວກເຂົາເປັນຕົວແທນສິດຜົນປະໂຫຍດໃຫ້ແກ່ນາຍທຶນນ້ອຍ ແລະ ພວກນັກຮຽນຮູ້ປັນຍາຊົນນາຍທຶນຜູ້ກ້າວໜ້າ. ແຕ່ຈຸດອ່ອນຂອງພວກເຂົາແມ່ນອີງໃສ່ແຕ່ກຳລັງມວນຊົນ, ເວົ້າຫຼາຍແຕ່ເຮັດໄດ້ໜ້ອຍ (ໃນຕົວຈິງເວົ້າຫຼາຍກວ່າເຮັດ) ມີແນວຄິດໃນແງ່ລົບ (ແນວຄິດບໍ່ດີ) ຕໍ່ກັບຄວາມຕ້ອງການຂອງຊົນຊັ້ນກຳມະກອນ.

ຂະບວນການລຸກຂຶ້ນຕໍ່ສູ້ຕ້ານກັບອຳນາດການປົກຄອງຂອງລັດຖະບານລະເບີດຂຶ້ນຢ່າງຮຸຍແຮງຜ່ານການເລືອຕັ້ງສະມາຊິກສະພານິຕິບັນຍັດໃນປີ 1869. ຝ່າຍສາທາລະນະລັດຕໍ່ຕ້ານກວມຈຳນວນພົນ 3.300.000 ຄົນໃນຈຳນວນຄົນທັງໝົດ 7.000.000ຄົນ ເຊິ່ງຕົວແທນທີ່ມີຊື່ສຽງຂອງຝ່າຍນີ້ແມ່ນ ໂຣເຊີຟໍ ແລະ ກັງແບດຕາ. ເພື່ອເອົາຊະນະກຳລັງມວນຊົນກັງແບດຕາສ້າງທິແນວຄິດ ແລະ ຄວາມເຊື່ອຄ ທາງການເມືອງຂຶ້ນ (ລັດທິແບນວົນ) ເພື່ອແຍກສາສະໜາຄຣິດອອກຈາກອຳນາດການປົກຄອງໃນປະເທດ ແລະ ຖອນກຳລັງທະຫານອອກ... ສະຖານະການທາງການເມືອງຂອງຝຣັ່ງນັບມື້ນັບເຄັ່ງຕຶງ, ລະບອບຈັກກະພັດຂອງນາໂປລີອົງ3 ນັບມື້ຍິ່ງພົບກັບຄວາມອັນຕະລາຍ.

## ການປະຕິວັດໃນປີ 1848 ແລະ ການທ້ອນໂຮມຄວາມເປັນເອກະພາບໃນປະເທດປະເທດເອກະພາບ

## I. ສະພາບການຂອງປະເທດເຢຍລະມັນໃນຕົ້ນສະຕະວັດທີ 19

### 1.ສະພາບການທາງດ້ານເສດຖະກິດ-ການເມືອງຂອງປະເທດເຢຍລະມັນໃນຕົ້ນສະຕະວັດທີ 19

ໃນລະຫວ່າງສະຕະວັດທີ 19 ປະເທດເຢຍລະມັນຍັງແມ່ນປະເທດໜຶ່ງທີ່ນອນໃນລະບອບສັກດີນາຫຼ້າຫຼັງ, ຕາມມະຕິຂອງກອງປະຊຸມສະພາໃນປີ 1815 ປະເທດດັ່ງກ່າວນີ້ຖືກວ່າເປັນສະຫະພັນທະລັດ (ສະຫະລັດ) ທີ່

ປະກອບມີ31 ອະນາຈັກທີ່ເປັນເອກະລາດພໍໃຜພໍລາວ ແລະ ມີ 4 ນະຄອນໃຫຍ່( ເບີແມນ, ຮຳບົວ, ລືວແບັກ ແລະ ຟຣັງຟົວ ທີ່ຕັ້ງຕາມລ້ອງແມ່ນນ້ຳມາຍເນີ. ສຳນັກງານໃຫຍ່ທີ່ມີອຳນາດສູງສຸດຂອງສະຫະພັນທະລັດແມ່ນສະພາສະຫະພັນທະລັດທີ່ປະກອບດ້ວຍຜູ້ແທນຂອງບັນດາລາດຊະອານາຈັກ ທີ່ບໍ່ມີການພົວພັນຢ່າງສະໜິດແໜ້ນກັບ ແລະ ບໍ່ມີສິດເສລີພາບຢ່າງແທ້ຈິງ. ສະຫະພັນທະລັດເຢຍລະມັນບໍ່ມີສະພານິຕິບັນຍັດ ແລະ ສະພາບໍລິຫານລວມ, ບໍ່ມີກຳລັງທະຫານ, ລະບົບການເງິນ ແລະ ການພົວພັນການທູດລວມ. ສິດອຳນາດທັງໝົດຂຶ້ນກັບຂຸນນາງສັກດີນາຂອງແຕ່ລະລາດຊະອານາຈັກ. ສະນັ້ນສະຫະພັນທະລັດເຢຍລະມັນໃນຄວາມເປັນຈິງແລ້ວແມ່ນຍັງຖືກຕັດແຍກອອກຈາກກັນກ່ຽວກັບການປົກຄອງ, ພາສີອາກອນ, ຫົວໜ່ວຍວັດແທກ ແລະ ເງິນຕຣາ. ສະພາບການດັ່ງກ່າວນັ້ນນຳໃຫ້ເກີດມີຫຼາຍບັນຫາຕໍ່ກັບການພັດທະນາປະເທດຊາດ.

ເຖິງຢ່າງໃດກໍ່ຕາມຍ້ອນຄວາມກ້າວໜ້າທາງດ້ານເຕັກນິກຢູ່ທະວີບເອີຣົບ ເຮັດໃຫ້ເສດຖະກິດການຄ້າຂອງປະເທດເຢຍລະມັນເລີ່ມຕົ້ນຂະຫຍາຍຕົວຕາມລັດທິທຶນນິຍົມ. ປີ 1822 ທົ່ວປະເທດເຢຍລະມັນພວມຫາກໍ່ມີເຄື່ອງຈັກອາຍນ້ຳ 2 ເຄື່ອງເທົ່ານັ້ນ, ຮອດປີ 1847  ແມ່ນໄດ້ນຳໃຊ້ເຄື່ອງຈັກທັງໝົດ 1.139 ເຄື່ອງ. ໃນປີ 1825 ບັນດາເຮືອກຳປັ່ນແມ່ນແລ່ນດ້ວຍເຄື່ອງຈັກອາຍນ້ຳທີ່ນຳໃຊ້ເດີນເຮືອໃນແມ່ນ້ຳແຮັງ, ປີ 1835ເສັ້ນທາງລົດໄຟພວມໄດ້ຮັບການນຳໃຊ້. ຮອດປີ 19. ສິບປີຕໍ່ມາເສັ້ນທາງໄດ້ຮັບການຂະຫຍາຍອອກເປັນ 2.300 ກມ . ພວກນາຍທຶນເຢຍລະມັນໄດ້ລົງທຶນເຂົ້າເຂົ້າໃນຂະແໜງອຸດສະຫະກຳໜັກ ໂດຍສະເພາະແມ່ນອຸດສະຫະກຳຂຸດຄົ້ນບໍ່ແຮ່ ແລະ ອຸດສະຫະກຳເຄມີ. ບັນດາສູນກາງອຸດສະຫະກຳເລີ່ມປະກົດມີໃຫ້ເຫັນຢູ່ບໍລິເວນລ້ອມແມ່ນ້ຳແຮັງ, ເວດຟາເຣັນ, ເຊີເລຢຽນ , ແຊັກໂຊນີ...

ໃນຊ່ວງປະມານ 30 ປີ ແຕ່ປີ 1818-1848 ປະຊາກອນໃນກຸງເບີລິນເພີ່ມຂຶ້ນ 2 ເທົ່າ. ປີ1834 ຫ້ອງການພາສີອາກອນໄດ້ຮັບການສ້າງຕັ້ງຶ້ນໃນ 18 ລາດຊະອະນາຈັກຂອງເຢຍລະມັນເຊິ່ງເປັນການສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການພັດທະນອຸດສະຫະກຳ-ການຄ້າ.

ໃນເວລານັ້ນໃນເຂດຊົນນະບົດຍັງຮັກສາຮູບແບບການກິດຂີ່ຂູດຮີດຂອງສັກດີນາ, ຊົນຊັ້ນຂຸນນາງສັກດີນາເປັນຄົນກຳອຳນາດການປົກຄອງ, ຄວບຄຸມທຸກກິດຈະການຂອງປະເທດ. ຍ້ອນໄດ້ຮັບຜົນກະທົບຈາກການຂະຫຍາຍຕົວທາງດ້ານເຕັກນິກວິທະຍາສາດທີ່ກຳລັງແຜ່ເຂົ້າມາໃນເຂດຊົນນະບົດເຮັດໃຫ້ດິນນາໄດ້ປ່ຽນມານຳໃຊ້ເຂົ້າໃນການດຳເນີນທຸລະກິດຕາມຮູບແບບລັດທິທຶນນິຍົມ, ຕາມໝູ່ບ້ານຕ່າງໆໄດ້ມີການນຳໃຊ້ເຄື່ອງກົນຈັກກະສິກຳ, ໃຊ້ປຸ໋ຍເຄມີແລະ ປ່ຽນຊາວນາມາເປັນກຳມະກອນຮັບຈ້າງຍ້ອນແນວນັ້ນທຸກຮູບແບບການກົດຂີ່ຂູດຮີດຂອງລະບອບສັກດີນາລ້ວນແຕ່ຖືກລົບລ້າງ.

## 2. ການຈຳແນກກຳລັງຂອງຊົນຊັ້ນໃນສັງຄົມ



ຟີເດຣິກ ວິນແຮັມ3 **Friedrich Wilhelm III**

ບັນດາການປ່ຽນແປງທາງດ້ານເສດຖະກິດໄດ້ຄ່ອຍໆກ້າວໄປເຖິງການປ່ຽນແປງກ່ຽວກັບການແຈກຢາຍທາງດ້ານກຳລັງຂອງຊົນຊັ້ນໃນສັງຄົມ. ຊົນຊັ້ນຂຸນນາງສັກດີນາຍັງຮັກບົດບາດສຳຄັນໃນໂຄງຮ່າງການປົກຄອງໃນປະເທດໂດຍສະເພາະແມ່ນກະສັດລາດຊະອານາຈັກປຣັດເຊຍ ຟີເດຣິກ ວິນແຮັມ3 **Friedrich Wilhelm III** ສິ່ງຜົນສະທ້ອນອັນໃຫຍ່ຫຼວງຕໍ່ກັບບັນດາລາດຊະອານາຈັກອື່ນ. ວິແຮມ 3 (ແຕ່ ປີ ຄ.ສ 1770-1840) ບໍ່ຍອມປະຕິບັດຕາມສັນຍາທີ່ເຄີຍມີໄວ້ໃນເມື່ອກ່ອນໂດຍສະເພາະກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ຊ້ຳບໍ່ໜຳຍັງເພີ່ມທະວີອຳນາດລາຊາທິປະໄຕສົມບູນສິດສັກດີນາ. ຍ້ອນແນວນັ້ນດິນດອນຕອນຫຍ້າຈິ່ງຖືກຕັດແບ່ງໄປຕາມສິດອຳນາດຂອງບັນດາລາດຊະອານາຈັກ ເຊິ່ງເປັນບັນຫາອັນໃຫຍ່ຫຼວງທີ່ເປັນອຸປະສັກໃຫ້ແກ່ການຂະຫຍາຍຕົວຂອງເສດຖະກິດທຶນນິຍົມ.

ຊົນຊັ້ນນາຍທຶນໄດ້ເກີດຂຶ້ນ ແລະ ເຕີບໃຫຍ່ໄປພ້ອມໆກັບການຂະຫຍາຍຕົວຂອງອຸດສະຫະກຳ-ການຄ້າ. ພິເສດແມ່ນຢູ່ທາງພາກຕາເວັນຕົກສ່ຽງໃຕ້ທີ່ມີຊາຍແດນຕິດກັບປະເທດຝຣັ່ງ ເສດຖະກິດທຶນນິຍົມຂະຫຍາຍຕົວຢ່າງແຂງແຮງ. ສະນນຊົນຊັ້ນນາຍທຶນຢູ່ໃນຂົງເຂດນັ້ງຈິ່ງມີອຳນາດ. ການປະຕິວັດເດືອນ 7 ໃນປີ 1830 ຢູ່ປະເທດຝຣັ່ງ ແລະ ການປະຕິຮູບການເລືອກຕັ້ງໃນປີ 1832 ຢູ່ປະເທດອັງກິດຢູ່ຊຸກດັນໃຫ້ຊົນຊັ້ນນາຍທຶນຝຣັ່ງ

ດຳເນີນການຕໍ່ສູ້. ຈຸດປະສົງຂອງພວກເຂົາຕໍ່ຕ້ານຄືນລະບອບລາຊາທິປະໄຕສົມບູນສິດສັກດີນາ ແລະ ດຳເນີນການທ້ອນໂຮມແຜ່ນດິນໃຫ້ເປັນເອກະພາບ ແລະ ສ້າງຕະຫຼາດຊົນເຜົ່າເຢຍລະມັນຂຶ້ນ.

ປັນຍາຊົນກ້າວໜ້າ, ນັກຮຽນ-ນັກສຶກສາ ແລະ ນາຍທຶນປະຊາທິປະໄຕທີ່ມີແນວຄິດກ້າວໜ້າກວ່າເກົ່າ, ພວກເຂົາຮຽກຮ້ອງໃຫ້ມີປະຊາທິປະໄຕທີ່ແທ້ຈິງ ແລະ ສ້າງຕັ້ງລະບອບສາທາລະນະລັດຂຶ້ນ. ເດືອນພຶດສະພາ 1832 ນັກສຶກສາໄດ້ໂຮມຊຸມນຸມມິດຕິງຢູ່ບັນດາຕົວເມືອງໃຫຍ່ມີຜູ້ເຂົ້າຮ່ວມຂະບວນການ 30. 000 ຄົນ,ສະມາຄົມສິດທິມະນຸດໄດ້ຮັບການສ້າງຕັ້ງຂຶ້ນແບບປິດລັບ ຢູ່ແຮດແຊນ ແລະ ດາມສະຕາດ. ນອກຈາກກຸ່ມນັກສຶກສາ ແລະ ນັກຮຽນຮູ້ປັນຍາຊົນກໍ່ຍັງມີນາຍຊ່າງຫັດຖະກຳ ແລະ ປະຊາຊົນຜູ້ທຸກຍາກຢູ່ໃນຕົວເມືອງໄດ້ເຂົ້າຮ່ວມເຄື່ອນໄຫວໃນສະມາຄົມດັ່ງກ່າວ. ປີ 1834 ສະມາຄົມໄວໜຸ່ມເຢຍລະມັນ ໄດ້ຮັບການສ້າງຕັ້ງຂຶ້ນ. ແນວຄິດຂອງສະມາຄົມໄດ້ຍົກໃຫ້ເຫັນການທ້ອນໂຮມປະເທດເຢຍລະມັນໃຫ້ເປັນເອກະພາບກັນ, ປະຕິບັດສິດສະເໝີພາບທາງດ້ານການເມືອງ ແລະ ສັງຄົມ. ລົບລ້າງສິດອຳນາດຂອງສັກດີນາ, ປະກາດອິດສະຫຼະພາບໃນການດຳເນີນທຸລະກິດອຸດສະຫະກຳ-ການຄ້າ, ອິດສະຫຼະພາບໃນການສະເໜີຂ່າວຂອງໜັງສືພິມ ແລະ ການໂຮມຊຸມນຸມ.

ການດຳລົງຊີວິດຂອງຊາວນາເຢຍລະມັນມີຄວາມແອອັດຫຼາຍເຮັດໃຫ້ສະຖານະພາບການດຳລົງຊີວິດມີຄວາມຫຍຸ້ງຍາກ, ຍ້ອນການເສຍພາສີຢ່າງໜັກໜ່ວງ, ຕ້ອງແບກຫາບພະລະຈາກລະບອບສັກດີນາກໍ່ຂຶ້ນຢ່າງໜັກໃນການດຳລົງຊີວິດ. ຊາວນາຕ້ອງການພຽງຕອນດິນເພື່ອທຳການປູກຝັງ ແຕ່ຄວາມຈິງແລ້ວຕອນດິນທັງໝົດແມ່ນຕົກໃນກຳມືຂອງພວກຂຸນນາງ ຄຽງຄູ່ກັນນັ້ນພວກເຈົ້າຂອງນິຄົມກະເສດ ເລີ່ມປະກົດມີກຳມະກອນກະສິກຳເກີດຂຶ້ນ. ສະຖານະພາບຊີວິດຂອງພວກເຂົາຍັງບໍ່ທັນພົບແສງສະຫວ່າງຫຍັງເລີຍ ຍ້ອນພວກເຂົາຖືກກົດຂີ່ຂູດຮີດມູນຄ່າສ່ວນເກີນທັງປະກອບສ່ວນເຮັດໜ້າທີ່ຮັບໃຊ້ລະບອບສັກດີນາ. ຍ້ອນແນວນັ້ນຈິ່ງເຮັດໃຫ້ຊາວນາລຸກຂຶ້ນຕໍ່ສູ້ຫຼາຍຄັ້ງເພື່ອຕ້ານກັບພວກຂຸນນາງສັກດີນາທີ່ເປັນເຈົ້າທີ່ດິນ ແຕ່ຍ້ອນຂາດການຈັດຕັ້ງທີ່ແຂງແກ່ນ ແລະ ຂາດການນຳພາທີ່ສະຫຼາດສ່ອງໃສຈິ່ງບໍ່ສາມາດຍາດເອົາໄຊຊະນະມາໄດ້.

ຊົນຊັ້ນກຳມະກອນໄດ້ປະກົດຕົວຂຶ້ນ ແລະ ຂະຫຍາຍຕົວຢ່າງເຂັ້ມແຂງຄຽງຄູ່ກັບການຂະຫຍາຍຕົວຂອງຂະແໜງອຸດສະຫະກຳ ເຊິ່ງແມ່ນຊົນຊັ້ນໃໝ່ໃນສັງຄົມໄດ້ເຂົ້າຮ່ວມຢ່າງຕັ້ງໜ້າໃນຂະບວນການຕໍ່ສູ້ຕ້ານກັບລະບອບຜະເດັດການສັກດີນາ.

ຊີວິດການເປັນຢູ່ຂອງກຳມະກອນເຢຍລະມັນແມ່ນທຸກຍາກລຳບາກທີ່ສຸດ, ຄຸນນະພາບຊີວິກຍັງຕໍ່າຫຼາຍຖ້າທຽບໃສ່ກຳມະກອນອັງກິດ ແລະ ຝຣັ່ງ. ຕ້ອງອອກແຮງງານຢ່າງໜັກ 14-16 ຊົ່ວໂມງ ແຕ່ເງິນເດືອນພັດຕໍ່າທີ່ສຸດໂດຍສະເພາະແມ່ນກຳມະກອນເດຍິງ ແລະ ເດັກນ້ອຍ. ຊີວິດການເປັນຢູ່ທຸກຍາກຂາດເຂີນ. ຍ້ອນແນວນັ້ນກຳມະກອນຈິ່ງລຸກຂຶ້ນຕໍ່ສູ້ໂດຍເລີ່ມຈາກການທຳລາຍເຄື່ອງຈັກຈົນກ້າວໄປເຖິງການເດີນຂະບວນປະທ້ວງ. ມີຊື່ສຽງທີ່ສຸດແມ່ນຂະບວນການຕໍ່ສູ້ຂອງກຳມະກອນຕໍ່າແຜ່ນທີ່ ເຊີເລຢຽນໃນປີ 1844.

ຕະຫຼອດໄລຍະໃນການດຳເນີນການຕໍ່ສູ້ຊົນຊັ້ນກຳມະກອນເຢຍລະມັນ ໄດ້ສ້າງຕັ້ງອົງການຈັດຕັ້ງທຳອິດຂອງຕົນຂຶ້ນ. ໃນປີ 1833 ກຳມະກອນຈຳນວນໜຶ່ງຢູ່ນະຄອນປາຣີໄດ້ສ້າງຕັ້ງພັນທະມິດກຳມະກອນເຢຍລະມັນໂດຍໄດ້ຮັບອິດທິພົນຂອງປະຊາທິປະໄຕນາຍທຶນນ້ອຍ.

ຕໍ່ມາກຸ່ມພັນທະມິດຂອງຜູ້ກໍ່ຄວາມບໍ່ສະຫງົບໄດ້ຮັບການສ້າງຕັ້ງຂຶ້ນ, ຈຸດປະສົງຕົ້ນຕໍແມ່ນຕ້ອງການທ້ອນໂຮມປະເທດໃຫ້ເປັນເອກະພາບເດີນຕາມລະບອບສາທາລະນະລັດ ປະຊາທິປະໄຕ. ປີ 1836 ຍ້ອນຄວາມບໍ່

ເຫັນດີຕໍ່ການຈັດຕັ້ງລະຫວ່າງພວກກຳມະກອນ ແລະ ນາຍທຶນນ້ອຍປະຊາທິປະໄຕ. ກຸ່ມພັນທະມິດຈຶ່ງຖືກຕັດແບ່ງອອກເປັນຫຼາຍຝ່າຍຄື: ກຸ່ມຄົນຈຳນວນໜຶ່ງທີ່ມີຈິດໃຈຕໍ່ສູ້ຢ່າງຕັ້ງໜ້າໄດ້ສ້າງຕັ້ງສະມາຄົມໃໝ່ຂຶ້ນເອີ້ນວ່າພັນທະມິດຂອງກຸ່ມຄົນອັນຊອບທຳ ໃນເບື້ອງຕົ້ນພວກເຂົາໄດ້ປະກາດນະໂຍບາຍຢ່າງເຊັ່ນ: ຮຽກຮ້ອງໃຫ້ລົບລ້າງລະບອບປົກຄອງກຳມະສິດສ່ວນຕົວ ເພາະວ່າພວກເຂົາເຂົ້າໃຈວ່າສິ່ງນີ້ເປັນຕົ້ນເຫດແຫ່ງຄວາມບໍ່ສະເໝີພາບໃນສັງຄົມເຊິ່ງຕົວແທນຂອງກຸ່ມນີ້ມີທ່ານ ກາກຊັບປໍ, ແຮນຣິດຈ໌, ບົວເອີ ແລະ ວິນແຮມ ວາຍເຕີລິງ. ສຳລັບວິນແຮມ ວາຍເຕີລິງແມ່ນເປັນນັກຈິດຕະນິຍົມຂອງພັນທະມິດຂອງກຸ່ມຄົນອັນຊອບທຳ ໄດ້ດຳເນີນການປະຕິວັດເພື່ອລົບລ້າງລະບອບການປົກຄອງເກົ່າ ແຕ່ບໍ່ສາມາດຍອມຮັບໄດ້ກ່ຽວກັບທາດແທ້ຂອງການຕໍ່ສູ້ຊົນຊັ້ນ ແລະ ສະຕາກຳຂອງຊົນຊັ້ນກຳມະຊີບ.

ໃນຊຸມປີ 40 ກາກມາກ (1815-1883) ແລະ ຟີເດຣິກ ອັງແກນ (1820-1895) ແມ່ນກຸ່ມຄົນທຳອິດທີ່ສະແດງໃຫ້ເຫັນບົດບາດຂອງຊົນຊັ້ນກຳມະຊີບ ພວກທ່ານໄດ້ເຂົ້າຮ່ວມຂະບວນການຕໍ່ສູ້ຂອງກະມະກອນຢ່າງຕັ້ງໜ້າຢູ່ທະວີບເອີຣົບ, ສ້າງທິດສະດີປະຕິວັດ ແລະ ໃນປີ 1847 ໄດ້ຮ່າງຖະແຫຼງການຂອງພັກຄອມມູນິດ, ລັດທິຄວາມເຊື່ອຂອງຊົນຊັ້ນກຳມະຊີບ. ມາກ ແລະ ອັງແກນ ໄດ້ສ້າງຕັ້ງໄດ້ສ້າງພື້ນຖານທຳອິດຂອງລັດທິສັງຄົມວິທະຍາສາດ.

**3. ສະຖານະການຂອງການປະຕິວັດ**

ຍ້ອນການປ່ຽນແປງທາງດ້ານເສດຖະກິດ ແລະ ການເມືອງ ເຮັດໃຫ້ຄວາມຂັດແຍ່ງພື້ນຖານໃນປະເທດເຢຍລະມັນນັບມື້ນັບເພີ່ມທະວີຄວາມຮຸນແຮງຂຶ້ນ. ກ້າວເຂົ້າສູ່ຕອນທ້າຍຂອງລະບອບສັກດີນາ, ຄວາມຂັດແຍ່ງລະຫວ່າງຊົນຊັ້ນນາຍທຶນກັບລະບອບລາຊາທິປະໄຕສົມບູນສິດ ແລະ ຄວາມຂັດແຍ່ງລະຫວ່າງຊົນຊັ້ນຊາວນາ, ກຳລັງມວນຊົນ ຊາວຜູ້ອອກແຮງງານ ກັບພວກຂຸນນາງສັກດີນານັບມື້ນັບເພີ່ມຂຶ້ນ. ຄວາມຈິງແລ້ວສິ່ງດັ່ງກ່າວນັ້ນສະແດງໃຫ້ເຫັນຄວາມຂັດແຍ່ງລະຫວ່າງກຳລັງການຜະລິດແບບທຶນນິຍົມທີ່ນັບມື້ນັບມີການຂະຫຍາຍຕົວ ກັບການພົວພັນການຜະລິດແບບສັກດີນາທີ່ຫຼ້າຫຼັງທີ່ພວມກຳລັງຈຳກັດກຳລັງແຮງການຜະລິດ. ຈຸດພິເສດຂອງປະເທດເຢຍລະມັນ ບັນຫາພື້ນຖານທີ່ຈະຕ້ອງໄດ້ມີການແກ້ໄຂແມ່ນການລົບລ້າງລະບອບລາຊາທິປະໄຕສັກດີນາ, ທ້ອນໂຮມປະເທດເຢຍລະມັນໃຫ້ເປັນເອກະພາບ ແລະ ສ້າງຕັ້ງປະເທດສາທາລະນະລັດ ປະຊາທິປະໄຕ. ປົດປ່ອຍຊົນຊັ້ນຊາວນາ ແລະ ສ້າງເງື່ອນໄຂໃຫ້ແກ່ການຂະຫຍາຍຕົວຂອງລັດທິທຶນນິຍົມ. ນັ້ນແມ່ນໜ້າທີ່ຕົ້ນຕໍຂອງການປະຕິວັດປະຊາທິປະໄຕນາຍທຶນ.

ແຕ່ວ່າໃນກາງສະຕະວັດທີ 19 ປະເທດເຢຍລະມັນພັດເກີດມີຂໍ້ຂັດແຍ່ງໃໝ່ຂຶ້ນມາ . ຊົນຊັ້ນກຳມະກອນເຢຍລະມັນນັບມື້ຍິ່ງເຕີບໃຫຍ່ເຂັ້ມແຂງ ຈຶ່ງໄດ້ດຳເນີນການຕໍ່ສູ້ເພື່ອຍາດສິດຜົນປະໂຫຍດມາສູ່ຕົນເອງໄດ້ເປັນຄັ້ງທຳອິດ ສະນັ້ນຂໍ້ຂັດແຍ່ງລະຫວ່າງກັບມະກອນ ແລະ ນາຍທຶນຈຶ່ງສົ່ງຜົນສະທ້ອນຮຸນແຮງຕໍ່ກັບການຂະຫຍາຍຕົວຂອງສະຖານະການໃນເວລານັ້ນ.

ໄພແຫ້ງແລ້ງ ແລະ ວິກິດການທາງດ້ານອຸດສະຫະກຳ ແລະ ການຄ້າໃນປີ 1847 ເຮັດໃຫ້ປະເທດເຢຍລະມັນພົບກັບຄວາມຫຍຸ້ງຍາກຫຼາຍຢ່າງ, ຊີວິດການເປັນຢູ່ຂອງປະຊາຊົນຊາວຜູ້ອອກແຮງງານຍິ່ງມີຄວາມທຸກຍາກເພີ່ມຂຶ້ນເຮັດໃຫ້ພວກເຂົາເຕົ້າໂຮມກັນຕາມຖະໜົນຫົນທາງເປັນພັນໆຄົນເພື່ອຕໍ່ຕ້ານລັດຖະບານ.



ເຈົ້າຊີວິດ ຟີເດຣິດຈ໌ ວິນແຮມ 4 (1795-1861) ແຫ່ງປຣັດເຊຍ

ພ້ອມດຽວກັນນັ້ນລັດຖະບານຂອງປຣັດເຊຍກໍ່ຕົກຢູ່ໃນສະພາບວິກິດການທາງດ້ານການເງິນ, ຂາດເຂີນເງິນຕຣາ, ໄດ້ມີການບັງຄັບໃຫ້ນາຍທຶນນໍາເອົາເງິນອອກມາໃຫ້ພວກເຂົາກູ້ຢືມ. ເຈົ້າຊີວິດ ຟີເດຣິດຈ໌ ວິນແມ 4 (1795-1861) ຂຶ້ນຄອງລາດຊະບັນລັງໃນປີ 1840 ໄດ້ດໍາເນີນການຮຽກປະຊຸມບັນດາສະຫະພັນທະລັດທີ່ ກຸງເບີລິນໃນວັນທີ 11 ເມສາ 1847 ເຊິ່ງປະກອບມີ ຜູ້ແທນຂອງບັນດາແຂວງທີ່ຂຶ້ນກັບ ປຣັດເຊຍ ແຕ່ຊົນຊັ້ນນາຍທຶນພາຍໃຕ້ການນໍາພາຂອງບັນດາຜູ້ແທນນາຍທຶນແຖບບໍລິເວນແມ່ນໍ້າແຣັງໄດ້ບັງຄັບ.ຕ້ອງຍອມຮັບເງື່ອນໄຂທາງດ້ານການເມືອງໃໝ່ຈຶ່ງຈະອະນຸຍາດໃຫ້ກູ້ຢືມເງິນໄດ້. ແຕ່ ວິນແຮມ 4 ບໍ່ຍອມປະຕິບັດຕາມ ຊໍ້າຍັງດໍາເນີນການໜີອອກຈາກກອງປະຊຸມສະຫະພັນທະລັດ ສິ່ງນັ້ນມັນໄດ້ສ້າງຄວາມຄຽດແຄ້ນໃຫ້ແກ່ຊົນຊັ້ນນາຍທຶນ ແລະ ຊົນຊັ້ນຕ່າງໆຂອງປະຊາຊົນ.

ໜ້າທີ່ຕົ້ນຕໍຂອງການປະຕິວັດແມ່ນທ້ອນໂຮມແຜ່ນດິນໃຫ້ມີຄວາມເປັນເອກະພາບກັນລຶບລ້າງຄວາມແຕກຕ່າງກັນທາງດ້ານການເມືອງ ແລະ ເສດຖະກິດລະຫວ່າງບັນດາລາດຊະອານາຈັກ ແລະ ທ້ອນໂຮມເປັນປະເທດທີ່ມີຄວາມເປັນເອກະພາບຂອງປະຊາຊົນບັນດາເຜົ່າ.

ໃຈແຍກກຳລັງຂອງຊົນຊັ້ນໃນສັງຄົມເຢຍລະມັນໃນເວລານັ້ນ ມາກ ແລະ ອັງແກນໄດ້ກຳນົດວ່າໃນເງື່ອນໄຂປະຫວັດສາດປີ 1848 ຊົນຊັ້ນນາຍທຶນສາມາດນຳພາການຕໍ່ສູ້ເພື່ອທ້ອນໂຮມເປັນປະເທດທີ່ມີຄວາມເປັນເອກະພາບ. ພວກເຂົາຮຽກຮ້ອງໃຫ້ມີການລົບລ້າງສິດອຳນາດຂອງພວກສັກດີນາໂດຍສະເພາະແມ່ນພວກຂຸນນາງ, ແຕ່ຍັງບໍ່ທັນຄິດໄປຮອດວ່າຕ້ອງມີການລົບລ້າງລະບອບລາຊາທິປະໄຕ. ພວກເຂົາຕ້ອງການອິດສະຫຼະພາບໃນການສະແດງຄຳຄິດເຫັນສະນັ້ນຈິ່ງຮຽກຮ້ອງໃຫ້ມີອິດສະຫຼະພາບທາງດ້ານໜັງສືພິມ, ມີສິດໃນການແລກປ່ຽນສິນທະນາ ແລະ ເຕົ້າໂຮມຊຸມນຸມກັນ. ພວກເຂົາຕ້ອງການສ້າງຕັ້ງລັດຖະບານທີ່ບໍລິຫານວຽກງານທັງໝົດໃນປະເທດເພື່ອຕ້ອງການໃຫ້ມີຕະຫຼາດຈຳໜ່າຍສິນຄ້າລວມພາຍໃນປະເທດ, ຮັບປະກັນໃຫ້ມີການສ້າງຕະຫຼາດຈຳໜ່າຍສິນຄ້າກັບສາກົນ. ແຕ່ພວກເຂົາດຳເນີນການທ້ອນໂຮມປະເທດເຢຍລະມັນດ້ວຍວິທີການປະຕິຮູບ, ສ້າງຕັ້ງລະບອບລາຊາທິປະໄຕພາຍໃຕ້ລັດຖະທຳມະນູນທີ່ບັນດາລາດຊະອານາຈັກຕ່າງໆຍັງຮັກສາສິດອຳນາດເກົ່າຂອງຕົນໄວ້ຢູ່. ຊົນຊັ້ນນາຍທຶນເຢຍລະມັນບໍ່ຕ້ອງການເຮັດການປະຕິວັດທີ່ລົງເລິກເຖິງຖ່ອງຍ້ອນວ່າພວກເຂົາບໍ່ສາມາດຫຼົງລືມເຫດການລຸກຂຶ້ນຕໍ່ສູ້ຂອງຊົນຊັ້ນກຳມະກອນຕໍ່າແຜ່ນຢູ່ເຊີເລຢຽນ ແລະ ຂະບວນການປະຕິວັດເດືອນກຸມພາທີ່ປະເທດຝຣັ່ງ.

ມາກ ແລະ ອັງແກນໄດ້ຂຽນ ບັນດາແນວທາງຍະໂຍບາຍຂອງພັກຄອມມູນິດເຢຍລະມັນ ເປັນເອກະສານທາງການເມືອງຂອງ ພັນທະມິດຂອງພວກຄອມມູນິດ ແນໃສ່ເພື່ອແກ້ໄຂດ້ວຍການເຮັດໜ້າທີ່ການປະຕິວັດປະຊາທິປະໄຕນາຍທຶນປ່ຽນມາເປັນການປະຕິວັດສັງຄົມນິຍົມ.

## II.ການປະຕິວັດປີ 1848 ຢູ່ປະເທດເຢຍລະມັນ

### 1. ເຫດການລຸກຂຶ້ນຕໍ່ສູ້ເພື່ອດຳເນີນການປະຕິວັດຢູ່ທາງພາກໃຕ້ຂອງປະເທດເຢຍລະມັນ.

ທ້າຍເດືອນກຸມພາ 1848 ຂະບວນການປະຕິວັດໄດ້ເກີດຂຶ້ນທຳອິດຢູ່ພາກໃຕ້ຂອງປະເທດເຢຍລະມັນ, ທຳອິດແມ່ນເກີດຂຶ້ນຢູ່ບາແດນ ຈາກນັ້ນກໍ່ແຜ່ລາມໄປທົ່ວທຸກຂົງເຂດຕາມແມ່ນ້ຳແຣັງ, ຢູເວດແຮັມແບັກ, ບາແຢ, ຂະບວນການລຸກຮື້ຂຶ້ນຕໍ່ສູ້ຢູ່ຢູເວດແຮັມແບັກ ຕ້ານກັບອຳນາດການປົກຄອງຂອງສັກດີນາສາມາດຍາດໄດ້ໄຊຊະນະຄັ້ງທຳອິດໄດ້ບັງຄັບໃຫ້ລັດຖະບານຕ້ອງຍອມຮັບສິດເສລີພາບທາງດ້ານໜັງສືພິມ, ຍອມຮັບກອງກຳລັງປະປະກອບວຸດຂອງປະຊາຊົນ, ປົດຕຳແໜ່ງລັດຖະມົນຕີຕໍ່ຕ້ານ ແລະ ມອບສິດອຳນາດໃນບັນດາຜູ້ແທນຂອງຊົນຊັ້ນນາຍມທຶນອິດສະຫຼະ.

ຢູ່ເວດແຮັມແບັກ ໂດຍສະເພາະແມ່ນບ່ອນທີ່ມີສົງຄາມຊາວນາເຢຍລະມັນໃນປີ 1525 ຊາວນາໄດ້ດຳເນີນການລຸກຂຶ້ນຕໍ່ສູ້ຈັບອາວຸດທີ່ມີລັກສະນະປະຖົມປະຖານເພື່ອເຮັດການປະຕິວັດເຄື່ອນທັບໄປຮອດຖານທີ່ໝັ້ນຂອງພວກຂຸນນາງເຈົ້າທີ່ດິນ, ພວກເຂົາໄດ້ທຳການຈູດເຜົາບັນດາເອກະສານກ່ຽວກັບການເກັບພາສີ ແລະ ຮຽກຮ້ອງໃຫ້ມີການລົບລ້າງສິດອຳນາດຂອງພວກສັກດີນາ. ຄວາມຕ້ອງການອັນຈຳເປັນຂອງຊາວນາແມ່ນການທຳລາຍລະບອບສັກດີນາ ແລະ ລົບລ້າງຂໍ້ຈຳກັດຂອງລະບອບສັກດີນາ ເພື່ອປັບປຸງຊີວິດການເປັນຢູ່ຂອງພວກເຂົາ.

ວັນທີ 3 ມີນາ 1848 ຊົນຊັ້ນກຳມະກອນໄດ້ຈັດຕັ້ງການໂຮມຊຸມນຸມມິດຕິງເພື່ອປະທ້ວງຄັ້ງຍິ່ງໃຫຍ່ຢູ່ເຄວນ ເພື່ອຮຽກຮ້ອງສິດໃນການເລືອກຕັ້ງທົ່ວໄປ, ມີອິດສະຫຼະໃນການເວົ້າ, ອິດສະຫຼະໃນການສະສົມກຳລັງອາວຸດຂອງປະຊາຊົນ ແລະ ລົບລ້າງກຳລັງທະຫານເກົ່າ ອິດສະຫຼະໃນການໂຮມຊຸມນຸມ, ມີສິດປົກປ້ອງແຮງງານ ແລະ ອື່ນໆ.

ຕາມຖະໜົນຫົນທາງທີ່ ເມືອງ ມວຽນແຊນກຳມະກອນ ແລະ ນັກສຶກສານັດຢຸດງານ-ຢຸດການຮຽນເພື່ອຮຽກຮ້ອງໃຫ້ຂັບໄລ່ຄະນະລັດຖະມົນຕີຕໍ່ຕ້ານອອກຈາກຕຳແໜ່ງ.

ຂະບວນການລຸກຮື້ຂຶ້ນຕໍ່ສູ້ຢູ່ທາງງພາກໃຕ້ຂອງເຢຍລະມັນສາມາດຍາດເອົາໄດ້ໄຊຊະນະທີ່ບັງຄັບໃຫ້ຊົນຊັ້ນສັກດີນາຕ້ອງປ່ຽນລັດຖະບານຕໍ່ຕ້ານເກົ່າ ມາເປັນພວກນາຍທຶນອະດສະຫຼະພາບ.

ຂະບວນການປະຕິວັດສືບຕໍ່ເກີດຂຶ້ນຢູ່ບັນດາຕົວເມືອງໃຫຍ່ ແລະ ເຂດຊົນນະບົດຂອງເຢຍລະມັນລຸກຂຶ້ນຕໍ່ສູ້. ກຳມະກອນ ແລະ ຊາວນາຈຳນວນຫຼາຍນັບມື້ນັບຫັນໜ້າເຂົ້າສູ້ການລຸກຂຶ້ນຕໍ່ສູ້ເຮັດການປະຕິວັດເຊິ່ງມັນສິ່ງຜົນສະທ້ອນອັນໃຫຍ່ຫຼວງຕໍ່ກັບສະພາບການຂອງປະເທດເຢຍລະມັນນັ້ນກໍ່ຄືການປະຕິວັດຢູ່ເບີລິນ.

## 2. ການປະຕິວັດເດືອນ ມີນາ ທີເບີລິນ

ຕົ້ນເດືອນມີນາ ຢູ່ປຣັດເຊຍ ແລະ ເຢຍລະມັນເໜືອໄດ້ເກີດມີຂະບວນການຕໍ່ສູ້ຫຼາຍແຫ່ງ. ການໂຮມຊຸມນຸມຂະໜາດໃຫຍ່ຂອງກຳມະກອນ, ນາຍຊ່າງຫັດຖະກຳ, ນັກສຶກສາ ແລະ ຊົນຊັ້ນຕ່າງໆທີ່ຂຶ້ນກັບພວກນາຍທຶນເກີດຂຶ້ນຢູ່ເບີລິນ ເພື່ອສົນທະນາກ່ຽວກັບຂ່າວການໄດ້ຮັບໄຊຊະນະຂອງຂະບວນການປະຕິວັດຢູ່ປາຣີ, ຢູ່ທາງພາກຕາເວັນຕົກ ແລະ ພາກໃຕ້ຂອງເຢຍລະມັນ. ບັນດາຄຳຮ້ອງຟ້ອງຕ່າງໆຖືກສົ່ງໄປຫາເຈົ້າຊີວິດ ເພື່ອຂໍໃຫ້ອະໄພຍະເທດນັກໂທດການເມືອງ, ຂໍໃຫ້ສ້າງຕັ້ງອົງການຈັດຕັ້ງທີ່ເປັນຕົວແທນໃຫ້ແກ່ປະຊາຊົນ ແລະ ຮຽກຮ້ອງໃຫ້ສ້າງຕັ້ງກະຊວງແຮງງານຂຶ້ນ. ແຕ່ວ່າ ຟຣີເດຣິກ ວິນແຮມທີ4  ບໍ່ໄດ້ຫົວຊານຳຄຳຮ້ອງຂໍດັ່ງກ່າວເລີຍ ຊໍ້າຍັງພັດເພີ່ມທະວີກຳລັງທະຫານ ແລະ ຕຳຫຼວດປາບປາມຂະບວນການປະທ້ວງ. ການປະທະກັນລະຫວ່າງກຳລັງທະຫານ  ແລະ ປະຊາຊົນເກີດຂຶ້ນທົ່ວທຸກບ່ອນ.

ຂ່າວການປະຕິວັດຢູ່ ກຸງວຽນ ໄດ້ລະເບີດຂຶ້ນ, ແມດແຕກນິດຈ໌ ຖືກສົ່ງໄປໄປເບີລິນ ເຮັດໃຫ້ປະຊາຊົນຜິດຫວັງ ແລະ ເຮັດໃຫ້ການປະຕິວັດກ້າວເຂົ້າສູ່ຈຸດສຸດຍອດ. ເຈົ້າຊີວິດມີຄວາມຢ້ານກົວຕໍ່ສະຖານະການສູ້ຮົບ ແລະ ຂະບວນການຜະລິດວັດຂອງປະຊາຊົນສະນັ້ນມາໃນວັນທີ 17 ມີນາ 1848 ຈຳເປັນຕ້ອງເຈລະຈາ ແລະ ສັນຍາວ່າຈະຢຸດຕິການກວດກາໜັງສືພິມ, ປັບປຸງລັດຖະທຳມະນູນ, ປະຕິຍູບສະຫະພັນທະລັດ ແລະ ທ້ອນໂຮມສະພາສະຫາພັນທະລັດໃນວັນທີ 2 ເມສາ. ມາໃນວັນທີ 18 ມີນາ. ມາໃນວັນທີ 18 ມີນາ ເຈົ້າຊີວິດໄດ້ທຳພິທີປະກາດໃຫ້ສັດຕະຍະບັນຕໍ່ກັບສັນຍາທີ່ມີໄວ້ໃນເມື່ອກ່ອນຕໍ່ໜ້າພະລາດຊະວັງ. ໃນຕອນເຊົ້າຂອງວັນທີ 18 ມີນາ ປະຊາຊົນທັງໝົດໄດ້ພາກັນຫຼັ່ງໄຫຼເຂົ້າໄປເຕົ້າໂຮມກັນຢູ່ຕໍ່ໜ້າພະລາດຊະວັງ. ຈົນມາຮອດເວລາ 2 ໂມງຕອນແລງຂອງມື້ດຽວກັນນັ້ນກະສັດຈິ່ງໄດ້ປະກາດໂຄງການປະຕິຮູບ ແຕ່ປະຊາຊົນບໍ່ພໍໃຈເພາະວ່ານະໂຍບາຍຂອງພວກເຂົາຮຽກຮ້ອງໃຫ້ກຳລັງທະຫານຕ້ອງຖອນກຳລັງອອກຈາກນະຄອນຫຼວງແມ່ນບໍ່ໄດ້ຮັບການປະຕິບັດ. ເວລາທີ່ມີຜູ້ເຂົ້າຮ່ວມປະທ້ວງຮ້ອງໂຮວ່າ ທະຫານຈົ່ງອອກໄປ, ປາຍປືນຈຳນວນຫຼວງຫຼາຍຫັນຫັນມາຍິງສຸມໃຈກຳລັງມວນຊົນ ເຮັດໃຫ້ປະຊາຊົນລຸກຂຶ້ນຕໍ່ສູ້ທັນທີ. ຂະບວນລຸກຂຶ້ນປະທ້ວງທັງໝົດລ້ວນແຕ່ຫັນມາຈັບອາວຸດລຸກຂຶ້ນຕໍ່ສູ້, ເຮັດສົງຄາມສູ້ກັບທະຫານຈຳນວນ 14.250 ຄົນ ທີ່ມີປືນໃຫຍ່ຈຳນວນ 36 ກະບອກ. ຂະບວນການຕໍ່ສູ້ແກ່ຍາວເວລາ 14 ຊົ່ວໂມງກຳລັງທະຫານທີ່ມີທ່າອ່ຽງມາທາງປະຊາຊົນບໍ່ປະຕິບັດຕາມຄຳສັ່ງຂອງຜູ້ບັນຊາການທະຫານໂດຍການບໍ່ຍິງປືນໃສ່ຝູງຊົນ. ບັງຄັບໃຫ້ກະສັດຕ້ອງສັ່ງໃຫ້ທະຫານຖອນກຳລັງອອກຈາກເບີລິນ. ຂະບວນການປະຕິວັດເດືອນມີນາຢູ່ເບີລິນໄດ້ສະແດງໃຫ້ເຫັນຄວາມເຂັ້ມແຂງຂອງຊົນຊັ້ນກຳມະກອນ. ຍ້ອນໄຊຊະນະຂອງການປະຕິວັດບັງຄັບໃຫ້ເຈົ້າຊີວິດຍອມສ້າງຕັ້ງຄະນະມົນຕີເສລີນາຍທຶນຂຶ້ນ ນຳພາໂດຍ ນາຍົກລັດຖະມົນຕີ ກຳຮົວແດນ ອະດີດຜູ້ນຳຂອງນາຍທຶນ

ເສລີເຂກແມ່ນ້ຳແຮັງ ແລະ ແຮນເດມານ ເຈົ້າຂອງໂຮງງານໄດ້ຖືກແຕ່ງຕັ້ງເປັນລັດຖະມົນຕີກະຊວງການເງິນ. ຍ້ອນແນວນັ້ນຈິ່ງເຮັດໃຫ້ນາຍທຶນເສລີມີບົດບາດສຳຄັນໃນຄະນະມົນຕີນັ້ນ. ແຕ່ພວກເຂົາຍັງຮັກສາອົງການຈັດຕັ້ງຕຳຫຼວດໄວ້ຄືເກົ່າ. ສ່ວນທະຫານຍັງຕົກຢູ່ໃນກຳມືຂອງພວກຂຸນນາງເຈົ້າທີ່ດິນ. ບໍ່ມີກອງທັບໃດ ຫຼື ອົງການຈັດຕັ້ງເກົ່າໃດຖືກຍຸບເລີກ ຫຼື ລົບລ້າງໄປ. ຢູ່ຕາມລາດຊະອະນາຈັກຕ່າງໆ ຂຸນນາງເຈົ້າທີ່ດິນຍັງກຳອຳນາດການປົກຄອງໄວ້. ຄວາມຕ້ອງການສ້າງຕັ້ງກຳລັງປະກອບອາວຸດຂອງປະຊາຊົນບໍ່ພຽງແຕ່ບໍ່ໄດ້ຮັບການປະຕິບັດເທົ່ານັ້ນ ແຕ່ຊົນຊັ້ນນາຍທຶນເສລີຍັງມີຄວາມເປັນເອກກະພາບເຫັນດີນາກະສັດຄືບໍ່ຕອບສະໜອງຄວາມຕ້ອງການຂອງຊົນຊັ້ນກຳມະກອນ. ກ່ຽວກັບໜ້າທີ່ຈຂອງຄະນະມົນຕີ ກຳຮົວແດນ ປະກາດອອກມາວ່າ: ພວກເຮົາແມ່ນຜູ້ປົກປ້ອງລາດຊະອານາຈັກ.

**3. ກອງປະຊຸມໃຫຍ່ ຟຣັງຟົວ ແລະ ໄລຍະອ່ອນເພຍຂອງການປະຕິວັດ**

ວັນທີ 18 ພຶດສະພາ 1848 ກອງປະຊຸມໃຫຍ່ທົ່ວປະເທດເຢຍລະມັນໄດ້ຮັບການໄຂຂຶ້ນຄັ້ງທຳອິດທີ່ຟຣັງຟົວ (ບໍລະເວນແມ່ນ້ຳ ມາຍເນີ) ການປ່ອນບັດເລືອກຕັ້ງເກີດຂຶ້ນໃນວັນທີ 2 ເມສາ ເຊິ່ງຂັດກັບຄວາມຕ້ອງການຂອງກຳລັງມວນຊົນ, ບໍ່ມີຕົວແທນຂອງຊົນຊັ້ນກຳມະກອນ ແລະ ມີພຽງຕົວແທນດຽວຂອງຊົນຊັ້ນຊາວນາ. ນາຍທຶນເສລີກວມບ່ອນນັ່ງຫຼາຍກວ່າໝູ່. ປະຊາຊົນທຸກຄົນຫຼັ່ງໄຫຼເຂົ້າໄປ ຟຣັງຟົວເພື່ອລໍຖ້ອຍຢ່າງມີຄວາມຫວັງ. ແຕ່ລະຕົວເມືອງໃຫຍ່ລ້ວນແຕ່ມີຂະບວນການລຸກຂຶ້ນປະທ້ວງເພື່ອຮຽກຮ້ອງໃຫ້ສ້າງຕັ້ງເຢຍລະມັນເປັນປະເທດສາທາລະນະລັດເສລີ ປະຊາທິປະໄຕ ແລະ ມີຄວາມເປັນເອກະພາບທົ່ວປະເທດ. ຂະບວນການຕໍ່ສູ້ທີ່ກ່າວມາຂ້າງເທິງນັບທັງຂະບວນການປະຕິວັດເດືອນມີນາລ້ວນແຕ່ເກີດຂຶ້ນໃນທ້ອງຖິ່ນຜລາວ ແຕ່ຂະບວນການລຸກຂຶ້ນປະທ້ວງຄັ້ງນີ້ເປັນການລຸກຮື້ຂຶ້ນປະທ້ວງທົ່ວປະເທດ.

ຂະບວນການປົດປ່ອຍໃນເດືອນມິຖຸນາ ຢູ່ນະຄອນຫຼວງປາຣີ ໄດ້ຮັບການປາຣາໄຊເຮັດໃຫ້ພວກສັກດີນາຕໍ່ຕ້ານເຢຍລະມັນປ່ຽນມາຢູ່ໃນທ່າບຸກໂຈມຕີແທນ.

ຂະບອຍການຕໍ່ສູ້ຢູ່ ກຸງວຽກຖືກປາຣາໄຊລົງໄດ້ອຳວຍຄວາມສະດວກໃຫ້ແກ່ພວກຂຸນນາງຕ້ານການປະຕິວັດ. ເຫດການດັ່ງກ່າວນັ້ນສົ່ງຜົນສະທ້ອນຕໍ່ກັບຂະບວນການບຸກໂຈມຕີຂອງພວກຕໍ່ຕ້ານການປະຕິວັດຢູ່ເຢຍລະມັນ.

ວັນທີ 20 ມິຖຸນາ ຄະນະມົນຕີ ກຳຮົວແດນ ຖືກໂຄ່ນລົ້ມ. ເດືອນກັນຍາ ຮານເດມານ ຖືກຍົບເລີກ. ກະສັດໄດ້ສ້າງຕັ້ງຄະນະມົນຕີປະກອບມີຂ້າລາດຊະການ ແລະ ທະຫານທີ່ມີນາຍພົນ ເປີແຟນ ຜູ້ທີ່ທຳການເຂັ່ນຂ້າຜູ້ຄົນໃນຂະບວນການຕໍ່ສູ້ເພື່ອປົດປ່ອຍປະຊາຊົນບັນດາເຜົ່າຢູ່ ໂປແລນ ຖືກແຕ່ງຕັ້ງເປັນນາຍົກລັດຖະມົນຕີ.ໃນເວລາດຽວກັນນີ້ທະຫານຈຳນວນ 50.000 ໄດ້ຮັບຄຳສັ່ງໃຫ້ເຕົ້າໂຮມກັນຢູ່ ເບີລິນ . ຂະບວນການຕໍ່ສູ້ຂອງກຳລັງທະຫານກັບພວກກຳມະກອນ, ຊາວນາ ແລະ ນາຍຊ່າງເກີດຂຶ້ນທົ່ວທຸກບ່ອນ. ເມື່ອຂ່າວການປາຣາໄຊຂອງຂະບວນການປະຕິວັດເດືອນ ຕຸລາ ຢູ່ວຽນລານ ຮອດເບີລິນ ເຈົ້າຊີວິດໄດ້ທພການຂັບໄລລັດຖະມົນຕີກະຊວງການຕ່າງໆ, ໂຄ່ນລົ້ມສະພາແຫ່ງຊາດປຣັດເຊຍເພື່ອສ້າງຕັ້ງລະບອບການປົກຄອງເກົ່າຂຶ້ນ. ສ້າງຕັ້ງຄະນະມົນຕີຂຶ້ນໂດຍມີ ບຣານແດນບົວ ແລະ ມານທອຍແຟນເປັນຫົວໜ້າ.

ວັນທີ 5 ທັນວາ ກະສັດໄດ້ອອກຄຳສັ່ງໃຫ່ໂຄ່ນລົ້ມສະພາແຫ່ງຊາດເບີລິນ ພ້ອມດຽວກັນນັ້ນກໍ່ປະກາດລັດຖະທຳມະນູນ ຕາມລະບອບທີ ມີ2 ສະພາ ໃນລັດຖະທຳມະນູນສະບັບນີ້ທັງໝົດແມ່ນເພື່ອສິດຜົນປະໂຫຍດ

ຂອງກະສັດ. ເປີດກວ້າງສິດອຳນາດຂອງພວກຂຸນນາງເຈົ້າທີ່ດິນ. ຍ້ອນແນວນັ້ນພວກຕໍ່ຕ້ານຈິ່ງເອົາຊະນະການປະຕິວັດຍ້ອນການທຳລະຍົດຂອງພວກຊົນຊັ້ນນາຍທຶນ.

**4. ຂະບວນການຫາສຽງຕາມລັດຖະທຳມະນູນຂອງຈັກກາພັດ (ລະດູໃບໄມ້ປົ່ງ 1849)**

ບັນຫາພື້ນຖານຂອງການປະຕິວັດເຢຍລະມັນແມ່ນການທ້ອນໂຮມແຜ່ນດິນໃຫ້ເປັນເອກະພາບແມ່ນຍັງບໍ່ທັນໄດ້ຮັບການແກ້ໄຂ. ວັນທີ28 ມີນາ 1849 ສະພາ ຟຣັງຟົວ ໄດ້ປະກາດລັດຖະທຳມະນູນທີ່ພວກເຂົາໄດ້ສົນທະນາ ແລະ ຖົກຖຽງກັນມາເປັນເວລາດົນນານ. ລັດຖະທຳມະນູນແມ່ນຕອບສະໜອງສິດຜົນປະໂຫຍດຂອງພວກນາຍທຶນໃຫຍ່ ແລະ ບໍ່ມີຂໍ້ໃດທີ່ເອົ້າເຖິງອິດສະຫຼະພາບຂອງພວກນາຍທຶນເສລີ. ຕາມລັດຖະທຳມະນູນນັ້ນໄດ້ກຳນົດວ່າປະເທດເຢຍລະມັນຕ້ອງທ້ອນໂຮມຄວາມເປັນເອກະພາບເປັນອັນໜຶ່ງອັນດຽວກັນພາຍໃນບັນດາລາດຊະອານາຈັກ. , ສ້າງຕັ້ງລັດຖະບານສະຫະພັນທະລັດຂຶ້ນຕາມລະບອບລາຊາທິປະໄຕໃຕ້ລັດຖະທຳມະນູນທີ່ມີກະສັດເປັນປະມຸກລັດ. ການຂຶ້ນຄອງລາດຊະບັນລັງແມ່ນຖ່າຍທອດກັນຈາກພໍ່ສູ່ລູກ. ບັນດາລາດຊະອານາຈັກຕ່າງໆຍັງຮັກສາສິດອຳນາດຂອງຕົນໄວ້. ສະພາຈັກກະພັດປະກອບມີ2 ສະພາຄື: ໜຶ່ງແມ່ນສະພາລັດຖະບານ ແລະ ອີກສະພາໜຶ່ງແມ່ນສະພາຜູ້ແທນລາດຊະດອນເຊິ່ງໄດ້ຈາກການປ່ອນບັດເລືອກຕັ້ງ. ທຸກສຸດອຳນາດທັງໝົດຂອງພວກຂຸນນາງແມ່ນຖືກປະກາດລົບລ້າງສິດເສລີພາບນາຍທຶນເຊັ່ນ: ສິດໃນການປາກເວົ້າແລກປ່ຽນຄວາມຄິດເຫັນ, ເສລີພາບທາງດ້ານໜັງສືພິມ, ການໂຮມຊຸມນຸມຖືກປະກາດໃຊ້ແຕ່ວ່າບັນດາສິດທັງໝົດນັ້ນບໍ່ມີຫຍັງຮັບປະກັນທັງນັ້ນ, ສິດໃນການຄອບຄອງຊັບສິນບໍ່ໄດ້ມີການລ່ວງລະເມີດ. ເບິ່ງລວມແລ້ວ ລັດຖະທຳມະນູນໄດ້ພາໃຫ້ເກີດມີຂໍ້ຂັດແຍ່ງລະຫວ່າງພວກລາຊາທິປະໄຕສັກດີນາ ກັບພວກນາຍທຶນເສລີ ແລະ ນາຍທຶນປະຊາທິປະໄຕ. ເບິ່ງລວມແລ້ວເຖິງວ່າລັດຖະທຳມະນູນຍັງມີຂໍ້ຂາດຕົກບົກຜ່ອງຫຼາຍແຕ່ສຳລັບປະເທດສັກດີນາເຢຍລະມັນທີ່ແບ່ງອອກເປັນຫຼາຍອະນາຈັກແລ້ວຖືວ່າມັນເປັນບາດກ້າວໜຶ່ງທີ່ມີຄວາມກ້າວໜ້າຖືວ່າເປັນບາດກ້າວທຳອິດແຫ່ງຄວາມເປັນເອກະພາບແຫ່ງຊາດ.

ທັດສະນະຄະຕິຂອງແຕ່ລາດຊະອານາຈັກທີ່ມີຕໍ່ລັດຖະທຳມະນູນມີລັກສະນະແຕກຕ່າງກັນອອກໄປ ບາງອານາຈັກນ້ອຍຈຳນວນໜຶ່ງກໍ່ຍອມຮັບລັດຖະທຳມະນູນ. ສ່ວນອານາຈັກທີ່ໃຫຍ່ແບບປຣັດເຊຍ, ບາເຢິນ, ຮາໂນເວີ ແລະ ຢັກແຢນແມ່ນຕໍ່ຕ້ານບໍ່ຍອມຮັບລັດຖະທຳມະນູນສະບັບນີ້. ກະສັດປຣັດເຊຍມີແນວຄິດອ່ຽງເອນໄປຫາບັນດາອານາຈັກໃຫຍ່ເພື່ອລວບລວມຕຳແໜ່ງຜູ້ນຳຂອງຕົນໃນຈັກກະພັດ. ຖອດຖອນບັນດາຜູ້ແທນທີ່ມີລັກສະນະອະນຸລັກທີ່ໃຫ້ການຊ່ວຍເຫຼືອແກ່ກະສັດອອກຈາກສະພາ ຟຣັງຟົວ. ໃນສະພາມີສະມາຊິກພຽງແຕ່ 150 ທ່ານໃນຈຳນວນ 831 ທ່ານ. ສະນັ້ນມັນຈິ່ງບໍ່ພຽງພໍກັບຕຳແໜ່ງຫຼື ຕົວແທນໃນສະພາ. ແຕ່ນັ້ນມາໄດ້ມີຂະບວນການຕໍ່ສູ້ແນໃສ່ເພື່ອປົກປ້ອງລັດຖະທຳມະນູນໃນເດືອນພຶກສະພາ 1849.

ຂະບວນການປະຕິວັດເລີ່ມຂຶ້ນທີ່ ແດກແດນ ທີ່ເປັນນະຄອນຫຼວງຂອງລາດຊະອານາຈັກຢັກແຢນໃນວັນທີ 3 ພຶດສະພາ ເປັນຊ່ວງທີ່ກະສັດບໍ່ຍອມຮັບລັດຖະທຳມະນູນ ຕໍ່ມາຂະບວນລຸກຮື້ຂຶ້ນຕໍ່ສູ້ກໍ່ແຜ່ລາມໄປທົ່ວທຸກບ່ອນ. ຢູ່ ຣາຍແລນ, ແວດພາແລນ, ເບເຢີນ, ບາແດນ ແລະ ອື່ນໆສຸດທ້າຍແມ່ນສິ້ນສຸດລົງທີ່ຣາດຕາດໃນວັນທີ 23 ກໍລະກົດ 1849.

ຂະບວນການປະຕິວັດຢູ່ ບາແລນ ກວມອະນາເຂດກວ້າງຂວາງ ທີ່ດຶງເອົາກອງທັບປະຊາຊົນ, ນາຍຊ່າງນາຍທຶນເສລີ ແລະ ກຳລັງທະຫານແຫ່ງຊາດ 20 ພັນຄົນ. ກຳລັງພົນທຸກຂົງເຂດລວມຕົວກັນ ແລະ ຖືດສິ່ງໄປ ບາແດນ ເພື່ອສະໜັບສະໜູນຂະບວນການປະຕິວັດ ເຖິງແມ່ນວ່າທຳອິດທະຫານປົດປ່ອຍ ແລະກອງທັບປະຊາຊົນ

ດຳເນີນການຕໍ່ສູ້ຢ່າງອົງອາດກ້າຫານ. ລວບລວມກຳລັງພົນ 13.000 ຄົນເພື່ອດຳເນີນການຕໍ່ສູ້ 2 ວັນລຽນຕິດຕ້ານກັບກຳລັງທະຫານທີ່ມີຄວາມແກ່ນແກ່ນກວ່າ 6 ເທົ່າ ຂະບວນການປະຕິວັດຈຶ່ງພັງທະລາຍລົງ.

ສະພາຟຣັງຟົວໝົດອຳນາດລົງ ແລະ ການປາຣາໄຊຂອງການປະຕິວັດເຮັດໃຫ້ສະພາແຫ່ງຊາດຫຼົ້ມສະຫຼາຍລົງຢ່າງງ່າຍດາຍ. ພາຍຫຼັງປາບປາມຂະບວນການປະຕິວັດ ສານທະຫານໄດ້ດຳເນີນການເຄື່ອນໄຫວທົ່ວທຸກບ່ອນ. ການຈັບຄຸມຄຸມຂັງທີ່ບໍ່ຜ່ານການຕັດສິນຄະດີຖືວ່າເປັນເລື່ອງປົກກະຕິທີ່ເກີດຂຶ້ນໃນເວລານັ້ນ.

ການປາຣາໄຊຂອງຂະບວນການປະຕິວັດ ຢູ່ພາກຕາເວັນຕົກສ່ຽງເໜືອ ຂອງປະເທດເຢຍລະມັນ ແລະ ການໂຄ່ນລົ້ມສະພາແຫ່ງຊາດເຢຍລະມັນເຮັດໃຫ້ການປະຕິວັດທຳອິດຢູ່ເຢຍລະມັນສິ້ນສຸດລົງ. ບັນຫາພື້ນຖານຂອງການປະຕິວັດເຢຍລະມັນຄືການທ້ອນໂຮມປະເທດໃຫ້ມີຄວາມເປັນເອກະພາບແມ່ນຍັງບໍ່ທັນໄດ້ຮັບການແກ້ໄຂ.

## III.ຂະບວນການຕໍ່ສູ້ເພື່ອຄວາມເປັນເອກະພາບຂອງເຢຍລະມັນ

### 1. ສະພາບການຂະຫຍາຍຕົວທາງດ້ານເສດຖະກິດລັດທິທຶນນິຍົມ ແລະ ຄວາມສາມາດໃນການທ້ອນໂຮມຄວາມເປັນເອກະພາບໃນປະເທດເຢຍລະມັນ.

ພາຍຫຼັງການປະຕິວັດ ປີ 1848 ພື້ນຖານອຸດສະຫະກຳເຢຍລະມັນມີການຂະຫຍາຍຕົວຢ່າງໄວວາ. ນັບແຕ່ປີ 1849 ຫາປີ 1859 ເສດຖະກິດທຶນນິຍົມຂອງເຢຍລະມັນຂະຫຍາຍຕົວຢ່າງແຂງແຮງແມ່ນຍັງບໍ່ທັນມີໃຫ້ເຫັນ. ສາມາດເວົ້າໄດ້ວ່າປະເທດເຢຍລະມັນໃນໄລຍະນີ້ແມ່ນໄລຍະຫັນປ່ຽນຈາກປະເທດກະສິກຳມາເປັນປະເທດອຸດສະຫະກຳ. ທຳອິດແມ່ນບໍ່ສາມາດເອົາຊະນະກ່ຽວກັບຄວາມກ້າວໜ້າ ແລະ ຄວາມທັນສະໄໝຂອງປະເທດອັງກິດ ແລະ ຝຣັ່ງ. ແຕ່ວ່າລະດັບການຜະລິດຂອງປະເທດເຢຍລະມັນໃນຊ່ວງ 20 ປີເຫັນວ່າມີຫຼາຍກວ່າຜົນຜະລິດທີ່ຜະລິດທັງໝົດໃນສະຕະວັດກ່ອນ. ຍົກເວັ້ນພາກຕາເວັນອອກສ່ຽງເໜືອພື້ນຖານເສດຖະກິດຍັງແມ່ນກະສິກຳຂອງພວກເຈົ້າທີ່ດິນ ແຕ່ທັງໝົດປະເທດເຢຍລະມັນພວມກ້າວເຂົ້າສູ່ການປະຕິວັດອຸດສະຫະກຳ.

ຜະລິດຕະພັນຈາກຖ່ານຫີນ, ເຫຼັກກ້າ, ເຫຼັກແຕ່ປີ 1850- 1860 ເພີ່ມຂຶ້ນຫຼາຍກວ່າເທົ່າຕົວ. ປະລິມານການລົດຍົນທີ່ແລ່ນດ້ວຍອາຍນ້ຳແຕ່ປີ 1846-1861 ເພື່ອຂຶ້ນເກືອບ 6 ເທົ່າ. ປີ 1850 ກຳລັງການຜະລິດລົດຍົນທີ່ແລ້ນດ້ວຍເຄື່ອງຈັກອາຍນ້ຳໃນຂະແໜງອຸດສະຫະກຳເຢຍລະມັນແມ່ນ 0,26 ລ້ານແຮງມ້າ. ຮອດປີ 1879 ເພີ່ມຂຶ້ນເຖິງ 2,48 ລ້ານແຮງມ້າ. ປີ 1850 ເສັ້ນທາງລົດໄຟມີຄວາມຍາວ 5.836 ກິໂລແມັດ ແລະ 10 ປີ ຕໍ່ມາເພີ່ມຂຶ້ນເກືອບເຄິ່ງໜຶ່ງ, ທະນາຄານໄດ້ເກີດຂຶ້ນລຽນຕິດ.

ຍ້ອນໝາກຜົນແຫ່ງການຂະຫຍາຍຕົວຂອງອຸດສະຫະກຳຈຳນວນກຳມະກອນຈຶ່ງເພີ່ມຂຶ້ນຢ່າງໄວວາ, ປີ 1849 ຢູເບີລິນມີກຳມະກອນ 50.000ຄົນ ຮອດປີ 1859 ໄດ້ເພີ່ມຂຶ້ນເປັນ 180.000 ຄົນ ກຸງເບີລິນໄດ້ກາຍເປັນສູນກາງການຜະລິດເຄື່ອງກົນຈັກ.

ໃນໂຮງງານງານຜະລິດອາວຸດຂອງບໍລິສັດ ກຣຸບ ໃນປີ 1845 ມີກຳມະກອນ 122 ຄົນ ຮອດປີ 1870 ກຳມະກອນເພີ່ມຂຶ້ນເປັນ 16.000 ຄົນ.

ໃນເບື້ອງຕົ້ນອຸດສະຫະກຳຂະຫຍາຍຕົວຢ່າງໄວວາ, ຂະແໜງຫັດຖະກຳຍັງມີໃຫ້ເຫັນຢ່າງກວ້າງຂວາງ, ການຄົງຕົວຂອງອຸດສະຫະກຳໃນຄອບຄົວຍັງມີໃຫ້ເຫັນຢ່າງຫຼວງຫຼາຍ.

17ຄົນ ໃນຈຳນວນ 16 ລ້ານຄົນແມ່ນຍັງດຳລົງຊີວິດໃນເຂດຊົນນະບົດ, ມີພຽງ 12 ເມືອງຈາກຈຳນວນ 984 ຕົວເມືອງທີ່ມີປະຊາກອນຫຼາຍກວ່າ 100.000 ຄົນ ແຕ່ໃນນັ້ນອັດຕາຜູ້ທີ່ເຮັດວຽກໃນອຸດສະຫະກຳມີພຽງແຕ່ 10-20% ເທົ່ານັ້ນ.

ມີອີກບັນຫາໜຶ່ງທີ່ການປະຕິວັດບໍ່ທັນໄດ້ແກ້ໄຂ ນັ້ນກໍ່ຄືບັນຫາຂອງຊາວກະສິກຳ ລັດຖະບານໄດ້ປະກາດກົດໝາຍ ການແກ້ໄຂການພົວພັນລະຫວ່າງຂຸນນາງເຈົ້າທີ່ດິນກັບຊາວນາ (ເດືອນມີນາ 1850) ແມ່ນລົບລ້າງ ປະມານ 20 ພັນທະຕໍ່ສັກດີນາເຊິ່ງຄວາມຈິ່ງແມ່ນບໍ່ໄດ້ຄົງຕົວມາດົນນານແລ້ວ. ແຕ່ໃນຄວາມເປັນຈິງພັນທະຕໍ່ລະບອບສັກດີນາແມ່ນຍັງຄົງຮັກສາໄວ້ຢູ່. ປະຊາຊົນຕ້ອງໄດ້ເສຍເງິນຈຳນວນຫຼວງຫຼາຍຈິ່ງສາມາດປົດປ່ອຍຕົນເອງອອກຈາກການເປັນທາດດິນນາ ແລະ ພັນທະອື່ນໆຕໍ່ກັບລະບອບສັກດີນາ. ປີ 1851 ໄດ້ມີການປະກາດກົດລະບຽບກ່ຽວກັບເງິນຄ່າແຮງງານໃນຂະແໜງກະສິກຳ. ກົດໝາຍວ່າດ້ວຍການຈັບທາດດິນນາເຂົ້າຄຸກຈຳນວນມີຈຸດປະສົງເພື່ອໂຈມຕີ. ພວກຂຸນນາງເຈົ້າທີ່ດິນມີກຳລັງທະຫານ ແລະ ຕຳຫຼວດເປັນຂອງຕົນເອງ. ມີສິດສາມາດອອກຄຳສັ່ງໃຫ້ຈັບກຸມຄຸມຂັງຊາວນາ ຫຼື ຊຸຊາວກະສິກອນຄົນໃດກໍ່ໄດ້. ຍ້ອນຕ້ອງມອບເງິນໄຖ່ຕົນເອງສຳລັບກຳມະກອນທີ່ຫຼົ້ມລະລາຍ ເຮັດໃຫ້ພົບຄວາມທຸກຍາກລຳບາກລົງ. ພວກຂຸນນາງເຈົ້າທີ່ດິນຍັງໄດ້ສວຍໂອກາດນຳໃຊ້ກົດໝາຍນັ້ນເພື່ອສ້າງຮັ່ງຄູນມີໃຫ້ແກ່ພວກເຂົາຫຼັງປີ 1850 ລາຄາແປ້ງເຂົ້າຈີ່ເພີ່ມຂຶ້ນສູງຍ້ອນການຂະຫຍາຍຕົວໄວວາຂອງອຸດສະຫະກຳ ແລະ ຕົວເມືອງໃຫຍ່ ເຮັດໃຫ້ເຈົ້າທີ່ດິນຂອງຕົນປ່ຽນໄປດຳເນີນທຸລະກິດຕາມແບລັດທິທຶນນິຍົມ, ມີການນຳໃຊ້ເຄື່ອງກົນຈັກ, ຈ້າງແຮງງານ. ຊຸກຍູ້ໃຫ້ມີການຟື້ນຕົວ ແລະ ອື່ນໆ. ບາງເຈົ້າທີ່ດິນມີໂຮງບົດແປ້ງທີ່ແລາ່ນດ້ວຍເຄື່ອງຈັກອາຍນ້ຳ, ມີໂຮງງານຜະລິດເຫຼົ້າວາຍ... ເຈົ້າທີ່ດິນບາງຄົນກໍ່ກາຍເປັນເຈົ້າຂອງໂຮງງານຫຼອມໂລຫະ, ຫຼອມເຫຼັກ. ວິທີການດຳເນີນທຸລະກິດໃໝ່ໄດ້ເຮັດໃຫ້ເກີດມີພວກຂຸນນາງນາຍທຶນ ເອີ້ນວ່າພວກ ຊອງແກ.

ນັ້ນແມ່ນເສັ້ນທາງການຂະຫຍາຍຕົວຂອງລັດທິທຶນນິຍົມໃນຂະແໜງກະສິກຳຂອງປຣັດເຊຍ: ໃນຂະນະທີ່ກຳລັງຫັນກະສິກຳໄປຕາມທິດສະດີລັດທິທຶນນິຍົມນັ້ນພວກເຂົາຍັງຄົງຮັກສາຮູບແບບການຂູດຮີດຕາມລະບອບສັກດີນາໄວ້. ເລນິນຖືເຫດການນີ້ວ່າ: ແມ່ນເສັ້ນທາງໄປສູ່ທຶນນິຍົມຕາມແບບຂອງປຣັດເຊຍ.

ການຂະຫຍາຍຕົວທາງດ້ານອຸດສະຫະກຳ -ການຄ້າ ແລະ ລັດທິທຶນນິຍົມໃນຂະແໜງກະສິກຳພົບອຸປະສັກໃຫຍ່ຫຼວງນັ້ນກໍ່ຄືຄວາມບໍ່ເປັນເອກະພາບ ແລະ ການຈຳແນກພາຍໃນປະເທດເຢຍລະມັນ. ການທ້ອນໂຮມແຜນດິນເຢຍລະມັນໃຫ້ເປັນເອກະພາບ ເປັນບັນຫາໃຈກາງສຳຄັນ ແລະ ຮຽກຮ້ອງໃຫ້ມີການແກ່ໄຂຢ່າງຮີບດ່ວນ.




ແຜນທີ່ສະຫະພັນທະລັດ ເຢຍລະມັນ

ຍ້ອນແນວນັ້ນ, ບັນຫາພື້ນຖານຂອງການຂະຫຍາຍຕົວລັດທິທຶນນິຍົມຢູ່ເຢຍລະມັນແມ່ນບັນຫາຕະຫຼາດຈຳໜ່າຍສິນຄ້າຂອງປະຊາຊົນບັນດາເຜົ່າ, ນັ້ນກໍ່ຄືບັນຫາທ້ອນໂຮມປະເທດໃຫ້ມີຄວາມເປັນເອກະພາບອັນໜຶ່ງອັນດຽວກັນໃນທົ່ວປະເທດ. ວຽກທ້ອນໂຮມປະເທດໃຫ້ມີຄວາມເປັນເອກະພາບສາມາດເຮັດໄດ້ຜ່ານ2 ເສັ້ນທາງທີ່ມີຄວາມແຕກຕ່າງກັນຢ່າງສິ້ນເຊີງ ວິທີທີໜຶ່ງແມ່ນການເຮັດການປະຕິວັດທີ່ມີຊົນຊັ້ນກຳມະຊີບເປັນຜູ້ນຳພາ, ສ້າງຕັ້ງເປັນປະເທດສາທາລະນະລັດທີ່ປະກອບມີບັນດາອານາຈັກຕ່າງໆຂອງເຢຍຍລະມັນ ຫຼື ວິທີທີສອງແມ່ນການເຮັດສົງຄາມຂອງລາດຊະອານາຈັກປຣັດເຊຍ, ເພີ່ມທະວີສິດອຳນາດຂອງຂຸນນາງປຣັດເຊຍໃນປະເທດເອກະພາບເຢຍລະມັນ.

ປີ 1848-1871 ເປັນໄລຍະຂອງສົງຄາມລະຫວ່າງ2 ເສັ້ນທາງໃນການທ້ອນໂຮມແຜ່ນດິນເຢຍລະມັນໃຫ້ເປັນເອກະພາບນັ້ນກໍ່ຄືທ້ອນໂຮມ"ແຕ່ລຸ່ມຂຶ້ນເທິງ" ແມ່ນການປະຕິວັດຂອງກຳລັງມວນຊົນ ແລະ ເສັ້ນທາງທີ່2 ແມ່ນ "ແຕ່ເທິງລົງລຸ່ມ" ແມ່ນເສັ້ນທາງການເຮັດສົງຄາມກັນຂອງບັນດາລາດຊະອານາຈັກຕ່າງໆທີ່ຕໍ່ຕ້ານການປະຕິວັດຂອງກຳລັງມວນຊົນພາຍໃຕ້ການນຳພາຂອງຂຸນນາງສັກດີນາ ຂອງແກ ແມ່ນນາຍທຶນຂຸນນາງຂໜາດກາງ. ສ່ວນກຳມະກອນເຢຍລະມັນກາຍເປັນກຳລັງຕົ້ນຕໍທີ່ແຈກຢາຍເຊິ່ງບໍ່ທັນສາມາດເປັນຜູ້ນຳໃນຂະບວນການທ້ອນໂຮມປະເທດໃຫ້ເປັນເອກະພາບໄດ້. ສອງມະຫາອຳນາດໃຫຍ່ຄື ໂອຕຣິດ ແລະ ປຣັດເຊຍ ໄດ້ກໍ່ສົງຄາມບຸກຕີເຊິ່ງກັນ ແລະ ກັນ ເພື່ອຍາດຊີງອຳນາດໃນການເປັນຜູ້ນຳໃນການປົກຄອງປະເທດເຢຍລະມັນທີ່ມີຄວາມເປັນເອກະພາບໃນໄລຍະຕໍ່ມາ.

## 2. **ໄລຍະການທ້ອນໂຮມແຜນດິນເຢຍລະມັນໃຫ້ເປັນເອກະພາບ.**

ອົດໂຕວອນ ບິສມາກ 1815-1898 ຂຶ້ນເປັນນາຍຍົກລັດຖະມົນຕີ ແລະ ລັດຖະມົນຕີກະຊວງການຕ່າງປະເທດຂອງ ປຣັດເຊຍຜູ້ທີ່ເປັນຕົວແທນຂອງແນວຄິດ ແລະ ສິດຜົນປະໂຫຍດຂອງພວກ ຊອງແກ. ດຳເນີນນະໂຍບາຍໃນການພົວພັນຢ່າງສະໜິດແໜ້ນກັບພວກຂຸນນາງເຈົ້າທີ່ດິນ ແລະ ນາຍທຶນໃຫຍ່. ບິສມາກໄດ້ໃຫ້ການສະໜັບສະໜຸນສິດອຳນາດຂອງຊົນຊັ້ນຂຸນນາງເຈົ້າທີ່ດິນເພີ່ມທະວີອຳນາດຂອງພວກລາດຊະວົງ ແລະ ພ້ອມດຽວກັນນັ້ນກໍ່ຍັງເອົາໃຈໃສ່ຕໍ່ກັບສິດຜົນປະໂຫຍດຂອງຂອງຊົນຊັ້ນນາຍທຶນ. ບິສມາດຕາມລັດທະຊົນເຜົ່າຂອງປຣັດເຊຍແມ່ນເອົາປຣັດເຊຍເປັນລັດນຳໜ້າກວ່າໝູ່ໃນບັນດາລັດຕ່າງໆໃນປະເທດເຢຍລະມັນ, ດຳເນີນການທ້ອນໂຮມກຳລັງເພື່ອຕ້ານກັບໂອຕຣິດ ແລະ ປະເທດອື່ນທີ່ຂັດຂວາງການທ້ອນໂຮມແຜ່ນດິນເຢຍລະມັນ. ທ່ານໄດ້ປະກາດອອກມາວ່າ: ຂອບເຂດຊາຍແດນຂອງປຣັດເຊຍຕາມລັດຖະສະພາກຳນົດແມ່ນຍັງບໍ່ທັນເໝາະສົມກັບການຄົງຕົວຂອງລັດຖະບານທີ່ມີຄວາມເຂັ້ມແຂງອີກຕໍ່ໄປ ແລະ ບັນຫາຂອງຍຸກສະໄໝນີ້ບໍ່ສາມາດແກ້ໄຂດ້ວຍການເຮັດເອກະສານທາງການ ຫຼື ການລົງຄະແນນສຽງນັ້ນເປັນຈິ່ງທີ່ຜິດພາດທີ່ສຸດໃນຊຸມປີ 1848-1849. ມັນໄດ້ແກ້ໄຂດ້ວຍວິທີການຈັບອາວຸດ ແລະ ສະຫຼະເລືອດເນື້ອ ເຮັດໃຫ້ ບິສມາກກາຍມາເປັນຜູ້ນຳຕົ້ນຕໍ່ໃນການເຮັດສົງຄາມ.



ອົດໂຕວອນ ບິສມາກ **Otto von Bismarck** 1815-1898 ນາຍຍົກລັດຖະມົນຕີຂອງ ປຣັດຊຍ

**ບັນດາສົງຄາມສູ້ຮົບກັນລະຫວ່າງບັນດາອານາຈັກຕ່າງໆໃນເຢຍລະມັນ**

ສົງຄາມຕ້ານການຮຸກຮານຂອງເດັນມາກ ໃນປີ 1864 ບິສມາກ ໄດ້ເປີດບັ້ນຮົບເຮັດສົງຄາມກັບເດັນມາກ ເພື່ອຍຶດຄອງ ເຊີເລັກວິດຈ໌ ແລະ ໂຮນຕາຍເນີ. ຢູ່ສະໜາມຮົບທີ ໂຮນຕາຍເນີ ມີພຽງແຕ່ຊາວເຢຍລະມັນ ແລະ ຂຶ້ນກັບສະຫະພັນທະລັດເຢຍລະມັນ ສ່ວນຢູ່ເຊີເລັດວິດຈ໌ ເຖິງວ່າຈະມີຄົນເຢຍລະມັນອາໄສຢູ່ກໍ່ຕາມແຕ່ຄົນຈຳນວນຫຼາຍແມ່ນພວກເດັນມາກ. ປີ 1863 ເດັນທາກຕັດສິນໃຈບຸກຍຶດເອົາ ເຊີເລັດວິດຈ໌ ມາຂຶ້ນກັບເດັນມາກ ສິ່ງດັ່ງກ່າວນັ້ນເຮັດໃຫ້ປຊາຊົນບັນດາເຜົ່າຂອງເຢຍລະມັນເກີດຄວາມບໍ່ພໍໃຈ. ບິດສມາໂສຍໂອກາດດັ່ງກ່າວນັ້ນຈຶ່ງດຶງເອົາໂອຕຣິດເຂົ້າຮ່ວມສົງຄາມເພື່ອຕໍ່ຕ້ານກັບເດັນມາກ. ສົງຄາມໄດ້ລະເບີດຂຶ້ນໃນເດືອນກຸມພາ ປີ 1864 ເດັນໝາກເປັນຝ່າຍປາຣາໄຊ ຕ້ອງຍອມເຊັນສັນຍາສະຫງົບເສິກໃນວັຍທີ 30 ຕຸລາ 1864 ຍອມຍົກ ເຊີເລັກວິດຈ໌ ແລະ ໂຮນຕາຍເນີໃຫ້ປຣັດເຊຍ ແລະ ໂອຕຣິດ. ປຣັດເຊຍຍົກດິນແດນ ໂຮນຕາຍເນີ ໃຫ້ໂອຕຣິດ ສ່ວນປຣັດເຊຍແມ່ນເອົາ ເຊີເລັກວິດຈ໌ ແລະ ມີສິດໃນດິນແດນ ເຄນ ຢູ່ໂຮນຕາຍເນີ. ຍ້ອນແນວນັ້ນ, ຖ້າກຳລັງທະຫານຕ້ອງການໄປ ເຊີເລັກວິດຈ໌ ແມ່ນຕ້ອງໄດ້ຜ່ານດິນແດນ ໂຮນຕາຍເນີ ສະນັ້ນຈຶ່ງເປັນສາເຫດ ແລະ ເປັນຈຸສະນວນຂອງການເຮັດສົງຄາມກັບໂອຕຣິດ. ໃນເດືອນມິຖຸນາ 1866 ກຳລັງທະຫານຂອງປຣັດເຊຍໄດ້ຂັບໄລ ໂອຕຣິດອອກຈາກດິນແດນ ໂຮນຕາຍເນີໄດ້ສຳເລັດ.

ສົງຄາມລະຫວ່າງປຣັດເຊຍ-ໂອຕຣິດ ໃນປີ 1866. ສຳລັບໂອຕຣິດໃນສາຍຕາຂອງປຣັດເຊຍແມ່ນເປັນຄູ່ແຂ່ງທີ່ອັນຕະລາຍໃນການຍາດແຍ່ງອຳນາດໃນການເປັນຜູ້ນຳປະເທດເຢຍລະມັນ. ປຣັດເຊຍເຮັດທຸກວິທີທາງເພື່ອໃຫ້ໂອຕຣິດໂດດດ່ຽວ ແລະ ກົດດັນໃຫ້ໂອຕຣິດອອກຄຳສັ່ງໃຫ້ທະຫານຂອງຕົນ. ສົງຄາມປຣັດເຍ-ໂອຕຣິດລະເບີດຂຶ້ນເຊິ່ງທັງ2 ລັດນັ້ນລ້ວນແຕ່ມີແນວຄິດຕໍ່ຕ້ານການປະຕິວັດສົງຄາມຄັ້ງນີ້ໂອຕຣິດເປັນຝ່າຍປາຣາໄຊຕ້ອງຖອນກຳລັງອອກຈາກການເປັນສະຫະພັນທະລັດເຢຍລະມັນ (ສະພັນທະລັດສ້າຂຶ້ນແຕ່ປີ 1815) ຕ້ອງຍອມຮັບອຳນາດຂອງປຣັບເຊຍໃນການສ້າງຕັ້ງອຳນາດການປົກຄອງທາງການເມືອງໃໝ່ຂຶ້ນເອີ້ນວ່າ:"ສະຫະພັນທະລັດເຢຍລະມັນເໜືອ" ໂອຕຣິດຕ້ອງຍອມຮັບເຊີເລັດວິດຈ໌, ໂຮນຕາຍເນີ, ຄົວ, ແຮດແຊນ, ນາເຊົາ, ແລະ ຟຣັງຟືວທີ່ຢູ່ເບື້ອງແມ່ນ້ຳມາຍເນີແມ່ນຂຶ້ນກັບດິນແດນຂອງປຣັດເຊຍ.

ຍ້ອນການເຮັດສົງຄາມລະຫວ່າງປຣັດເຊຍ ແລະ ໂອຕຣິດຈຶ່ງຖືວ່າ ບິດສມາກນຳໃຊ້ວິທີການທ້ອນໂຮມແຜ່ນດິນດ້ວຍວິທີການ "ແຕ່ເທິງລົງລຸ່ມ", ດ້ວຍການດຳເນີນສົງຄາມບຸກຕີເອົາອານາຈັກອື່ນເພື່ອດຳເນີນການທ້ອນໂຮມແຜ່ນດິນເຊິ່ງເປັນວິທີທີ່ຕໍ່ຕ້ານການປະຕິວັດ.

ການກຳເນີດສະຫະພັນທະລັດເຢຍລະມັນເໜືອໃນປີ 1867 ແມ່ນໝາກຜົນຂອງການເຮັດສົງຄາມລະຫວ່າໂອຕຣິດ ແລະ ປຣັດເຊຍ, ແມ່ນ ບິດສມາກເປັນຄົນສ້າງຕັ້ງສະຫະພັນທະລັດເຢຍລະມັນເໜືອໃນປີ 1867 ພາຍໃຕ້ການນຳພາຂອງປຣັດເຊຍທີ່ປະກອບມີ 18 ປະເທດທີ່ຢູ່ທາງພາກເໜືອຂອງເຢຍລະມັນ ແລະ 3 ນະຄອນໃຫຍ່ທີ່ເປັນເອກະລາດເຊັ່ນ: ຮຳບົວ, ເບີແມນ, ລິວເບັກ. . ລັດຖະທຳມະນູນຂອງສະຫະພັນທະລັດໄດ້ການປະກາດໃຊ້ໃນວັນທີ 17 ເມສາ 1867 ແລະ ສະພາແຫ່ງຊາດເຢຍລະມັນໄດ້ຮັບການສ້າງຂຶ້ນ. ສິດອຳນາດຂອງສະພາແຫ່ງຊາດແມ່ນຖືກຈຳກັດຍ້ອນອຳນາດຂອງປະທານາທິບໍດີສະຫະພັນທະລັດ ແລະ ອຳນາດຂອງສະມາຄົມສະຫະພັນທະລັດປະກອບດ້ວຍຜູ້ແທນຂອງບັນດາປະເທດທີ່ນອນໃນສະຫະພັນທະລັດ. ລັດຖະທຳມະນູນ. ລັດຖະທຳມະນູນໄດ້ປ່ຽນອຳນາດຈາກປະທານາທິບໍດີມາເປັນຂອງກະສັດປຣັດເຊຍທີ່ມີສິດອຳນາດອັນໃຫຍ່ຫຼວງຄວບຄຸມໄປຮອດວຽກງານພາຍໃນຂອງລາດຊະອານາຈັກອື່ນໃນສະຫະພັນທະລັດທີ່ນອນໃນປະເທດເຢຍລະມັນທີ່ເບິ່ງຄືວ່າຈະສູນເສຍອຳນາດ

ເອກະລາດທັງໝົດໃຫ້ປຣັດເຊຍ. ຊ້ຳຍັງຊ່ວຍໃຫ້ກະສັດມີນາຍົກລັດຖະມົນຕີແຕ່ນາຍຍົດລັດຖະມົນຕີບໍ່ຍອມຮັບສິດອຳນາດຂອງສະພາແຫ່ງຊາດແຕ່ຍອມຮັບອຳນາດຂອງປະທານາທິບໍດີ. ບິດສມາເປັນນາຍຍົກຂອງປຣັດເຊຍ ແລະກໍ່ເປັນນາຍົກລັດຖະມົນຕີຂອງສະຫະພັນທະລັດອີກດ້ວຍ.ບິດສມາກເບິ່ງການສ້າງຕັ້ງສະຫະພັນທະລັດເຢຍລະມັນເໜືອເປັນພຽງຊ່ວງໄລຍະເວລາໃດໜຶ່ງບົນເສັ້ນທາງແຫ່ງການທ້ອນໂຮມແຜ່ນດິນໃຫ້ເປັນເອກພາບສົມບູນ. ບິດສມາກໄດ້ຮີບຮ້ອນສວຍໃຊ້ບັນດາໄຊຊະນະທີ່ຫາກໍ່ຍາດມາໄດ້ນັ້ນ ແມ່ນແນວຄິດຮັກຖຸນນະທຳຂອງເຢຍລະມັນເພື່ອດຳເນີນການເຮັດສົງຄາມກັບປະເທດຝຣັ່ງເພື່ອຍາດເອົາດິນແດນພາກຕາເວັນຕົກສ່ຽງໃຕ້ຂອງຝຣັ່ງມາຂຶ້ນກັບເຢຍລະມັນຖືວ່າສຳເລັດການທ້ອນໂຮມແຜນດິນເຢຍລະມັນໃຫ້ເປັນເອກະພາບ.



ແຜນທີ່ສະຫະພັນທະລັດເຢຍລະມັນເໜືອ ປີ 1867

**ສົງຄາມລະຫວ່າງຝຣັ່ງກັບເຢຍລະມັນໃນປີ 1870-1871**

ພາຍຫຼັງສົງຄາມປຣັດເຊຍ-ໂອຕຣິດສິດອຳນາດໃນການເປັນຜູ້ນຳພາຍໃນປະເທດເຢຍລະມັນໄດ້ຮັບການແກ້ໄຂ. ແຕ່ບົນເສັ້ນທາງການທ້ອນໂຮມແຜ່ນດິນໃຫ້ເອກະພາບກັບໃນດິນແດນທາງພາກໃຕ້ຂອງເຢຍລະມັນແມ່ນຍັງບໍ່ທັນສຳເລັດ. ເຢຍລະມັນຍັງຖືກຂັດຂວາງຈາກປະເທດຝຣັ່ງ ໂດຍສະເພາະແມ່ນການກີດຂວາງຂອງນາໂປລີອົງ 3 ຍ້ອນນາໂປລີອົງ 3ຕ້ອງການແບ່ງເຢຍລະມັນ ແລະ ບໍ່ຕ້ອງການມີຊາຍແດນໃກ້ກັບປະເທດທີ່ມີຄວາມເປັນເອກະພາບທີ່ມີຄວາມເຂັ້ມແຂງ ເພາະມັນຈະເປັນອັນຕະລາຍຕໍ່ກັບປະເທດຝຣັ່ງ. ພ້ອມດຽວກັນນັ້ນບິດສມາກກໍ່ຕ້ອງການບຸກຕີເຢຶດເອົາດິນແດນຈຳນວນໜຶ່ງຂອງປະເທດຝຣັ່ງ. ສະນັ້ນສົງຄາມປຣັດເຊຍ ແລະ ຝຣັ່ງຈິ່ງບໍ່ສາມາດຢຸດຕິລົງໄດ້.

ມາໃນວັນທີ 19 ກໍລະກົດ ປີ1870 ສົງຄາມໄດ້ລະເບີດຂຶ້ນ. ນັ້ນແມ່ນສົງຄາມເພື່ອຕັດສິນການທ້ອນໂຮມແຜ່ນດິນໃຫ້ເປັນເອກະພາບຂອງເຢຍລະມັນຕາມເສັ້ນທາງການຕໍ່ສູ້ດ້ວຍກຳລັງອາວຸດ ແລະ ການສະຫຼະເລືອດເນື້ອ.. ເດືອນພະຈິດປີ 1870 ບັນດາປະເທດທີ່ຢູ່ທາງພາກໃຕ້ຂອງເຢຍລະມັນໄດ້ທ້ອນໂຮມກັນເຂົ້າເປັນອັນໜຶ່ງອັນດຽວກັນກັບສະຫະພັນທະລັດເຢຍລະມັນເໜືອ. ປະເທດຝຣັ່ງຖືກປາຊາໄຊໃນສົງຄາມຈຳເປັນຕ້ອງຊົດໃຊ້ໜີ້ສົງຄາມເປັນຈຳນວນເງິນ 5 ຕື້ຝຣັ່ງ ແລະ ຕັດແບ່ງດິນແດນສອງແຫ່ງໃຫ້ເຢຍລະມັນນັ້ນກໍ່ຄື: ເຂດອານຊາດ ແລະ ເຂດລໍແຣັນ.

ຍ້ອນແນວນັ້ນກະທ້ອນໂຮມປະເທດໃຫ້ເປັນເອກະພາບຈິ່ງມີລກສະນະຕັ້ງໜ້າ. ເຖິງແມ່ນວ່າໄລຍະທຳອິດຂອງການທ້ອນໂຮມຈະເດີນຕາມເສັ້ນທາງແຕ່ເທິງລົງມາຫາລຸ່ມກໍ່ຕາມນັ້ນມັນກໍ່ເປັນບາດກ້າວທຳອິດຂອງການກຳເນີດປະເທດນາຍທຶໃໝ່ນັ້ນກໍ່ຄືເຢຍລະມັນ. ຊົນຊັ້ນນາຍທຶນ ແລະ ພວກທະຫານປຣັດເຊຍຍັງເຮັດໜ້າທີ່ອື່ນນັ້ນກໍ່ຄື: ການຂົ່ມຂູ່ຝຣັ່ງ, ຍຶດຄອງເຂດອານຊາດ ແລະ ລໍແຣັນ. ຍິ່ງໃກ້ຈະເຖິງເສັ້ນໄຊ ຈຸດປະສົງດັ່ງກ່າວຍິ່ງມີບົດບາດສຳຄັນ. ພາຍຫຼັງທີ່ນາມໂປລີອົງ 3 ຍອມຈຳນົນໃນວັນທີ 2 ກັນຍາ 1870 ການທ້ອນໂຮມແຜ່ນດິນເຢຍລະມັນໃຫ້ເປັນເອກະພາບແມ່ນບໍ່ມີອຸປະສັກຫຍັງກີດຂວາງອີກ. ເຢຍລະມັນໄດ້ນຳກຳລັງບຸກໂຈມຕີເຂົ້າຝຣັ່ງ. ໃນເວລານັ້ນສຳລັບເຢຍລະມັນສົງຄາມດັ່ງກ່າວເປັນສົງຄາມຣຸກຮານທີ່ບໍ່ມີຄວາມໝາຍຫຍັງເລີຍ.



ສົງຄາມລະຫວ່າງຝຣັ່ງ ແລະ ເຢຍລະມັນໃນປີ 1870-1871

ສຳລັບປະເທດຝຣັ່ງໃນຕອນທຳອິດຂອງການເຮັດສົງຄາມແມ່ນຍັງບໍ່ທັນມີຄວາມໝາຍຫຍັງເພາະຝຣັ່ງຖືວ່າເປັນສົງຄາມທີ່ກີດຂວາງການທ້ອນໂຮມແຜ່ນດິນເຢຍລະມັນເທົ່ານັ້ນ, ເພື່ອສ້າງເງື່ອນໄຂໃຫ້ນາຍທຶນຝຣັ່ງກົດຂີ່ຂູດຣີດຄົນເຢຍລະມັນໃນໄລຍະຕໍ່ມາເທົ່ານັ້ນ. ແຕ່ນັບແຕ່ວັນທີ 2 ກັນຍາ 1870 ເປັນຕົ້ນມາປະຊາຊົນປະເທດຝຣັ່ງຕ້ອງ

ລຸກຂຶ້ນຕໍ່ສູ້ເພື່ອຕ້ານກັບການຮຸກຮານຂອງເຢຍລະມັນ ສະນັ້ນ, ສຳລັບຝຣັ່ງມັນຈຶ່ງຖືວ່າເປັນການຕໍ່ສູ້ເພື່ອປົກປ້ອງປິຕຸພູມຂອງຕົນ.

ວັນທີ 18 ມັງກອນ 1871 ໄດ້ມີພິທີສ້າງຕັ້ງຈັກກະພັດເຢຍລະມັນຂຶ້ນທີ່ໜ້າພະລາດຊະວັງແວກຊາຍຂອງຝຣັ່ງທີ່ພວມຖືກປຣັດເຊຍຍຶດຄອງໃນເວລານັ້ນ. ເຈົ້າຊີວິດວິນແຮມ1 ໄດ້ຂຶ້ນເປັນເຈົ້າຈັກກະພັດ. ຈັກກະພັດເຢຍລະມັນເປັນສະຫະພັນທະລັດໜຶ່ງທີ່ປະກອບມີ 22 ປະເທດ 3 ນະຄອນໃຫຍ່ເອກະລາດ. ລັດຖະທຳມະນູກຂອງຈັກກະພັດໄດ້ຖືກປະກາດໃຊ້ໃນວັນທີ 16 ເມສາ 1871 ເພື່ອສະນັບສະໜູນຄວາມເປັນເອກະພາບຂອງປະເທດຈັກກະພັດ. ປົກປັກຮັກສາລະບອບລາຊາທິປະໄຕ ແລະ ຮ່ອງຮອຍລະບອບສັກດີນາໃນຊົນນະບົດ. ເພື່ອຮັບປະຕຳແໜ່ງການປົກຄອງພາຍໃນປະເທດລາຊາທິປະໄຕສັກດີນາເຈົ້າທີ່ດິນຂອງປຣັດເຊຍ.

ຍ້ອນແນວນັ້ນການທ້ອນໂຮມແຜ່ນດິນເຢຍລະມັນໃຫ້ເປັນເອກະພາບຈຶ່ງສຳເລັດລົງ, ຄວາມເປັນເອກະພາບນັ້ນແມ່ນບາດກ້າວໜຶ່ງຂອງປະຫວັດສາດເພາະເປັນການເປີດເສັ້ນທາງໃຫ້ລັດທິທຶນນິຍົມຂະຫຍາຍຕົວ. ປະເທດເຢຍລະມັນຖືກທ້ອນໂຮມໃຫ້ເປັນເອກະພາບດ້ວຍການເຮັດສົງຄາມຍຶດຄອງບັນດາລາດຊະອານາຈັກ ທ້ອນໂຮມແຕ່ເທິງລົງລຸ່ມພາຍໃຕ້ການນຳພາຂອງຂຸນນາງ. ປຣັດເຊຍ ຍັງຄົງຮັກສາລະບອບລາຊາທິປະໄຕ ແລະ ສິດອຳນາດຂອງພວກຂຸນນາງພ້ອມດຽວກັນນັ້ນກໍ່ທຳການຂະຫຍາຍລັດທິທຶນນິຍົມ. ວິທີການດັ່ງກ່າວນີ້ເຮັດໃຫ້ເຢຍລະມັນກາຍເປັນກົກເຄົ້າສຳຄັນຂອງລັດທິທາງການທະຫານ ແລະ ເປັນທອນໄປໃຫ້ແກ່ຂະບວນການຕໍ່ສູ້ໃນໄລຍະຕໍ່ມາ.



ພິທີປະກາດສ້າງຕັ້ງຈັກກະພັດເຢຍລະມັນທີ່ມີພະເຈົ້າວິນແຮມ 1 ເປັນເຈົ້າຈັກກະພັດທີ່ພະລາດຊະວັງແວກຊາຍຂອງຝຣັ່ງ

## ບັນດາປະເທດເອີຣົບໃນລະຫວ່າງສະຕະວັດທີ 19

## I ການປະຕິວັດປີ 1848-1849 ຢູ່ປະເທດຈັກກະພັດສັກດີນາໂອຕຣິດ

### 1. ຂະບວນການປະຕິວັດຢູ່ກຸງ ວຽນ

ຮອດກາງສະຕະວັດທີ 19 ຈັກກະພັດໂອຕຣິດ ຍັງຕົກຢູ່ໃນສະຖານະການຫຼ້າຫຼັງ ພາຍໃຕ້ການປົກຄອງຂອງລາດຊະວົງສັກດີນາ ຮາບບົວ ຈັກກະພັດໂອຕຣິດເປັນເໝືອນຄຸກຄຸມຂັງປະຊາຊົນບັນດາເຜົ່າທີ່ປະກອບມີດິນແດນຢ່າງຫຼວງຫຼາຍຢູ່ບໍລິເວນຕອນກາງຂອງທະວີບເອີຣົບຄື: ສ່ວນໜຶ່ງຂອງເຢຍລະມັນ, ໂບແຮັມ, ຮົງກາຣີ, ພາກເໜືອຂອງ ອີຕາລີ...ໃນນັ້ນຊົນເຜົ່າຊາເວີ, ແຊກບີ, ພວກກວອດ, ພວກອີຕາລີ...ລ້ວນແຕ່ຍອມຮັບການເປັນທາດດີນາຂອງສັກດີນາໂອຕຣິດ. ການພົວພັນການຜະລິດແບບສັກດີນາໄດ້ກີດຂວາງການຂະຫຍາຍຕົວລັດທິທຶນນິຍົມ. ປີ 1828 ເສັ້ນທາງລົດໄຟເສັ້ນທຳອິດໄດ້ຮັບການສ້າງຂຶ້ນ, 12 ປີ ຕໍ່ມາມີຄວາມຍາວພຽງແຕ່ 144 ກິໂລແມັດ ສະເລ່ຍໃສ່ແຕ່ລະປີເພີ່ມຂຶ້ນ 12 ກິໂລແມັດ/ປີ (ອັງກິດຍາວ 96ກິໂລແມັດ, ຝຣັ່ງ 42 ກິໂລແມັດ ແລະ ປຣັດເຊຍ 30 ກິໂລແມັດ) ລະບອບທາດດີນນາຍັງຄົງຕົວຢູ່ ໂບແຮັມແມ່ນເມືອງທີ່ມີການຂະຫຍາຍຕົວສຸດ ມີກຳມະກອນເຖິງ 1.300ຄົນ. ສະເພາະແຕ່ຂະແໜງຕໍ່າແຜ່ນຢູ່ ໂບແຮັມມີອະນາເຂດກວ້າງຂວາງປະມານ 1/3ຂອງດິນແດນທົ່ວຈັກກະພັດນຳໃຊ້ແຮງງານກຳມະກອນ 15.000 ຄົນ. ຄວາມຈິງແລ້ວຢູ່າທີ່ນີ້ເຄີຍມີຂະບວນການຕໍ່ສູ້ຂອງກຳມະກອນເກີດຂຶ້ນໃນປີ 1844 ແຕ່ກໍ່ປາຮາໄຊລົງ.

ຂ່າວຄາວການເຮັດການປະຕິວັດເດືອນກຸມພາ 1848 ຢູ່ນະຄອນປາຣີ ເປັນຈຸດສະນວນຂອງສົງຄາມທີ່ສະສົມຄວາມຕຶງຄຽດກັນມາເປັນເວລາຫຼາຍປີຢູ່ຈັກກະພັດໂອຕຣິດ. ຂະບວນການລຸກຮື້ຂຶ້ນປະທ້ວງເຮັດການປະຕຸວັດໄດ້ລະເບີດຂຶ້ນທຳອິດຢູ່ ຟຣາຮາໃນວັນທີ 8 ເດືອນມີນາ ຕໍ່ມາວັນທີ 13 ມີນາ ຂະບວນການປະຕິວັດແຜ່ລາມມາຮອດກຸງວຽນ, ກຳແພງເມືອງຂອງລະບອບຈັກກະພັດໂອຕຣິດ. ຂະບວນການໄດ້ແພ້ລາມເຕັມຖະໜົນຫົນທາງໃນຕົວເມືອງ, ປະຊາຊົນຫຼັ່ງໄຫຼກັນໄປເຕົ້າໂຮມຢູ່ຕໍ່ໜ້າພະລາດຊະວັງຂອງເຈົ້າຊີວິດ, ກອງກຳລັງປ້ອງກັນຊາດນາຍທຶນໄດ້ຮັກການສ້າງຕັ້ງຂຶ້ນ. ກະຊວງການຕ່າງປະເທດ ແມດແຕກນິກ ຫົວໜ້າລັດຖະບານໂອຕຣິດ ຕ້ອງລາອອກ ແລະ ໂຕນໜີໄປຕ່າງປະເທດ.

ຕໍ່ກັບຄວາມກົດດັນຂອງກຳລັງມວນຊົນ, ເຈົ້າຊີວິດຈິ່ງສ້າງຕັ້ງຄະນະມົນຕີຂຶ້ນປະກອບມີ: ຂ້າລາດຊະການທີ່ຂຶ້ນກັບຝ່າຍນາຍທຶນເສລີ, ເດືອເມສາ ລັດຖະທຳມະນູນຖືກປະກາດໃຊ້. ຂໍ້ກຳນົດຂອງລະບອບທີ່ 2 ສະພາ ແຕ່ກຳມະກອນຍັງບໍ່ມີສິດໃນການເລືອກຕັ້ງ, ສິ່ງດັ່ງກ່າວນີ້ໄດ້ສ້າງຄວາມບໍ່ພໍໃຈຢ່າໃຫ້ແກ່ກຳລັງມວນຊົນໃນປເທດຈິ່ງເກີດມີຂະບວນການລຸກຂຶ້ນຕໍ່ສູ້ດ້ວຍກຳລັງປະກອບອາວຸດຂອງກຳມະກອນ, ນາຍຊ່າງ ແລະ ນັກສຶກສາ ຕາມຖະໜົນຫົນທາງໃນຕົວເມືອງຈົນຮອດກາງເດືອນພຶດສະພາ. ຊົນຊັ້ນນາຍທຶນບັງຄັບໃຫ້ຍອມຮັບສິດໃນການເລືອກຕັ້ງຂອງກາມະກອນ ແລະ ປະກາດລົລລ້າງສະພາ. ແຕ່ວ່າລັດຖະບານ ແລະ ສະມາຊິກສະພາບໍ່ຍອມປະຕິບັດ ຊໍ້າພັດຍັງສືບຕໍ່ແກ້ໄຂນະໂຍບາຍທີ່ກ່ຽວຂ້ອງກັບກຳລັງມວນຊົນ ພິເສດແມ່ນ ພິເສດແມ່ນນະໂຍບາຍກ່ຽວກັບທີ່ດິນທຳການຜະລິດ.

ຂະບວນການປະຕິວັດເດືອນມິຖຸນາຂອງຝຣັ່ງເຮັດໃຫ້ຂະບວນການປະຕິວັດຢູ່ກຸງວຽກຜັນແປໄປສູ່ບາດກ້າວໃໝ່. ຄວາມຢ້ານກົວຕໍ່ກັບກັບຊົນຊັ້ນກຳມະກອນ ແລະ ຂະບວນການປະຕິວັດຂອງມວນຊົນເຮັດໃຫ້

ລັດຖະບານຫັນມາຈັບມືຮ່ວມກັບກຳລັງຕໍ່ຕ້ານການປະຕິວັດທີ່ມີເຈົ້າຊີວິດ ເຟີດີນານ 1 ເປັນຜູ້ນຳພາຕໍ່ຕ້ານຢ່າງເປີດແປນກັບຝ່າຍປະຊາຊົນ. ເດືອນສິງຫາ ລັດຖະບານຈຶ່ງອອຳຄຳສັ່ງຫຼຸດຄ່າແຮງງານຂອງກຳມະກອນີລ ພາໃຫ້ເກີດມີຂະບວນການລຸກຮື້ຂຶ້ນປະທ້ວງ. ແຕ່ຂະບວນການປະທ້ວງຂອງມວນຊົນກໍ່ຖືກກຳລັງທະຫານປາບປາມລົງ.

ເດືອນຕຸລາ ລັດຖະບານໄດ້ສົ່ງທະຫານໄປປາບປາມຂະບວນການປະຕິວັດຂອງປະຊາຊົນຮົງກາລີ, ມີທະຫານບາງກຸ່ມໄດ້ຫັນໄປຮ່ວມມືກັບປະຊາຊົນ ແລະ ຜູກສຳພັນທະໄມຕີເປັນດັ່ງອ້າຍນ້ອງຮ່ວມມືກັນເພື່ອລຸກຂຶ້ນຕໍ່ສູ້ຕ້ານກັບລັດຖະບານຕໍ່ຕ້ານ. ທະຫານຈຳນວນ 70.000 ຄົນໄດ້ກັບຄືນເຂົ້າມາປາບປາມກຳລັງການປະຕິວັດຢູ່ກຽງວຽນ. ຂະບວນການລຸກຂຶ້ນຕໍ່ສູ້ເກີດຂຶ້ນຫຼາຍບ່ອນໃນຕົວເມືອງ. ກຳມະກອນ. ນາຍຊ່າງ. ນັກສຶກສາ ແລະ ກຳລັງກຸ່ມປະຊາທິປະໄຕໄດ້ລຸກຂຶ້ນປະກອບອາວຸດລຸກຂຶ້ນຕໍ່ສູ້ຢ່າງຮຸນແຮງ. ຈົນມາຮອດທ້າຍເດືອນຕຸລາ ນາຍພົນ ປູ້ກະຫາຍສົງຄາມຊື່ວ່າ ວິນຊິດເກຣດສ ໄດ້ອອກຄຳສັ່ງຍິງປືນໃສ່ຝູງຊົນໃນຕົວເມືອງ ແລະ ໃຫ້ກຳລັງທະຫານຂັບໄລ່ມ້າງເພເຖິງຖານທີ່ໝັ້ນ. ບັນດານັກຮົບປະຕິວັດໄດ້ຕໍ່ສູ້ຢ່າງອົງອາດເພື່ອປົກປ້ອງຮຽນຊານ ແລະ ບ່ອນຕັ້ງພູມລຳເນົາຂອງຕົນໄວ້.. ແຕ່ມາຮອດວັນທີ 1 ພະຈິດຂະບວນການປະຕິວັດລ້ອນແຕ່ຖືກທັງມ້າງລົງ.

ພາຍຫຼັງທັບມ້າງຂະບວນການປະຕິວັດໃນເດືອນຕຸລາຢູ່ກຽງວຽນແລ້ວ ກຳລັງຕໍ່ຕ້ານການປະຕິວັດໄດ້ເພີ່ມທະວີເຄື່ອນໄຫວເພື່ອກວດລ້າງການປະຕິວັດ ແຟຮັງຊົວ ໂຊແຟັບ 1 ໄດ້ຂຶ້ນຄອງລາດຊະບັນລັງໃນວັນທີ 2 ທັນວາ 1848 ໄດ້ປະກາດຟື້ນຟູຄວາມເປັນເອກະພາບຂອງຂອງຈັກກະພັດໂອຕຣິດ. ໝາຍຄວາມວ່າປາບປາມຂະບວນການຕໍ່ສູ້ປົດປ່ອຍຂອງປະຊາຊົນບັນດາເຜົ່າທີ່ກຳລັງຖືກກົດຂີ່ຢ່າງໜັກໃນເວລານັ້ນ ຄໍ່າຄືນຂອງວັນທີ 7 ມີນາປີ 1849 ພວກເຂົາໄດ້ດຳເນີນການຕໍ່ຕ້ານຂະບວນການປະຕິວັດ, ລົບລ້າງສະພາ ແລະ ຍາດເອົາສິດທັງໝົດມາໄວ້ໃນກຳມືຂອງກະສັດ. ປະກາດລັດຖະທຳມະນູນໃໝ່ທີ່ຮັບໃຊ້ສິດຜົນປະໂຫຍດໃຫ້ແກ່ຊົນຊັ້ນປົກຄອງ, ຮັກສາອຳນາດການປົກຄອງຂອງລາດຊະວົງຮາບບົວ ຕໍ່ກັບປະຊາຊົນບັນດາເຜົ່າ. ສະນັ້ນການປະຕິວັດໃນປີ 1848 ບໍ່ສາມາດລົບລ້າງລະບອບລາຊາທິປະໄຕ ແລະ ປົດປ່ອຍປະຊາຊົນບັນດາເຜົ່າອອກຈາກແອກກົດຂີ່ຂູດຮີດຂອງອຳນາດການປົກຄອງພາຍໃນປະເທດໂອຕຣິດໄດ້.

## 2. ຂະບວນການຕໍ່ສູ້ປົດປ່ອຍປະຊາຊົນບັນດາເຜົ່າຢູ່ເຊັກໂກສະໂລວາກີ

ບັນຫາທີ່ການປະຕິວັດເຊັກໂກສະໂລວາກີພວມປະເຊີນນັ້ນແມ່ນການປົດປ່ອຍປະຊາຊົນບັນດາເຜົ່າຊາວຊາເວີ ອອກຈາກແອກປົກຄອງຂອງຈັກກະພັດໂອຕຣິດ. ນັບແຕ່ປີ 1820 ຢູ່ ໂບແຮັມມີຂະບວນການຕໍ່ສູ້ເກີດຂຶ້ນເພື່ອຮຽກຮ້ອງໃຫ້ພັດທະນາວັດທະນະທຳຊົນເຜົ່າ, ສ້າງຕັ້ງໂຮງຮຽນຊົນເຜົ່າຂຶ້ນ ແລະ ຕ້ອງການທ້ອນໂຮມຄວາມເປັນເອກະພາບພາຍໃນຊົນເຜົ່າຊາເວີ.

ຈຸດສູງສຸດຂອງການປະຕິວັດຢູ່ເອີຣົບແມ່ນໃນວັນທີ 11 ມີນາ 1848 ກຳລັງມວນຊົນ ທີ່ພຣາຮາໄດ້ໂຮມຊຸມນຸມມິດຕິງເພື່ອຮຽກຮ້ອງໃຫ້ສ້າງຕັ້ງສະພານິຕິບັນຍັດຢູ່ເຊັກໂກສະໂລວາກີ ແລະ ໂມລີເວຍ. ຮຽກຮ້ອງສິດສະເໝີພາບລະຫວ່າງເຊັກໂກສະໂລວາກີ ແລະ ເຢຍລະມັນ. ຮຽນຮ້ອງອິດສະຫຼະພາບໃນການສົນທະນາແລກປ່ຽນຄວາມຄິດເຫັນ, ການໂຮມຊຸມນຸມ ແລະ ອິດສະຫຼະພາບທາງດ້ານໜັງສືພິມ. ແຕ່ສິ່ງທີ່ມີຄວາມກ້າວໜ້າແມ່ນຄວາມຕ້ອງການກຳຈັດລະບອບສັກດີນາ. ຂະບວນການຕໍ່ສູ້ເກີດຂຶ້ນຮຸນແຮງຢູ່ສູນກາງອຸດສະຫະກຳເຊັ່ນ: ພຣາຮາ, ໂມລາເວຍ, ເບຣີໂນ... ຢູ່ຊົນນະບົດຊາວນາພາກັນລຸກຂຶ້ນຕໍ່ສູ້ຕ້ານພວກຂຸນນາງເຈົ້າທີ່ດິນ, ຮຽກຮ້ອງໃຫ້ລັດຖະບານອອກຄຳສັ່ງລົບລ່າງພັນທະຕ່າງໆຂອງຊາວນາທີ່ມີຕໍ່ລະບອບສັກດີນາ.

ຕໍ່ໜ້າສະພາບການປະຕິວັດທີ່ນັບມື້ນັບເຂັ້ມແຂງຂອງກຳລັງມວນຊົນ. ຊົນຊັ້ນນາຍທຶນເສລີ ເຊັກໂກສະໂລວາ ກີໄດ້ເຕົ້າລວມເປີດກອງປະຊຸມໃຫຍາ ຊາເວີ. ວັນທີ 2 ມິຖຸນາ 1848 ກອງປະຊຸມໃຫຍ່ໄດ້ຖືກໄຂຂຶ້ນຢ່າງເປັນທາງການຢູ່ ພລາຮາ ມີຜູ້ແທນຂອງພວກ ຊາກເກີ, ພວກໂຊວາກີ, ພວກໂປແລນ, ພວກຢູເຄຣນ, . ພວກແຊກບີ... ກວມຈຳນວນພົນຫຼາຍແມ່ນພວກຂຸນນາງ ແລະ ນາຍທຶນເສລີ ທີ່ມີແນວຄິດກົງກັນຂ້າມກັບກຳລັງມວນຊົນຖືກເອີ້ນວ່າເປັນພວກຜີປະຕິວັດ ພວກເຂົາຍັງໄດ້ຮ່ວມມືກັບລາດຊະວົງຮາບບົວ, ດຳເນີນການປ່ຽນແປງປະເທດໂອຕຣິດເປັນສະຫະພັນທະລັດປະຊາຊົນບັນດາເຜົ່າ. ແຕ່ກອງປະຊຸມກໍ່ຕ້ອງຢຸດຕິລົງຍ້ອນຂະບວນການຕໍ່ສູ້ດ້ວຍກຳລັງປະກອບອາວຸດໄດ້ລະເບີດຂຶ້ນຢູ່ ພຣາຮາໃນວັນທີ 12 ມິຖຸນາ ຂະບວນການຕໍ່ສູ່ແຜ່ລາມໄປທົ່ວຖະໜົນຫົນທາງໃນຕົວເມືອງ. ພວກນາຍທຶນກ້າວໜ້າມີບົດບາດນຳພາຂະບວນການຕໍ່ສູ້. ກຳມະກອນ ແລະ ນັກສຶກສາຕໍ່ສູ້ຢ່າງພິລະອາດຫານ ແລະ ໄດ້ຮັບການຊ່ວຍເຫຼືອຈາກຊາວນາທີ່ຢູ່ນອກກຳແພງພະລາດຊະວັງ. ແຕ່ມາຮອດວັນທີ 17 ຂະບວນການຕໍ່ສູ້ຖືກທັບມ້າງລົງ. ການຕໍ່ສູ້ຢູ່ພຣາຮາໃນເດືອນມິຖຸນາແມ່ນຈຸດສູງສຸດຂອງແມ່ນຈຸດສູງສຸດຂອງການປະຕິວັດໃນປີ 1848 ຢູ່ ເຊັກໂກສະໂລວາກີ



ກຳລັງມວນຊົນຢູາພຣາຮາ ປະເທດເຊັກໂກສະໂລວາກີ ປີ 1848

### 3. ຂະບວນການຕໍ່ສູ້ປົດປ່ອຍຂອງປະຊາຊົນ ຮົງກາລີ

ລະດູໃບໄມ້ປົ່ງຂອງປີ 1848 ຂະບວນການປະຕິວັດໄດ້ແຜ່ລາມໄປທົ່ວປະເທດຕ່າງໆຢູ່ທະວີບເອີຣົບຈົນມາຮອດປະເທດຮົງກາລີ ເຊິ່ງເປັນດິນແດນສ່ວນໜຶ່ງທີ່ຂຶ້ນກັບປະເທດຈັກກະພັດໂອຕຣິດ. ຂະບວນການຕໍ່ສູ້ຕ້ານກັບລາດຊະວົງຮາບບົວຕິດພັນກັບຄວາມຕ້ອງການປະຕິຮູບນາຍທຶນ ແລະ ນະໂຍບາຍຂອງກຳລັງປະຊາຊົນຊາວຜູ້ອອກແຮງງານ ເຖິດວ່າລັດທິທຶນນິຍົມຈະຂະຫຍາຍຕົວໜ້ອຍດຽວເທົ່ານັ້ນ. ວັນທີ 15 ມີນາ 1848 ຂະບວນການຕໍ່ສູ້ຂອງປະຊາຊົນໄດ້ລະເບີດຂຶ້ນທີ່ກຸງ ບູດາແປດ ໂດຍມີກຳມະກອນ, ນາຍຊ່າງ, ນັກຮຽນ ແລະ ຊາວນາ ເປັນເຈົ້າການ

ພາຍໃຕ້ການນຳພາຂອງນັກບວດປະຊາທິປະໄຕປະຕິວັດ ຊານດໍ ເປໂຕຟີ. ກຳລັງປະຕິວັດໄດ້ຕີຕ້ານກຳລັງທະຫານຂອງລັດຖະບານໃຫ້ຖອຍອອກໄປພ້ອມທັງບຸກຕ່ເຂົ້າຕົວເມືອງໃຫຍ່ ແລະ ສ້າງຕັ້ງຄະນະກຳມະທິການຮັກສາຄວາມສະຫງົບໃນສັງຄົມ. ວັນທີ 17 ມີນາ ລັດຖະບານເອກະລາດທຳອິດໄດ້ຮັບການສ້າງຕັ້ງຂຶ້ນຢູ່ ຮົງກາລີ ທີ່ກັດເຊນນີເປັນຫົວໜ້າ. ຜູ້ທີ່ມີບົດບາດສຳຄັນໃນການນຳພາຂອງລັດຖະບານ ແມ່ນ ລາຍອິດ ໂກຊຸດ. ພາຍໃຕ້ຄວາມກົດດັນຂອງຊາວນາສະພານິຕິບັນຍັດໄດ້ປະກາດກົດໝາຍຍຸບເລີກທາດດິນນາ ແລະ ພັນທະຈຳນວນໜຶ່ງທີ່ມີຕໍ່ລະບອບສັກດີນາດ້ວຍວິທີ່ການເສຍເງິນຄ່າໄຖ່ຕົວເອງໃຫ້ເຈົ້າທີ່ດິນ. ແຕ່ພວກປະຊາທິປະໄຕຮຽກຮ້ອງໃຫ້ລົບລ້າງລະບົບຕ່າງໜຂອງລະບອບສັກດີນາ, ຕັດແບ່ງດິນແດນໃຫ້ຊາວນາ, ຍົກເລີຍສິດໃນການຄອບຄອງດິນນາຂອງພວກເຈົ້າທີ່ດິນ ແລະພວກນັກບວດ. ນັກປະຕິວັດປະຊາທິປະໄຕຜູ້ມີຄວາມເກ່ງກ້າຮອບດ້ານຊື່ວ່າ ມິກຄາຍ ທານທຣິກ ແລະ ນັກບວດເປໂຕຟີ ໄດ້ປະກາດຄວາມຕ້ອງການເຫຼົ່ານັ້ນເທິງໜ້າໜັງສືພິມກຳມະກອນ. ບັນດາຂໍ້ຮຽກຮ້ອງພື້ນຖານຂອງກຳມະກອນແມ່ນການເພີ່ມເງິນເດືອນ, ກຳນົດເວລາເຮັດວຽກ 10/ວັນ. ລົບລ້າງລະບອບການອຸປະຖໍາຄໍ້າຊູ. ວັນທີ 17 ເມສາ ຂະບວນການລຸກຂຶ້ນປະທ້ວງເກີດຂຶ້ນທີ່ ແປັກເຕີ ບັງຄັບໃຫ້ລັດຖະບານຕ້ອງຍອມຈຳນົນ ແລະ ເຊັນສັນຍາກັບຫົວໜ້າສຳນັກພິມເພື່ອຕີພິມຄຳຮຽກຮ້ອງນັ້ນເປັນສະບັບທຳອິດໃນປະຫວັດສາດການຕໍ່ສູ້ຂອງກຳມະກອນຮົງກາລີ. ຢູ່ຊົນນະບົດ ຊາວນາໄດ້ລຸກຂຶ້ນຕໍ່ສູ້ຫຼາຍບ່ອນ, ຮຽກຮ້ອງໃຫ້ມີການປະຕິຮູບ ແລະ ສ້າງຕັ້ງຕັດແບ່ງດິນດອນຕອນຫຍ້າ.

ຕໍ່ກັບຄວາມຕ້ອງການຂອງການປະຕິວັດຂອງກຳລັງມວນຊົນ ລັດຖະບານກາດເຊນນີ ແມ່ນບໍ່ມີຈຸດປະສົງເພື່ອແກ້ໄຂບັນຫາຢ່າງແທ້ຈິງກ່ຽວກັບບັນຫາພື້ນຖານຂອງປະເທດ. ພວກເຂົາບໍ່ມອບສິດສະເໝີພາບ ແລະ ສິດໃນການປົກຄອງຕົນເອງໃຫ້ປະຊາຊົນບັນດາເຜົ່າ(ແຊກບີ, ສະໂລວາ, ຢູເຄຣນ, ຣູມານີ) ຍ້ອນແນວນັ້ນພວກເຂົາຈິ່ງບໍ່ໄດ້ຮັບການສະໜັບສະໜູນຈາກກຳລັງມວນຊົນ ແລະ ພ້ອມກັນລຸກຂຶ້ນສ້າງໂຮງຮຽນຕໍ່ຕ້ານກັບກຳລັງທະຫານປະເທດປຣັດເຊຍ.

ນອກຈາກສັດຕູພາຍໃນແມ່ນນັດບວດ ແລະ ພວກຂຸນນາງ, ຂະບວນການປະຕິວັດ ຮົງກາລີຍັງຕ້ອງປະເຊີນໜ້າກັບກັບສັດຕູພາຍນອກນັ້ນກໍ່ຄືລັດຖະບານໂອຕຣິດພາຍຫຼັງເຫດການໃນເດືອນມິຖຸນາຢຸ່ ປາຣີ ພວກຕໍ່ຕ້ານການປະຕິວັດຢູ່ໂອຕຣິດໄດ້ເຂົ້າມາຮຸກຮານຮົງກາລີ. ມາວັນທີ 22 ກັນຍາ 1848 ເຟີດີນານ 1 ໄດ້ກ່າວປະນາມການປະຕິວັດ ຮົງກາລີ ແລະ ປະຊາຊົນ ຮົງກາລີ ແລະ ຖືວ່າເປັນການປະກາດສົງຄາມ. ຄະນະກຳມະການປົກກັນຊາດໄດ້ຮັບການສ້າງຕັ້ງຂຶ້ນທີ່ ຮົງກາລີ ທີ່ມີ ໂກຊຸດເປັນຫົວໜ້າດຳເນີນການຕໍ່ສູ້ຕ້ານກັບແອກປົກຄອງຂອງໂອຕຣິດ. ພາຍຫຼັງທັບມ້າງຂະບວນການປະຕິວັດເດືອນຕຸລາທີ່ກຸງວຽນ ລັດຖະບານໂອຕຣິດກໍ່ທ້ອນໂຮມກຳລັງບຸກຕີຮົງກາລີ. ຕົ້ນເດືອນມັງກອນ ປີ 1848 ກຳລັງທະຫານໂອຕຣິດສາມາດຢຶດຄອງ ກຸງ ບູດາແປດ ແຕ່ບໍ່ສາມາດເອົາຊະນະຂະບວນການປະຕິວັດຂອງປະຊາຊົນ ກົງກັນຂ້າມຂະບວນການປະຕິວັດຮົງກາລີຍິ່ງເຕບໃຫຍ່ຂະຫຍາຍຕົວຢ່າງແຂງແຮງ. ສາມາດປົດປ່ອຍດິນແດນຕ່າງໆໃນທົ່ວປະເທດ. ວັນທີ 14 ເມສາ ປະເທດຮົງກາລີປະກາດເອກະລາດ ແລະ ໂກຊຸດຖືກແຕ່ງຕັ້ງເປັນຫົວໜ້າລັດຖະບານປະຊາຊົນບັນດາເຜົ່າ. ແຕ່ຖືກກະສັດຣັດເຊຍ ແຊກແຊງເຂົ້າຮົງກາລີ, ຮອດທ້າຍເດືອນ ກັນຍາ ຂະບວນການປະຕິວັດຮົງກາລີຖືກທຳລາຍລົງ.

## II.ຂະບວນການປະຕິວັດປີ 1848 ແລະ ຂະບວນການຕໍ່ສູ້ເພື່ອທ້ອນໂຮມແຜ່ນດິນໃຫ້ເປັນເອກະພາບຂອງອີຕາລີ.

### 1. ການປະຕິວັດປີ 1848-1849

ໜ້າທີ່ຕົ້ນຕໍຂອງການປະຕິວັດປະຊາທິປະໄຕນາຍທຶນ ອີຕາລີ ໃນປຣີ 1848-1849 ແມ່ນການທ້ອນໂຮມແຜ່ນດິນໃຫ້ເປັນເອກະພບ, ປົດປ່ອຍ ລົງແບກເດຍ, ເວເນເຢຍອອກຈາກແອກປົກຄອງຂອງພວກໂອຕຣິດ, ໂຄ່ນລົ້ມລະບອບການເມືອງ ແລະ ເສດຖະກິດສັກດີນາທີ່ຫຼ້າຫຼັງ.

ຂະບວນການຕໍ່ສູ້ເພື່ອການປະຕິວັດໄດ້ລະເບີດຂຶ້ນແຕ່ພາກໃຕ້ຂອງປະເທດອີຕາລີ. ວັນທີ 12 ມັງກອນ 1848 ກໍາລັງມວນຊົນຢູ່ ປາແຣັກໂມ ເປັນນະຄອນທີ່ໃຫຍ່ຂຶ້ນກັບຊີຊີເຣຍ ລຸກຮື້ຂຶ້ນຕໍ່ສູ້ເພື່ອປົດປ່ອຍຕົນເອງ. ປະຊາຊົນຊາວຜູ້ອອກແຮງງານໃນນະຄອນໄດ້ໃຫ້ການສະໜັບສະໜູນຢ່າງຫຼວງຫຼາຍຈາກຊາວນາທີ່ມີອາວຸດຍຸດໂທປະກອນໃນການຕໍ່ສູ້ໄດ້ລຸກຂຶ້ນຕໍ່ສູ້ທັນທີ່ສາມາດຍຶດຄອງໄດ້ເກືອບທັງໝົດຂອງດິນແດນໃນເກາະ ຊີຊີລີ.

ແຕ່ຂ່າວຄາວການປະຕິວັດຢູ່ປະເທດຝຣັ່ງ, ເຢຍລະມັນ ແລະ ໂອຕຣິດ ໄດ້ເປັນການຊຸກຍູ້ໃຫ້ຂະບວນການປະຕິວັດກ້າວຂຶ້ນສູ່ລະດັບສູງ ໂດຍສະເພາະແມ່ນເຂດພາກເໜືອຂອງ ອີຕາລີ ທີ່ເປັນບ່ອນຢູ່ພາຍໃຕ້ແອກປົກຄອງຂອງກໍາລັງທະຫານໂອຕຣິດ. ວັນທີ 18 ມີນາ ຂະບວນການຕໍ່ສູ້ດ້ວຍກໍາລັງປະກອບອາວຸດໄດ້ເກີດຂຶ້ນທີ່ ມີລາໂນພາຍໃຕ້ຄໍາຂວັນທີ່ວ່າ"ຊາວໂອຕຣິດຈົ່ງອອກຈາກອີຕາລີ". ກໍາມະກອນ, ນາຍຊ່າງຫັດຖະກໍາ, ນາຍທຶນນ້ອຍ, ນັກຮຽນຮູ້ປັນຍາຊົນປະກອບສ່ວນສໍາຄັນໃນການຕັດສິນຊີ້ຂາດຂະບວນການຕໍ່ສູ້. 2-3 ວັນຕໍ່ມາ ກອງທະຫານໂອຕຣິດຖືກຂັບໄລອອກຈາກນະຄອນ. ສິດອໍານາດການປົກຄອງໄດ້ຕົກຢູ່ໃນກໍາມືຂອງລັດຖະບານຊົ່ວຄາວທີ່ພວມໄດ້ຮັບການສ້າງຕັ້ງຂຶ້ນປະກອບມີພວກນາຍທຶນເສລີ.

ວັນທີ 22 ມີນາ, ຫຼັງການຕໍ່ສູ້ຢ່າງພິລະອາດຫານ, ປະຊາຊົນເວເນຊູເອລາ ໄດ້ກາຍເປັນເຈົ້າຂອງນະຄອນ ແລະ ໄດ້ປະກາດສ້າງຕັ້ງເປັນປະເທດສາທາລະນະລັດສັກສິດ ມາກກາ ຕໍ່ມາດິນແດນທັງໝົດຂອງເວເນເຢຍໄດ້ຮັບການປົດປ່ອຍ.

ພາຍໃຕ້ຄວາມກົດດັນຂອງມວນຊົນປະຕິວັດກະສັດ ປີເອມົງໄດ່ປະກາດເຮັດສົງຄາມກັບໂອຕຣິດ, ກະສັກນາໂປລີນັ້ນກໍ່ຄື ເຟີດີນັນ ຕໍ່ມາກໍາລັງຕໍ່ຕ້ານເກີດຂຶ້ນຫຼາຍບ່ອນ. ຟລແຣນເຊຍ, ປາແລັກໂມ, ນາໂປລີ...ໃນເວລານັ້ນບໍ່ສາມາດຢຸດຢັ້ງສະນອນຂອງການປະຕິວັດຢູ່ປະເທດສາທາລະນະລັດ ໂຣແມັງ. ພັນທະມິດຝຣັ່ງ, ໂອຕຣິດ, ສະເປນໄດ້ສົ່ງກໍາລັງມາປາບປາມກໍາລັງປະຕິວັດ. ແຕ່ຍ້ອນບັນດານັກຮົບປະຕິວັດປ້ອງກັນ ໂຣແມັງ ໄດ້ດໍາເນີນການຕໍ່ສູ້ຢ່າງອາດຫານເພື່ອຕ້ານກັບພວກຣຸກຮານທັງຫຼາຍ. ໃນສະໜາມຮົບ ພວກກະບົດໄດ້ຮັບການຊຸກຍູ້ຢ່າງແຂງແຮງຍ້ອນການເຂົ້າຮ່ວມສົງຄາມຂອງຜູ້ນໍາຂະບວນກນປະຕິວັດປະຊາທິປະໄຕອີຕາລີ ນັ້ນກໍ່ຄ ກາລີບັນດີ. ແຕ່ສຸດທ້າຍທະຫານຝຣັ່ງກໍ່ສາມາດຍຶດຄອງ ໂຣແມັງໄດ້. ຕົ້ນເດືອນກໍລະກົດ ອໍານາດຂອງສັນທະປາປາ ໄດ້ຮັບການຟື້ນຟູ ແລະການປະຕິຮູບທີ່ມີລັກສະນະກ້າວໜ້າລ້ອນແຕ່ຖືກໂຄ່ນລົ້ມ. ການປາຣາໄຊຂອງ ໂຣແມັງ ແມ່ນຄວາມເຈັບປວດອັນໜັກໜ່ວງຂອງຂະບວນການຕໍ່ສູ້ເພື່ອການປະຕິວັດອີຕາລີ.

ຕໍ່ມາແມ່ນການປາຣາໄຊຂອງປະເທດສາທາລະນະລັດ ເວເນຊູເອລາ, ການສິ້ນສຸດຂອງຂະບວນການຕໍ່ສູ້ປະຕິວັດໃນປີ 1848-1849 ຢູ່ປະເທດ ອີຕາລີ.

2. ຂະບວນການຕໍ່ສູ້ເພື່ອທ້ອນໂຮມຄວາມເປັນເອກະພາບຂອງປະເທດອິຕາລີ

ຂະບວນການປະຕິວັດປີ 1848-1849 ຢູ່ອິຕາລະພັງທະລາຍລົງ, ບັນາການທ້ອນໂຮມແຜ່ນດິນໃຫ້ເປັນເອກະພາບແມ່ນຍັງບໍ່ທັນໄດ້ຮັບການແກ້ໄຂ. ປະເທດອິຕາລີ ຖືກຕັດແບ່ງເປັນ 7 ອານາຈັກນ້ອຍ: ໂຣງບາກເດຍ, ເວເນຊູເອລາ ແມ່ນຮັບຮູ້ອຳນາດການປົກຄອງຂອງຈັກກະພັດໂອດຣິດ ສ່ວນ ປາກມາ, ໂມເດນາ, ໂຕກການາ, ແລະ ນາໂປລີ ແມ່ນຖືກກະສັດສັກດີນາເຄີຍຖືກປະຖິ່ມໃນຊ່ວງການປະຕິວັດພັດຕົກຢູ່ໃຕ້ການປົກຄອງພາຍໃຕ້ອິທິພົນຂອງໂອດຣິດ. ໂຣມານີ (ດິນແດນທີ່ຂຶ້ນກັບສັນທະປາປາ) ສູນກາງຂອງສາສະໜາຄຣິດສ ທີ່ຖືກທະຫານຝຣັ່ງຍຶດຄອງ ແລະ ປີເອມົງ ເປັນປະເທດດຽວເທົ່ານັ້ນທີ່ຮັກສາລັດຖະທຳມະນູນເສລີພາບ ໃນປີ 1848 ເປັນປະເທດທີ່ພື້ນຖານການເມືອງເສດຖະກິດກ້າວໜ້າກວ່າປະເທດອື່ນໃນຂົງເຂດນັ້ນ.

ພາຍຫຼັງການປະຕິວັດປີ 1848 ພາຍໃຕ້ການປົກຄອງແບບລາຊາທິປະໄຕໃຕ້ລັດຖະທຳມະນູນ ພາຍໃຕ້ການປົກຄອງຂອງລາດຊະວົງຊາບົວທີ່ມີກະສັດ ວິຕໍ ເອມະນູແອນປົກຄອງຢູ່. ຜູ້ກຳອຳນາດການນຳພາປະເທດຊາດແມ່ນ



ກະສັດ ວິກຕໍ ເອມະນູແອນ 2

ກາວົວທີ່ເປັນນາຍຍົກລັດຖະມົນຕີຕົວແທນສິດຜົນປະໂຫຍດຂອງພັນທະມິດຊົນຊັ້ນຂຸນນາງນາຍທຶນ ແລະນາຍທຶນໃຫຍ່ທັງສອງກຸ່ມຄົນນີ້ລ້ວນແຕ່ເອົາໃຈໃສ່ຕໍ່ກັບການຂະຫຍາຍຕົວຂອງລັດທິທຶນນິຍົມຮ່ວມກັນທ້ອນໂຮມແຜນດິນໃຫ້ເປັນເອກະພາບພາຍໃຕ້ການນຳພາຂອງປີເມົງ ແລະ ມີຄວາມວິຕົກກັງວົນຕໍ່ກັບຂະບວນການລຸກຂຶ້ນຕໍ່ສູ້ເພື່ອດຳເນີນການປະຕິວັດຂອງກຳລັງມວນຊົນປີເອມົງແມ່ນອານາຈັກທີ່ມີພື້ນຖານເສດຖະກິດທຶນນິຍົມຂະຫຍາຍຕົວທີ່ສຸດຢູ່ອິຕາລີ.

ການສ້າງເສັ້ນທາງລົດໄຟ, ທ່າເຮືອ ແລະ ການດໍາເນີນທຸລະກິດພອມໄດ້ຮັບການຊຸກຍູ້ຈາກລັດຖະບານ ນະໂຍບາຍ" ການຄ້າຂາຍແບບເສລີ" ໄດ້ເປັນການເປີດໂອກາດໃຫ້ພວກຂຸນນາງ ແລະ ນາຍທຶນ ເປັນຕະຫຼາດບໍລິໂພກໃໝ່ທີ່ສາມາດຮັບປະກັນມີວັດຖຸດິບທີ່ລາຄາຖືກ, ແລະ ອຸປະກອນເຄື່ອງກົນຈັກ. ປະມານປີ 1851-1858 ປະລິມານການຈໍລະຈອນສິນຄ້າເພີ່ມຂຶ້ນເປັນ2 ເທົ່າຕົວ, ເຄື່ອງກົນຈັກ, ທາດປະສົມລະຫວ່າງເຫຼັກ ແລະ ກາກບອນ, ຖ່ານຫີນ ຖືກນໍາເຂົ້ານັບມື້ນັບຫຼາຍຂຶ້ນ. ຂະແໜງການຜະລິດຝ້າຍຂະຫຍາຍຕົວຢ່າງໄວວາ ຂະແໜງຫຼອມໂລຫະ ແລະ ເຄື່ອງກົນຈັກເລີ່ມປະກົດມີໃຫ້ເຫັນ. ຂະແໜງກະສິກໍາຫັນທິດໄປສູ່ຮູບແບບທຸລະກິດຕາມລັດທິທຶນນິຍົມ ເພື່ອຕອບສະໜອງສິນຄ້າ, ວັດຖຸດິບປ້ອນເຂົ້າຂະແໜງອຸດສະຫະກໍາ ແລະ ເປັນສິນຄ້າສົ່ງອອກນອກປະເທດ.

ໃນເວລານັ້ນ ອານາຈັດອື່ນໃນປະເທດອີຕາລີມີລັກສະນະຢຸດສະງັກ, ຫຼ້າຫຼັງຍ້ອນແອກປົກຄອງຂອງຈັກກະພັດໂອຕຣິດ ແລະ ອໍານາດສັກດີນາພາຍໃນປະເທດອີຕາລີເອງ. ບັນດາສິນຄ້າຈາດໂອຕຣິດຖືກນໍາມາຈໍາໜ່າຍເຮັດໃຫ້ການຜະລິດໃນປະເທດໄດ້ຮັບຜົນກະທົບ. ດ້ານກະສິກໍາປະເຊີນກັບໄພແຫ້ງແລ້ງ, ຄວາມຂັດແຍ່ງລະຫວ່າງຄວາມຕ້ອງການພັດທະນາການຜະລິດແບບທຶນນິຍົມກັບການບີບຮັດຂອງແອກປົກຄອງຂອງພວກສັກດີນາພາຍໃນປະເທດ ແລະ ນອກປະເທດນັບມື້ນັບຮຸນແຮງຂຶ້ນ.




ແຜນທີ່ ອີຕາລີ ປີ1829

ການທ້ອນໂຮມປະເທດເປັນເອງກະພາບຕອບສະໜອງຄວາມຕ້ອງການລົບລ້າງລະບອບສັກດີນາ, ເປີດເສັ້ນທາງໃຫ້ລັດທິທຶນນິຍົມຂະຫຍາຍຕົວ.

ຍ້ອນແນວນັ້ນບັນຫາການທ້ອນໂຮມແຜ່ນດິນໃຫ້ເປັນເອກະພາບຢູ່ອີຕາລີ ຈິ່ງເປັນບັນຫາສໍາຄັນ ແລະ ຈໍາເປັນສໍາລັບພວກນາຍທຶນ ແລະ ປະຊາຊົນທັງໝົດໃນປະເທດ. ຕໍ່ກັບສະພາບບັນຫາເປັນຄືແນວມີສອງທາງເລືອກໃນການແກ້ໄຂບັນຫາດັ່ງກ່າວ.

ຊົນຊັ້ນນາຍທຶນເສລີຢູ່ໃນບັນດາອານາຈັກລ້ອນແຕ່ຕ້ອງການດຳເນີນການຕໍ່ສູ້ຕ້ານກັບໂອຕຣິດ ພາຍໃຕ້ການນຳພາຂອງ ປີເອມົງ ຂອງກຸ່ມພັນທະມິດຂຸນນາງນາຍທຶນ ແລະ ພວກນາຍທຶນໃຫຍ່. ກາວົວດຳເນີນການທ້ອນໂຮມແຜ່ນດິນ ຕາມເສັ້ນທາງແຕ່ເທິງລົງລຸ່ມ, ດຳເນີນສົງຄາມຮຸກຮານອານາຈັກຕ່າງໆເພື່ອສ້າງເປັນປະເທດເອກະພາບ ອິຕາລີ ພາຍໃຕ້ການນຳພາຂອງລາດຊະວົງ ຊາວົວ. ໂດຍອີງໃສ່ກຳລັງແຮງຈາກພາຍນອກ ນາໂປລີອົງ 3 ຜູ້ທີ່ສົນໃຈປະເທດອິຕາລີ ບໍ່ແມ່ນເພື່ອສິດຜົນປະໂຫຍດຂອງປະຊາຊົນອິຕາລີ ເພື່ອເປັນການຫຼອກລວງໂອຕຣິດ ເປົ້າໝາຍເພື່ອຍາດອິດທິພົນເຂດ ເກາະ ອາເປແນັງ.

ເຊິ່ງກົງກັນຂ້າມກັບແຮວຄິດຂອງນາຍທຶນປະຊາທິປະໄຕ, ພວກນາຍທຶນປະຊາທິປະໄຕ ແລະ ພວກສາທາລະນະລັດໄດ້ຮັບການສະໜັບສະໜູນຈາກມວນຊົນກຳນົດເສັ້ນທາງການຕໍ່ສູ້ດ້ວຍການປະຕິວັດຊາດ ຖືເອົາການຕໍ່ສູ້ດ້ວຍກຳລັງປະກອບອາວຸດເປັນການແກ້ໄຂບັນຫາພື້ນຖານເພື່ອປົດປ່ອຍ ແລະ ທ້ອນໂຮມແຜ່ນດິນອິຕາລະໃຫ້ມີຄວາມເປັນເອກະພາບ. ມາດຊີນີ ແມ່ນຕົວແທນໃຫ້ແກ່ແນວຄິດດັ່ງກ່າວນີ້ໃນນັ້ນໄດ້ຍົກໃຫ້ເຫັນບົດບາດຂອງກາລີບັນດີ



ກາລີບານດີ

## ການທ້ອນໂຮມຄວາມເປັນເອກະພາບຂອງປະເທດອິຕາລີສາມາດແບ່ງອອກເປັນ 3 ໄລຍະຄື:

**ກ. ຂະບວນການຕໍ່ສູ້ຕ້ານກັບໂອຕຣິດ ແລະ ການທ້ອນໂຮມຄວາມເປັນເອກະພາບຢູ່ທາງພາກເໜືອ, ພາກກາງຂອງປະເທດອິຕາລີ(ເດືອນເມສາ 1859-ເດືອນມີນາ 1860).**

ເດືອນກໍລະກົດປີ 1838 ກາວົວໄດ້ເຊັນສັນຍາແບບປິດລັບກັບກະສັດຝຣັ່ງນັ້ນກໍ່ຄື ນາໂປລີອົງ 3 ຕາມສັນຍາ, ຝຣັ່ງຈະໃຊ້ການຊ່ວຍເຫຼືອແກ່ກາວົວຂັບໄລໂອຕຣິດອອກຈາກເຂດ ຣົງບາກເດຍ-ເວເນຊູເອຣາ ແລະ ທ້ອນໂຮມເອົາເຂດດັ່ງກ່າວມາຂຶ້ນກັບ ປີເອມົງ ຝຣັ່ງຈະໄດ້ຮັບການສົ່ງຄືນເຂດຊາວາ ແລະ ນີເຊ.

ວັນທີ 29 ເມສາ 1859 ສົງຄາມລະຫວ່າງພັນທະມິດຂອງອີຕາລີ-ຝຣັ່ງກັບໂອຕຣິດໄດ້ລະເບີດຂຶ້ນການປະຕິວັດຂອງປະຊາຊົນກ້າວຂຶ້ນສູ່ລະດັບສູງ. ຕະຫຼອດລະດູຮ້ອນຂອງປີ 1859 ປະຊາຊົນໄດ້ລຸກຂຶ້ນຕໍ່ສູ້ທີ່ໂຕຊານາ, ປາກມາ, ໂທເດນາ, ໂຣມານີ. ພວກສັກດີນາປົກຄອງ ໄດ້ໂຕນໜີເຂົ້າໄປລີ້ໄພຢູ່ໂອຕຣິດ, ຜູ້ທີ່ປະກອບສ່ວນສຳຄັນໃນຂະບວນການຕໍ່ສູ້ຂອງປະຊາຊົນແມ່ນກຳລັງທະຫານຂອງກາລິບານດີທີ່ມີຊື່ວ່າ: ທະຫານມີປືນສາຍພູອານເປີ ປະກອບດ້ວຍທະຫານອາສາສະໝັກຜູ້ຮັກຊາດ ທີ່ມີນ້ຳໃຈອົງອາດກ້າຫານ ພວກມີປືນພູອານເປີຍາດໄດ້ໄຊຊະນະໃນເດືອນພຶດສະພາສາມາດປົດປ່ອຍນະຄອນຣົງບາກເດຍ. ເດືອນມິຖຸນາ ທະຫານໂອ6ຣິດປາຣາໄຊ ຢ່າງໜັກໜ່ວງຢູ່ ມາກັງຕາ ໃນວັນທີ 4 ມິຖຸນາ 1859, ຢູ່ຊານປີລາໂນ ໃນວັນທີ 24 ມິຖຸນາ ລ້ອນແຕ່ປາຣາໄຊທັງໝົດ.

ແຕ່ຈຸດສຸດຍອດຂອງການປະຕິວັດຂອງປະຊາຊົນອີຕາລີ, ແມ່ນການທີ່ນາໂປລີອົງ 3 ບໍ່ປະຕິບັດຕາມຄຳໝັ້ນສັນຍາທີ່ມີກັບກາວົວໃນເມື່ອກ່ອນ. ຊໍ້ບໍ່ໜໍ່ພັດຫັນທິດປ່ຽນໃຈໄປເຊັນສັນຍາກັບໂອຕຣິດເອີ້ນວ່າສັນຍາ ວີລາ ຟຣັງ ກາໃນວັນທີ 11 ກໍລະກົດ 1859 ໂອຕຣິດມອບດິນແດນ ຣົງບາກເດຍໃຫ້ແກ່ຝຣັ່ງ ເພື່ອໃຫ້ຝຣັ່ງມອບ ປີເອມົງໃຫ້ ໂອຕິຣດ ສ່ວນເວເນຊູເອລາແມ່ນຍັງຂຶ້ນກັບໂອຕຣິດ. ອຳນາດຂອງພວກນັກບວດໄດ້ສະໜັບສະໜູນໃຫ້ບັນດາອານາຈັກໂຕການາ, ປາກມາ, ໂມເຢນາ, ໂຣມານີ. ຍ້ອນແນວນັ້ນ ນາໂປລີອົງ 3 ຈຶ່ງຮີບຮ້ອນຮ່ວມມືກັບຝ່າຍກະບົດຍອມຮັບການຕັດແບ່ງອີຕາລີຢ່າງເປີດແປນ, ທຳລະຍົດຕໍ່ຄຳໝັ້ນສັນຍາທີ່ເຄີຍມີໃຫ້ທີ ປີອົງບີແອເຣີ.



ແຜນທີ່ຂະບວນການຕໍ່ສູ້ເພື່ອທ້ອນໂຮມແຜ່ນດິນອີຕາລີໃຫ້ເປັນເອກະພາບ

ປະຊາຊົນອີຕາລີສຸດທີ່ຄຽດແຄ້ນຕໍ່ກັບການທຳລະຍົດຂອງຝຣັ່ງໃນຄັ້ງນີ້ ແລະບໍ່ສາມາດຍອມຮັບຕໍ່ເຫດການດັ່ງກ່າວນັ້ນໄດ້ ມາດຢີນີຈຶ່ງປະກາດວ່າ "ປະຊາຊົນອີຕາລີ ບໍ່ໄດ້ລົງນາມໃນສັນຍານັ້ນ" ຂະບວນການຕໍ່ສູ້ຂອງນາຍທຶນ

ປະຊາທິປະໄຕໄດ້ເກີດຂຶ້ນ ປະຊາຊົນທົ່ວທຸກບ່ອນຮຽກຮ້ອງຢາກໄດ້ອາວຸດ, ກຳລັງທະຫານປ້ອງກັນປະເທດໄດ້ຮັບການສ້າງຕັ້ງຂຶ້ນ ກຳລັງມວນຊົນຕໍ່ຕ້ານກັບກຳລັງທີ່ຕ້ອງການຟື້ນຟູລະບອບການປົກຄອງເກົ່າຢູ່ທາງພາກກາງຂອງປະເທດອິຕາລີ. ບັນດາສະພາ ໂຕການາ, ປາກມາ. ໂມເດນາ ແລະ ໂຣມານີ ໄດໃຫ້ສັດຕະຍາບັນຕໍ່ກັບເຊື້ອສາຍລາດຊະວົງທີ່ຖືກລົບລ້າງໄປຂອງໂອຕຣິດ ແລະ ມີຄຳສັ່ງໃຫ້ຂຶ້ນກັບ ອານາຈັກ ປີເອມົງ. ໃນເດືອນມີນາ ປີ 1860 ການທ້ອນໂຮມ ພາຍຫຼັງທີ່ປະຊາຊົນມີການລົງຄະແນນສຽງ.

ພາຍໃຕ້ຄວາມກົດດັນຂອງມວນຊົນ ແລະ ການປະກອບສ່ວນຢ່າຕັ້ງໜ້າຂອງພວກນາຍທຶນປະຊາທິປະໄຕດິນແດນສ່ວນໃຫຍ່ທາງພາກເໜືອຂອງປະເທດອິຕາລີໄດ້ຮັບການທ້ອນໂຮມໃຫ້ເປັນເອກະພາບ. ພາຍໃຕ້ຄັນທຸງປະຕິວັດຂອງ ປີເອມົງ ພາຍໃຕ້ ກະສັດແອມມະນູແອນ 2 ແລະ ນາຍົກລັດຖະມົນຕີ ກາອົວ ເປັນຜູ້ນຳພາ.

**ຂ. ຈຸດສູງສຸດຂອງການປະຕິວັດທີ ພາກໃຕ້ຂອງອິຕາລີ ແລະ ການກຳເນີດປະເທດເອກະພາບ ອິຕາລີໃນເດທອນເມາສາ 1859 ຫາເດືອນມີ 1860.**

ນັບແຕ່ປີ 1859 ຂະບວນການຕໍ່ສູ້ໄດ້ລະເບີດຂຶ້ນຢ່າງແຂງແຮງຢູ່ທາງພາກໃຕ້ຂອງປະເທດອິຕາລີ. ວັນທີ 4 ມັງກອນ ປີ 1860 ຂະບວນການປະຕິວັດໄດ້ເກີດຂຶ້ນໂດຍເລີ່ມຈາກປາເຣກໂມ ແລະ ແຜ່ລາມໄປທົ່ວຫຼາຍຕົວເມືອງໃຫຍ່ອື່ນຢູ່ຊີຊີນເລຍ. ຊາວນາພາກັນລຸກຂຶ້ນຕໍ່ສູ້ ແລະ ສ້າງຕັ້ງກອງກຳລັງສະໜັບສະໜູນທີ່ມີ ຝ່າຍມາດຢີນີເປັນຜູ້ບັນຊາການ. ປະຊາຊົນພາກັນທັບມ້າງບັນດາຄຸກຄຸມຂັງເພື່ອປົດປ່ອຍນັກໂທດການເມືອງ. ທຳລາຍທະຫານ, ຮຽກຮ້ອງໃຫ້ໂຄ່ນລົ້ມອຳນາດສັກດີນາ ແລະ ທ້ອນໂຮມປະເທດອິຕາລີໃຫ້ເອກະພາບກັນທົ່ວປະເທດ. ໃນເວລານັ້ນທະຫານຈຳນວນ 1.000 ຄົນທີ່ມີແນວຄິດອ່ຽງເອນມາທາງກາຣິບານດີໄດ້ເດີນທາງອອກຈາກ ເຈນນົວາ ກັບຄືນມາຊີຊີນເລຍ. ໃນເຮືອປະຈັນບານຈຳນວນ 2 ລຳບັນດານັກຮົບອາສາສະໝັກເສື້ອແດງ ເກືອບເຄິ່ງໜຶ່ງແມ່ນກຳມະກອນ, ນາຍຊ່າງຫັດຖະກຳ, ນັກຮຽນ ແລະ ປັນຍາຊົນກ້າວໜ້ານັບທັງຄົນຕ່າງປະເທດໄດ້ພາກັນຂ້າມທະເລມາໃນກາງຄືນ ແລະ ຍົກພົນຂຶ້ນບົກທີ່ເກາະເຊິ່ງໃນເວລານັ້ນຄັນທຸງການປະຕິວັດກຳລັງຖືກຈຸດສະນວນຂຶ້ນ ນັບແຕ່ນັ້ນມາຂະບວນການຕໍ່ສູ້ຂອງພວກເຂົາກ້າວເຂົ້າສູ້ການຕໍ່ສູ້ທີ່ກວມອະນາເຂກກວ້າງຂວາງຂອງກຳລັງມະຫາຊົນ. ພຽງແຕ່ເວລາ 1 ເດືອນ ກຳລັງກອນຫຼອນຈຳນວນ 5.000 ຄົນໄດ້ເຂົ້າຮ່ວມກອງກຳລັງອາສາສະໝັກ. ກອງທັບບົກຂອງກາລິບນດີຮ່ວມກັບກຳລັງປະກອບອາວຸດຂອງກຳລັງມະຫາຊົນດຳເນີນການຕໍ່ສູ້ຢ່າງອົງອາດກ້າຫານ ຮອດທ້າຍ ເດືອນພຶດສະພາ ສາມາດປົດປ່ອຍດິນແດນທັງໝົດໃນເກາະ ຊີຊີນເລຍ ບັນດາລາດຊະວົງສັກດີນາ ບວກບົງໄດ້ໂຕນໜີ ອຳນາດການປົກຄອງນາຍທຶນໄດ້ຮັບການສ້າງຕັ້ງຂຶ້ນກາລິບານດີ ຖືກຂະໜານນາມວ່າເປັນກົງສູນຂອງເກາະຊີຊີນເລຍ ແຕ່ສິດອຳນາດໃນຕົວຈິງແມ່ນຕົກໃນກຳມືພວກເສລີ, ກາລິບານດີສັ່ງໃຫ້ລົບລ້າງສິດອຳນາດ, ຍຶດຖາບັນດາສັກຂອງພວກຂຸນນາງ ແລະ ນັກບວດ ຂັບໄລນັກບວດ ແລະ ຢຶດເອົາດິນແດນຂອງພວກເຂົາ, ລົບລ້າງການເກັບພາສີ, ດຳເນີນການຄ້າຂາຍເສລີ, ແບ່ງປັນດິນລວມໃຫ້ແກ່ຊາວນາທີ່ເຄີຍເຂົ້າຮ່ວມໃນການເຮັດສົງຄາມ.

ເດືອນສິງຫາກຳລັງທະຫານຂອງກາລິບານດີ ໄດ້ເດີນທາງຂ້າມທະເລເພື່ອຍົກພົນຂຶ້ນບົກທີ່ນາໂປລີ ດ້ວຍກຳລັງທະຫານທີ່ສາມາບານຕົນຍາດຈະຍາດເອົາໄຊຊະນະມາໃຫ້ໄດ້. ທົ່ວທຸກບ່ອນທີ່ນະຄອນນາໂປລີລ້ວນແຕ່ພາກັນລຸກຂຶ້ນຕໍ່ສູ້. ລັດຖະບານຊົ່ວຄາວໄດ້ຮັບການສ້າງຕັ້ງຂຶ້ນ ເຊິ່ງແມ່ນຝ່າຍ ມາດຢີນີເປັນຫົວໜ້າລັດຖະບານນີ້. ກຳລັງທະຫານປະຊາຊົນປະກອບອາວຸດທຳລາຍນິກົມການກະເສດ ໂດຍສົມທົບກັບກຳລັງທະຫານຂອງກາລິບານດີ. ມາໃນວັນທີ 7 ກັນຍາ ການລິບາຍດີບຸກເຂົ້ານະຄອນຫຼວງຂອງ ນາໂປລີ ເຊິ່ງເວລານັ້ນກະສັດໄດ້ໂຕນໜີກ່ອນໜ້ານີ້ພຽງ

2-3 ວັນແລ້ວ. ອຳນາດການປົກຄອງໃໝ່ໄດ້ຮັບການສ້າງຕັ້ງຂຶ້ນ ທີ່ມີກາລີບານດີ ເປັນຫົວໜ້າກົງສູນໃຫຍ່. ຂະບວນການປະຕິວັດນາຍທຶນຢູ່ພາກໃຕ້ຂອງອີຕາລີໄດ້ຮັບໄຊຊະນະ. ດິນສ່ວນລວມຖືກຕັດແບ່ງໃຫ້ຊາວນາ. ອຳນາດການປົກຄອງຂອງສັກດີນາຖືກໂຄ່ນລົ້ມລົງ. ກາລີບານດີໄດ້ກາຍເປັນວິລະຊົນຜູ້ຍິ່ງໃຫຍ່ຂອງຍຸກບູຮານມີຄວາມສາມາດ, ມີຫົວຄິດປະດິດສ້າງ. ບັນດາຄວາມສຳເລັດ ແລະ ໄດ້ສ້າງຄວາມສຳເລັດຄືດັ່ງທ່ານອັງແກນໄດ້ຕີລາຄາວ່າ.

ການເຄື່ອນໄຫວຂອງກາລີບານດີເຮັດໃຫ້ຝ່າຍເສລີ ພະຍາຍາມກົດດັນທຸກຢ່າງເພື່ອຍາດເອົາສິດອຳນາດ ແລະ ທ້ອນໂຮມເອົານາໂປລີຂຶ້ນກຳປີເອມົງ. ພາຍໃຕ້ການປົກຄອງຂອງລາດຊະວົງ ຊາວົວໃນເດືອນຕຸລາ 1860. ພາຍຫຼັງຂຶ້ນກຳອຳນາດໃນນາໂປລີແລ້ວ ກາວົວໄດ້ທຳລາຍກົດເກນຂອງການປະຕິວັດ, ກາລີບານດີຖືກຂັບໄລ່ອອກຈາກເກາະກາເປຣລາ.

ເດືອນມີນາ ປີ 1861 ສະມາຊິກສະພາ ອີຕາລີ ພວມໄດ້ຮັບການເລືອກຕັ້ງຂຶ້ນ, ປະກາດສ້າງຕັ້ງລາດຊະອານາຈັກອີຕາລີທີ່ມີຄວາມເປັນເອກະພາບຂຶ້ນຢ່າງເປັນທາງການທີ່ມີກະສັດ ປີເອມົງ ວິກຕໍແອມມະນູແອນ 2 ຂຶ້ນເປັນເຈົ້າຈັກກະພັດອີຕາລີ . ອຳນາດການປົກຄອງຕົກຢູ່ໃນກຳມືຂອງພວກຂຸນນາງນາຍທຶນ ແລະ ຊົນຊັ້ນນາຍທຶນໃຫຍ່. ຕະຫຼາດຊົນເຜົ່າມີຄວາມເປັນເອກະພາບກັນ, ການເກັບກຳພາສີແບບສັກດີນາຖືກລົບລ້າງ, ທາງລົດໄຟ ແລະ ການດຳເນີນທຸລະກິດແມ່ນໄດ້ຮັບການສະໜັບສະໜູນ.

**ການກຳເນີດປະເທດເອກະພາບ ອີຕາລີ ໃນປີ 1861-1870**



ສົງຄາມປຣັດເຊຍ-ໂອຕຣິດ

ຮອດປີ 1861 ມີພຽງແຕ່ດິນແດນ ເວເນຊູເອລາເທົ່ານັ້ນທີ່ຍັງຂຶ້ນກັບອຳນາດການປົກຄອງຂອງໂອຕຣິດ ແລະ ໂຣມານີທີ່ຍັງຂຶ້ນກັບອຳນາດການປົກຄອງຂອງສັນທະປາປາ ເຊິ່ງບໍ່ທັນຖືກບັນທຶກລົງໃນແຜນທີ່ຂອງລາດຊະອານາຈັກເອກະພາບ ອີຕາລີ. ມີຫຼາຍຄັ້ງທີ່ກາລີບານດີນຳກຳລັງກັບຄືນມາປະເທດເພື່ອແກ້ໄຂບັນຫາດິນແດນບາງສ່ວນທີ່ຍັງຂຶ້ນບໍ່ທັນຂຶ້ນກັບອີຕາລີ ແຕ່ກໍ່ຖືກກຳລັງທະຫານຂອງ ວິກຕໍ ແອມມະນູແອນ ຕໍ່ຕ້ານ. ລາດຊະວົງກາອີງໃສ່ຄວາມເຂັ້ມແຂງຂອງກຳລັງພາຍນອກທີ່ໃຫ້ການຊ່ວຍເຫຼືອແກ້ປຣັດເຊຍໃນການເຮັດສົງຄາມປຣັດເຊຍ-ໂອຕຣິດ ຍ້ອນກາປາຣາໄຊສົງຄາມຂອງໂອຕຣິດ ອີຕາລີຈຶ່ງໄດ້ຮັບເວເນຊູເອລາຄືນ. ສົງຄາມລະຫວ່າງປຣັດເຊຍ-ຝຣັ່ງໃນປີ 1870 ຄ່ອຍໜເຮັດໃຫ້ຈັກກະພັດທີ 2 ຂອງຝຣັ່ງອ່ອນເພຍລົງ, ເຮັດໃຫ້ພວກສັນທະປາປາບໍ່ມີບ່ອນເອື້ອອີງ. ກຳລັງ

ທະຫານຂອງອີຕາລີບຸກຕີເຂົ້າໂຣແມັງ. ວັນທີ 20 ກັນຍາ ເວເນຊູເອລາ ແລະ ໂຣມານີຖືກທ້ອນໂຮມເຂົ້າກັບອີຕາລີ ສັນທະປາປາ ປີໂອທີ4 ຫຼົບໄຫຼກັນເຂົ້າ ວາຕິກັນ ຖືຕົນເອງວ່າເປັນ ເປັນສິ່ງຕ້ອງຫ້າມສຳລັບຊາວຄິດສຫຼາຍຮ້ອຍຄົນ ແລະ ປະສາດຂອງສັນທະປາປາ. ການທ້ອນແຜ່ນດິນເອກະພາບອີຕາລີສຳເລັດສົມບູນ ໂດຍເອົາໂຣແມັງເປັນນະຄອນຫຼວງຂອງປະເທດ

**ຂະບວນການຕໍ່ສູ້ເພື່ອຄວາມເປັນເອກະລາດຂອງບັນດາປະເທດໃນແຫຼມບານກັງ**

ກາງສະຕະວັດທີ 19 ບັນດາປະເທດເຂດແຫຼມບານກັງແມ່ນຢູ່ໃຕ້ແອກປົກຄອງຂອງຕວຽກກີ. ການພັງທະລາຍຂອງລະບອບສັກດີນາ ແລະ ການປະກົດຕົວຂອງໜໍ່ແໜ່ງລັດທິທຶນນິຍົມເປັນການຊຸກຍູ້ໃຫ້ຂະບວນການຕໍ່ສູ້ເພື່ອປົດປ່ອຍປະເທດຂອງປະຊາຊົນບັນດາເຜົ່າ ເພື່ອຕ້ານກັບແອກປົກຄອງຂອງຕວກກີ ແລະ ແອກປົກຄອງຂອງພວກສັກດີນາ. . ໃນຊຸມປີ 50-ປີ60 ຂອງສະຕະວັດທີ 19 ຂະບວນການຕໍ່ສູ້ໄດ້ເກີດຂຶ້ນຢ່າງຮຸນແຮງ ຢູ່ ວາລາຄີ, ມົນດາວີ, ບູນກາລີ, ແຊກບີ...

**1. ການສ້າງຕັ້ງປະເທດຣູມານີໃນປີ 1861**

ໃນເວລານີ້ ມົນດາວີ ແລະ ວາລາຄີຍັງເປັນເຂດໜຶ່ງທີ່ມີພື້ນຖານເສດຖະກິດກະສິກຳທີ່ຂຶ້ນກັບປະເທດຕວຽກກີ ເພື່ອຕອບສະໜອງຄວາມຕ້ອງການວັດຖຸດິບເພື່ອປ້ອນເຂົ້າຕະຫຼາດ ແຕ່ການກົດຂີ່ຂູດຮີດຊາວນານັບມື້ນັບຮຸນແຮງ ແລະ ບໍ່ມີທ່າອ່ຽງວ່າຈະຢຸດຕິລົງໄດ້. ລະບອບທາດດິນນາຍັງຄົງຕົວຢູ່. ຊາວນາບໍ່ມີສິດຫຍັງຈຳເປັນຕ້ອງຍອມຮັບເອົາການກົດຂີ່ຂູດຮີດອັນໜັກໜ່ວງຈາກຕວກກີ.

ເຖິງວ່າການພົວພັນການຜະລິດແບບສັກດີນາຈະຍັງຄົງຕົວຢູ່ກໍ່ຕາມແຕ່ວ່າໜໍ່ແໜງລັດທິທຶນນິຍົມກໍ່ເລີ່ມມີການຂະຫຍາຍຕົວ.

ລະຫວ່າງຊຸມປີ 60 ຂອງສະຕະວັດທີ 19 ພື້ນຖານການຜະລິດທີ່ນຳໃຊ້ເຄື່ອງຈັກອາຍນ້ຳມີເຖງ 172 ແຫ່ງ, ອຸດສະຫະກຳຂຸດຄົ້ນບໍ່ແມ່ເລີ່ມຂະຫຍາຍຕົວ. ສະເພາະ ປີ 1858 ຂະແໜງຂຸດຄົ້ນນ້ຳມັນດິບເພີ່ມຂຶ້ນຈາກ 250 ໂຕນເປັນ 500 ໂຕນ ແລະ ເກີດມີໂຮງງານຜະລິດນ້ຳມັນແຫ່ງທຳອິດ. ເສັ້ນທາງລົດໄຟ, ເສັ້ນທາງໂທລະຄົມ ໄປສະນີໄດ້ຮັບການສ້າງຂຶ້ນ.

ການປົກຄອງຂອງການພົວພັນການຜະລິດແບບສັກດີນາ, ສະພາບການຂາດແຄນຕະຫຼາດຈຳໜ່າຍສິນຄ້າທີ່ເປັນເອກະພາບພາຍໃນປະເທດ. ຄວາມສາມາດໃນການຊື້ສິນຄ້າຂອງປະຊາຊົນແມ່ນຫຼຸດລົງ ເຊິ່ງເປັນອຸປະສັກໃຫ້ແກ່ການຂະຫຍາຍຕົວທາງດ້ານເສດຖະກິດຂອງພາກພື້ນ. ການຂະຫຍາຍຕົວຂອງກຳລັງການຜະລິດຮຽກຮ້ອງໃຫ້ມີການທ້ອນໂຮມແຜ່ນດິນໃຫ້ເປັນເອກະພາບ ແລະ ລົບລ້າງສະພາບການເມືອງທີ່ຍັງຂຶ້ນກັບຕວກກີ. ສະນັ້ນບັນຫາການທ້ອນໂຮມແຜ່ນດິນໃຫ້ເປັນເອກະພາບ ເປັນບັນຫາສຳຄັນຂອງມວນຊົນ ໃນຂົງເຂດຕ່າງໆ ແລະ ຍັງເປັນປັດໄຈສຳຄັນຂອງການຂະຫຍາຍຕົວທາງດ້ານເສດຖະກິດຢູ່ຣູມານີອີກດ້ວຍ.



ສົງຄາມຣັດເຊຍ-ຕວກກີໃນປີ 1877-1878

ພາຍຫຼັງການຕໍ່ສູ້ເປັນເວລາອັນຍາວນານກອງປະຊຸມໃຫຍ່ຂອງຜູ້ແທນທີ່ມົນດາວີ ແລະ ຕໍ່ມາປີ 1859 ຢູ່ວາລາຄີ ໄດ້ມີການແຕ່ງຕັ້ງຂຸນນາງນັກເຄື່ອນໄຫວທີ່ກ້າວໜ້າຊື່ວ່າ ອາເລັກຊານເດີ ກູຢາ ຂຶ້ນເປັນຜູ້ນໍາ. ເຖິງວ່າຈະຖືກຕໍ່ຕ້ານ ແລະ ກີດຂວາງຈາກປະເທດມະຫາອໍານາດກໍ່ຕາມ ແຕ່ປະຊາຊົນ ມົນດາວີ , ວາລາຄີ ແລະ ສ່ວນໜຶ່ງຂອງເບສຊາລາບີ ລ້ວນແຕ່ຕັດສິນໃຈເດີນຕາມເສັ້ນທາງຂອງຕົນເອງ. ປີ 1861 ບັນດາອະນາເຂດຕ່າງໆໄດ້ລວມຕົວກັນສ້າງຕັ້ງເປັນປະເທດຣູມານີ ທີ່ມີນະຄອນຫຼວງແມ່ນ ບູກາແຣດ, ສາມາດປົດແອກປົກຄອງຈາກຕ່າງຊາດ, ປະກາດເອກະລາດອອກຈາກຕວກກີ. ແຕ່ຕ້ອງດໍາເນີນພາຍຫຼັງສົງຄາມຣັດເຊຍ-ຕວກກີໃນປີ 1877-1878 ຣູມານີຈິ່ງໄດ້ຮັບເອກະລາດຢ່າງສົມບູນ ແລະ ໄດ້ຮັບການຍອມຮັບຈາກບັນດາປະເທດອື່ນ.

## 2. ຂະບວນການຕໍ່ສູ້ເພື່ອປົດປ່ອຍຊາດຂອງປະຊາຊົນບັນດາເຜົ່າທີ່ບູນກາລີ

ຮອດກາງສະຕະວັດທີ 19 ບູນກາລີຍັງຕົກຢູ່ໃຕ້ແອກປົກຄອງຂອງຕວກກີ, ພວກເຈົ້າທີ່ດິນຕວກກີໄດ້ຍຶດຄອງດິນນາທັງໝົດຂອງປະຊາຊົນບູນກາລີ. ການກົດຂີ່ຂູດຮີດຢ່າງໄຮ້ມະນຸດສະທໍາ, ການປຸ້ນສະດົມເອົາດິນນາ ແລະ ການເພີ່ມທະວີການເກັບພາສີ, ການຕ້ອງແບກຫາບໜ້າທີ່ໃນການເປັນທາດດິນນາ... ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນທຸກຍາກລໍາບາກ. ສັດຕູຕົວສໍາຄັນຂອງປະຊາຊົນແມ່ນສັກດີນາຕວກກີ. ໃນຊຸມປີ 50 ຂະບວນການຕໍ່ສູ້ຂອງປະຊາຊົນໄດ້ແຜ່ລາມໄປຮອດພາກຕາເວັນຕົກສ່ຽງເໜືອເພື່ອຂັບໄລ່ເພວກເຈົ້າທີ່ດິນຕວກກີແຕ່ກໍ່ຖືກປາຮາໄຊລົງ. ເຖິງຢ່າງໃດກໍ່ຕາມຍ້ອນອະນາເຂດ ແລະ ກໍາລັງຂອງຂະບວນການປະຕິວັດ ພວກຕວກກີໄດ້ສືບຕໍ່ພົວພັນກັບຄະນະຜູ້ແທນຂອງປະຊາຊົນບູນກາລີ, ຈໍາຕ້ອງຍອມຮັບເອົານະໂຍບາຍເຊັ່ນ: ແບ່ງປັນດິນນາຈໍານວນໜຶ່ງໃຫ້ຊາວນາພາຍຫຼັງທີ່ພວກເຂົາໄຖ່ຖອນທີ່ມີເງື່ອນໄຂເຄັ່ງຄັດເຂັ້ມງວດ. ເຖິງຢ່າງໃດກໍ່ຕາມ ໂດຍຄວາມຈິງແລ້ວ, ບັນຫາດິນນາແມ່ນຍັງບໍ່ທັນໄດ້ຮັບການແກ້ໄຂເລີຍ.

ໃນເວລາດຽວກັນນີ້ສິນຄ້າພາຍນອກທີ່ນຳເຂົ້າມາຂາຍຢູ່ບູນກາລີນັບມືນັບເພີ່ມຂຶ້ນຫຼາຍພໍສິ່ງຜົນສະທ້ອນຕໍ່ກັບຂະແໜງການຜະລິດຫັດຖະກຳ ແລະ ກຸ່ມຜະລິດຫັດຖະກຳຂອງບູນກາລີ. ຍ້ອນການຍາດແຍ່ງຂອງສິນຄ້າຕ່າປະເທດເຮັດໃຫ້ນາຍຊ່າງຫັດຖະກຳຕ້ອງລົ້ມລະລາຍບັນດາຂະແໜງການຜະລິດຕົ້ນຕໍຂອງບູນກາລີອ່ອນເພຍລົງເຊັ່ນຂະແໜງຕ່ຳແຜ່ນແພດ້ວຍຂົນສັດ, ການຜະລິດເກີບ. ຊົນຊັ້ນນາຍທຶນຕ້ອງການຊຸກຍູ້ການຜະລິດ ແລະ ການຄ້າຂາຍຂອງຕົນ ດ້ວຍວິທີການສ້າງຕັ້ງບໍລິສັດຫຸ້ນສ່ວນໃນຂະແໜງອຸດສະຫະກຳທີ່ມີຄວາມຂັດແຍ່ງກັນ ແລະ ຂະແໜງຂົນສົ່ງ... ແຕ່ພວກເຂົາບໍ່ມີທຶນພຽງພໍ ແລະ ບໍ່ສາມາດແຂ່ງຂັນກັບສິນຄ້າຕ່າງປະເທດໄດ້ສະນັ້ນຊົນຊັ້ນນາຍທຶນຕັ້ງເລີ່ມມີການຂວ້ຳບາດສິນຄ້າຕ່າງປະເທດ. ສະພາບວິກິດການທາງດ້ານໃນຂະແໜງຫັດຖະກຳ ແລະ ການຄ້າຍິ່ງເພີ່ມຄວາມເຄືອງແຄນໃຫ້ແກ່ຊາວນາ. ຂະບວນການປົດປ່ອຍຊາດຂອງປະຊາິຊົນບັນດາເຜົ່າອອກຈາກແກປົກຄອງຂອງຕວກກີໄດ້ເພີ່ມຂຶ້ນຢ່າງຮຸນແຮງ.

ໜຶ່ງໃນຮູບແບບການຕໍ່ສູ້ເພື່ອປົດປ່ອຍຊາດຂອງປະຊາຊົນບັນດາເຜົ່າຢູ່ ບູນກາລີທຳອິດແມ່ນແມ່ນຂະບວນການຕໍ່ສູ້ເພື່ອຮຽກຮ້ອງສິດເປັນເຈົ້າຂອງຕົນເອງຂອງໂບດ. ຊົນຊັ້ນນາຍທຶນເປັນຜູ້ນຳພາຂະບວນການຕໍ່ສູ້ໂດຍໄດ້ຮັບການສະໜັບສະໜູນຈາກຊາວນາ ແລະ ນາຍຊ່າງຫັດຖະກຳ. ພວກເຂົາຮຽກຮ້ອງໃຫ້ນັກບວກບູນກາລຮມີສິດໃນການປົກຄອງຕົນເອງ ແລະ ໜ້າທີ່ຂອງສາສະໜາອິດສະລາມຕ້ອງໄດ້ມີການຄັດເລືອກຊາວບູນກາລາຈຳນວນໜຶ່ງ ແລະ ແຍກຕົວອອກຈາກການຄວບຄຸມນັກບວດຊັ້ນສູງຊາງເກຼັກຢູ່ທີ່ກົງສະຕັງຕີນົບ. ທາດແທ້ຂອງການຕໍ່ສູ້ນີ້ແມ່ນບໍ່ພຽງຕໍ່ສູ້ຕ້ານກັບການຈຳກັດຮັດແຄບທາງດ້ານສາສະໜາແຕ່ຍັງມີຈຸດປະສົງທາງດ້ານການເມືອງອີກນັ້ນກໍ່ຄືຕ້ານກັບແອກປົກຄອງຂອງຕວກກີ.

ຜູ້ທີ່ມີບົດບາດສຳຄັນທຳອິດໃນຂະບວນການຕໍ່ສູ້ດ້ວຍກຳລັງປະກອບອາວຸດຂອງບູນກາລີ ພື່ອປົດແອກປົກຄອງຂອງຕວກກີແມ່ນນັກປະພັນປະຕິວັດທີ່ມີຊື່ສຽງນັ້ນກໍ່ຄື ເກອອກສະກີ ຣາຄົບສກີ (1821-1867) ທ່ານໄດ້ຫຸ້ມເທຊີວິດເຂົ້າໃນຂະບວນການຕໍ່ສູ້ດັ່ງກ່າວເພື່ອປົດປ່ອຍປະຊາຊົນບັນດາເຜົ່າ. ທ່ານໄດ້ກະກຽມກຳລັງທະຫານປະກອບອາວຸດ, ເປັນພັນທະມິດກັບ ແຊກບີ. ດຳເນີນການຕໍ່ສູ້ປົດປ່ອຍອອກຈາກແອກປົກຄອງຂອງຕວກກີ. ແຕ່ທຸກແຜນການລ້ວນແຕ່ຫຼົ້ມເຫຼວຍ້ອນບໍ່ມີການພົວພັນກັບປະຊາຊົນໃນທ້ອງຖິ່ນຕ່າງໆ ແລະ ບໍ່ອີງໃສກຳລັງມວນຊົນ.

ນັກປະຕິວັດປະຊາທິປໄຕຜູ້ເກັ່ງກ້າ, ຜູ້ຈັດຕັ້ງການປະຕິວັດທີ່ສະຫຼາດສ່ອງໃສ ວາຊິນ ແລບສະກີ (1837-1873) ໄດ້ສ້າງຕັ້ງຄະນະກຳມະທິການປະຕິວັດທ້ອງຖິ່ນຂຶ້ນ ໃນຂົງເຂດການຈັດຕັ້ງປະຕິວັດທີ່ກວ້າງຂວາງຂອງກຳລັງມວນຊົນໃນບູນກາລີ. ທ່ານກະກຽມທັບມ້າງແອກປົກຄອງຂອງຕວກກີດ້ວຍການເຮັດການປະຕິວັດ, ສ້າງຕັ້ງປະເທດສາທາລະນະລັດ ປະຊາທິປະໄຕ ບູນກາລີ. ຕາມແນວຄິດຂອງທ່ານແມ່ນຈະສ້າງສັງຄົມໃຫ້ເປັນສັງຄົມທີ່ມີຄວາມສະເໝີພາບຢ່າງສົມບູນໃຫ້ແກ່ປະຊາຊົນ. ທ່ານ ຕະໜັກ ແລະ ຄຳນຶງສະເໜີວ່າ: ກຳລັງພື້ນຖານຂອງການຕໍ່ສູ້ແມ່ນປະຊາຊົນບັນດາເຜົ່າ. ໃນການການຕໍ່ສູ້ເພື່ອປົດແອກປົກຄອງຂອງພວກສັກດິນາຕວກກີ ປະຊາຊົນຕວກກີ ແລະ ປະຊາຊົນບູນກາລີລ້ວນແຕ່ໄດ້ຮັບຜົນປະໂຍດຮ່ວມກັນ. ສະນັ້ນ,ຕ້ອງຈັບມືກັນຕໍ່ສູ້ຕ້ານກັບພວກສັກດິນາຕວກກີ.

ເຊິ່ງຕ່າງຈາກນັກປະພັນ ວາຊິນແລບສະກີ, ນັກປະພັນ, ນັກເຄື່ອນໄຫວທາງສັງຄົມແມ່ນທ່ານ ຫຼຸຍແບນກາຣາເວລົບ (ປີ 1837-1879) ບໍ່ນຳສະເໜີແຜນການຊັດເຈນ ແຕ່ດຳເນີນການປົດປ່ອຍບູນກາລີດ້ວຍວິທີການເປັນພັນທະມິດກັບບັນດາປະເທດບ້ານໃກ້ເຮືອນຄຽງ ໂດຍສະເພາະແມ່ນ ແຊກບີ. ເຖິງວ່າຈະມີແນວຄິດຕ່າງກັນ

ລະຫວ່າງ ອາຊີນ ແລບສະກີ ແລະ ຫຼູຍແບນ ກາຣາເວລິບ ພວກເຂົາໄດ້ຮ່ວມມືກັນຕໍ່ສູ້ປົດປ່ອຍປະເທດຊາດບ້ານເມືອງ ແລະ ຮອດປີ 1870 ໄດ້ສ້າງຕັ້ງຄະນະກຳມະທິກຳສູນກາງປະຕິວັດ ບູນກາລີ ເພື່ອນຳພາຂະບວນການຕໍ່ສູ້, ດຳເນີນການໂຄ່ນລົ້ມແອກກົດຂີ່ຂູດຮີດຂອງຕວກກີ ແລະ ສ້າງຕັ້ງພັນທະມິດປະຊາຊົນບັນດາເຜົ່າເສລີເຂດປະເທດເດນມາກ.

ຂະບວນການຕໍ່ສູ້ປະຕິວັດ ບູນກາລີສືບຕໍ່ຂະຫຍາຍຕົວໃນຊຸມປີ 70 ພາຍໃຕ້ການນຳພາຂອງ ຄຣິດໂຕ ໂບແລັບ ເປັນນັກຮົບ, ເປັທັງນັກໜັງສືພິມທີ່ມີຄວາມສາມາດທັງເປັນນັກປະຊາທິປະໄຕ ປະຕິວັດ. ໃນປີ 1973 ທ່ານໄດ້ເປັນປະທານຂອງຄະນະກຳມະທິການປະຕິວັດບູນກາລີ. ຂະບວນການຕໍ່ສູ້ເກີດຂຶ້ນ2 ຄັ້ງໃນປີ 1873 ແລະ ປີ 1876 ລ້ວນແຕ່ຖືກປາຣາໄຊລົງ. ພາຍຫຼັງສົງຄາມຣັດເຊຍ-ຕວກກີ (ປີ1877-1878) ໄດ້ຖືກຍົກເລີກ. ບັນດາມະຫາອຳນາດໄດ້ຮຽກປະຊຸມກັນຢູ່ເບີລິນໃນປີ 1878 ຍອມຮັບຮູ້ດິນແດນເອກະລາດບາງສ່ວນຂອງບູນກາລີ ຢູ່ທາງພາກເໜືອຕາມສາຍພູບານກັງ. ສ່ວນທາງພາກໃຕ້ແມ່ນຍັງຂຶ້ນກັບປະເທດຕວກກີຢູ່. ນັ້ນແມ່ນບາດກ້າວທຳອິດຂອງຄວາມເປັນເອກະລາດຢູ່ບູນກາລີ. ປະຊາຊົນບູນກາລີຍັງຕ້ອງສືບຕໍ່ດຳເນີນການຕໍ່ສູ້ເປັນເວລາອັນຍາວນານເພື່ອຕ້ານກັບຕວກກີ ແລະ ຕ້ານກັບການຄຸ້ມຄອງຂອງບັນດາປະເທດມະຫາອຳນາດໃນເອີຣົບຄືປະເທດເຢຍລະມັນ, ໂອຕຣິດ, ຮົງກາລີ, ຣັດເຊຍ...ທີ່ມີຄວາມຕ້ອງການມ້າງເພ ຕັດແບ່ງບູນກາລີ.

### 3. ຂະບວນການຕໍ່ສູ້ປະຕິວັດຂອງປະເທດແຊກບີ, ອານບານີ ແລະ ບັນດາປະເທດອື່ນໆ.

ຮອດກາງສະຕະວັດທີ 19 ແຊກບີເປັນຂົງເຂດໜຶ່ງທີ່ຂຶ້ນກັບ ແລະ ຢູ່ໃຕ້ການປົກຄອງຂອງຕວກກີປະມານຊຸມປີ 50-70 ຂອງສະຕະວັດທີ 19 ບວກກັບການກຳເນີດປະເທດທຶນນິຍົມຢູ່ປະະວິບເອີຣົບເຮັດໃຫ້ຂະບວນການປົດປ່ອຍຂອງແຊກບີຂະຫຍາຍຕົວ. ຍ້ອນການລຸກຮື້ຂຶ້ນຕໍ່ສູ້ຂອງນັກເຄື່ອນໄຫວປັນຍາຊົນກ້າວໜ້າ. ການປະຕິຮູບບາງຢ່າງໄດ້ເກີດຂຶ້ນໃນຊຸມປີ 60 ເຊັ່ນ: ການສ້າງໂຮງຮຽນມັດທະຍົມທີ່ທັນສະໄໝ, ແກ້ໄຂບັນຫາການສຶກສາຊັ້ນສູງ, ສ້າງຕັ້ງສະຖາບັນວິຊາການທາງການທະຫານ, ເພີ່ມກຳລັງທະຫານເປັນ 15.000 ຄົນ, ຮ່າງກົດໝາຍ, ປະກາດສ້າງຕັ້ງລະບອບທີ່ມີຄວາມຍຸດຕິທຳ ແລະ ເອກະພາບໃນສັງຄົມ. ເຖິງແມ່ນວ່າຄວາມຂັດແຍ່ງຈະຮຸນແຮງຂຶ້ນເລື້ອຍໆລະຫວ່າງປະຊາຊົນແຊກບີກັບພວກຕວກກີ ຍັງບໍ່ທັນໄດ້ຮັບການແກ້ໄຂກໍ່ຕາມມາໃນປີ 1862 ຂະບວນການຕໍ່ສູ້ຕ້ານກັບຕວກກີໄດ້ລະເບີດຂຶ້ນຢູ່ ເບໂອກຣາດທີ່ແກ່ຍາວມາຮອດປີ 1867 ທະຫານຕວກກີຈິ່ງຖອນກຳລັງອອກຈາກແຊກບີຮອດປີ 1877 ແຊກບີສຳເລັດການປົດແອກປົກຄອງຂອງຕວກກີ ແລະ ກາຍເປັນປະເທດໜຶ່ງທີ່ມີຄວາມເປັນເອກະລາດ.

ອານບາດີແຕ່ໃດມາເບິ່ງວ່າເປັນຄືດັ່ງແຂວງໜຶ່ງທີ່ຂຶ້ນກັບຕວກກີ ລະດັບການຂະຫຍາຍຕົວທາງດ້ານເສດຖະກິດສັງຄົມ ອານບານີ ແມ່ນຊັກຊ້າທີ່ສຸດ. ຊີວິດການເປັນຢູ່ຂອງປະຊາຊົນທຸກຍາກລຳບາກ. ການພົວພັນກັບບັນດາປະເທດບ້ານໃກ້ເຮືອນຄຽງແມ່ນຖືກຕັດຂາດ. ການພົວພັນແບບສັກດີນາຍັງມີບົດບາດສຳຄັນໃນການປົກຄອງ. ພວກສັກດີນາທ້ອງຖິ່ນໄດ້ກາຍເປັນປະຕິການຂາຍຊາດໃຫ້ແກ່ຕວກກີ. ມວນຊົນສ່ວນໃຫຍ່ແມ່ນເປັນປໍລະປັກກັບພວກສັກດີນາ ຕວກກີ ຫຼາຍພັງພາກັນລຸກຂຶ້ນຕໍ່ສູ້ເພື່ອຄວາມເປັນເອກະລາດ ແຕ່ກໍ່ປາຣາໄຊລົງ. ຈຸດສຸດຍອດຂອງການປະຕິວັດໃນກາງສະຕະວັດທີ 19 ຢູ່ທະວີບເອີຣົບ ແມ່ນ ການທີ່ປະຊາຊົນອານບານີລຸກຂຶ້ນຕໍ່ສູ້ແຕ່ສິດອຳນາດໃນການນຳພາແມ່ນຕົກໃນກຳມືຂອງພວກສັກດີນາຜູ້ກ້າວໜ້າ. ພວກເຂົາຈິ່ງມີຄວາມເບື່ອໜ່າຍຕໍ່ພວກສັກດີ

ນາ ຕວກກີ ແຕ່ກໍ່ເປັນພຽງຂໍ້ຈຳກັດຂະບວນການຕໍ່ສູ້ເພື່ອຮຽກຮ້ອງສິດອຳນາດຂອງລະບອບສັກດີນາບໍ່ສາມາດຕອບສະໜອງຄວາມຕ້ອງການຂອງປະຊາຊົນໄດ້. ຍ້ອນແນວນັ້ນການປະຕິວັດອານບາຈິ່ງຈິ່ງຍັງສືບຕໍ່ດຳເນີນເປັນເວລາດົນນານໃນໄລຍະຕໍ່ມາ.

ພ້ອມດຽວກັນນັ້ນຂະບວນການຕໍ່ສູ້ໄດ້ແຜ່ລາມໄປຊົງເຂດອື່ນບໍລິເວນແຫຼມບານກັງເຊັ່ນ: ມອນເຕເນໂກ, ເຊີກ, ບອສເນຍ, ເຮີແຊກໂກວີນາ... ເຖິງວ່າຍັງມີຫຼາຍຂໍ້ຈຳກັດແຕ່ຂະບວນການຕໍ່ສູ້ຢູ່ທ້ອງຖິ່ນໄດ້ປະກອບສ່ວນເຮັດໃຫ້ອຳນາດການປົກຄອງຂອງຈັກກະພັດຕວກກີອ່ອນເພຍລົງ ແລະ ເຮັດໃຫ້ການປະຕິວັດປົດປ່ອຍປະຊາຊົນກ້າວຂຶ້ນສູ່ບາດກ້າວໃໝ່ທີ່ມີຄວາມກ້າວໜ້າ.

## ການປະຕິຮູບທາດດິນນາຢູ່ຣັດເຊຍໃນກາງສະຕະວັດທີ 19

## I. ສະພາບການຂອງລັດເຊຍໃນກາງສະຕະວັດທີ 19

### 1.ການຂະຫຍາຍຕົວທາງດ້ານເສດຖະກິດໃນເຄິ່ງຕົ້ນສະຕະວັດທີ 19

ກາງສະຕະວັດທີ 19 ປະເທດຣັດເຊຍຍັງແມ່ນປະເທດກະສິກຳຫຼ້າຫຼັງ, ການພົວພັນແບບສັກດີນາຍັງມີບົດບາດໃນຫຼາຍໃນການປົກຄອງ. ຕອນດິນເກືອບທັງໝົດຕົກຢູ່ໃນກຳມືຂອງພວກຂຸນນາງເຈົ້າທີ່ດິນ ແລະ ປະເທດຜະເດັດການທາດດິນນາ. ຮອດຕົ້ນຊຸມປີ 50 ຂອງສະຕະວັດທີ 19 ມີດິນ 20%ເທົ່ານັ້ນທີ່ຖືກນຳໃຊ້ເຂົ້າໃນການປູກຝັງ. ສິດໃນການເປັນເຈົ້າຂອງຊັບສິນໃນລະບອບສັກດີນາກາຍເປັນອຸປະສັກຕົ້ນຕໍຂອງການຂະຫຍາຍຕົວການຜະລິດຂອງປະເທດຣັດເຊຍ.

ໃນເວລາດຽວກັນນັ້ນ, ລັກສະນະທຳມະຊາດຂອງພື້ນຖານເສດຖະກິດກະສິກຳຄ່ອຍໆໄດ້ຮັບການປ່ຽນແປງ.ຄື: ເພີ່ມະວີການຜະລິດເຂົ້າສາລີເພື່ອຂາຍເປັນສິນຄ້າ, ເປີດກວ້າງການປູກພືດອຸດສະຫະກຳ, ຂະຫຍາຍການລ້ຽງສັດໃຫ້ກວ້າງອອກ ແລະ ການດຳເນີນທຸລະກິດປູ້ພືດທີ່ເປັນວັດຖຸດິບເພື່ອຕອບສະໜອງວັດຖຸດິບໃຫ້ໂຮງງານ. ການຈໍລະຈອນສິນຄ້າແມ່ນໄປເຖິງເຂດຊົນນະບົດ ໂດຍສະເພາະແມ່ນເຂດເສດຖະກິດຂະໜາດນ້ອຍຂະຫຍາຍຕົວ. ບາງບ່ອນມີການນຳໃຊ້ແຮງງານຮັບຈ້າງ, ມີການນຳໃຊ້ເຕັກນິກໃໝ່ໆທີ່ໄປຕາມທ່າອ່ຽງລັດທິທຶນນິຍົມ. ແຕ່ຮູບແບບການກົດຂີ່ຂູດຮີດຕາມຮູບແບບສັກດີນາ, ການເກັບພາສີຢ່າງໜັກ ແລະ ລະບົບຜູກຂາດທາດດິນນາເປັນອຸປະສັກຂັດຂວາງການປ່ຽນແປງໄປສູ່ລັດທິທຶນນິຍົມເຮັດໃຫ້ຊາວນາລົ້ມລະລາຍເປັນຈຳນວນຫຼວງຫຼາຍ ແລະ ເຮັດໃຫ້ຂໍ້ຂັດແຍ່ງລະຫວ່າງຊາວນາກັບພວກສັກດີນານັບມື້ຍິ່ງລົງເລິກໄປເລື້ອຍໆ.

ໃນເວລານີ້ການຜະລິດອຸດສະຫະກຳຢູ່ຣັດເຊຍມີການປ່ຽນແປງຢ່າງໃຫຍ່ຫຼວງ, ຄຽງຄູ່ກັນນັ້ນຜະລິດຕະພັນທາງດ້ານຫັດຖະກຳທີ່ມີມາແຕ່ດົນນານເຊັ່ນ: ແຜ່ນແພທີ່ເຮັດຈາກປ່ານ, ໜັງສັດ...ແມ່ນເລີ່ມມີການຂະຫຍາຍຕົວ. ຂະແໜງຫັດຖະກຳອື່ນເຊັ່ນ: ຕໍ່າແຜ່ນ, ການເຮັດເຄື່ອງປະດັບ, ເຄື່ອງໄມ້, ເຄື່ອງຫຼິ້ນ...ບັນດາທຸລະກິດຂະໜາດນ້ອຍນີ້ຂຶ້ນກັບພວກເຈົ້າຂອງທຸລະກິດໃຫຍ່. ນາຍຊ່າງຫັດຖະກຳຫຼາຍຄົນຕ້ອງລົ້ມລະລາຍ ແລະ ຖືກຕັດແຍກອອກຈາກັດຖຸດິບການຜະລິດ ແະລ ຈຳຕ້ອງໄປເຮັດວຽກຕາມໂຮງຈັກໂຮງງານ. ບັນດາຂະແໜງການຜະລິດຫັດຖະກຳເປັນສິນຄ້າຂໜາດນ້ອຍໄດ້ປະກົດຕົວຂຶ້ນ. ໃນຊຸມປີ 40 ຂອງສະຕະວັດທີ 19 ກຸ່ມການຜະລິດຫັດຖະກຳຮ່ວມອາຊີບເພີ່ມຂຶ້ນເປັນ0,5 ເທື່ອ, ມີ 2.800 ແຫ່ງ ແລະ ຈຳນວນກຳມະກອນກໍ່ເພີ່ມຂຶ້ນເປັນ 2,5 ເທື່ອ ໃນຈຳນວນ 85.000 ຄົນ ມີ 53.000 ຄົນ ແມ່ນເປັນແຮງງານຮັບຈ້າງຢ່າງສົມບູນ. ບັນດາກຸ່ມການຜະລິດຫັດຖະກຳຮ່ວມອາຊີບນັບມື້ນັບເຕີບໃຫຍ່ຂະຫຍາຍຕົວ ແລະ ນໍໃຊ້ກຳລັງແຮງງານນັບມື້ນັບຫຼາຍຂຶ້ນ.

ແຕ່ການຄົງຕົວຂອງລະບອບທາດດິນນາບໍ່ອະນຸຍາດໃຫ້ການຫັນສູ່ການຜະລິດໂດຍໃຊ້ເຄື່ອງກົນຈັກໃນຂແໜງອຸດສະຫະກຳໜັກຂະຫຍາຍຕົວກວ້າງອອກໃນກາງສະຕະວັດທີ 19 ຣັດເຊຍຜະລິດຖານເພີ່ມຂຶ້ນເປັນ 2 ເທົ່າໃນເວລານັ້ນອັງກິດຜະລິດໄດ້ 12 ເທົ່າ ອຸດສະຫະກຳຂອງຣັດເຊຍຍັງຕາມຫຼັງສິນຄ້າຂອງອັງກິດ, ຝຣັ່ງ ແລະ ອາເມຣິກາ.

ຄຽງຄູ່ກັບອຸດສະຫະກຳ, ຂະແໜງການຄ້າ ແລະ ການຄົມມະນາຄົມຂົນສົ່ງກໍ່ມີທ່າອ່ຽງກ້າວໜ້າ, ທ່າກຳປັ່ນ, ເສັ້ນທາງລົດໄຟເລີ່ມມີການສ້າງຂຶ້ນໃນລະດັບທີ່ຍັງຊັກຊ້າ. ໃນຊຸມປີ 40 ການຂົນສົ່ງ ຈໍລະຈອນສິນຄ້າໄດ້ມີການນຳໃຊ້ເຮືອ ທີ່ແລ່ນດ້ວຍເຄື່ອງຈັກອາຍນໍ້າ ແລະ ດຳເນີນການສ້າງທາງລົດໄຟຢູ່ ເປແຕັກບົວ-ມາດເຊີວາ, ວາກຊາວາ-ກຸງວຽນ, ປີແຕັກບົວ-ວາກຊາວາ.

ສະນັ້ນການຂະຫຍາຍຕົວຂອງເສດຖະກິດຣັດເຊຍໃນຕົ້ນສະຕະວັດທີ 19 ຈຶ່ງມີອຸປະສັກຂັດຂວາງຫຼາຍຢ່າງ. ການຂະຫຍາຍຕົວຂອງເສດຖະກິດທຶນນິຍົມເຮັດໃຫ້ລະບອບສັງຄົມສັກດີນາຖືກສັ່ນຄອນ. ແຕ່ອຳນາດການປົກຄອງຂອງລະບອບສັກດີນາຂໍ້ຂັດຂວາງເສັ້ນທາງທີ່ຣັັດເຊຍໃນການກ້າວເຂົ້າສູລັດທິທຶນນິຍົມ. ຂໍ້ຂັດແຍ່ດັ່ງກ່າວນັ້ນສະແດງອອກຢູ່ບ່ອນວ່າຄວາມບໍ່ເໝາະສົມລະຫວ່າງກຳລັງການຜະລິດກັບການພົວພັນການຜະລິດເຊິ່ງພາໃຫ້ເກີດມີຂະບວນການຕໍ່ສູ້ເກີດຂຶ້ນໃນສັງຄົມຢ່າງຮຸນແຮງ.

**2.ຂະບວນການຕໍ່ສູ້ຕ້ານລະບອບທາດດິນນາຢູ່ຣັດເຊຍ**



ພະເຈົ້ານິໂຄລາຍທີ 1

ນັບແຕ່ຕົ້ນສະຕະວັດທີ 19 ຂະບວນການຕໍ່ສູ້ຕ້ານກັບສັກດີນາໄດ້ລະເບີດຂຶ້ນຢ່າງຮຸນແຮງຢູ່ປະເທດຣັດເຊຍ. ຊາວນາບໍ່ຕ້ອງການເປັນທາດດິນນາອີກຕໍ່ໄປໄດ້ລຸກຂຶ້ນທຳການຄາດຕະກາເຈົ້າທີ່ດິນ, ຮຽກຮ້ອງໃຫ້ລົບລ້າງການເກັບພາສີ ແລະ ທຸກໜ້າທີ່ຂອງການເປັນທາດດິນນາ.

ສະນັ້ນປະມານປີ 1801-1825 ເກີດມີຂະບວນການຕໍ່ສູ້ຂອງຊາວນາເຖິງ 281 ຄັ້ງ. ຮອດປີ 1826-1850 ເພີ່ມຂຶ້ນເປັນ 576 ຄັ້ງ. ການເຄື່ອນໄຫວຕໍ່ຕ້ານພວກສັກດີນາທີ່ມີຊື່ສຽງໃນເວລານັ້ນແມ່ນຂະບວນການຕໍ່ສູ້ໃນປີ 1825 ຂອງພັກເດືອນທັນວາຢູ່ ເປແຕກບົວ. ຂະບວນການປະຕິວັດມີລັກສະນະນາຍທຶນ ທີ່ມີພວກຂຸນນາງກ້າວໜ້າໃຫ້ການສະໜັບສະໜູນຂະບວນການປະຕິວັດຂອງຊົນຊັ້ນເທິງແຕ່ ມີລັສະນະອ່ອນນ້ອຍ, ຍັງບໍ່ທັນມີຄວາມສາມາດໃນການປົກປ້ອງຕົນເອງ ຍ້ອນຂາດການວາງແຜນ ແລະ ຂາດການພົວພັນກັບກຳລັງມະຫາຊົນຈຶ່ງເຮັດໃຫ້ພວກເຂົາຖືກລະບອບສັກດີນາຣັດເຊຍນຳໂດຍພະເຈົ້ານິໂຄລາຍທີ1ປາບປາມໄດ້ຢ່າງໄວວາ.

ໃນເວລາດຽວກັນນັ້ນແນວຄິດລັດທິທຶນນິຍົມໄດ້ແຜ່ຂະຫຍາຍເຂົ້າມາຣັດເຊຍດ້ວຍຮູບແບບການຂຽນເປັນບົດປະພັນວັນນະຄະດີ. ບັນດາຜົນງານການປະພັນຂອງ ປູສະກິນ, ໂກໂກນ, ແຊບແຊນໂກ ແລະ ນັກປະພັນຄົນອື່ນໄດ້ສຶກສາແນວຄິດທີ່ມີຄວາມກ້າວໜ້າໃຫ້ຜູ້ໜຸ່ມນ້ອຍໃນເວລານັ້ນ. ນັກວິຈານ, ນັກປະພັນເບລິນສະກີ້ ໄດ້ປະກອບສ່ວນສຳຄັນໃນການເປັນຜູ້ນຳພາແນວຄິດເຮັດໃຫ້ບົດປະພັນຂອງຣັດເຊຍຂະຫຍາຍຕົວໃນຊຸມປີ 30-ປີ 40 ຂອງສະຕະວັດທີ 19. ກ່ຽວກັບແນວຄິດທາງດ້ານການເມືອງທ່ານແມ່ນນັກປະຊາທິປະໄຕ ປະຕິວັດຜູ້ທຳອິດຂອງຣັດເຊຍ ແລະ ເປັນຜູ້ທີ່ໃຫ້ການສະໜັບສະໜູນຂະບວນການຕໍ່ສູ້ຂອງປະຊາຊົນ. ທ່ານດຳເນີນການຕໍ່ສູ້ເພື່ອກຳຈັດລະບອບທາດດິນນາ ແລະ ລະບອບຜະເດັດການ, ຜ່ານຜ່າອຸປະສັກຂອງລະບອບການຄວບຄຸມ ເພື່ອຖ່າຍທອດແນວຄິດຂອງຕົນ. ປະກອບສ່ວນເຂົ້າໃນການສຶກສາແນວຄິດປະຕິວັດໃນໄລຍະຕໍ່ມາອີກດ້ວຍ.



ນັກປະພັນປູສະກິນຂອງຣັດເຊຍ

### 3.ສົງຄາມໄຄເມຍໃນປີ 1853-1856 ແລະ ສະພາບການສຸກງອມຂອງການປະຕິວັດ

ໃນເວລາທີ່ຂໍ້ຂັດແຍ່ງພາຍໃນປະເທດນັບມື້ນັບຮຸນແຮງຂຶ້ນເລື້ອຍໆນັ້ນ, ນິໂຄລາຍ1 ພັດຣິບໂຮມກຳລັງທັງໝົດໃນປະເທດເພື່ອເຮັດສົງຄາມຢູ່ໄຄເມຍ. ໃນສະຕະວັດທີ 19 ປະເທດລັດເຊຍປະກອບສ່ວນເປັນເໜືອນຜູ້ພິທັກຂອງທະວີບເອີຣົບ, ດຳເນີນການປາບປາມຂະບວນການຕໍ່ສູ້ຢູ່ໂປແລັນໃນປີ 1830, ຮົງກາລີ 1848, ຂັດຂວາງການທ້ອນໂຮມເຢຍລະມັນໃຫ້ເປັນເອກະພາບ, ໄດ້ດຳເນີນການປາບປາມຂະບວນການປະຕິວັດຝຣັ່ງເຖິງ 2 ຄັ້ງ ຮອດຕົ້ນຊຸມປີ 50 ຕ້ອງການຂະຫຍາຍດິນແດນຂອງຕົນຢູ່ທາງພາກຕາເວັນອອກ. ເຊິ່ງໃນເວລານັ້ນອັງກິດ ແລະ ຝຣັ່ງກໍ່ສວຍໂອກາດເອົາຕອນທີ່ຕວກກີອ່ອນເພຍເພື່ອຍຶດຄອງເອົາທ່າເຮືອຢູ່ກົງສະຕັງຕິນົບ, ຂັດຂວ່າງບໍ່ໃຫ້ເຮືອຂອງຣັດເຊຍຜ່ານຊ່ອງແຄບ ຊໍ້າຍັງນຳເອົາກຳລັງບຸກຕີເຂົ້າທ່າເຮືອຂອງຣັດເຊຍ. ຝ່າຍລັດເຊຍກໍ່ຕ້ອງການຮັກສາຊ່ອງແຄບນັ້ນໄວ່ເພື່ອຮັບປະກັນຄວາມປອດໄພຂອງການເດີນເຮືອໄປມາຂອງຕົນ. ຜ່ານໄລຍະເວລາໜຶ່ງໃນການຕໍ່ສູ້ທາງການທູດປີ 1853 ສົງຄາມໄດ້ລະເບີດຂຶ້ນ. ການເຮັດສົງຄາມລະຫວ່າງຣັດເຊຍ ແລະ ພວກພັນທະມິດອັງກິດ-ຝຣັ່ງ ຖືດເປັນສົງຄາມຮຸກຮານທີ່ບໍ່ມີຄວາມໝາຍຫຍັງ. ຕວກກີຫັນໄປຮ່ວມມືກັບອັງກິດ-ຝຣັ່ງແນໃສ່ເພື່ອໄດ້ສິດໃນການປົກຄອງປະຊາຊົນບັນດາເຜົ່າທີ່ຢູ່ອ້ອມຂ້າງ. ແຕ່ໃນເວລາທີ່ກຳລັງພັນທະມິດບຸກຕີເຂົ້າເຊວາສໂຕໂປເຊິ່ງເລີ່ມຕົ້ນໃນເດືອນກັນຍາ 1954 ແຕ່ກໍ່ຖືກປະຊາຊົນລັດເຊຍທຳການຕໍ່ສູ້ຢ່າງພິລາດອາດຫານ ສົງຄາມໄດ້ແກ່ຍາວຈົນຮອດປີ 1855 ຈຶ່ງຢຸດຕິລົງ. ຣັດເສຍເປັນຝ່າຍປາຣາໄຊ ຍ້ອນລະບອບການເມືອງທີ່ເນົ່າເໜັນ ເປື່ອຍເຍື່ອຍ, ເສດຖະກິດຫຼ້າຫຼັງ, ພາຫະນະໃນການເຮັດສົງຄາມບໍ່ທັນສະໄໝ ແລະ ຂາດແຄນກຳລັງອາວຸດ, ການກະກຽມຍັງບໍ່ທັນດີພໍ.



ສົງຄາມໄຄເມຍ ປີ 1853-1856

ການປາຣາໄຊສົງຄາມຂອງຣັດເຊຍຍິ່ງເຮັດໃຫ້ແນວຄິດການປະຕິວັດທີ່ສະສົມມາເປັນເວລາດົນນານມາເຖິງຈຸດສຸກງ່ອມ. ການຫຼົ້ມສະຫຼາຍ ແລະ ຄວາມທຸກຍາດລຳບາກເຮັດໃຫ້ປະຊາຊົນມີຄວາມບໍ່ພໍໃຈ ແລະ ຮູ້ສຶກເບື່ອໜ່າຍນັບມື້ນັບເພີ່ມຂຶ້ນ. ປະມານປີ 1858-1860 ຂະບວນລຸກຂຶ້ນຕໍ່ສູ້ຂອງທາດດິນນາຕ້ານກັບເຈົ້າທີ່ດິນໄດ້ລະເບີດຂຶ້ນຫຼາຍ 300 ຄັ້ງ. ພ້ອມດຽວກັນນັ້ນວິກິດການອັນໃຫຍ່ຫຼວງກໍ່ໄດ້ເກີດຂຶ້ນກັບພວກຊຸນນາງຈົນບໍ່ສາມາດດຳເນີນການປົກຄອບແບບເກົ່າໄດ້ອີກ. ອຳນາດການປົກຄອງທີ່ເປັນຕົວແທນສິດຜົນປະໂຫຍດຂອງສັກດີນາຖືກບັງຄັບໃຫ້ມີການປ່ຽນແປງລະບອບການເມືອງ ແລະ ສັງຄົມໃນປະເທດຄືນໃໝ່.

ໃນເວລາດຽວກັນນັ້ນໃນການຕໍ່ສູ້ທາງດ້ານກຳເມືອງໄດ້ກຳເນີດມີກຳລັງແຮງອັນໃໝ່ນັ້ນກໍຄືພວກນັກຮຽນຮູ້ປັນຍາຊົນ ນາຍທຶນນ້ອຍ. ເດີນຕາມແນວຄິດຂອງ ເບລິນສະກີ, ບັນດານັກປະພັນສາມັນຊົນທົ່ວໄປ ໂດໂບລຸຍບົບ, ແຊກນຸຍເຊບສະກີ ໄດ້ກາຍເປັນກົກເຄົ້າຂອງຝ່າຍປະຕິວັດປະຊາທິປະໄຕພວກເຂົາໄດ້ກຳນົດແຜນການປະຕິວັດປະຊາທິປະໄຕນາຍທຶນກ້າວໜ້າ ພ້ອມດຽວກັນນັ້ນຍັງວິພາກວິຈານຄວາມເນົ່າເໜັນຂອງລັດທິທຶນນິຍົມ ແລະ ຕ້ອງການໃຫ້ປະເທດຣັດເຊຍກ້າວໄປສູ້ລັດທິສັງຄົມນິຍົມ.



ເບລິນສະກີ

ຂະບວນການຕໍ່ສູ້ຂອງປະຊາຊົນບວກກັບການເຄືອນໄຫວຕໍ່ຕ້ານຂອງພວກປັນຍາຊົນປະຊາທິປະໄຕປະຕິວັດເຮັດໃຫ້ລະບອບທາດດິນນາມີການປ່ຽນແປງ. ຮອດຊຸມປີ 60 ຂອງສະຕະວັດທີ 19 ສະຖານະການປະຕິວັດກ້າວເຂົ້າສູ່ຈຸດສຸກງອມ.

## II. ການປະຕິວັດນາຍທຶນບໍ່ເຖິງຖ່ອງຢູ່ປະເທເຣັດເຊຍໃນຊຸມປີ 60-ປີ 70 ຂອງສະຕະວັດທີ 19

ຮອດຊຸມປີ 70 ຂອງສະຕະວັດທີ 19 ບັນຫາກຳກຳຈັດລະບອບທາດດິນນາຢູ່ຣັດເຊຍ ໄດ້ກາຍເປັນຄວາມຕ້ອງການຕົ້ນຕໍຂອງສັງຄົມ ແຕ່ມີສອງເສັ້ນທາງໃຫ້ເລືອກຄື: ເຮັດການປະຕິວັດ ແລະ ເຮັດການປະຕິຮູບບາງຢ່າງ. ປະຊາຊົນ ແລະ ພວກປະຊາທິໄປໄຕນາຍທຶນກ້າວໜ້າຕ້ອງການເຮັດການປະຕິວັດເພື່ອລົບລ້າງລະບອບສັກດີນາ ແຕ່ລັດຖະບານ ທີ່ມີ ພະເຈົ້າຊາ ອາເລັກຊານເດີ 2 ເປັນກະສັດ ແລະ ພວກຊຸນພັດຕ້ອງການເຮັດການປະຕິຮູບຄ່ອຍເປັນ

ຄ່ອຍໄປໃຊ້ເວລາດົນນານເພື່ອຮັກສາສິດຜົນປະໂຫຍດຊົນຊັ້ນປົກຄອງ. ຊົນຊັ້ນນາຍທຶນຜູ້ຫົວອ່ອນມີແນວຄິດອ່ຽງເອນໄປຕາມກະສັດ



ພະເຈົ້າອາເລັກຊານເດີ 2 ແຫ່ງລັດເຊຍ

ພະເຈົ້າຊາໄດ້ປະກາດອອກມາວ່າ: ຄວນເຮັດການປົດປ່ອຍປະຊາຊົນຕາມທິດທາງແຕ່ເທິງລົງລຸ່ມດີກວ່າປ່ອຍໃຫ້ພວກເຂົາປົດປ່ອນຕົງເອງແຕ່ລຸ່ມຂຶ້ນຫາເທິງ.

ຜ່ານໄລຍະເວລາໃນການສົນທະນາຖົກຖຽງກັນມາໃນວັນທີ 19 ກຸມພາ 1861 ພະເຈົ້າຊາໄດ້ຮ່າງກົດໝາຍປົດປ່ອຍປະຊາຊົນທີ່ຂຶ້ນກັບເຈົ້າທີ່ດິນ. ປະຊາຊົນໄດ້ຮັບສິດເສລີພາບ, ມີສິດຄອບຄອງກຳມະສິດສ່ວນຕົວ, ມີສິດເຂົ້າຮ່ວມເຄື່ອນໄຫວທາງດ້ານການຄ້າ ແລະ ອຸດສະຫະກຳ ໄດ້ຮັບການສຶກສາແລກປ່ຽນ, ຕິດຕໍ່ພົວພັນກັບຄົນອື່ນ. ການປົດປ່ອຍຊາວນາຄືແນວນັ້ນເຮັດໃຫ້ກຳລັງແຮງງານຮັບຈ້າງເພີ່ມຂຶ້ນ, ເຊິ່ງເປັນການສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການຂະຫຍາຍຢ່າງໄວວາຂອງກຳລັງການຜະລິດ ແຕ່ໃນຄວາມເປັນຈິງແລ້ວສິດທິຂອງປະຊາຊົນຖຍັງຖືກຈຳກັດເພາະວ່າພວກເຂົາຍັງຂຶ້ນກັບເສດຖະກິດຂອງພວກເຈົ້າທີ່ດິນເປັນເວລາດົນນານຕ້ອງໄດ້ຈ່າຍເງິນເພື່ອໄຖ່ຖອນຕົນເອງຢ່າງໜັກໃຫ້ພວກເຈົ້າທີ່ດິນ. ພວກເຂົາມີຄວາມສາມາດໜ້ອຍດຽວໃນການເລືອກວຽກເຮັດງານທຳເພາະພັນທະໃນການຈ່າຍເງິນໄຖ່ຕົນເອງໜັກໜ່ວງຈົນບໍ່ສາມາດຈ່າຍໄດ້ພວກເຂົາຈຳເປັນຕ້ອງຫັນໜ້າເຂົ້າສູ່ຕອນດິນເພື່ອສືບຕໍ່ທການຜະລິດໃຫ້ເຈົ້າທີ່ດິນຕໍ່ໄປ.

ການປັບຕົວການພົວພັນທາງດ້ານເສດຖະກິດລະຫວ່າງເຈົ້າທີ່ດິນ ແລະ ຊາວນາໄດ້ເກີດຂຶ້ນພາຍໃນເວລາ 2 ປີ. ເຈົ້າທີ່ດິນໄດ້ຮ່າງກົດລະບຽບປະລິມານຕອນດິນຂອງປະຊາຊົນທີ່ຖືກນຳໃຊ້ ແລະ ໜ້າທີ່ທີ່ພວກເຂົາຕ້ອງປະຕິບັດຕາມກົດລະບຽບນັ້ນ. ໃນເວລາຮ່າງກົດລະບຽບນັ້ນຊາວນາຕ້ອງຍອມຮັບບັນດາພັນທະຊົ່ວຄາວ ຄືຮັບໃຊ້ເຈົ້າທີ່ດິນ. ພວກເຂົາພຽງແຕ່ໄດ້ຮັບເສລີພາບ ແລະ ເປັນຜູ້ທີ່ມີສິດໃນການຄອບຄອງຊັບສິນສ່ວນດ້ວຍການໄຖ່ຖອນດິນຈາກເຈົ້າທີ່ດິນຄືນມາ. ສະນັ້ນໄລຍະເວລາປະຕິບັດຄຳສັ່ງໄຖ່ຖອນຈິ່ງເກີດຂຶ້ນຊ້າ ແລະ ໜັກໜ່ວງ.

ຄຳສັ່ງປົດປ່ອຍ ທາດດິນນາ ໃນວັນທີ 19 ກຸມພາ ປີ 1861 ເຮັດໃຫ້ຊາວນາຜິດຫວັງຢ່າງຍິ່ງ. ເຮັດໃຫ້ຂະບວນການລຸກຮື້ຂຶ້ນຕໍ່ສູ້ແຜ່ລາມໄປທົ່ວທຸກບ່ອນ. ຂະບວນການຕໍ່ສູ້ດ້ວຍກຳລັງປະກອບອາວຸດໄດ້ລະເບີດຂຶ້ນລະຫວ່າງຊາວນາ ກັບກຳລັງທະຫານພະເຈົ້າຊາຂອງຣັດເຊຍ.

ຄຽງຄູ່ກັບຊາວນານັ້ນ ພວກນັກຮຽນຮູ້ປັນຍາຊົນ, ນັກສຶກສາກໍ່ເຂົ້າຮ່ວມຂະບວນການຕໍ່ສູ້. ຂະບວນການຕໍ່ສູ້ຂອງປະຊາຊົນແຜ່ລາມໄປທົ່ວທຸກບ່ອນຕາມຕົວເມືອງ. ພວກປັນຍາຊົນກ້າວໜ້ານຳພາໂດຍແຊກເຊັກສະກີເພື່ອມທະວີການເຄື່ອນໄຫວ. ສຳນັກໜັງສືພິມໄດ້ພິມແຜ່ນພັບຖະແຫຼງການອອກມາເພື່ອນຳສະເໜີຄວາມຕ້ອງການປົດປ່ອຍຢ່າງແທ້ຈິງຂອງຊາວນາພ້ອມກັບການປົດປ່ອຍຕອນດິນທັງໝົດຂອງພວກເຂົາ, ໂຄ່ນລົ້ມແອກການປົກຄອງ ແລະ ສ້າງຕັ້ງລະບອບປະຊາທິປະໄຕ, ລົບລ້າງລະບອບລາຊາທິປະໄຕ ພາຍໃຕ້ຄຳຂວັນທີ່ວ່າ: "ສາທາລະນະລັດສັງຄົມນິຍົມປະຊາທິປະໄຕຣັດເຊຍ" ທ້າຍປີ 1861 ອົງການຈັດຕັ້ງແບບປິດລັບໄດ້ຖືກຳເນີດຂຶ້ນນັ້ນກໍ່ຄື "ດິນນາ ແລະ ເສລີພາບ" ໂດຍເດີນຕາມແນວຄິດຂອງແຊກເນີເຊບສະກີ ຖືກລັດຖະບານພະເຈົ້າຊາຂັດຂວາງ ແລະ ກົດດັນຢ່າງໜັກໜ່ວງ.

ຂະບວນການຕໍ່ສູ້ຊົນຊັ້ນຂອງປະຊາຊົນບັງຄັບໃຫ້ລັດຖະບານພະເຈົ້າຊາຣັດເຊຍຕ້ອງໄດ້ຮີບຮ້ອນດຳເນີນການໂຄ່ນລົ້ມລະບອບທາດດິນນາ. ການປະຕິຮູບນາຍທຶນໄດ້ເກີດຂຶ້ນໃນປີ 1864-1874 ເນື້ອໃນສຳຄັນແມ່ນຮັດແຄບທາງດ້ານການເມືອງ, ສາທາລະນະສຸກ, ການສຶກສາ. ສຳນັກງານກົດລະບຽບທ້ອງຖິ່ນ ທີ່ຖືກເລືອກຕັ້ງໂດຍເງື່ອນໄຂເຄັ່ງຄັດເຂັ້ມງວດແນ່ໃສ່ຊັຍສິນ, ແນໃສ່ຮັບປະກັນການຄຸ້ມຄອງຂອງພວກຂຸນນາງເຈົ້າທີ່ດິນ. ຢູ່ໃນຕົວເມືອງສະຖາບັນ ດູມາໄດ້ຮັບການເລືອກຕັ້ງຕາມຂໍ້ກຳນົດກ່ຽວກັບຊັບສິນບັດທີ່ມີໃນກຳມືຂອງພໍ່ຄ້າໃຫຍ່, ນັກອຸດສະຫະກຳໃຫຍ່ແລະ ເຈົ້າຂອງຮ້ານທີ່ໃຫ້ເຊົ່າ ແຕ່ຂໍ້ກຳນົດຂອງສະຖາບັນ ດູມາ ມີຜົນບັງຄັບໃຊ້ພາຍຫຼັງທີ່ພະເຈົ້າຊາໃຫ້ສັດຕະຍາບັນ. ການປະຕິຮູບ ຕຸລາການໂດຍໃຊ້ວິທີການແບບມີສ່ວນຮ່ວມ, ເປັນສາທາລະນະ, ມີທະນາຍປ້ອງກັນປະເທດທີ່ຍັງບໍ່ທັນປ່ຽນອຳນາດໃຫ້ສານຕັດສິນເປັນເຄື່ອງມືປົກຄອງໂດຍກົງຂອງລະບອບທາດດິນາ. ໃນກຳລັງທະຫານ, ລະບອບການຮັບລາດຊະການທາງການທະຫານປ່ຽນມາເປັນລະບອບທີ່ມີການຮັກສະໝັກທະຫານແທນ. ບັນດາຮ່ອງຮອຍຂອງລະບອບສັກດິນາແມ່ນຍັງມີໃຫ້ເຫັນໃນສັງຄົມ ຣັດເຊຍ.

## III. ສະຫຼຸບ

ໃນຂະນະທີ່ບັນດາປະເທດໃນທະວີບເອີຣົບດຳເນີນການປະຕິວັດນາຍທຶນຢູ່ນັ້ນ ປະເທດຣັດເຊຍແມ່ນກຳລັງຢູ່ໃນໄລຍະເຮັດການປະຕິຮູບຊາວນາ. ຊົນຊັ້ນນາຍທຶນຣັດເຊຍຍັງອ່ອນນ້ອຍທີ່ສຸດເຊິ່ງບໍ່ມີບົດບາດ ແລະ ບໍ່ໄດ້ຖືກບັນທຶກໄວ້ໃນປະຫວັດສາດຂອງການເປັນຜູ້ນຳພາຂະບວນການປະຕິວັດຕ້ານລະບອບສັກດິນາ. ລັດຖະບານພະເຈົ້າຊາລັດເຊຍໄດ້ປະກາດປະຕິຮູບເພື່ອລົບລ້າງການລຸກຂຶ້ນຕໍ່ສູ້ຢ່າງແຂງແກ່ນຂອງມວນຊົນ, ເພື່ອຮັກສາບົດບາດໃນການປົກຄອງ ແລະ ປົກປ້ອງສິດຜົນປະໂຫຍດຊົນຊັ້ນຂຸນນາງເຈົ້າທີ່ດິນ.

ກົດລະບຽບໃນການໂຄ່ນລົ້ມລະບອບທາດດິນນາໃນປີ 1861 ແລະ ບັນດາການປະຕິຮູບໃນໄລຍະຕໍ່ມາເປັນການສ້າງເງື່ອນໄຂຕໍ່ກັບການຂະຫຍາຍຕົວຂອງລັດທິທຶນນິຍົມຢູ່ປະເທດຣັດເຊຍ. ໄດ້ເພີ່ມກຳລັງການຜະລິດເຂົ້າໃນຂະແໜງອຸດສະຫະກຳ, ຍົກສູງບົດບາດທາງການເມືອງໃຫ້ແກ່ພວກນາຍທຶນປ່ຽນປະເທດຣັດເຊຍທີ່ມີລະບອບພະເຈົ້າຊາມາເປັນປະເທດລາຊາທິປະໄຕ ນາຍທຶນ.

ການປະຕິວັດຊາວນາເປັນການປະຕິວັດໜຶ່ງທີ່ມີລັກສະນະທຶນນິຍົມທີ່ພວກສັກດີນາເປັນຜູ້ດໍາເນີນການປະຕິຮູບ. ນັ້ນແມ່ນບາດກ້າວປ່ຽນແປງໃໝ່ຂອງປະເທດຣັດເຊຍໄປສູ່ປະເທດລາຊາທິປະໄຕ ນາຍທຶນ.

ການປະຕິຮູບຢູ່ຣັດເຊຍເປັນການປະຕິຮູບບໍ່ເຖິງຖ່ອງເຮັດໄດ້ເຄິ່ງທາງ ເພາະຍັງຄົງຮັກສາຮ່ອງຮອຍຫຼາຍຢ່າງຂອງລະບອບສັກດີນາໄວ້ເຊິ່ງສະແດງອອກທາງດ້ານການເມືອງ, ເສດຖະກິດສັງຄົມ. ອໍານາດຜະເດັດການຍັງຕົກຢູ່ໃນກໍາມືຂອງຊົນຊັ້ນຂຸນນາງເຈົ້າທີ່ດິນ. ຫ້ອງການປົກຄອງທ້ອງຖິ່ນ, ສະຖາບັນນະຄອນດູມາ, ສານຍຸດຕິທໍາ, ການສຶກສາ, ໜັງສືພິມ...ລ້ວນແຕ່ຂຶ້ນກັບພະເຈົ້າຊາຣັດເຊຍ. ດິນດອນຕອນຫຍ້າທັງໝົດແມ່ນຍັງຕົກຢູ່ໃນກໍາມືຂອງພວກຂຸນນາງ. ສ່ວນຊາວນາຈໍາຕ້ອງຍອມຮັບການເກັບພາສີຢ່າງໜັກ, ການປະກອບສ່ວນອັນຫຍຸ້ງຍາກສັບສົນຂອງຊາວນາຄືລະບອບການມີພັນທະຊົ່ວຄາວ. ມວນຊົນຫຼາຍລ້ານຄົນໄດ້ຮັບການປົດປ່ອຍແຕ່ໃນຄວາມຈິງແລ້ວແມ່ນຍັງບໍ່ສາມາດປົດປ່ອຍໄດ້ເພາະພວກເຂົາຍັງຕ້ອງອອກແຮງງານຮັບໃຊ້ຢູ່ຕາມຕອນດິນຂອງພວກຂຸນນາງ ເຊິ່ງມັນບໍ່ໄດ້ສ້າງພື້ນຖານໃຫ້ແກ້ການກໍາເນີດຊົນຊັ້ນກໍາມະກອນເສລີ ໃນຮູບແບບການຜະລິດຕາມລັດທິທຶນນິຍົມ ຫຼື ຊາວນາເສລີ ທີ່ຍັງເປັນອອກແຮງງານທີ່ຂຶ້ນກັບພວກຂຸນນາງໃນຂອງເຂດດິນດອນຕອນຫຍ້າຂອງຂຸນນາງ. ບັນສິ່ງສິ້ງກີດຂວາງການຂະຫຍາຍຕົວຂອງເສດຖະກິດທຶນນິຍົມແມ່ນຍັງບໍ່ທັນໄດ້ຮັບການແກ້ໄຂຢ່າງສິ້ນເຊີງ.

## ຍຸກແຫ່ງຄວາມຈະເລີນຮຸ່ງເຮືອງຂອງລັດທິທຶນນິຍົມຢູ່ອັງກິດໃນກາງສະຕະວັດທີ 19

## I. ການຂະຫຍາຍຕົວຂອງລັດທິທຶນນິຍົມອັງກິດໃນຊຸມປີ 50-60 ຂອງສະຕະວັດທີ 19

### 1. ການຂະຫຍາຍຕົວທາງດ້ານເສດຖະກິດໃນຊຸມປີ 50-60 ຂອງສະຕະວັດທີ 19

ຮອດຊຸມປີ 50-60 ຂອງສະຕະວັດທີ 19 ພື້ນຖານອຸດສະຫະກໍາຂອງອັງກິດຂະຫຍາຍຕົວຢ່າງໝັ້ນຄົງ ແລະເປັນປະເທດນໍາໜ້າທາງງດ້ານອຸດສະຫະກໍາຂອງໂລກ ທຸກຂະແໜງອຸກສະຫະກໍາມີລະດັບການເພີ່ມຂຶ້ນຢ່າງໄວວາ.

ພາຍໃນເວລາ 20 ປີ ແຕ່ປີ 1850-1870 ປະລິມານການຂຸດຄົ້ນຖ່ານຫີນເພີ່ມຂຶ້ນເປັນ 3 ເທົ່າ (ຈາກ 34 ລ້ານໂຕນເປັນ 110 ລ້ານໂຕນ) ຜະລິດໂລຫະປະສົມລະຫວ່າງເຫຼັກ ແລະ ກາກບອນເພີ່ມຂຶ້ນຫຼາຍກວ່າ 4 ເທົ່າຕົວ (ຈາກ 1,4 ລ້ານໂຕນເປັນ 6 ລ້ານໂຕນ), ຜະລິດຕະພັນຈາກຝ້າຍເພີ່ມ21-23 ເທື່ອ.

ປະເທດອັງກິດໄດ້ກາຍເປັນໂຮງງານຂະໜາດໃຫຍ່ຂອງໂລກ. ໃນປີ 1850 ສາມາດຜະລິດໂລຫະປະສົມລະຫວ່າງເຫຼັກ ແລະ ກາກບອນໄດ້ເຄິ່ງໜຶ່ງຂອງປະລິມານການຜະລິດທັງໝົດໃນໂລກ, ຖານຫີນໄດ້ຫຼາຍກວ່າເຄິ່ງໜຶ່ງຂອງໂລກ, ຜະລິດຕະພັນຈາກຝ້ຍຜະລິດໄດ້ເກືອບເຄິ່ງໜຶ່ງຂອງປະລິມານການຜະລິດໃນໂລກ.

ປັດໃຈສໍາຄັນທີ່ເຮັດໃຫ້ເສດຖະກິດຂະຫຍາຍຕົວຢ່າງແຂງແຮງແມ່ນຂະບວນການປະຕິວັດອຸດສະຫະກໍາຂອງງອັງກິດສໍາເລັດໄວ ໃນຂະນະທີ່ບັນດາປະເທດອື່ນພວມເລີ່ມຕົ້ນ ຫຼື ກໍາລັງດໍາເນີນຢູ່ແຕ່ມີລັກສະນະອ່ອນນ້ອຍ. ຍ້ອນແນວນັ້ນປະເທດອັງກິດຈຶ່ງມີບົດບາດ ແລະ ເປັນມະຫາອໍານາດທາງດ້ານອຸດສະຫະກໍາໜັກ ມີຕະຫຼາດຈໍາໜ່າຍສິນຄ້າບໍລິໂພກ, ເຄື່ອງກົນຈັກ, ສິນຄ້າຢ່າງກວ້າງຂວາງ ແລະ ສາມາດນໍາເອົາຜົນກໍາໄລມະຫາສານມາສູ່ອັງກິດ.

ການເພີ່ມຂຶ້ນຢ່າງໄວວາຂອງເສັ້ນທາງລົດໄຟ ແລະ ການປ່ຽນແປງຂະໜານໃຫຍ່ຂອງພາຫະນະຄົມມະນົມຄົມຂົນສົ່ງທາງທະເລ ສິ່ງຜົນສະທ້ອນອັນໃຫຍ່ຫຼວງຕໍ່ການຜະລິດອຸດສະຫະກໍາ. ປະເທດອັງກິດໄດ້ເປັນບ່ອນຈໍາໜ່າຍເຮືອກໍາປັ່ນໃຫ້ບັນດາປະເທດອື່ນໃນໂລກ. ມີການນໍາໃຊ້ເຮືອທີ່ແລ່ນກ້ອຍເຄື່ອງຈັກອາຍນໍ້າ ຍ້ອນແນວນັ້ນຈຶ່ງຮຽກຮ້ອງໃຫ້ມີການພັດທະນາຂະແໜງຫຼອມໂລຫະ ແລະ ເຄື່ອງກົນຈັກ. ເພີ່ມທະວີການຂົນສົ່ງສິນຄ້າເພື່ອໄປຂາຍ

ທົ່ວທຸກບ່ອນຊຸກຍູ້ໃຫ້ການໂຫລະຄົມມະນາຄົມນາຍທຶນຂະຫຍາຍຕົວ. ໃນໄລຍະ 25 ປີແຕ່ປີ 1845-1870 ປະເທດອັງກິດສົ່ງອອກເຄື່ອງຈັກເພີ່ມຂຶ້ນເປັນ 10 ເທົ່າ.

ເຫດການທີ່ມີຄວາມໝາຍອັນໃຫຍ່ຫຼວງໃຫ້ແກ່ການພັດທະນາເສດຖະກິດຂອງອັງກິດແມ່ນການຂຸດຄົ້ນບໍ່ຄຳຢູ່າຄາລີຟໍເນຍ ອາເມຣິກາເໜືອໃນປີ 1847 ຢູ່ອອດສະເຕເລຍໃນປີ 1851. ຄຳສ່ວນໃຫຍ່ທີ່ຖືກຂຸດຄົ້ນແມ່ນຕົກຢູ່ໃນກຳມືຂອງນັກທຸລະກິດ ແລະ ທະນາຄານຂອງອັງກິດ. ເພາະວ່າໃນເວລານັ້ນມີພຽງແຕ່ປະເທດອັງກິດເທົ່ານັ້ນທີ່ມີຄວາມສາມາດໃນການຂຸດຄົ້ນ, ແປຮູບຄຳ ແລະ ຂົນສົ່ງສິນຄ້າໄດ້ຢ່າງໄວວາເພື່ອນຳມາແລກປ່ຽນຄຳໃຫ້ຫຼາຍສິບພັນຄົນ ທີ່ກຳລັງຂຶ້ນກັບເມືອຄາລີຟໍເນຍ ແລະ ອອດສເຕເລຍ. ສິນຄ້າສົ່ງອອກຂອງອັງກິດໄປສູ່ອອດສເຕເລຍໃນຊ່ວງໄລຍະ 10 ປີ ແຕ່ປີ 1852-1861 ເພີ່ມຂຶ້ນເປັນ 60 ເທົ່າຖ້າທຽບໃສ່ 10 ປີກ່ອນໜ້ານີ້.

ປັດໄຈທີ່ພາໃຫ້ອຸດສະຫະກຳຂະຫຍາຍຕົວໄວຮຽກຮ້ອງໃຫ້ອະນາເຂດໂຮງຈັກໂຮງງານຕ້ອງມີການປ່ຽນແປງ. ບັນດາໂຮງຈັກໂຮງງານທີ່ມີກຳມະກອນຫຼາຍພັນຄົນເຮັດວຽກກາຍເປັນເລື່ອງປົກກະຕິທີ່ມີໃຫ້ເຫັນທົ່ວໄປໃນສັງຄົມ. ມີໂຮງຈັກໂຮງງານທີ່ມີກຳມະກອນຫຼາຍສິບພັນຄົນ. ຕົວເມືອງ, ທ່າເຮືອ-ທ່າກຳປັ່ນ, ປະຕູປິດເປີດທະເລຄອນຈະມີໃຫ້ເຫັນ. ປະຊາກອນອັງກິດ 60% ແມ່ນດຳລົງຊີວິດຢູ່ໃນຕົວເມືອງ.

ຄວາມຈະເລີນກ້າວໜ້າຢ່າງໝັ້ນຄົງຂອງລັດທະທຶນນິຍົມ, ປະເທດອັງກິດຜ່ານຜ່າວິກິດການໃຫຍ່ເຖິງ2 ຄັ້ງໃນປີ 1857 ແລະ ປີ 1866 ພາໃຫ້ເກີດຄວາມເສຍຫາຍຫຼາຍຢ່າງ.



ຕົວເມືອງ ລອນດອນ ຂອງອັງກິດໃນທ້າຍສະຕະວັດທີ 19

ເສດຖະກິດກະສິກຳອັງກິດຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ໂດຍສະເພາະແມ່ນພາຍຫຼັງກຳານຍຸບເລີກການເກັບພາສີນຳເຂົ້າເຂົ້າສາລີ. ປະມານ 20 ປີ ນັບແຕ່ປີ 1850-1870 ຄວາມໝັ້ນຄົງກະສິກຳອັງກິດເຂົ້າແມ່ນຍັງບໍ່ທັນມີມີ, ນາຍທຶນໄດ້ລົງທຶນເຂົ້າໃນຂະແໜງກະສິກຳ 1/3 ການລ້ຽງສັດມີທ່າອ່ຽງຂະຫຍາຍຕົວເພີ່ມຂຶ້ນ. ພາຍໃຕ້ຄຳຂວັນທີ່ວ່າ , ສັດລ້ຽງຕ້ອງຄຽງຄູ່ກັບເຂົ້າສາລີ.

ໃນເວລານີ້, ຂະແໜງການຄ້າຂອງອັງກິດຂະຫຍາຍຕົວສູງສຸດ, ຄຽງຄູ່ກັບການລົບລ້າງກົດໝາຍວ່າດ້ວຍເຂົ້າສາລີ, ໃນປີ 1846 ນະໂຍບາຍການຄ້າຂາຍເສລີໄດ້ຖືກປະຕິບັດຜ່ານຮູບແບບການລົບລ້າງກົດໝາຍການເກັບພາສີນຳເຂົ້າ ເຮັດໃຫ້ລາຄາຂອງວັດຖຸດິບ ແລະ ເຂົ້າສາລີມີລາຄາຫຼຸດລົງ. ສິນຄ້າທີ່ຜະລິດອອກມາລ້ວນແຕ່ຫຼຸດລາຄາລົງ. ໃນປີ 1849 ກົດໝາຍກ່ຽວກັບສິນຄ້າທາງທະເລຖືກລົບລ້າງລົງພາຍຫຼັງທີ່ຄົງຕົວມາເປັນເວລາ ສອງສະຕະວັດ. ສະນັ້ນບັນດາເຮືອສິນຄ້າຈຶ່ງມີອິດສະຫຼາໃນການເດີນເຮືອໄປມາໃນການຄ້າຂາຍສິນຄ້າລະຫວ່າງອັງກິດ ແລະ ບັນດາຫົວເມືອງຂຶ້ນຂອງອັງກິດ ກັບປະເທດອື່ນໆອີກ. ນະໂຍບາຍດັ່ງກ່າວນັ້ນມີຜົນປະໂຫຍດຕໍ່ກັບຊົນຊັ້ນນາຍທຶນອັງກິດຍ້ອນວ່າສິນຄ້າຂອງອັງກິດມີລາຄາຖືກ ແລະ ມີຄຸນນະພາບດີ ສາມາດສົ່ງຂາຍໃຫ້ຕະຫຼາດຕ່າງປະເທດໄດ້ຢ່າງງ່າຍດາຍ ແລະ ສາມາດຕອບສະໜອງວັດຖຸດິບໃນຂະແໜງອຸດສະຫະກຳໃນປະເທດນັ້ນໄດ້. ໃນຊຸມປີ 40-60ຂອງສັດຕະວັດທີ 19 ລັດຖະບານໄດ້ສືບຕໍ່ຫຼຸດຜ່ອນພາສີນຳເຂົ້າຈາກປະເທດອື່ນໆແລະ ລົງນາມສັນຍາວ່າດ້ວຍການຫຼຸດພາສີກັບປະເທດອື່ນໆເຮັດໃຫ້ປະລິມານການນຳເຂົ້າສິນຄ້າໃນປີ 1850-1870 ເພີ່ມຂຶ້ນເຄິ່ງໜຶ່ງທຽບໃສ່ເມື່ອກ່ອນ. ຍ້ອນແນວນັ້ນນະໂຍບາຍຄ້າຂາຍເສລີຈຶ່ງເຮັດໃຫ້ນາຍທຶນໄດ້ຜົນກຳໄລໃຫ້ພວກນາຍທຶນອັງກິດຝ່າຍດຽວ ເພາະວ່າບັນດາສິນຄ້ານຳເຂົ້າທັງໝົດບໍ່ສາມາດຍາດແຍ່ງ ແລະ ແຂ່ງຂັນກັບສິນຄ້າຂອງອັງກິດໄດ້.

ການຂະຫຍາຍຕົວຢ່າງແຂງແຮງທາງດ້ານເສດຖະກິດໃນຊຸມມປີ 50-60 ຂອງສະຕະວັດທີ 19ເຮັດໃຫ້ປະເທດອັງກິດກ້າວສູ່ຍຸກແຫ່ງຄວາມຮຸ່ງເຮືອງເຂັ້ມແຂງໝັ້ນຄົງທີ່ປະກອບສ່ວນເຮັດໃຫ້ອຸດສະຫະກຳຂອງໂລກຂະຫຍາຍຕົວ ແລະ ຖືວ່າເປັນປະເທດໜຶ່ງທີ່ມີອິດທິພົນທາງດ້ານການຄ້າທາງທະເລ.

**2. ນະໂຍບາຍລ້າຫົວເມືອງຂຶ້ນ**

ການຂະຫຍາຍຕົວຢ່າງເຂັ້ມແຂງຂອງພື້ນຖານອຸດສະຫະກຳຂອງລັດທິທຶນນິຍົມອັງກິດເຮັດໃຫ້ມີການຮຽກຮ້ອງຕ້ອງການວັດຖຸດິບ ແລະ ຕະຫຼາດຈຳໜ່າຍສິນຄ້າ. ອັງກິດໄດ້ດຳເນີນສົງຄາມຮຸກຮານເພື່ອລ່າຫົວເມືອງຶ້ນຄັ້ງທີ 2 ເພື່ອຮຸກຮານປະເທດຈີນ. ບັງຄັບໃຫ້ຈັກກະພັດແມນຈູຕ້ອງຍອມເປີດການຄ້າຂາຍທາງທະເລ. ໃນປີດຽວກັນນັ້ນ, ອັງກິດເລີ່ມຮຸກຮານເຂົ້າເຂດອ່າວເປີເຊຍ. ບັງຄັບໃຫ້ອຳນາດການປົກຄອງທ້ອງຖິ່ນຍອມຮັບສິດໃນການຄ້າຂາຍສິນຄ້າຂອງຂອງພໍ່ຄ້າອັງກິດໃນການທຳການໄປມາຄ້າຂາຍຢູ່ເປີເຊຍ. ໃນປີ 1863 ເຮືອຮົບອັງກິດກັບເຮືອຂອງປະເທດອື່ນ (ຝຣັ່ງ, ໂຮນລັງ ແລະ ອາເມຣິກາ) ໄດ້ຍິງທຳລາຍເກາະຊີໂຮຊິມິ ບັງຄັບໃຫ້ຍີປຸ່ນຕ້ອງໃຊ້ໜີ້ສົງຄາມ ແລະ ເປີດເສັ້ນທາງການຄ້າທາງທະເລເພື່ອເປີດກວ້າງໃຫ້ສິນຄ້າຕ່າງປະເທດໄດ້ເຂົ້າມາຄ້າຂາຍຢູ່ຍີປຸ່ນ. ໃນປີ 1867 ອັງກິດໄດ້ນຳກັລງັເຂົ້າຮຸກຮານ ອາບີຊີນີ, ປຸ້ນສະດົມທຳລາຍນະຄອນຫຼວງ  ແລະ ຮຽກຮ້ອງໃຫ້ເຮືອອັງກິດສາມາດເດີນທາງຢ່າງເສລາເຂົ້າມາປະເທດນີ້. ໃນຊຸມປີ 30-40 ຂອງສະຕະວັດທີ 19 ອັງກິດໄດ້ເຈົ້າຮຸກຮານນິວຊີແລັນ, ຍຶດຄອງພາກຕາເວັນຕົກຂອງປະເທດມຽນມ້າ, ບຸກໂຈມຕີເຂົ້າອາເມຣິກາໃຕ້, ປາບປາມຂະບວນການຕໍ່ສູ້ຂອງຂ້າທາດຕ້ານກັບພວກເຈົ້າທາດຢູ່າ ຈາໄມກາ ໃນປີ 1865  ແລະ ສືບຕໍ່ຮຸກຮານເອທີໂອປີ.

ຫົວເມືອງຂຶ້ນທີ່ໃຫຍ່ ແລະ ສຳຄັນຂອງອັງກິດແມ້ນປະເທດອິນເດຍ. ຮອກກາງສະຕະວັດທີ 19 ປະເທດອັງກິດໄດ້ສຳເລັດການເຮັດສົງຄາມລ່າຫົວເມືອງຂຶ້ນຢູ່ປະເທດອິນເດຍ. ຍຶກຄອງເອົາບັນດາອານາຈັກນ້ອຍທີ່ມີລັກສະນະດັ້ງເດີມໃນທ້ອງຖິ່ນເຂົ້າຢູ່ໃຕ້ການປົກຄອງຂອງອັງກິດ. ພະລາຊີນີ ວິດຕໍເຣຍໄດ້ຮັບແຕ່ງຕັ້ງເປັນພະລາຊີນີປົກຄອງປະເດທອິນເດຍ.

ຈຳນວນພົນຂອງປະເທດອັງກິດທີ່ອົບພະຍົບໄປ ການາດາ, ອອສເຕເລຍ ແລະ ອາຟຣິກາໃຕ້ນັບມື້ນັບຫຼາຍຂຶ້ນ. ພິເສດແມ່ນຢູ່ອອສເຕເລຍພາຍຫຼັງການຂຸດຄົ້ນບໍ່ຄຳຈຳນວນຄົນອັງກິດໄດ້ເພີ່ມຂຶ້ນໃນປີ 1851-1861 ຈາກ 438 ຄົນມາເປັນ 1.145 ຄົນ.

ອາຍແລັນໄດ້ກາຍເປັນອະນານິຄົມທີ່ໄວທີ່ສຸດ ແລະ ໃກ້ກັບປະເທດອັງກິດສຸດ, ດິນດອນຕອນຫຍ້າລ້ວນແຕ່ຕົກໃນກຳມືຂອງພວກຂຸນນາງເຈົ້າທີ່ດິນອັງກິດ. ສ່ວນປະຊາຊົນ ໄອແລນ ກາຍເປັນທາດດິນນາໃນອະນານິຄົມທີ່ມີສະຕາກຳທຸກຍາກລຳບາກ ທຸກຍາກຂາດເຂີນ.

ຂະບວນການຕໍ່ສູ້ທີ່ມີຊື່ສຽງຂອງປະຊາຊົນໄອແລນແມ່ນການຕໍ່ສູ້ ແບບ ເຟນັງ ເອີ້ນຕາມຊື່ຂອງວິລະບຸລຸດຂອງການຕໍ່ສູ້ປົດປ່ອຍໃນສະຕະວັດທີ 18 ແມ່ນ ເຟັນເນີ ມາກກຸນ ນັ້ນແມ່ນການຈັດຕັ້ງທີ່ປິດລັບ ທີ່ມີຊື່ເປັນທາງການວ່າ ສະມາຄົມຮ່ວມມືກັນຂອງກຸ່ມຄົນປະຕິວັດໄອແລນປະກອບມີກຳມະກອນ, ທາດດິນນາພາຍໃຕ້ການນຳພາຂອງນາຍທຶນກາງ ແລະ ນາຍທຶນນ້ອຍ. ພວກເຂົາດຳເນີນການສ້າງຕັ້ງປະເທດສາທາລະນະລັດໄອແລນຂຶ້ນ ດ້ວຍການປິດລັບ ແລະ ບໍ່ອີງໃສ່ກຳລັງມວນຊົນ. ຍ້ອນແນວນັ້ນຂະບວນການຕໍ່ສູ້ໃນປີ 1867 ຈຶ່ງຖືກປາຮາໄຊລົງຢ່າງໄວວາ.



ພະລາຊິນີ ວິກຕໍເລຍແຫ່ງອັງກິດ

## II. ຂະບວນການຕໍ່ສູ້ຂອງກຳມະກອນອັງກິດໃນຊຸມປີ 50-60 ຂອງສະຕະວັດທີ 19

### 1. ຊີວິດການເປັນຢູ່ຂອງຊົນຊັ້ນກຳມະກອນອັງກິດ

ຄວາມໝັ້ນຄົງຂອງລັດທິທຶນນິຍົມບໍ່ໄດ້ມີສ່ວນເຮັດໃຫ້ມີການປັບປຸງຊີວິດການເປັນຢູ່ຂອງຊົນຊັ້ນກຳມະກອນອັງກິດ ແຕ່ກົງກັນຂ້າມຊີວິດການເປັນຢູ່ຂອງກຳມະກອນຍິ່ງທຸກຍາກລຳບາກ.

ໃນເວລານັ້ນ, ພວກນາຍທຶນເຈົ້າຂອງໂຮງຈັກໂຮງງານຍັງບໍ່ຢຸດຕິການກົດຂີ່ຂູດຮີດກຳມະກອນ. ເງື່ອນໄຂການອອກແຮງງານບໍ່ໄດ້ຖືກຮັບປະກັນ, ອຸບັດຕິເຫດໃນເວລາອອກແຮງງານເກີດຂຶ້ນເລື້ອຍໆນັບແຕ່ປີ 1850-1870. ມີການລະເບີດຖານຫີນເຖິງ 1.437 ຄັ້ງເພື່ອຂຸດຄົ້ນຖ່ານຫີນເຮັດໃຫ້ມີຜູ້ຕາຍ ແລະ ພິການຈຳນວນ 5.000 ຄົນ.

ສະພາບຄວາມທຸກຍາກຂອງກຳມະກອນກະສິກຳໜັກໜ່ວງຂຶ້ນເລື້ອຍໆ ແລະ ຖືກກົດຂີ່ຂູດຮີດຢ່າງຮຸນແຮງ. , ຊີວິດການເປັນຢູ່ຂອງພວກເຂົາບໍ່ຕ່າງຫຍັງຈາກຄົນຖືກຄຸກ. ແຮງງານແມ່ຍິງ ແລະ ເດັກນ້ອຍຖືກນຳໃຊ້ຢ່າງຫຼວງຫຼາຍເພາະຄ່າແຮງງານແມ່ນຕ່ຳຫຼາຍຖ້າທຽບໃສ່ເພດຊາຍ. ໃນປີ 1875 ຈຳນວນແຮງງານເດັກນ້ອຍທີ່ເຮັດວຽກໃນໂຮງງານຕ່ຳແຜ່ນແພເພີ່ມຂຶ້ນ 3 ເທົ່າຖ້າທຽບໃສ່ປີ 1847.

ຈາກນຳນວນຕົວເລກດັ່ງກ່າວສະແດງໃຫ້ເຫັນເຖິງຊີວິດການເປັນຢູ່ທີ່ມີຄຸນນະພາບຍັງຕ່ຳຂອງກຳມະກອນອັງກິດ ມັນເປັນສັນຍາລັກໜຶ່ງທີ່ເກີດຂຶ້ນຄຽງຄູ່ກັບຄວາມຈະເລີນກ້າວໜ້າຂອງພື້ນຖານເສດຖະກິດອັງກິດ. ຄວາມຮັ່ງມີຂອງຊົນຊັ້ນນາຍທຶນ ແລະ ສະພາບຄວາມທຸກຍາກຂອງກຳມະກອນ. ຕໍ່ມາຄວາມຈະເລີນກ້າວໜາຂອງລັດທິທຶນນິຍົມສັງຄົມພາຍນອກ, ໂດຍສະເພາະແມ່ນຊີວິດການເປັນຢູ່ທີ່ບໍ່ປອດໄພເຮັດໃຫ້ກຳມະກອນຊາວຜູ້ອອກແຮງງານສະນັ້ນ, ຄຽງຄູ່ກັບການຂະຫຍາຍຕົວຂອງລັດທິທຶນນິຍົມກໍ່ມີຄວາມຂັດແຍ່ງລະຫວ່າງຊົນຊັ້ນນັບມື້ນັບເພີ່ມຂຶ້ນກ້າວໄປເຖິງການເກີດຄວາມຂັດແຍ່ງຢ່າງຮຸນແຮງ.

**2.ສະຫະພັນກຳມະກອນ ແລະ ການກຳເນີດຊົນຊັ້ນກຳມະກອນຊຸນນາງ**

ສິ່ງທີ່ເດັ່ນໃນຊຸມປີ 50 ຂອງງສະຕະວັດທີ 19ແມ່ນການຂະຫຍາຍຕົວຂອງການຕໍ່ສູ້ຂອງສະຫະພັນກຳມະກອນ ຫຼື ສະຫະພັນກຳມະບານ. ຄຽງຄູ່ກັບອົງການຈັດຕັ້ງເກົ່າໄດ້ມີສະຫະພັນກຳມະກອນເກີດຂຶ້ນ ແລະ ມີບົດບາດສຳຄັນໃນການໃຫ້ຄຳແນະນຳແກ່ພວກກຳມະກອນຕໍ່ສູ້ຕ້ານກັບພວກເຈົ້າຂອງໂຮງຈັກໂຮງງານ. ນຳພາຂະບວນການລຸກຮື້ຂຶ້ນຕໍ່ສູ່ ແລະ ເພີ່ມທະວີການຮ່ວມມືກັນໃນກຸ່ມກຳມະກອນດ້ວຍກັນ. ເຖິງຢ່າງໃດກໍ່ຕາມສິ່ງດັ່ງກ່າວນັ້ນບໍ່ສາມາດປ່ຽນແປງລັກສະນະສະເພາະຂອງຂະບວນການຕໍ່ສູ້ກຳມະກອນອັງກິດໃນໄລຍະນັ້ນໄດ້. ການຢຸດຕິ ແລະ ຂະບວນການກົດບັດທີ່ມີລັກສະນະປະຕິວັດເພື່ອການປັບປຸງເງິນເດືອນ, ນະໂຍບາຍໃນການກ່ຽວກັບຫົວໜ້າສະຫະພັນກຳມະກອນຮ່ວມອາຊີບເລີ່ມມີການປ່ຽນແທນ. ພວກເຂົາກຳຈັດຂະບວນການຕໍ່ສູ້ຂອງກຳມະກອນຕ້ານເຈົ້າຂອງໂຮງງານໃນຂອງເຂດບໍ່ໃຫກວ້າງອອກ, ພາຍໃຕ້ຮູບການລຸກຂຶ້ນ ຕໍ່ສູ້ແບບບໍ່ຮຸນແຮງເພື່ອຮຽກຮ້ອງໃຫ້ປັບປຸງຊີວິດການເປັນຢູ່ຂອງກຳມະກອອນຈຳນວນໃດໜຶ່ງເທົ່ານັ້ນ. ຊົນຊັ້ນກຳມະກອນຊຸນນາງແມ່ນພວກທີ່ມີຄວາມສາມາດເກັ່ງໃນການເຮັດວຽກ, ມີຄຸນນະພາບ ແລະ ເປັນພື້ນຖານສັງຄົມທີ່ສະໜັບສະໜູນແນວທາງດັ່ງກ່າວນັ້ນ. ພວກເຂົາມີແນວຄິດທີ່ຕ່າງອອກໄປໄດ້ດຳເນີນການສ້າງຕັ້ງສະຫະພັນກຳມະກອນຮ່ວມອາຊີບຂຶ້ນ, ແຍກຕົວອອກຈາກກຳລັງມວນຊົນເພື່ອຮັກສາ ແລະ ປ້ອງກັນອຳນາດຂອງຕົນໄວ້. ແຕ່ອົງການຈັດຕັ້ງດັ່ງກ່າວພາກໃຫ້ເກີດມີຜົນເສຍຫາຍຫຼາຍຢ່າງໃຫ້ແກ່ຂະບວນການຕໍ່ສູ້ລະຫວ່າງເຈົ້າຂອງໂຮງງານກັບນາຍຊ່າງ. ເຮັດໃຫ້ຂະບວນການລຸກຂຶ້ນເດີນທາງມາຮອດຈຸດທີ່ຕ້ອງມີການປະນີປະນອມກັນ, ຂັດຂວາງຄວາມເປັນເອກະພາບກັນ ແລະ ຫຼຸດຜ່ອນກຳລັງໃນການຕໍ່ສູ້ຂອງຊົນຊັ້ນກຳມະກອນ. ຈຳນວນຄົນທີ່ເຂົ້າຮ່ວມສະຫະພັນຮ່ວມອາຊີບແມ່ນມີໜ້ອຍທີ່ສຸດໃນຊຸມປີ 60 ມີພຽງແຕ່ 10% ຂອງກຳມະກອນທັງໝົດໃນຂະແໜງອຸດສະຫະກຳ ແຕ່ຖ້າທຽບໃສ່ບັນດາປະເທດໃນເອີຣົບີເຂົ້າຮ່ວມກົງການຈັດຕັ້ງອັງກິດຍັງຖືວ່າກວມຈຳນວນພົນຫຼາຍກວ່າໝູ່.

**3.ຂະບວນການຕໍ່ສູ້ເພື່ອຮຽກຮ້ອງໃຫ້ປະຕິຮູບສະພາ**

ໃນປີ 1857 ປະເທດອັງກິດກໍ່ຄືປະເທດອື່ນໄດ້ເກີດມີວິກິດການທາງດ້ານເສດຖະກິດຢ່າງໜັກເຮັດໃຫ້ຊີວິດການເປັນຢູ່ຂອງກຳມະກອນທຸກຍາກລຳບາກ. ສະຫະພັນຮ່ວມອາຊີບ12% ຫວ່າງງານ. ຈຳນວນກຳມະກອນທີ່ບໍ່ໄດ້ຢູ່ໃນສະຫະພັນດັ່ງກ່າວບໍ່ມີວຽກເຮັດງານທຳທຸກຍາກຂຶ້ນເປັນ2 ເທົ່າ. ຢູ່ມານແຕກເຕີ ກຳມະກອນຫຼາຍກວ່າເຄິ່ງໜຶ່ງບໍ່ມີວຽກເຮັດ ພວກເຈົ້າຂອງໂຮງງານໄດ້ສວຍໂອກາດດັ່ງກ່າວນັ້ນເພື່ອຫຼຸດຜ່ອນພາສີແຮງງານ ແລະ ຫຼຸດຜ່ອນເງື່ອນໄຂການອອກແຮງງານ. ຂະບວນການຕໍ່ສູ້ຂອງກຳມະກອນເກີດຂຶ້ນທົ່ວທຸກບ່ອນໃນອັງກິດ.

ເຫດການສຳຄັນທີ່ເກີດຂຶ້ນໃນປີນັ້ນແມ່ນຂະບວນການລຸກຂຶ້ນຕໍ່ສູ້ຕ້ານກັບນະໂຍບາຍຕ່າງປະເທດຂອງລັດຖະບານ. ໃນໄລຍະສົງຄາມພາຍໃນປະເທດ ອາເມຣິກາ ໃນປີ 1861-1865ຊົນຊັ້ນກຳມະກອນອັງກິດໄດ້ສະໜັບສະໜູນຂະບວນການຕໍ່ສູ້ເພື່ອການປະຕິວັດຂອງປະຊາຊົນອາເມຣິກາທີ່ມີ ລິນກົງ ເປັນຜູ້ນຳ. ຕເດັດດ່ຽວຕໍ່ຕ້ານກັບນະໂຍບາຍຂອງລັດຖະບານພິວພັນ ແລະ ໃຫ້ການຊ່ວຍເຫຼືອແກ່ເຈົ້າທາດ, ເຈົ້າທີ່ດິນທີ່ຢູ່ທາງພາກໃຕ້ຂອງປະເທດອາເມຣິກາ. ຊົນຊັ້ນກຳມະກອນອັງກິດລ້ວນແຕ່ໃຫ້ການສະນັບສະໜູນຂະບວນການຕໍ່ສູ້ຢູ່ໂປແລນ, ຂະບວນການຕໍ່ສູ້ເພື່ອທ້ອນໂຮມຄວາມເປັນເອກະພາບຂອງປະເທດອີຕາລີ . ການເຂົ້າຮ່ວມຢ່າງຕັ້ງໜ້າເຂົ້າໃນການເຄື່ອນໄຫວທາງການເມືອງໄດ້ສົ່ງຜົນສະທ້ອນຕໍ່ກັບນ້ຳໃຈຕໍ່ສູ້ຂອງກຳມະກອນ ແລະ ສົ່ງຜົນສະທ້ອນຕໍ່ກັບການເຄື່ອນໄຫວຂອງສາກົນໃຫ້ມີລັກສະນະກ້າວໜ້າຂຶ້ນ. ຊົນຊັ້ນກຳມະກອນອັງກິດສ່ວນປະກອບອັນໃຫຍ່ຫຼວງຕໍ່ກັບການກຳເນີດ ສາກົນທີ 2 ແລະ ສາກົນກໍ່ປະກອບສ່ວນສຳຄັນເຂົ້າໃນການສຶກສາແນວຄິດສາກົນກຳມະຊີບໃຫ້ແກ່ກຳມະກອນອັງກິດ.

ຂະບວນການຕໍ່ສູ້ອັນຍິ່ງໃຫຍ່ ແລະ ສຳຄັນຂອງຊົນຊັ້ນກຳມະກອນໃນຊຸມປີ 60 ຂອງສະຕະວັດທີ 19 ເພື່ອຕ້ອງການປະຕິຮູບລະບອບການເລືອກຕັ້ງ ສູນກາງການຕໍ່ສູ້ແມ່ນ ແມນເຊດເຕີ, ມີອົງການຈັດຕັ້ງໃນການຕໍ່ສູ້ເພື່ອປະຕິຮູບລະບອບການເລືອກຕັ້ງແມ່ນສະຫະພັນຮ່ວມອາຊີບສ່ວນຫຼາຍແມ່ນກຳມະກອນທີ່ມີເຕັກນິກ ແລະ ມີຝີມືອົງການຈັດຕັ້ງນີ້ມີຄວາມແຕກຕ່າງກັບຍຸກກົດບັດຍ້ອນມັນດຶງດູດກຳມະກອນເຂົ້າຮ່ວມໄດ້ໜ້ອຍຄົນ. ສິດອຳນາດໃນການເປັນຜູ້ນຳແມ່ນ ຕົກໃນກຳມືຂອງຜູ້ນຳສະຫະພັນຮ່ວມອາຊີບ.

ຂະບວນການຕໍ່ສູ້ຂອງກຳມະກອນເຮັດໃຫ້ອຳນາດການປົກຄອງ ແລະ ສະພາສົ່ນຄອນ ລັດຖະບານຝ່າຍເສລີອ່ອນເພຍລົງ. ພັກອະນຸລັກນິຍົມຂຶ້ນກຳອຳນາດໃຫ້ລັດຖະສະພາປະກາດນຳໃຊ້ກົດໝາຍປະຕິຮູບການເລືອກຕັ້ງໃນປີ 1867 ເຮັດໃຫ້ສິດອຳນາດຂອງຜູ້ແທນຈາກ 46 ຕົວເມືອງທີ່ຍັງຄົງຕົວພາຍຫຼັງການນຳໃຊ້ກົດໝາຍໃນປີ 1832 ຖືກລົບລ້າງ ແລະ ປ່ຽນແທນເປັນບັນດາຕົວເມືອງອຸດສະຫະກຳ. ໃນຕົວເມືອງໃຫຍ່ບັນດາຜູ້ເຊົ່າເຮືອນຢູ່ມີສິດປ່ອນບັດເລືອກຕັ້ງຖ້າຈຳນວນເງິນໃນການເຊົ່າເຮືອນໃນແຕ່ລະປີຕ້ອງບໍ່ຫຼຸດ 10 ປອນ ທີ່ດຳລົງຊີວິດໃນບ່ອນທີ່ມີການເລັກຕັ້ງ 1ປີ ຂຶ້ນໄປ. ຢູ່ຊົນນະບົດບັນດາຜູ້ທີ່ເຊົ່າດິນທຳການຜະລິດຕ້ອງມີເງິນເຊົ່າດິນບໍ່ຫຼຸດ 12 ປອນ ຫຼື ບັນດາເຈົ້າທີ່ດິນທີ່ມີລາຍຮັບ 5 ປອນຈິ່ງຈະມີສິດໃນການເລືອກຕັ້ງໄດ້, ຍ້ອນແນວນັ້ນເງື່ອນໄຂໃນກາເລືອກຕັ້ງມີລັກສະນະຈຳກັດຍ້ອນແນວນັ້ນຈຳນວນຜູ້ມີສິດເລືອກຕັ້ງຈິ່ງເພີ່ມຂຶ້ນຈາກ 1 ລ້ານຄົນເປັນ 2,5 ລ້ານຄົນ ໃນຈຳນວນ ຄົນ 16 ລ້ານຄົນທົ່ວປະເທດ. ແຕ່ຄວາມຈິງອລ້ວສິດໃນການເລືອກຕັ້ງພຽງແຕ່ເປີດໂອກາດໃຫ້ຊົນຊັ້ນນາຍທຶນນ້ອຍ ແລະ ກຳມະກອນກ້າວໜ້າທີ່ມີຊີວິດຂ້ອນຂ້າງດີຈຳນວນໜຶ່ງເທົ່ານັ້ນ. ສ່ວນກຳມະກອນ ແລະ ຊາວນາສ່ວນຫຼາຍແມ່ນບໍ່ມີສິດເຂົ້າໄປປ່ອນບັດເລືອກຕັ້ງ. ຂະບວນການປະຕິຮູບສະພາຄັ້ງທີ 2 ນີ້ ໃນຄວາມເປັນຈິງແລ້ວບໍ່ໄດ້ນຳຜົນປະໂຫຍດຫຍັງມາສູ້ປະຊາຊົນຊາວຜູ້ອອກແຮງງານ

# ບົດທີ 8

# ປະເທດອາເມຣິກາໃນຕົ້ນສະຕະວັດທີ 19 ແລະ ສົງຄາມພາຍໃນປີ 1861-1865

## I. ປະເທດອາເມຣິກາໃນກາງຕົ້ນສະຕະວັດທີ 19 ແລະ ການດຳເນີນສົງຄາມພາຍໃນ

### 1. ຂະບວນການອົບພະຍົບເພື່ອຂະຫຍາຍດິນແດນ ແລະ ນະໂຍບາຍລ່າຫົວເມືອງຂຶ້ນຂອງອາເມຣິກາ.

ຂະບວນການປະຕິວັດນາຍທຶນອາເມຣິກາຍາດໄດ້. ປະເທດອາເມຣິກາກາຍເປັນປະເທດເຄິ່ງອຸດສະຫະກຳ ແລະ ເຄິ່ງກະສິກຳ. ຢູ່ພາກຕາເວັນອອກສ່ຽງເໜືອຂອງປະເທດອາເມຣິກາ ເປັນຕົ້ນແມ່ນເຂດອຸດສະຫະກຳ ຂະຫຍາຍຕົວ. ພາກໃຕ້ແມ່ນເຂດກະສິກຳພາກໃຕ້ເບື້ອງສາຍພູ ອາເລການີດ ເປັນເຂດດິນແດນທີ່ກວ້າງໃຫຍ່ໄພສານ ຂອງຊາວອົບພະຍົບດ້ວຍການຊື້ດິນຄືນຈາກປະເທດຝຣັ່ງ, ສະເປນ, ຂັບໄລ່ຊົນເຜົ່າອິນເດຍແດງ, ປະເທດອາເມຣິກາ ໄດ້ດຳເນີນການອົບພະຍົບຂະຫຍາຍອະນາເຂດ, ສ້າງຕັ້ງ 14 ລັດໃໝ່ຂຶ້ນຕື່ມຮອດກາງສະຕະວັດທີ 19 ປະເທດອາ ເມຣິກາມີທັງໝົດ 30 ລັດ ມີເນື້ອທີ່ກວ້າງ ຂວາງ 4,8 ລ້ານກິໂລຕາແມັດ ປະຊາກອນຂອງອາເມຣິການັບມື້ນັບຫຼາຍ ຂຶ້ນ ຽງຄູ່ກັບອາເມຣິກາມີແຫຼ່ງຊັບສົມບັດ, ແຫຼ່ງດຳລົງຊີວິດທຳມາຫາກິນ ນັ້ນກໍ່ຍັງມີບ່ອນທີ່ມຸກຍາກລຳບອກ ຂາດເຂີນຄື ໄອແລນ ຂະບວນການປະຕິວັດໃນປີ 1848-1849 ຢູ່ທະວີບເອີຣົບຖືກປາຮາໄຊເຮັດໃຫ້ປະຊາຊົນ ຈຳນວນຫຼວງຫຼາຍສິ້ນຫວັງ ແລະ ຕ້ອງການຊອກເສັ້ນທາງເພື່ອມີຊີວິດໃໝ່. ການຂຸດຄົ້ນບໍ່ຄຳຢູ່ ຄາຣີຟໍເນຍໃນປີ 1848 ຍິ່ງດຶງດູດໃຫ້ມີຂະບວນການອົບພະຍົບຂອງປະຊາກອນຢູ່ທະວີບເອີຣົບເຂົ້າມາປະເທດອາເມຣິກາ.

ຄຽງຄູ່ກັບຂະບວນການອົບພະຍົບຂະຫຍາຍອະນາເຂດຢູ່ທາງພາດຕາເວັນຕົກໃນໄລຍະທຳອິດຂອງຊຸມປີ ດຳເນີນການປະຕິວັດນາຍທຶນຢູ່ປະເທດອາເມຣິກາ ໄດ້ເປີດກວ້າງການຂະຫຍາຍອະນາເຂດການປົກຄອງຂອງຕົນຢູ່ ອາເມຣິກາລາຕິນ. ທິດສະດີ ມົນໂຣ ໄດ້ກຳເນີດຂຶ້ນໃນເດືອນກຸມພາ ປີ 1823 ພາຍໃຕ້ຄຳຂວັນ ທະວີບອາເມຣິກາ ຕ້ອງເປັນຂອງຄົນອາເມຣິກາ ແຕ່ຄວາມຈິ່ງແລ້ວ ທະວີບອາເມຣິກາຕ້ອງແມ່ນຂອງຄົນອາເມຣິກາເໜືອ. ທິດສະດີ ດັ່ງກ່າວນັ້ນພາໃຫ້ເກີດສົງຄາມກັບສະເປນເພື່ອຍາດແຍ່ງອະນານິຄົມ. ສົງງຄາມຍາດແຍ່ງ ໂມຣິກໂຄໃນປີ 1846-1848 ເປັນການເປີດສາກທຳອິດໃຫ້ແກ່ຂະບວນການຕໍ່ສູ້ໃນເດືອນມີນາຢູ່ພາກກາງ ແລະ ພາກໃຕ້ຂອງອາເມຣິກາ. ອາເມຣິການມີແຜນທີ່ຈະຫ້ອນໂຮມຄິວບາ ມາຂຶ້ນກັບອາເມຣິກາ. ນຳກັງລັງບຸກເຂົ້າ ອູຣູໄກວ,ອາເຈນຈີນາ ມີເປົ້າໝ າຍຕ້ອງການຄອບຄອງເສດຖະກິດທັງໝົດຂອງອາເມຣິກາ. ພ້ອມດຽວກັນນັ້ນໃນຊຸມປີ 40 ຂອງສະຕະວັດທີ 19 ໄດ້ ດຳເນີນການເຮັດສົງຄາມຢາຝິ່ນກັບຈີນ ໂດຍການເຊັນສັນຍາກັບລາດຊະວົງແມນຈູໃນປີ 1844 ຈາກນັ້ນກໍ່ດຳເນີນ ສົງຄາມຢ່າຝິ່ນຄັ້ງທີ 2 ໃນປີ 1854-1860. ໂດຍການຮ່ວມມືກັບຈັກກະພັດອັງກິດ ແລະ ລາດຊະວົງແມນຈູປາບ ປາມຂະບວນການຕໍ່ສູ້ຂອງຊາວນາ ຖາຍບິງທຽນກວາ . ໃນປີ 1853 ອາເມຣິກາ ພົນເອກ ເປຣີ ໄດ້ຍົກກຳລັງພົນ 4 ກອງທັບເພື່ອບັງຄັບໃຫ້ ຍີປຸ່ນ ເປີດທະເລ ຍ້ອນແນວນັ້ນນັບແຕ່ກາງສະຕະວັດທີ19-ປະເທດນາຍທຶນອາເມຣິກາໄດ້ ກາຍເປັນປະເທດຈັກກະພັດທີ່ເກີດຂຶ້ນຕາມຫຼັງແຕ່ກວມດິນແດນອັນກວ້າງໃຫຍ່.



ສົງຄາມຢາຝິ່ນລະຫວ່າງອັງກິດ ແລະ ຈີນ

## 2. ການຂະຫຍາຍຕົວທາງດ້ານອຸດສະຫະກຳ ແລະ ຂະບວນການຕໍ່ສູ້ຂອງກຳມະກອນ

ກ່ອນສົງຄາມພາຍໃນເກືອບ 100 ປີເສດຖະກິດຕົ້ນຕໍຂອງອາເມຣິກາມີການຂະຫຍາຍຕົວຕາມ 2 ເສັ້ນທາງ ຄື: ພາກເໜືອເດີນຕາມອຸດສະຫະກຳ-ການຄ້າ, ບັນດາລັດພາກໃຕ້ແມ່ນເສັ້ນທາງແບບລະບອບຂ້າທາດໃນນິຄົມກະເສດ. ການຂະຫຍາຍຕົວທາງດ້ານເສດຖະກິດຂອງທັງສອງພາກເຮັດໃຫ້ເກີດຂໍ້ຂັດແຍ່ງຢ່າງບໍ່ສາມາດແກ້ໄຂໄດ້.

ລັດທິທຶນນິຍົມຢູ່ອາເມຣິກາເຮັດໃຫ້ມີອະນາເຂດກວ້າງຂວາງອອກ, ວັດຖຸດິບອຸດົມສົມບູນ, ການຂູດຮີດສັກດີນາແມ່ນບໍ່ໜັກຄືກັບທະລີບເອີຣົບ. ປະເທດອາເມຣິກາຍັງເປັນປະເທດແຫຼ່ງກຳລັງແຮງງານຍ້ອນມີຊາວອົບພະຍົບມາຈາກຫຼາຍປະເທດໃນທະວີບເອີຣົບເຂົ້າມາອາໄສຢູ່ອາເມຣິກາ ເພື່ອເຂົ້າມາເປັນພົນລະເມືອງທີ່ມີລັກສະນະຫຼາຍເຊື້ອຊາດທີ່ມີເຕັກນິກ, ມີຄວາມຕ້ອງການແຮງງານເພື່ອສ້າງແບບແຜນການດຳລົງຊີວິດໃໝ່. ສະນັ້ນປະເທດອາເມຣິກາ ຈິ່ງສາມາດເອົາຜົນສຳເລັດຫຼາຍຢ່າງໃນການພັດທະນາທາງດ້ານການຜະລິດ.

ດ້ານອຸດສະຫະກຳ, ອາເມຣິກາມີຄວາມກ້າວໜ້າ, ສາມາດຍາດເອົາຜົນສຳເລັດໃນການປະຕິວັດທາງດ້ານເຕັກນິກຂອງທະວີບເອີຣົບ ພິເສດແມ່ນການປະຕິວັດອຸດສະຫະກຳຂອງປະເທດອັງກິດ.

ໃນຕົ້ນສະຕະວັດທີ 19 ຂະແໜງອຸດສະຫະກຳເບົາຂະຫຍາຍຕົວຢ່າງໄວອາພິເສດ, ແມ່ນອຸດສະຫະກຳຕ່ຳແຜ່ນ. ໃນປີ 1805 ອຸດສະຫະກຳຕ່ຳແຜ່ນອັງກິດ ມີ 4.500 ຊຸດຈົນຮອດກ່ອນສົງຄາມອະນານິຄົມ ເພີ່ມຂຶ້ນເຖິງ

5.200.000 ຊຸດ. ນອນໃນອັນດັບ2 ຂອງອຸດສະຫະກຳໂລກ. ໃນຊຸມປີ 30-ປີ 40 ຂອງສະຕະວັດທີ 19 ການນຳໃຊ້ເຄື່ອງກົນຈັກອາຍນ້ຳໃນບັນດາໂຮງຈັກໂຮງງານມີໃຫ້ເຫັນຢ່າງຫຼວງຫຼາຍ.

ອຸດສະຫະກຳທາງລົດໄຟເລີ່ມມີການຂະຫຍາຍຕົວຢູ່ໃນລະດັບທີ່ໄວນັ້ນເປັນເງື່ອນໄຂໃຫ້ແກ່ການຂົນສົ່ງວັດຖຸດິບ, ສິນຄ້າອຸດສະຫະກຳຖືກຂົນສົ່ງໄປຢ່າງກວ້າງຂວາງ, ໃນປີ 1850 ອາເມຣິກາໄດ້ສຳເລັດການສ້າງເສັ້ນທາງລົດໄຟໄດ້ 15.000 ກິໂລແມັດ ເຊິ່ງເປັນອັນດັບ1 ຂອງໂລກຮອດປີ 1860 ມີຄວາມຍາວ 49.287 ແຕ່ວ່າລະບົບທາງລົດໄຟໃຫຍ່ເຂດແຄມຝັ່ງມະຫາສະໝຸດແອດລັງຕິກ, ບັນດາສູນກາງເຂດນິວຢອກ, ເພນຊິວາເນຍ, ເກາະຕີມໍ ແລະອື່ນໆ ເຊື່ອມຕໍ່ໃສ່ດິນແດນສ່ວນໃຫຍ່ທາງພາກຕາເວັນຕົກ. ການຕອບສະໜອງສະບຽງອາຫານ, ວັດຖຸດິບໃຫ້ບັນດາສູນກາງອຸດສະຫະກຳ, ແກ້ໄຂໃຫ້ທ່ວງທັນກັບການຂະຫຍາຍຕົວຂອງເສັ້ນທາງລົດໄຟ. ໃນປີ 1860 ມີຫົວລົດໄຟທັງໝົດ 460 ຫົວໄດ້ຮັບການປະດິດຂຶ້ນຢູ່ອາເມຣິກາ.

ການດຳເນີນການຂຸດຄົ້ນບໍ່ຄຳຢູ ຄາຣິຟໍເນຍ ໃນປີ 1848 ໄດ້ປະກອບສ່ວນເຮັດໃຫ້ພື້ນຖານເສດຖະກິດອຸດສະຫະກຳ, ຂະແໜງຂຸດຄົ້ນບໍ່ແຮ່, ຂະແໜງຫຼອມໂລຫະຂະຫຍາຍຕົວເປັນພິເສດ, ການຜະລິດເຫຼັກກ້າຂະຫຍາຍຕົວໄວໄດ້ສ້າງຄວາມເຂັ້ມແຂງໃຫ້ແກ່ຂະແໜງອຸດສະຫະກຳຂອງອາເມຣິກາ. ນັບແຕ່ປີ 1850 ຫາປີ 1860 ຜະລິດຕະພັນຈາກເຫຼັກກ້າເພື່ອມຂຶ້ນຈາກ 600.000 ໂຕນ ມາເປັນ 988.000 ໂຕນ ສຳລັຖ່ານຫີນໃນປີ 1860 ຜະລິດໄດ້ 14,3 ລ້ານໂຕນ.

ຍ້ອນວັດຖຸດິບປະເທດໄມ້ມີຢ່າງອຸດົມສົມບູນຄວາມຕ້ອງການໃນກ້ານຂົນສົ່ງທາງທະເລ ແລະ ທາງແມ່ນ້ຳຢ່າງຫຼວງຫຼາຍ. ສະນັ້ນຂະແໜງທຸລະກິດການເດີນເຮືອຈິ່ງມີການຂະຫຍາຍຕົວນັບແຕ່ກ່ອນການປະຕິວັດອຸດ, ອຸດສະຫະກຳຜະລິດເຮືອຂອງອາເມຣິກາເຄີຍຕອບສະໜອງເຮືອເຂົ້າໃນທຸລະກິດທາງທະເລຂອງລາຊະອານາຈັກອັງກິດ. ປັດຈຸບັນອຸດສະຫະກຳເຮັດເຮືອມີຄວາມຕັ້ງການຫຼາຍນັບມື້ນັບຫມີການຂະຫຍາຍຕົວ. ຮອດປີ 1862 ສະເພາະເຮືອຂົນສົງສິນຄ້າຂອງອາເມຣິກາສາມາດຂົນສົ່ງໄດ້ເຖິງ 2,4 ລ້ານໂຕນ. ນອກຈາກນັ້ນ, ການຂົນສົ່ງຕາມແມ່ນ້ຳກໍ່ຕອບສະໜອງຄວາມຕ້ອງການຂົນສົ່ງລະຫວ່າງພາກຕາເວັນຕົກ-ພາກຕາເວັນອອກຂອງອາເມຣິກາ, ລະຫວ່າງຂົງເຂດທີ່ຮັ່ງມີຢູ່ສູນກາງກັບເຂດທີ່ມີການຂະຫຍາຍຕົວຢູ່ພາກຕາເວັນອອກ. ການຂະຫຍາຍຕົວຂອງອຸດສະຫະກຳຜະລິດເຮືອແລ່ນຕາມແມ່ນ້ຳພິເສດແມ່ນໄດ້ຮັບເອົາໃຈໃສ່ນັບແຕ່ຕົ້ນສະຕະວັດທີ 19 ເສັ້ນທາງການເດີນເຮືອຈາກແມ່ນ້ຳ ໂອຮານໂອກັບ ແມ່ນ້ຳມິດຊິດຊິບປີ ເປັນເສັ້ນທາງຂົນສົ່ງສຳຄັນຕໍ່ກັບເສດຖະກິດພາຍໃນປະເທດ.

ນັບແຕ່ປີ 1850 ມູນຄ່າຈາກອຸດສະຫະກຳຈະສູງກວ່າມູນຄ່າຜົນຜະລິດຈາກກະສິກຳ. ປີ 1860 ອາເມຣິກາມີໂຮງງານທັງໝົດ 140.433 ແຫ່ງ ທີ່ລົງທຶນປະມານ 1 ຕື້ ໂດລາ. ມູນຄ່າຜົນຜະລິດສິນຄ້າໃນແຕ່ລະປະເກືອບ 2 ຕື້ໂດລາ. ການປະກົດຕົວຂອງສູນກາງອຸດສະຫະກຳໄດ້ເລີ່ມຕົ້ນຂຶ້ນ.  ນິວອິງເລິນ ແລະ ແລນ ກວມເອົາ 2/3ຂອງໂຮງງານຜະລິດຝ້າຍທາງໝົດ. ເພັນຊິວາເນຍກາຍເປັນສູນກາງໃນການຫຼອມໂລຫະ. ຂະແໜງການທີ່ກຳລັງໄດ້ຮັບການເອົາໃຈສິ່ງທີ່ກຳລັງໄດ້ຮັບການເອົາໃຈໃສ່ແມ່ນໂຮງງານຜະລິດເຄື່ອງກົນຈັກໄດ້ກາຍເປັນຂະແໜງອຸດສະຫະກຳສຳຄັນໜຶ່ງ. ໃນປີ 1817 ໄດ້ເກີດມີໂຮງງານຜະລິດເຄື່ອງກົນຈັກອາຍນ້ຳ. ຮອດກາງສະຕະວັດທີ 19 ຈຳນວນໂຮງງານຜະລິດເຄື່ອງກົນຈັກເພີ່ມຂຶ້ນຢ່າງເຫັນໄດ້ຊັດ. ການຜະລິດອຸດສະຫະກຳຂອງອາເມຣິກາແມ່ນຂຶ້ນເປັນອັນດັບ4 ຂອງໂລກຖັດມາຈາກ ອັງກິດ, ຝຣັ່ງ ແລະ ເຢຍລະມັນ.

ນາຍທຶນອາເມຣິກາຂະຫຍາຍຕົວຢ່າງໄວເຮັດໃຫ້ມີຄວາມຕ້ອງການແຮງງານຢ່າງຫຼວງຫຼາຍ, ພວກເຂົາໄດ້ທໍາການກົດຂີ່ຂູດຮີດແຮງງານຂອງແມ່ຍິງ ແລະ ເດັກນ້ອຍ. ໃນປີ 1820 ຈໍານວນກໍາມະກອນ ½ ອາຍຸຍັງບໍ່ທັນຮອດເກນໄວໜຸ່ມ. ມື້ໜຶ່ງອອກແຮງງານ 12-13 ຊົ່ວໂມງ ແຕ່ເງິນຄ່າແຮງງານພັດຕໍ່າ. ການຄົງຕົວຂອງລະບອບຂ້າທາດເຮັດໃຫ້ພວກນາຍທຶນມີແນວຄິດປຽບທຽບເພື່ອເພີ່ມທະວີການກົດຂີ່ຂູດຮູດກໍາມະກອນ. ຢູ່ສູນກາງຕໍ່າແຜ່ນແພກໍາມະກອນແມ່ຍິງຕ້ອງອາໄສຢູ່ເຂດສະເພາະຂອງຕຶກທີ່ມີເວນຍາມຢ່າງເຂັ້ມງວດ. ເວລາກໍາມາການເຈັບໄຂ້ໄດ້ປ່ວຍ, ເຖົ້າແກ່ສະລາການລີງ ຖ້າພວກເຂົາບໍ່ມີເງິນຈ່າຍໃນການດໍາລົງຊີວິດກໍ່ຈະຖືກນໍາໄປເຮັດວຽກຢູ່ຕາມນິຄົມ ຫຼື ຟາມແທນ.

ໄພອຶດຫິວ, ໄພຫວ່າງງານໃນເຂດອຸດສະຫະກໍາຕໍ່າແຜ່ນເກີດຂຶ້ນຢ່າງແຜ່ຫຼາຍ. ໃນປີ 1857 ວິກິດການທາງດ້ານເສດຖະກິດເຮັດໃຫ້ກໍາມະກອນຫຼອມໂລຫະ ແລະ ກໍາມະກອນໃນຂະແໜງຜະລິດເຄື່ອງກົນຈັກກໍ່ພົບກັບບັນຫາຫວ່າງງານເຊັ່ນກັນ.

ຈໍານວນກໍາມະກອນນັບມື້ນັບເພີ່ມຂຶ້ນຕາມລະດັບການຂະຫຍາຍຕົວຂອງອຸດສະຫະກໍາໃນປີ 1860 ຢູ່ອາເມຣິກາມີກໍາມະກອນເຖິງ 1.3 ລ້ານຄົນ ທີ່ມີຊີວິດການເປັນຢູ່ທີ່ທຸກຍາກລໍາບາກ ແລະ ຖືກກົດຂີ່ຢ່າງໜັກ ເຮັດໃຫ້ກໍາມະກອນອາເມຣິກາລຸກຂຶ້ນຕໍ່ສູ້ຢ່າງໄວ. ນັບແຕ່ປີ 1786 ກໍາມະກອນໂຮງພິມຢູ່ ຟີລາແດນເຟຍ ໄດ້ລຸກຂຶ້ນປະທ້ວງເພື່ອງໃຫ້ອອກເງິນໃຫ້ເປັນອາທິດ. ປີ 1799 ກໍາມະກອນຜະລິດເກີຍປະທ້ວງຕ້ານກັບການຫຼຸດເງິນເດືອນຂອງພວກນາຍທຶນ. ການລຸກຂຶ້ນຕໍ່ຕ້ານພວກນາຍທຶນເກີດຂຶ້ນຢ່າງຫຼວງຫຼາຍກາຍເປັນເຫດການທີ່ມີໃຫ້ເຫັນທົ່ວໄປໃນສັງຄົມນັບແຕ່ປີ 1833-1837 ຢູ່ອາເມຣິກາມີຂະບວນການລຸກຂຶ້ນປະທ້ວງເຖິງ 168 ຄັ້ງສ່ວນຫຼາຍແມ່ນເກີເຂັ້ນໃນຕົວເມືອງໃຫຍ່.

ຂະບວນການຕໍ່ສູ້ຂອງກໍາມະກອນກ້າວໄປເຖິງການສ້າງຕັ້ງສະຫະພັນປົກປ້ອງສິດຜົນປະໂຫຍດ ແລະ ນໍາພາໃນຂະບວນການຕໍ່ສູ້. ອົງການຈັດຕັ້ງພັນທະພາບກໍາມະກອນທົ່ວປະເທດໄດ້ປະກົດຕົວຂຶ້ນໃນປີ 1834 . ບັນດາສະຫະພັນ ແລະ ສະມາຄົມກໍາມະກອນໃນຂະແໜງອຸດສະຫະກໍາທາງລົດໄຟ ແລະ ໂຮງພິມລ້ວນແຕ່ປະກົດຂຶ້ນໃນໄລຍະນີ້.

ໃນເດືອນມິຖຸນາ ປີ 1852 ອົງການຈັດຕັ້ງມາກ-ຊິດຄັ້ງທໍາອິດໄດ້ຮັບການສ້າງຕັ້ງຂຶ້ນມີຊື່ວ່າ:ພັນທະພາບຄອມມູນິດທີ ນິວຢັອກ. ປຶ້ມຖະແຫຼງການຄອມມູນິດຂອງມາກ-ອັງແກນໄດ້ຖືກແຈກຢາຍເຖິງມືກໍາມກອນອາເມຣິກາ. ການເຄື່ອນໄຫວຕໍ່ສູ້ຂອງກໍາມະກອນອາເມຣິກາໄດ້ລະເບີດຂຶ້ນ. ສະຫະພັນກໍາມະບານອາເມຣິກາ ແລະ ສະໂມສອນກໍາມະຊີບໄດ້ປະກາດຈຸດປະສົງຂອງພວກເຂົາອອກມາວ່າແມ່ນການສ້າງປະເທດສາທາລະນະລັດໃນໂລກ.

**3. ການຂະຫຍາຍຕົວຂອງເສດຖະກິດກະສິກໍາຕາມຮູບແບບຂອງອາເມຣິກາ.**

ອາເມຣິກາກ້າວເຂົ້າສູ່ຍຸກພັດທະນາພິເສດແມ່ນຂະແໜງກະສິກໍາຢູ່ທາງພາກເໜືອ ແລະ ພາກຕາເວັນຕົກສ່ຽງເໜືອ. ພື້ນຖານເສດຖະກິໃນການສ້າງຟາມຂະໜາດນ້ອຍກວມອັດຕາສ່ວນຫຼາຍ, ຜະລິດເພື່ອບໍລິການຕະຫຼາດອຸດສະຫະກໍາ ແຕ່ພາກໃຕກະສິກໍາແມ່ນຕົກຢູ່ໃນກໍາມືຂອງພວກເຈົ້າທີ່ດິນໃຫຍ່ ອີງໃສ່ການກົດຂີ່ຂູດຮີດແຮງງານຂ້າທາດ.

ພາຍຫຼັງການປະຕິວັດ, ຂະບວນການອົບພະຍົບຂະໜາດໃຫຍ່ໄດ້ປ່ຽນແປງດິນແດນທາງພາກຕາເວັນຕົກສ່ຽງເໜືອໃຫ້ເປັນດິນແດນສຳລັບການລ້ຽງແກະ, ໝູ ແລະ ຜະລິດເຂົ້າສາລີ ຫຼື ເຂົ້າບາເລ ນັບແຕ່ປີ 1840-1860ພຽງແຕ່ເວລາ 20 ປີເທົ່ານັ້ນການຜະລິດສະບຽງອາຫານຢູ່ບັນດາລັດຕາເວັນຕົກສ່ຽງເໜືອເພີ່ມຂຶ້ນ 3 ເທົ່າ. ຂະແໜງລ້ຽງສັດມີການຂະຫຍາຍຕົວໂດຍສະເພາະແມ່ນການລ້ຽງໝູ ແລະ ແກະ. ຊິກາໂກກາຍເປັນສູນກາງໃນການສະໜອງຊີ້ນໝູເພື່ອສົ່ງອອກ ແລະ ທັງເປັນສູນກາງໃນການຂາຍເຂົ້າບາເລຂອງອາເມຣິກາ.

ນັບແຕ່ປີ 1820 ພວກອົບພະຍົບດຳເນີນການຜະລິດກະສິກຳດ້ວຍຮູບແບບການຊື້ຕອນດິນນັບແຕ່ 80 ເອເຄີ ຫາ 160 ເອເຄີ. ພວກເຂົາໄດ້ຢືມເງິນດຳເນີນທຸລະກິດ ຈົນຮອດກົດໝາຍວ່າດ້ວຍການອົບພະຍົບຖືກປະກາດໃນປີ 1862 ຍິ່ງເຮັດໃຫ້ການອົບພະຍົບແຜ່ຂະຫຍາຍອອກ.ບັນດາເຈົ້າຂອງຟາມໄດ້ດຳເນີນການປູກຝັງໃນຕອນດິນດ້ວຍກຳລັງແຮງງານຂອງຕົນ ແລະ ຄອບຄົວເພື່ອຜະລິດສິນຄ້າອອກມາຂາຍໃນຕະຫຼາດ. ມັນໄດ້ສ້າງເສັ້ນທາງການຂະຫຍາຍຕົວໃຫ້ແກ່ກະສິກຳອື່ນໃນຫຼາຍປະເທດໃນເອີຣົບ ເອີ້ນວ່າເສັ້ນທາງຕາມແບບຂອງອາເມຣິກາ.

ຢູ່ພາກໃຕ້ບັນດາເຂດກະສິກຳປູກຝ້າຍຂະຫຍາຍຕົວຢ່າງໄວວາ, ຝ້າຍໄດ້ກາຍເປັນສິນຄ້າທີ່ນຳຜົນປະໂຫຍດທາງເສດຖະກິດເປັນອັນດັບໜຶ່ງໃນນິຄົມປູຝັງຢູ່ທາງພາກໃຕ້. ດິນແດນທີ່ອຸດົມສົມບູນ ອາຣາບາມາ ແລະ ມິດຊິດສິບປີ ເໝາະສົມແກ່ການປູກຝ້າຍ. ຫຼຸຍເຊຍນາ ແລະ ເທັກຊາດ ກໍ່ມີບົດບາດສຳຄັນໃນຂະແໜງການຜະລິດຝ້າຍ. ໃນປີ 1808 ປະລິມານການຜະລິດຝ້າຍ 3.650.000 ເພີ່ມຂຶ້ນເຖິງ 1.920.500.000 ແຜ່ນ.

ຄຽງຄູ່ກັບການປູກຝ້າຍນັ້ນຍັງມີການປູກເຂົ້າສາລີ, ຄວາມຈິງແລ້ວການຜະລິດດັ່ງກ່າວນີ້ການຜະລິດອຸດສະຫະກຳຂະຫຍາຍຕົວ. ໃນປີ 1744 ຢູ່ ຫຼຸຍເຊຍນາ ມີໄຮ່ເຂົ້າບາເລທັງໝົດ 762 ແຫ່ງ ປະລິມານການຜະລິດໃນປີ 1860 ເພີ່ມຂຶ້ນ 856 ໂຕນ. ຢູ່ ຄາໂຣລີນາໃຕ້ ແລະ ຈໍເຈຍ ເຂົ້າໄດ້ກາຍເປັນສິນຄ້າສົ່ງອອກທີ່ສຳຄັນ. ປີ 1820-1850 ເພີ່ມຂຶ້ນ 3 ເທົ່າ. ອາຊີບປູກຢາສູບເປັນອາຊີບທີ່ມີມາແຕ່ດົນນານ, ສາມາດຕອບສະໜອງຄວາມຕ້ອງການສົ່ງອອກໄປບັນດາປະເທດເອີຣົບ. ນັບແຕ່ ປີ 1850-1860 ປະລິມານການຜະລິດຢາສູບເພີ່ມຂຶ້ນ 2 ເທົ່າ. ຢາສູບພັນເວີຈີເນຍເປັນສິນຄ້າທີ່ມີລາຄາແພງໃນທ້ອງຕະຫຼາດຂອງໂລກ. ການຂະຫຍາຍຕົວຢ່າງແຂງແຮງຂອງເສດຖະກິດກະສິກຳນາຍທຶນ ອາເມຣິກາ ຕິດພັນກັບເສດຖະກິດການເຮັດຟາມ ແລະ ໄຮ່ນາຮົ້ວສວນເຮັດໃຫ້ມີຜະລິດຕະພັນທີ່ຫຼາກຫຼາຍ ແລະ ອຸດົມສົມບູນທີ່ໄດ້ມາດ້ວຍເຫື່ອແຮງ ແລະ ເລືອດເນື້ອຂອງຊົນເຜົ່າພື້ນເມືອງອິນເດຍແດງຫຼາຍພັນຄົນ ແລະ ຂ້າທາດຜິວດຳ.

ແຕ່ເສັ້ນທາງການຂະຫຍາຍຕົວທາງດ້ານກະສິດກຳແບບນາຍທຶນອາເມຣິກາບໍ່ສາມາດລົບລ້າງລະບອບຂ້າທາດຕາມນິຄົມການກະເສດຢູ່ທາງພາກໃຕ້ ແລະ ຈຳນວນຂ້າທາດທີ່ນັບມື້ນັບເພີ່ມຂຶ້ນຫຼາຍຮຽກຮ້ອງໃຫ້ມີການລຸກຂຶ້ນຕໍ່ສູ້ເພື່ອປົດປ່ອຍຕົນເອງ. ຄວາມຂັດແຍ່ງພາຍໃນເຮັດໃຫ້ອາເມຣິກາກ້າວເຂົ້າສູ່ຍຸກແຫ່ງການເຮັດສົງຄາມພາຍໃນປະເທດເຊິ່ງບໍ່ສາມາດແກ້ໄຂ ແລະ ຢຸດຕິລົງໄດ້. ຂະບວນການຕໍ່ສູ້ແນໃສ່ລົບລ້າງໃຫ້ຮາບກ້ຽງບັນດາຮ່ອງຮອຍຂອງລະບອບຂ້າທາດ ຂອງຮູບແບບການຜະລິດທີ່ຫຼ້າຫຼັງ, ເປີດກວ້າງໃຫ້ລັດທິທຶນນິຍົມອາເມຣິການຂະຫຍາຍຕົວ.

## 4. ລະບອບຂ້າທາດ ແລະ ຄວາມຂັດແຍ້ງພາຍໃນສັງຄົມ



ຮູບແບບການຊູດຣິດຂ້າທາດໃນອາເມຣິກາ

ການຂະຫຍາຍຕົວທາງດ້ານເສດຖະກິດໃນນິຄົມການກະເສດເຮັດໃຫ້ການຄ້າຂາຍຂ້າທາດຜິວດໍາຈາກທະວີບອາຟຣິກກາ ມາສູ່ອາເມຣິກາ. ປີ 1790 ຂ້າທາດຜິດດໍາມີເຖິງ 697.000 ຄົນແຕ່ຮອດປີ 1861 ເພີ່ມຂຶ້ນເປັນ 4.000.000 ຄົນ.

ພາຍຫຼັງສົງຄາມຍາດເອກະລາດ, ລັດຖະທໍາມະນູນຂອງອາເມຣິການໄດ້ຮັບຮອງເອົາການຄົງຕົວຂອງລະບອບທາດດິນນາ (ທາດໃນນິຄົມການກະເສດ) ນັ້ນແມ່ນການປະນີປະນອມກັນລະຫວ່າງນາຍທຶນ ແລະ ເຈົ້າທາດທັງສອງພາກຄືເໜືອ ແລະ ໃຕ້. ເຈົ້າທາດໄດ້ແຕ່ງຕັ້ງຜູ້ແທນຂອງຕົນຂຶ້ນເປັນປະທານາທິບໍດີໃນຫຼາຍສະໄໝ ເພື່ອເປັນບ່ອນອີງໃຫ້ແກ່ການປົກປ້ອງລະບອບທາດດິນນາຢູ່ທາງພາກໃຕ້ ແຕ່ອຸດສະຫະກໍານັບມື້ນັບມີການຂະຫຍາຍຕົວ ແລະ ໄຊຊະນະຂອງລັດທິທຶນນິຍົມອຸດສະຫະກໍາເຮັດໃຫ້ເກີດມີຄວາມຂັດແຍ່ງກັບລະບອບທາດດິນນາ. ສິດຜົນປະໂຫຍດລະຫວ່າງ 2 ຝ່າຍ: ນາຍທຶນການຄ້າອຸດສະຫະກໍາ ແລະ ເຈົ້າທາດຢູ່ທາງພາກໃຕ້ທີ່ບໍ່ສາມາດຄວບຄຸມໄດ້. ຂະບວນການຕໍ່ສູ້ໄດ້ເກີດຂຶ້ນພາຍໃຕ້ບັນຫາ 2 ຢ່າງທີ່ມີການພົວພັນກັນຢ່າງສະໜິດແໜ້ນຄື: ການຄວບຄຸມດິນແດນໃໝ່ພວມໄດ້ຮັບການສ້າງຕັ້ງຂຶ້ນ ແລະ ການກໍາອໍານາດຂອງລັດຖະບາສະຫະລັດ. ການປູກຝັງກັບບັນດາ

ປະເທດນາຍທຶນເອີຣົບໄດ້ສ້າງບັນຫາຕໍ່ກັບການຂະຫຍາຍຕົວຂອງລັດທິທຶນນິຍົມໃນຂະແໜງອຸດສະຫະກຳ ແລະ ແລະ ກະສິດກຳຂອງອາເມຣິກາທີ່ມີລັກສະນະສະເພາະ.

ຮອດຊຸມປີ 50 ຂອງສະຕະວັດທີ 19 ເສດຖະນິໃນນິຄົມການກະເສດຂອງອາເມຣິກາຢູ່ທາງພາກໃຕ້ກ້າວເຂົ້າສູ່ສະພາບວິກິດການ. ການຜະລິດຝ້າຍຢູ່ອິນເດຍເຮັດໃຫ້ອາເມຣິກາໝົດບົດບາດໃນການເປັນມະຫາອຳນາດໃນການຜະລິດຝ້າຍຂອງໂລກ. ໃນນິຄົມພວກເຈົ້າທາດບໍ່ຍອມປັບປຸງເຄື່ອງມືທຳການຜະລິດ ແລະ ປັບປຸງດິນດອນ. ດິນນັບມື້ນັບເຊື່ອມຄຸນນະພາບ. ລະບອບທາດດິນນາໄດ້ຂັດຂວາງການເຂົ້າມາພາກໃຕ້ພວກອົບພະຍົບຜິວຂາວ. ການຄົງຕົວຂອງລະບອບທາດດິນນາສິ່ງຜົນສະທ້ອນຕໍ່ກັບ ການຂະຫຍາຍຕົວຂອງພື້ນຖານອຸດສະຫະກຳ ແລະ ໃນຄວາມເປັນຈິ່ງພວກເຈົ້າທີ່ດິນກໍ່ນັບມື້ນັບຂາດແຄນດິນເພື່ອທຳການຜະລິດ.

ເພື່ອແກ້ໄຂບັນຫາໃນການຂາດເຂີນດິນດອນ, ເຈົ້າທີ່ດິນຫຼາຍຄົນຕ້ອງການກັບມາທາງພາກຕາເວັນຕົກເພື່ອຂະຫຍາຍລະບອບທາດດິນນາຢູ່ທີ່ນັ້ນ. ພາກຕາເວັນຕົກເປັນຂົງເຂດທີ່ອຸດົມສົມບູນກວ້າງໃຫຍ່ໄພສານ. ເຈົ້າຂອງທຸລະກິດທາງພາກເໜືອຕ້ອງການຂອງການເຂົ້າມາດຳເນີນທຸລະກິດຢູ່ທາງພາກຕາເວັນຕົກເພື່ອປູກສາລີ, ເຂົ້າບາເລ ແລະ ລ້ຽງສັດ. ພວກເຂົາຕ້ອງການປ່ຽນດິນແດນເຂດດັ່ງກ່າວເປັນບ່ອນສ້າງພື້ນຖານໃຫ້ໝັ່ນແໜ່ງຂອງອຸດສະຫະກຳ. ພວກເຈົ້າທີ່ດິນຕ້ອງການອົບພະຍົບມາທາງຕາເວັນຕົກເພື່ອຊອກດິນແດນໃໝ່ເພື່ອປ່ຽນແທນດິນແດນຢູ່ທາງພາກໃຕ້ ແລະ ຕ້ອງການສືບຕໍ່ຂະຫຍາຍລະບອບຂ້າທາດ ຄວາມຂັດແຍ່ງຢູ່ທາງທິດຕາເວັນຕົກນັບມື້ນັບຮຸນແຮງ. ພວກເຈົ້າຂອງອຸດສະຫະກຳພາກເໜືອມີຄວາມຫວັງຕໍ່ກັບອຸດສະຫະກຳທີ່ຕົນສາມາດເປັນເຈົ້າຂອງ ແລະ ສາມາດແຂ່ງຂັນໄດ້. ພວກເຂົາຕ້ອງການຮັບປະກັນຕະຫຼາດພາສີໃນອະນານິຄົມເພື່ອປົກປ້ອງ ແລະ ຊຸກຍູ້ໃຫ້ພື້ນຖານອຸດສະຫະກຳພາຍໃນປະເທດ. ຄວາມຈິງໃນເວລານັ້ນ, ເຈົ້າທີ່ດິນໄດ້ປິດກັ້ນຕະຫຼາດທາງພາກໃຕ້ເພື່ອບໍ່ໃຫ້ສິນຄ້າທາງພາກເໜືອສາມາດນຳເຂົ້າມມາຂາຍຢູ່ທາງພາກໃຕ້. ແຕ່ເປີດປະຕູຮັບເອົາສິນຄ້າຈາກອັງກິດເຂົ້າມາ.

**ຢູ່ພາກໃຕ້ຂະບວນການລຸກຂຶ້ນຕໍ່ສູ້ແຜ່ລາມໄປທົ່ວພາກໃຕ້**

ຢູ່ ຫຼຸຍເຊຍນາ ໄດ້ເກີດມີຂະບວນການຕໍ່ສູ້ຂອງຂ້າທາດໃນປີ 1741-1792. ຢູ່ເວີຈິເນຍ ໃນປີ 1792. ລະດູໃບໄມ້ປົ່ງຂອງປີ 1800 ຂ້າທາດເກືອບ 1.000 ຄົນລວມຕົວກັນກັນຢູ່ ຣິດເຊແມນ ທີ່ຂຶ້ນກັບລັດ ເວີຈິເນຍ ໄດ້ລຸກຂຶ້ນຕໍ່ສູ້ດ້ວຍກຳລັງປະກອບອາວຸດພາຍໃຕ້ການນຳພາຂອງ ຈອດເລບຽນ. ປີ 1822 ຂະບວນການລຸຂຶ້ນຕໍ່ສູ້ຂອງຂ້າທາດຢູ່ ໂຄໂລລິນາໃຕ້. ປີ 1831 ພາຍໃຕ້ການນພະາໂທອອກເນ. ໃນປີ 1857 ເຈົ້າຂອງຟາມທີ່ເປັນຄົນຜິວຂາວ ຈອນບຣາວ ໄດ້ນຳພາຂ້າທາດລຸກຂຶ້ນຕໍ່ສູ່ຢູ່ເວີຈິເນຍ ແຕ່ສຸດທ້າຍກໍ່ຖືກປາບປາມ.



ຂ້າທາດລຸກຂຶ້ນຕໍ່ສູ້ກັບເຈົ້າທາດຢູ່ອາເມຣິກາ

ຍ້ອນແນວນັ້ນຄວາມຂັດແຍ່ງລະຫວ່າງນາຍທຶນອຸດສະຫະກໍາກັບເຈົ້າທາດຢູ່ທາງພາກໃຕ້ນັບມື້ນັບຮຸນແຮງ. ແຕ່ພວກນາຍທຶນພາກເໜືອຕ້ອງການທ້ອນໂຮມອໍານາດເຂົ້າສູນກາງເພື່ອຄວາມເປັນເອກະພາບໃຫການຂະຫຍາຍເສດຖະກິດ ແລະ ການຮຽກຮ້ອງໃຫ້ເສຍພາສີສິນຄ້າອຸດສະຫະກໍາໃນລາຄາທີ່ສູງທີ່ນໍາເຂົ້າມາ ສິ່ງຜົນຮ້າຍຕໍ່ກັບການຜະລິດໃນທ້ອງຖິ່ນ. ກົງກັນຂ້າມເຈົ້າຂອງອະນານິຄົມໂດຍສະເພາະພວກດໍາເນີນທຸລະກິດກ່ຽວກັບຝ້າຍ ພັດຕ້ອງການຫຼຸດພາສີນໍາເຂົ້າສິນຄ້າ. ການປະນີປະນອມກັນໄລຍະກ່ອນການປະຕິວັດລະຫວ່າງນາຍທຶນອຸດສະຫະກໍາການຄ້າ ກັບ ກັບເຈົ້າທາດເພື່ອເສດຖະກິດຂອງປະເທດອາເມຣິກາໃນເວລານັ້ນ. ແຕ່ມາຮອດຊຸມປີ 50-60 ຂອງສະຕະວັດທີ 19 ບັນຫາການບຸກເບີດພາກຕາເວັນຕົກ ແລະ ທ່າອ່ຽງການຂະຫຍາຍຕົວຂອງລັດທິທຶນນິຍົມ ແລະສັງຄົມບໍ່ອະນຸຍາດໃຫ້ລະບອບຂ້າທາດຄົງຕົວຕໍ່ໄປອີກ ສະນັ້ນສົງຄາມລະຫວ່າງທັງສອງຝ່າຍຈຶ່ງເກີດຂຶ້ນຮຸນແຮງ.

ຂະບວນການອົບພະຍົບໄປທາງທິດຕາເວັນຕົກໃນສະຕະວັດທີ 19 ນັບື້ນັບຫຼາຍ, ກຸ່ມຄົນທີ່ອົບພະຍົບເຂົ້າໄປມາຈາກຫຼາຍພາກສ່ວນເຊັ່ນ: ເຈົ້າຂອງຟາມ, ກໍາມະກອນທີ່ຫວ່າງງານ. ພວກອົບກະຍົບເຂົ້າມາອາເມຣິກາພາຍຫຼັງການປະຕິວັດໃນປີ 1848ຈາກທະວີບເອີຣົບ. ກຸ່ມຄົນດັ່ງກ່າວຕ້ອງການດິນ ແລະ ອິດສະຫຼະພາບ ຕ້ອງການສ້າງຟາມປູກຝັງ-ລ້ຽງສັດຢູ່ຕາເວັນຕົກ. ພວກເຂົາຕໍ່ຕ້ານເຈົ້າທາດທີ່ຕ້ອງການບັງຄັບໃຫ້ພວກເຂົາປ່ຽນມາເປັນຂ້າທາດ. ພວກເຂົາມີຖານະທຸກຍາກ, ເຖິງແມ່ນວ່າຈະຂາຍດິນໃນລາຄາຖືກຄືໃນປີ 1855 ລັດຖະບານຂາຍດິນອອກໄປເຖິງ 15 ລ້ານ ເອເຄີແຕ່ພວກເຈົ້າທີ່ດິນຂັດຂວາງການແກ້ໄຂບັນຫາຕາມເສັ້ນທາງປະຊາທິປະໄຕ. ຂະບວນການຕໍ່ສູ້ຕ້ານກັບລະບອບຂ້າທາດລະຫວ່າງ2 ກໍາລັງປໍລະປັກກ້າວເຂົ້າສູ່ຄວາມຮຸນແຮງ.

ກໍາລັງພົນທີ່ເຂົ້າຮ່ວມສົງຄາມຕ້ານກັບລະບອບຂ້າທາດແມ່ນບໍ່ໄດ້ຈໍາກັດໃນຈໍານວນຂ້າທາດຜິວດໍາເພາະສິດໃນການດໍາລົງຊີວິດຕ້ອງເປັນຂອງຕົນເອງທີ່ແຜ່ລາມໄປຮອດຊາວຜິວຂາວນັບທັງຜູ້ຮັ່ງມີນັບທັງນາຍທຶນ ພວກເຂົາດໍາເນີນການຕໍ່ສູ້ເພື່ອເສັ້ນທາງໃນການພັດທະນາຂອງຕົນ.

ຕໍ່ກັບຊົນຊັ້ນນາຍທຶນອາເມຣິກາ ພວກເຂົາແມ່ນຊົນຊັ້ນທີ່ສັງຄົມຕ້ອງການທີ່ສຸດຕໍ່ກັບສະຕາກຳຂອງພວກຂ້າທາດ. ພວກເຂົາລ້ວນແຕ່ຮັບຮູ້ວ່າ: ປະເທດອາເມຣິກາເປັນບ່ອນທີ່ພວກຂ້າທາດຜິດດຳຖືກກົດຂີ່ຂູດຮີດ ແລະ ໃນຂະນະດຽວກັນນັ້ນຊາວຜິວຂາວກໍ່ບໍ່ໄດ້ຮັບການປົດປ່ອຍເຊັ່ນກັນ.

ຄວາມຈິງແລ້ວບັນດາເຫດຜົນທີ່ກ່າວມາຂ້າງເທິງທີ່ເຮັດໃຫ້ສົງຄາມພາຍໃນອາເມຣິກາເກີດຂຶ້ນໃນປີ 1861-1865 ກາຍເປັນສົງຄາມແນໃສ່ເພື່ອແກ້ໄຂບັນຫາຄວາມຕ້ອງການຄວາມກ້າວໜ້າຂອງປະຫວັດສາດ.

## II. ສົງຄາມພາຍໃນປະເທດອາເມຣິການໃນປີ 1861-1865

### 1. ສົງຄາມທີ່ຮຸນແຮງ-ການຊະນະການເລືອກຕັ້ງຂອງ ອາບຣາແຮັມ ລິງຄອນ ປະທານາທິບໍດີຄົນທຳອິດຂອງອາເມຣິກາ

ຍ້ອນກຳລັງແຮງຂອງອຸດສະຫະກຳໄດ້ຮັບໄຊຊະນະ, ການຄຸ້ມຄອງສ່ວນຫຼາຍຂຶ້ນກັບນາຍທຶນພາກເໜືອ, ສິ່ງດັ່ງກ່າວນີ້ໄດ້ສ້າງຄວາມສັ່ນຄອນໃຫ້ແກ່ລະບອບຂ້າທາດຢູ່ອາເມຣິກາ. ໃນສະຕະວັດທີ 19 ຂະບວນການລຸກຂຶ້ນຕໍ່ສູ້ຂອງຂ້າທາດນັບມື້ນັບຫຼາຍ. ຂ້າທາດໄດ້ໂຕນໜີຈາກທົ່ງໄຮ່ທົ່ງນາເກີດຂຶ້ນຢ່າງຫຼວງຫຼາຍ ເພື່ອແກ້ໄຂບັນຫານັ້ນພວກເຈົ້າທາດຮຽກຮ້ອງໃຫ້ອຳນາດການປົກຄອງຢູ່ບັນດາລັດຕ່າງໆໃນພາກເໜືອຕ້ອງຈັບ ແລະ ສົ່ງພວກຂ້າທາດຄືນໃຫ້ເຈົ້າທາດຢູ່ພາກໃຕ້ ແຕ່ຂ້າທາດຍິ່ງປົບໜີ. ອຳນາດການປົກຄອງໂດຍມີພັກປະຊາທິປະໄຕ ທີ່ກວມຈຳນວນພົນຫຼາຍໃນສອງສະພາ. ເຈົ້າທາດພາກໃຕ້ຄຸ້ມຄອງສິດໃນການບໍລິຫານ ເພື່ອນຳໃຊ້ສິດອຳນາດດັ່ງກ່າວເພື່ອປົກປ້ອງສິດຜົນປະໂຫຍດຂອງຕົນ.

ການຕໍ່ສູ້ທັງສອງຝ່າຍນັບມື້ນັບຮຸນແຮງໃນປີ 1850 ໃນທາມກາງສະພາບການແກ້ໄຂບັນຢູ່ ເນບຣາສກາ ແລະ ການຊາດເປັນດິນແດນທີ່ຕ້ອງການເດີນຕາມລະບອບຂ້າທາດ ຫຼື ນິຄົມກະເສດ. ບັນດາເຈົ້າຂອງນິຄົມ ແລະ ປະຊາຊົນຜູ້ມີອິດສະຫຼະພາບໄດ້ດຳເນີນການຕໍ່ສູ້ຕ້ານກັບແນວຄິດທີ່ຕ້ອງການປົກປ້ອງຕົນເອງຂອງພວກເຈົ້າຂອງໄຮ່ນາຮົ້ວສວນ. ຕາມການເຈລະຈາ ມິດຊູຣີ ໃນປີ 1820 ໄດ້ຖືເອົາເສັ້ນຂະໜານທີ 36 ອົງສາ 30 ລິບດາເປັນເສັ້ນແບ່ງເຂດແດນທັງສອງພາກ ແລະ ອະນຸຍາດໃຫ້ທັງສອງພາກສາມາດເລືອກປະຕິບັດຕາມລະບອບການປົກຄອງຂອງຕົນ. ສງຄາມໄດ້ຄ່ອຍໆເຮັດໃຫມີການສ້າງຕັ້ງລັດຖະບານທ້ອງຖິ່ນຂອງທັງສອງພາກຂຶ້ນ. ສອງສະພານິຕິບັນຍັດທີ່ມີແນວຄິດກົງກັນຂ້າມກັນ. ໃນເວລານັ້ນອຳນາດການປົກຄອງຂັ້ນສູນກາງທີ່ພວກເຈົ້າທາດຄວບຄຸມໄດ້ຊອກທຸກວິທີທາງເພື່ອຍາດເອົາໄຊຊະນະມາສູ່ເຈົ້າທາດ. ສົງຄາມໄດ້ລະເບີດຂຶ້ນຢ່າງຮຸນແຮງໃນປີ 1854 ໃນໂອກາດເຮັດການເລືອກຕັ້ງສະມາຄົມທ້ອງຖິ່ນ ການຊັດ . ພວກເຈົ້າທາດໄດ້ນຳໃຊ້ກຳລັງອາວຸດນາບຂູ່ເພື່ອຍາດເອົາຄະແນນໃນການເລືອກຕັ້ງເຮັດໃຫ່ພວກນເຈົ້າຂອງນິຄົມຈັບອາວຸດລຸກຂຶ້ນຕໍ່ສູ້ຕ້ານຄືນ. ຂະບວນການຕໍ່ສູ້ແກ່ຍາວເປັນເວລາ 4ປີ ນັບແຕ່ປີ 1854-1858 ເຈົ້າທາດຈິ່ງຄ່ອຍໆຍາດໄດ້ໄຊຊະນະ.

ກ້າວສູ່ເດືອນພຶດສະພາ ປີ 1857 ໄໄດ້ເກີດມີເຫດການທີ່ສິ່ງຜົນສະທ້ອນຕໍ່ກັບຂະບວນການຕໍ່ສູ້ນັ້ນກໍ່ຄືການຮ້ອງຟ້ອງຂອງຊາວຜິວດຳຄົນໜຶ່ງຊື່ວ່າ ເດຣດ ສະກັອດ ເພິ່ນໄດ້ດຳລົງຊີວິດເປັນເວລາດົນໃນລັດເອກະລາດ. ແຕ່ສານໄດ້ຕັດສິນວ່າ ເດຣດ ສະກັອດບໍ່ມີສິດດຳເນີນຄະດີ. ຕໍ່ກັບແນວຄິດຂອງລາວແມ່ນ ຊັບສິນຂອງພວດເຈົ້າທາດແມ່ນພວກທີ່ບໍ່ມີສັນຊາດ. ຍ້ອນແນວນັ້ນລະບອບຂ້າທາດຈິ່ງຖືວ່າມີໃຫ້ເຫັນຫຼາຍຢູ່ໃນປະເທດອາເມຣິກາ. ບັນດາເຈົ້າຂອງນິຄົມຝ່າຍປະຊາທິປະໄຕເປັນຕົວແທນໃຫ້ແກ້ແນວຄິດຕໍ່ຕ້ານເຫັນໄດ້ເຖິງໄພອັນຕະລາຍທີ່ຈະເກີດຂຶ້ນ.

ສອງປີຕໍ່ມາໃນເດືອນຕຸລາ 1859 ເຈົ້າຂອງນິຄົມແຫ່ງນຶ່ງທີ່ລັດເວີຈິເນຍ ຊື່ວ່າຈອນ ບຣາວ ໄດ້ລຸກຂຶ້ນຕໍ່ສູ້ເພື່ອຮຽກຮ້ອງໃຫ້ລົບລ້າງລະບອບຂ້າທາດ. ກຳລັງທະຫານໄດ້ຈັບອາວຸດຕໍ່ສູ້ກັບ ແລະ ປາບປາມເຈົ້າຂອງໄຮ່ນາຮົ້ວສວນ, ຈັບເອົາເຈົ້າທາດເປັນຕົວປະກັນ, ຮຽກຮ້ອງໃຫ້ປົດຂ່ອຍຂ້າດ. ຈອນ ບຣາວ ແລະ ກຳລັງປະທ້ວງໄດ້ກາຍເປັນກອງກຳລັງເພື່ອປາບປາບໃນທົ່ວທຸກຂົງເຂດ, ໂຄ່ນລົ້ມອຳນາດການປົກຄອງທັງໝົດ. ແຕ່ຍ້ອນກຳລັງພົນອ່ອນນ້ອຍຈຶ່ງເຮັດໃຫ້ ຈອດ ວໍຊິງຕັນ ນຳກຳລັງທະຫານເຂົ້າມາປາບປາມໄດ້ເກືອບທັງໝົດ. ຈອນ ບຣາບ ໄດ້ຮັບບາດເຈັບ ແລະ ຖືກຈັບ ຕໍ່ມາກໍ່ຖືກປະຫານຊີວິດ. ກ່ອນທີ່ຈະຖືກປະຫານຊີວິດ ຈອນບຣາວໄດ້ຢັ້ງຢືນຕໍ່ກັບແນວຄິດຂອງຕົນຕໍ່ໜ້າການຕໍ່ສູ້ເພື່ອປົດປ່ອຍຕົນເອງວ່າ: ຂ້ອຍເຊື່ອວ່າມີພຽງການສະຫຼະເລືອດເນື້ອ (ການຕໍ່ສູ້) ຈຶ່ງຈະສາມາດລົບລ້າງຄວາມບໍ່ຍຸດຕິທຳດັ່ງກ່າວນີ້ໄດ້.

ຂະບວນການລຸກຂຶ້ນຕໍ່ສູ້ຂອງປວງຊົນສິ່ງຜົນສະທ້ອນອັນໃຫຍ່ຫຼວງເຖິງກຳລັງທັງສອງຝ່າຍ. ການເລືອກຕັ້ງປະທານາທິບໍດີ ໃນປີ 1860 ແມ່ນເຫດການສະແດງໃຫ້ເຫັນຄວາມຂັດແຍ່ງລະຫວ່າງພັກປະຊາທິປະໄຕ ແລະ ພັກສາທາລະນະລັດ ເຊິ່ງຂໍ້ຂັດແຍ່ງດັ່ງກ່າວໄດ້ກ້າວຂຶ້ນສູ່ລະດັບສູງ.

ພັກປະຊາທິປະໄດ້ສ້າງຂຶ້ນໃນປີ 1791. ໃນຕົ້ນສະຕະວັດທີ 19 ພັກໄດ້ຮັບໃຊ້ສິດຜົນປະໂຫຍດໃຫ້ແກ່ພວກເຈົ້າຂອງໄຮ່ນາຢູ່ທາງພາກໃຕ້ ແລະ ພວກຊົນຊັ້ນນາຍທຶນທະນາຄານ, ນາຍທຶນກອຸດສະຫະກຳການຄ້າຢູ່ທາງພາກເໜືອ. ພັກຍັງປະກອບດ້ວຍຊົນຊັ້ນນາຍທຶນນ້ອຍໃນຕົວເມືອງ ແລະ ບັນດາພວກ ແຟັກເມີຕໍ່ຕ້ານນະໂຍບາຍຂອງພວກນາຍທຶນໃຫຍ່. ຮອດປີ 1860 ພັກໄດ້ເກີດມີຫຼາຍກະແສແນວຄິດ: ກຸ່ມປະຊາທິປະໄຕພາກເໜືອປະກອບດ້ວຍນາຍທຶນໃຫຍ່ ແລະ ເຈົ້າທາດທີ່ຕ້ອງການສະໜັບສະໜູນພື້ນຖານເສດຖະກິດ ແລະ ທີ່ຕັ້ງພາລະບິດບາດຂອງຕົນເອງ ພວກເຂົາຕໍ່ຕ້ານກ້ານຮັກສາລະບອບຂ້າທາດຢູ່ທາງພາກເໜືອ ແລະ ພາກຕາເວັນຕົກ ອີກກຸ່ມໜຶ່ງແມ່ນພວກປະຊາທິປະໄຕພາກໃຕ້ເປັນຕົວແທນໃຫ້ແກ່ກຳລັງຂອງພວກເຈົ້າຂອງໄຮ່ນາຮົ້ວສວນຫຼື ເອີ້ນວ່າພວກອະນຸລັກນິຍົມ, ພວກເຂົາດຳເນີນການປົກປັກຮັກສາລະບອບຂ້າທາດທີ່ມີການຈຳແນກເຊື້ອຊາດເຜົ່າພັນ. ໃນຈຳນວນເຈົ້າທາດນັ້ນກໍ່ຍັງມີເຈົ້າທາດຈຳນວນໜຶ່ງທີ່ມີຄວາມເມດຕາປານີປານອມກວ່າເຊິ່ງເປັນຕົວແທນໃຫ້ແກ່ເຈົ້າທາດແຖບຊາຍແດນ ແລະ ລັດຈຳນວນໜຶ່ງຢູ່ທາງພາກໃຕ້. ສົງຄາມຈຳແນກເຊື້ອຊາດແມ່ນການສະທ້ອນໃຫ້ເຫັນສະພາບທາງສັງຄົມທີ່ຢູ່ໃນກຳມືຂອງພັກ ປະຊາທິປະໄຕ. ພັກຖືກຕັດແບ່ງອອກເປັນຫຼາຍກຸ່ມຄົນໃນບັ້ນເລືອກຕັ້ງເອົາປະທານາທິບໍດີ.

ພັກສາທາລະນະລັດເກີດຂຶ້ນເມື່ອປີ 1851 ປະກອບດ້ວຍສະມາຊິກຂອງພັກດິນນາເສລີທີ່ໄດ້ຮັບການສ້າງຕັ້ງໃນຊຸມປີ 40 ຂອງສະຕະວັດທີ 19 ແລະ ສະມາຊິກພັກຈຳນວນໜຶ່ງທີ່ແຍກຕົວອອກຈາກພັກປະຊາທິປະໄຕ. ພັກຝ່າຍຂວາເປັນຕົວແທນໃຫ້ແກ່ສິດຜົນປະໂຫຍດຂອງຊົນຊັ້ນນາຍທຶນ ແລະ ເຈົ້າຂອງນິຄົມກະເສດທາງພາກເໜືອພວກເຂົາດຳເນີນການກີດຂວາງລະບອບຂ້າທາດ. ພວກເຂົາໄດ້ເອົາໃຈໃສ່ໃນການບຸກເບີກດິນດອນຕອນຫຍ້າຢູ່ທາງທິດຕາເວັນຕົກ, ໄດ້ດຳເນີນນະໂຍບາຍເກັບພາສີອາກອນເພື່ອຮັບປະກັນສິດຜົນປະໂຫຍດຂອງຊົນຊັ້ນນາຍທຶນອາເມຣິກາ. ພັກຝ່າຍຊ້າຍປະກອບດ້ວຍຕົວແທນຂອງນາຍທຶນນ້ອຍ, ພວກ ຟາກເມີ, ນາຍທຶນໃນຕົວເມືອງ. ນະໂຍບາຍຂອງພວກເຂົາແມ່ນຮຽກຮ້ອງໃຫ້ປົດປ່ອຍຂ້າທາດ ແລະ ແບ່ງປັນດິນແດນຢູ່ທາງຕາເວັນຕົກໃຫ້ພວກທີ່ບໍ່ມີດິນດອນຕອນຫຍ້າທຳການຜະລິດ. ພັກສາທາລະນະລັດເຖິງວ່າໃນຕົວຈິ່ງຈະບໍ່ມີຄວາມເປັນເອກະພາບກັນທັງໝົດກໍ່ຕາມ ແຕ່ກໍ່ມີກຳລັງເຂັ້ມແຂງຂອງມະຫາຊົນ ແລະ ມີເງື່ອນໄຂປະຫວັດສາດທີ່ກ້າວໜ້າມີພື້ນຖານການຜະລິດ

ເປັນບ່ອນຕັດສິນ. ພວກເຂົາສາມາດຍາດເອົາສິດໃນການປົກຄອງໃນເບື້ອງຕົ້ນ. ຜູ້ນໍາຂອງຝ່າຍສາທາລະນະລັດ ແລະ ຊົນຊັ້ນນາຍທຶນອຸດສະຫະກໍາ ແມ່ນ ອາບຣາແຮມ ລິງຄອນ



ອາບຣາແຮມ ລິງຄອນ

ອາບຣາແຮມ ລິງຄອນ Abraham Lincoln (1809-1865) ກໍາເນີດໃນຄອບຄົວຊຸມຊົນຜູ້ທຸກຍາກຢູ່ແຄຄນຕັກສະກີ , ຖືກພວກເຈົ້າທາດຂົ່ມເຫັງເຮັດໃຫ້ຄອລຄົວຂອງທ່ານອົບພະຍົບໄປອາໄສຢູ່ພາກຕາເວັນຕົກ. ຕອນຍັງນ້ອຍທ່ານຕ້ອງໄດ້ອອກແຮງງານຢ່າງໜັກແຕ່ອາໄສຄວາມສະຫຼາດ ແລະ ຄວາມອົງອາດກ້າຫານທ່ານຈິ່ງໄດ້ກາຍມາເປັນຜູ້ນໍາຂອງແນວຄິດອັນໃໝ່. ໃນປີ 1848 ທ່ານໄດ້ຮັບການແຕ່ງຕັ້ງເຂົ້າເປັນສະມາຊິກສະພາ, ຮອດປີ 1860 ພັກສາທາລະນະລັດໄດ້ສົ່ງລົງສະໝັກເລືອກຕັ້ງເປັນປະທານາທິບໍດີ ແລະ ທ່ານກໍ່ຊະນະໃນການເລືອກຕັ້ງ.

**2. ການຜັນແປຂອງສົງຄາມພາຍໃນ**

ຊົນຊັ້ນເຈົ້າທາດໝົດອໍານາດໃນລັດຖະບານຕໍ່ຕ້ານໃນວັນທີ 20 ທັນວາ 1860 ລັດຄາໂລລີນາໃຕ້ ປະກາດແຍກຕົວອອກຈາກສະຫະພັນທະລັດ (ສະຫະລັດ) . ຕໍ່ມາເດືອນກຸມພາ 1861 ຫົກລັດທີ່ປົກຄອງແບບລະບອບຂ້າທາດຢູ່ທາງພາກໃຕ້ປະກາດແຍກຕົວ. ບັນດາລັດທີ່ປະກາດແຍກຕົວໄດ້ເປີດກອງປະຊຸມທີ່ ມົງໂກເມຣີ ລັດອາລາບາ

ມາ ຕົກລົງສ້າງຕັ້ງລັດຖະບານຂອງຕົນຂຶ້ນ ແລະ ແຕ່ງຕັ້ງນາຍພົນ ເດວິດເຈົ້າທາດຢູ່ລັດມິດຊິດສິບປີເປັນປະທານາທິບໍດີ ຕໍ່ມາກໍ່ມີ 4 ລັດເຂົ້າສະຫະພັນທະລັດທີ່ມີນະຄອນຫຼວງຢູ່ ຣິດຈມອນ ທີ່ຂຶ້ນກັບລັດເວີຈີເນຍ. ລັດຖະບານສະຫະພັນທະລັດໄດ້ອອກຄຳສັ່ງສ້າງຕັ້ງກອງທັບທີ່ມີຈຳນວນພົນ 10.000 ຄົນເພື່ອຕໍ່ສູ້ຕ້ານກັບລັດຖະບານສູນກາງ.

ຍ້ອນແນວນັ້ນປະເທດປະເທດອາເມຣິກາມີປະທານາທິບໍດີ 2 ຄົນ, 2 ລັດຖະບານ, ສອງສະພາ ແລະ 2 ກຳລັງທະຫານທີ່ເປັນປໍລະປັກກັນໃນເວລານັ້ນ, ລັດຖະບານສະຫະພັນທະລັດພາກໃຕ້ໄດ້ປະກາດໄດ້ຮັບຮູ້ສິດໃນການຄອບຄອງຂ້າທາດ ແລະ ຖືຂ້າທາດເປັນລັກສະນະທຳມະຊາດທົ່ວໄປຂອງພວກຊາວຜິວດຳ. ຂະບວນການຕໍ່ສູ້ໄດ້ເລີ່ມເກີດຂຶ້ນເອີ້ນວ່າສົງຄາມແຍກຕົວ. ວັນທີ 12 ເມສາ ປີ 1861 ສົງຄາມໄດ້ລະເບີດຂຶ້ນຢູ່ ຄາໂລລິນາໃຕ້ຈາກນັ້ນກໍ່ແຜ່ລາມໄປສູ່ສົງຄາມທາງທະເລ, ຕາມລ້ອງແມ່ນ້ຳ ມິດສິດສິບປີ ແລະ ໃນດິນແດນລັດຂະໜາດນ້ອຍຢູ່ທາງພາກໃຕ້ ແລະ ລຽບຕາມມະຫາສະໝຸດອັດລັງຕິກ.

ບັນດາເຮືອຮົບຂອງສະພັນທະລັດທາງເໜືອໄດ້ເຂົ້າຂັດຂວາງເພື່ອປິດທ່າເຮືອທາງພາກໃຕ້ເພື່ອບໍ່ໃຫ້ເຮືອຂອງອັງກິດ ແລະ ເຮືອຂອງບັນດາລັດທາງພາກໃຕ້ເດີນທາງເຂົ້າມາໄດ້. ໃນໄລຍະທຳອິດກຳລັງທະຫານສະຫະລັດພາກເໜືອຍາດມາໄດ້ທ່າໄດ້ປຽບ. ຍ້ອນມີເຮືອທີ່ຊື້ຈາກອັງກິດທັນສະໄໝກວ່າ, ບັນດາເຮືອຂອງສະຫະພັນທະລັດສາມາດດັບສູນເຮືອຂອງສະຫາພັນທະລັດທາງພາກເໜືອໃຫ້ເສຍຫາຍຫຼາຍລຳ.

ໃນສະໜາມຮົບທາງທະເລ, ຝ່າຍສະຫະພັນທະລັດທາງພາກໃຕ້ໄດ້ຮັບຜົນເສຍຫາຍຢ່າງໜັກ ແຕ່ໃນສະໜາມຮົບລ້ອງແມ່ນ້ຳມິດຊິດຊິບປີ ສາມາດຍາດເອົາໄຊຊະນາມາໄດ້ ພາຍໃຕ້ການບັນຊາໂດຍນາຍພົນ ເຈນ. ກຳລັງທະຫານສະຫະພັນທະລັດ ສາມາດຍຶດຄອງ ອອກລີເອິນ ໃນປີ 1862 ແລະ ະຄອນ ວິດຈເຣິກໃນປີ 1863. 2 ລັດຄືເທັດຊັດ ແລະ ອາການຊັດ ຖືກຕັດແຍກໃຫ້ໂດດດ່ຽວ. ຍ້ອນເຫັນທ່າໄດ້ປຽບໃນສະໜາມຮົບແມ່ນ້ຳມິດຊິດຊິບປີ ກຳລັງທະຫານຂອງສະຫະພັນພາກເໜືອຈິ່ງປິດລ້ອມກຳລັງຂອງພວກສະຫະພັນທະລັດຢູ່ທາງທິດຕາເວັນອອກ.

ຢູ່ແຄມຝັ່ງທະເລຕາເວັນອອກ ສົງຄາມໄດ້ເກີດຂຶ້ນ, ຝ່າຍນິຄົມກະເສດ ແລະ ນາຍທຶນສະຫພັນທະລັດຢູ່ໃນທ່າເສຍປຽບ. ສາເຫດຂອງການປາຣາໄຊຍ້ອນ ລິງຄອນ ແລະ ພັກພວກບໍ່ໄດ້ນຳໃຊ້ວິທີການກຳຈັດສດຕູຢ່າງຈິງຈັງ. ພວກນາຍທຶນອຸດສະຫະກຳການຄ້ານຳໃຊ້ວິທີການທີ່ເລີກແລນແບບນຽມກວ່າ. ແຕ່ໄລະຍາເວລາໃນການຂະຫຍາຍສົງຄາມ ແລະ ຄວາມຮຽກຮ້ອງຕ້ອງການຂອງມະຫາຊົນໄດ້ບັງຄັບໃຫ້ຊົນຊັ້ນນາຍທຶນອຸດສະຫະກຳການຄ້າທີ່ກຳອຳນາດໃນການບັນຊາທະຫານສະຫະພັນທະລັດຕ້ອງຍອມຮັບວິທີການກຳຈັດສັດຕູໃຫ້ຮາບຄາບ.

ຕົ້ນເດືອນກໍລະກົດປີ 1863 ພາຍຫຼັງສິ້ນສຸດສະໜາມຮົບ ເຈນຕິເບີກ ຝ່າຍສະຫະພັນທະລັດພາກເໜືອສາມາດຍາດເອົາໄຊຊະນະມາໄດ້. ສະພາບການທາງດ້ານການທະຫານໄດ້ນຳເອົາທ່າໄດ້ປຽບມາສູ່ພາກເໜືອ. ໃນປີ 1864 ລິນຄອນໄດ້ຮັບການແຕ່ງຕັ້ງເປັນປະນາທານາທິບໍດີ, ນາຍພົນເຈນຖືກລິນຄອນແຕ່ງຕັ້ງເປັນຜູ້ບັນຊາການທະຫານສູງສຸດ. ສົງຄາມສືບຕໍ່ຍາດເອົາໄຊຊະນະ. ໃນລະດູໃບໄມ້ປົ່ງ ຂອງປີ 1865 ຂະບວນການລຸກຂຶ້ນຕໍ່ສູ້ເກີດຂຶ້ນຢ່າງຮຸນແຮງ, ນາຍພົນ ເຊີມານ ບຸກໂຈມຕີ ແລະ ຍຶດເອົາ ຊອກຊາ ຕີເຂົ້າ ຊາວານນາ ຕາມແຄມລ້ອງຝັ່ງທະເລຕາເວັນອອກສ່ຽງໃຕ້ສົມທົບກັບຂະບວນການຕໍ່ສູ້ຂອງຜູ້ບັນຊາການທະຫານສູງສຸດ ເຈນເພື່ອໂຈມຕີ ຣິດຈ ໂມນ . ວັນທີ 3 ເມສາ 1865 ທະຫານສະຫະພັນທະລັດສາມາດຍຶດຄອງ ຣິດຈມອນ ໄດ້ສູນເສຍນະຄອນຫຼວງຂອງສະຫະພັນທະລັດ. ໜຶ່ງອາທິດຕໍ່ມານາຍພົນ ລີ ແລະ ກຳລັງທະຫານຈຳນວນ280.000ຄົນ ໄດ້ຍອມຈຳນົນ.

ສົງຄາມພາຍໃນສິ້ນສຸດລົງເຊິ່ງໃນສົງຄາມຄັ້ງນີ້ທັງສອງຝ່າຍລ້ວນແຕ່ສູນເສຍຢ່າງໜັກເຮັດໃຫ້ມີຜູ້ເສຍຊີວິດທັງສອງຝ່າຍລວມກັນປະມານ 60.000 ຄົນ ສຸດທ້າຍທະຫານຝ່າຍສະຫະພັນທະລັດໄດ້ຮັບໄຊຊະນະແຕ່ມີຜູ້ເສຍຊີວິດເຖິງ 36.000 ຄົນ.

ລະບອບຂ້າທາດຖືກປະກາດລົບລ້າງລົງ. ອາບຣາແຮມ ລິງຄອນໄດ້ອອກຄຳສັ່ງໃຫ້ຍົກເລີກ ແລະ ປົດປ່ອຍຂ້າທາດ. ໃນປີ 1862 ລິງຄອນໄດ້ມີຄຳສັ່ງໃຫ້ແບ່ງປັນດິນດອນຢູ່ພາກຕາເວັນຕົກໃຫ້ຊາວອົບພະຍົບ, ໜຶ່ງຄົນ/160 ເອເຄີ (ປະມານ 50 ເຮັກຕາ) ດຳເນີນການຜະລິດພາຍໃນເວລາ 5 ປີ ທຳອິດແມ່ນບໍ່ໃຫ້ເສຍພາສີ, ຍ້ອນແນວນັ້ນຈຳນວນຊາວອົບພະຍົບນັບທັງຊາວຜິວດຳຈິ່ງໄດ້ຮັບການປົດປ່ອຍ ແລະ ມີດິນດອນຕອນຫຍ້າໃນການທຳການຜະລິດ ແລະ ດຳລົງຊີວິດ. ແຕ່ສົງຄາມລະຫວ່າງຝ່າຍນາຍທຶນກັບເຈົ້າທາດແມ່ນຍັງມີໃຫ້ເຫັນ ແລະ ຮຸນແຮງຂຶ້ນເລື້ອຍໆ. ໃນພິທີສະເຫຼີມສະຫຼອງໄຊຊະນະໃນວັນທີ 14 ເມສາ 1865 ປະທານາທິບໍດີ ລິງຄອນ ຖືກກົດດັນ.

## III. ປະເທດອາເມຣິກາພາຍຫຼັງສົງຄາມພາຍໃນ

ພາຍຫຼັງໄຊຊະນະສົງຄາມພາຍໃນຂອງຝ່າຍສະຫະພັນທະລັດ ສະພາບການພາຍໃນປະເທດອາເມຣິການັບມື້ຍິ່ງມີຄວາມສັບສົນ. ແອວດິວ ຈອນສັນ ໄດ້ຂຶ້ນເປັນປະທານາທິບໍດີອາເມຣິກາແທນ ລິງຄອນ (1865-1969). ທ່ານເປັນຄົນຊົນຊັ້ນປານກາງທີ່ບໍ່ຕ້ອງການດຳເນີນວິທີການແບບປະຊາດທິປະໄຕຜະເດັດການ. ແຕ່ການປົດປ່ອຍຂ້າທາດໄດ້ກາຍເປັນບັນຫາໜຶ່ງທີ່ຕ້ອງໄດ້ດຳເນີນການ. ນັບແຕ່ວັນທີ 1 ມັງກອນ 1863 ປະທານາທິບໍດີ ລິງຄອນ ໄດ້ປະກອບລົບລ້າງລະບອບຂ້າທາດຢ່າງສິ້ນເຊີງ. ໃນຊວງໄລຍະຕໍ່ມາ ມິດຊູຣີເຊິ່ງເປັນລັດຂະໜາດນ້ອຍ ແລະ ລັດນ້ອຍອື່ນໆອີກໄດ້ປະຕິບັດຕາມກົດໝາຍປົດປ່ອຍຂ້າທາດ. ເຖິງຢ່າງໃດກໍ່ຕາມຮອດອາທິດທີ 2 ຂອງເດືອນທັນວາ ປີ 1865 ສະພາໄດ້ລົງມະຕິເພື່ອປັບປຸງກົດໝາຍຂໍ້ທີ13 ນັ້ນກໍ່ຄື: ບໍ່ມີລະບອບຂ້າທາດໃດ, ບໍ່ມີຮູບແບບຄວາມບໍ່ພໍໃຈໃດນອກຈາກການກະທຳທີ່ເປັນຄວາມຜິດທີ່ກົດໝາຍໄດ້ຮັບຮູ້ຢ່າງຖືກຕ້ອງ ສາມາດເຊື່ຖືໄດ້ໃນອາເມຣິກາ ເຊັ່ນດຽວກັບຂົງເຂດອື່ນທີ່ຕົກຢູ່ພາຍໃຕ້ການປົກຄອງຂອງຊາດນີ້.

ຊາວຜິວດຳເລີ່ມໄດ້ຮັບການຄຸ້ມຄອງ ແລະ ເຂົ້າຮ່ວມໃນອົງການນິຕິບັດຍັດ ແລະ ການປົກຄອງ. ຢູ່ທາງພາກໃຕ້ພວກເຂົາໄດ້ດິນໄຮ່ນາຮົ້ວສວນ ແລະ ແບ່ງປັນດິນດອນຕອນຫຍ້າກັນ.

ຍ້ອນແນວນັ້ນພວກຕໍ່ຕ້ານຈິ່ງຕ້ອງການຮັກສາລະບອບຈຳແນກເຊື້ອຊາດເຜົ່າພັນ ພໍໃຈ ແລະ ອອກແຮງຕໍ່ຕ້ານພວກທີ່ດຳເນີນນະໂຍບາຍສະໜັບສະໜູນຜ່ານອົງການຈັດຕັ້ງ 3K[2]

ທາດແທ້ຂອງການເຄື່ອນໄຫວຂອງອົງການຈັດຕັ້ງ 3K ແມ່ນການລັງກຽດຢຽບຫຍາມຊາວຜິວດຳ, ສະມາຊິກຂອງອົງການຈັດຕັ້ງນີ້ປະກາດປົກປ້ອງສິດອຳນາດອັນສູງສົ່ງຂອງຊາວຜິວຂາວ. ເຈົ້າຂອງໄຮ່ນາຮົ້ວສວນຫຼາຍແຫ່ງຕ້ອງການນຳໃຊ້ກົດໝາຍຫ້າມບໍ່ໃຫ້ຊາວຜິວດຳຢຶດຄອງທີ່ດິນເປັນກຳມະສິດສ່ວນຕົວ, ຫ້າມບໍ່ໃຫ້ເຂົ້າຮຽນໜັງສື, ຫ້າມບໍ່ໃຫ້ອອກແຮງດ້ວຍມັນສະໝອງ, ຫ້າມບໍ່ໃຫ້ໂຮມຊຸມນຸມ, ຫ້າມບໍ່ໃຫ້ແຕ່ງງານກັບຊາວຜິວຂາວ. ພວກເຂົາຊອກທຸກວິທີທາງເພື່ອສັງຫານຊາວຜິດດຳຢ່າງໂຫດຮ້າຍປ່າເຖື່ອນ.

---

22 3K KuKluxKlan ແມ່ນອົງການຈັດຕັ້ງທີ່ສະໜັບສະໜູນການຈຳແນກເຊື້ອຊາດເຜົ່າພັນຢູ່ອາເມຣິກາ ທີ່ເປັນອົງການຈັດຕັ້ງຂອງຊາວຜິວຂາວທີ່ຕໍ່ຕ້ານຊາວຜິດດຳຢ່າງຮຸນແຮງ

ຕໍ່ກັບຄວາມຮຽກຮ້ອງຕ້ອງການຂອງກຳລັງມອນຊົນ, ມາໃນປີ 1868 ສະພາໄດ້ປະກາດປ່ຽນແປງລັດຖະທຳມະນູດມາດຕາທີ 14 ວ່າດ້ວຍການກຳນົດໃຫ້ສິດໃນການເລືອກຕັ້ງຂອງຊາວຜິວດຳ ແຕ່ຍົກເວັ້ນຊາວອິນເດຍແດງ. ຈົນມາຮອດປີ 1870 ລັດຖະທຳມະນູນຂອງອາເມຣິກາຈຶ່ງໄດ້ຍອມຮັບສິດທິໃນການເລືອກຕັ້ງຂອງຜູ້ຊາຍໃນທຸກຊັ້ນຄົນ ໂດຍບໍ່ຈຳແນກເຊື້ອຊາດຜິວພັນ. ແຕ່ສຳລັບຜູ້ຍິງແມ່ນຍັງບໍ່ທັນໄດ້ຮັບສິດໃນການເລືອກຕັ້ງ. ແຕ່ໃນການດຳລົງຊີວິດຕົວຈິງການຈຳແນກເຊື້ອຊາດແມ່ນຍັງຄົງຕົວຢູ່ໃນສັງຄົມຂອງອາເມຣິກາ. ລັດຖະທຳມະນູນຍັງບໍ່ສາມາດປົດປ່ອຍຊາວຜູ້ອອກແຮງງານ ແຕ່ມັນປ່ຽນລະບົບຂ້າທາດແບບເກົ່າມາລະເປັນບອບຂ້າທາດດ້ວຍການອອກແຮງງານຮັບຈ້າງແທນ ທີ່ມີລັກສະນະສັບສົນກວ່າ ແລະ ຮຸນແຮງກວ່າເກົ່າ.

## IV ສະຫຼຸບ

ທາດແທ້ຂອງສົງຄາມກາງເມືອງໃນອາເມຣິກາແຕ່ປີ 1861-1865 ແມ່ນສົງຄາມການປະຕິວັດສັງຄົມ, ຕໍ່ມາແມ່ນສົງຄາມຍາດເອກະລາດ. ການເຮັດສົງຄາມມີຈຸດປະສົງເພື່ອຕ້ານກັບກຳລັງຂອງພວກເຈົ້າທາດ, ຕ້ານກັບແນວຄິດອະນຸລັກ ແລະ ຂະຫຍາຍລະບອບຂ້າທາດທີ່ໂຫດຮ້າຍ. ບັນດາກ້ອນກຳລັງຂອງມອນຊົນຜູ້ກ້າວໜ້າຂອງຊົນຊັ້ນນາຍທຶນອຸດສະຫະກຳການຄ້າໄດ້ເຂົ້າຮ່ວມຂະບວນການຕໍ່ສູ້ດັ່ງກ່າວຢ່າງເປັນຂະບວນຟົດຟື້ນ.

ມີຊາວຜິວດຳ ເຖິງ 180.000ຄົນ ທີ່ເຂົ້າຮ່ວມຂະບວນການຕໍ່ສູ້ຮ່ວມກັບຝ່າຍລັດຖະບານກາງຕ້ານກັບກຳລັງທະຫານຂອງຝ່າຍສະຫະພັນທະລັດທາງພາກໃຕ້. ໃນໄລຍະສົງຄາມມີຂ້າທາດຜິວດຳຈຳນວນ 50.000ຄົນ ທີ່ໂຕນໜີເພື່ອປົດປ່ອຍຕົນອອກຈາກລະບອບຂ້າທາດ ແລະ ໄດ້ເຂົ້າຮ່ວມສົງຄາມຢ່າງຕັ້ງໜ້າຕ້ານກັບພວກເຈົ້າທາດ. ບັນດານັກຮົບຊາວຜິວດຳໄດ້ສະຫຼະຊີວິດໃນສົງຄາມປົດປ່ອຍຊາດສູງເຖິງ 37.000 ຄົນ. ໃນສົງຄາມປົດປ່ອຍຂ້າທາດຍ້ອນນໍ້າໃຈເສຍສະຫຼະຂອງຊາວຜິວດຳໄດ້ກາຍເປັນແຮງພັກດັນອັນໃຫຍ່ຫຼວງເຮັດໃຫ້ຊາວຜິວດຳຫຼາຍຄົນກາຍເປັນນັກຮົບວິລະຊົນ ແລະ ກາຍເປັນຜູ້ບັນຊາການທະຫານໃນໄລຍະຕໍ່ມາ.

ໜ້າທີ່ທຳອິດຂອງການຕໍ່ສູ້ແມ່ນການລົບລ້າງຮູບແບບການຜະລິດທີ່ເປັນການກີດຂວາງການຂະຫຍາຍຕົວໃນສັງຄົມ, ສິ່ງທີ່ເຫັນເປັນຮູບປະທຳກໍ່ແມ່ນການລົບລ້າງລະບອບຂ້າທາດ ຂອງອາບຣາແຮມ ລິງຄອນ. ໃນເບື້ອງຕົ້ນຂອງການຕໍ່ສູ້ແມ່ນການເຕົ້າໂຮມເອົາກຳລັງພົນລຸກຂຶ້ນຕໍ່ສູ້ພາຍໃຕ້ຄຳຂວັນທີ່ວ່າ “ ປົດປ່ອຍຂ້າທາດ ແລະ ໄຊຊະນະຂອງກຳລັງຝ່າຍລັດຖະບານກາງ”, ລັດປະທຳມະນູນໄດ້ປະກາດລົບລ້າງລະບອບຂ້າທາດລົງຢ່າງສິ້ນເຊີງ.

ການປົດປ່ອຍຂ້າທາດບວກກັບຄວາມຕ້ອງການເນື້ອທີ່ດິນທຳການຜະລິດໄດ້ສະແດງອອກຢ່າງເຫັນໄດ້ຈະແຈ້ງນັ້ນກໍ່ຄື: ບັນດາຂ້າທາດທີ່ພວມກຳລັງໄດ້ຮັບການປົດປ່ອຍໃໝ່ນັ້ນໄດ້ຮັບການແບ່ງປັນດິນນາເພື່ອທຳການຜະລິດຢູ່ເຂດຕາເວັນຕົກ. ກົດໝາຍວ່າດ້ວຍການແບ່ງປັນດິນທຳການຜະລິດໃຫ້ແກ້ຊາວອົບພະຍົບໃນໄດ້ປະກາດໃຊ້ໃນປີ 1862 ມັນໄດ້ກາຍເປັນວິທີການແບບປະຊາທິປະໄຕ ແລະ ມີລັລັກສະນະກ້າວໜ້າທີ່ກຳນົດໃນນະໂຍບາຍດິນນາໃນອາເມຣິກາ.

ໝາກຜົນອັນໃຫຍ່ຫຼວງຂອງສົງຄາມກາງເມືອງແມ່ນການລົບລ້າງລະບອບຂ້າທາດ. ເສັ້ນທາງການຂະຫຍາຍຕົວຂອງລັດທິທຶນນິຍົມແບບອາເມຣິກາໃນຂົງເຂດກະສິກຳໄດ້ຮັບການເປີດກວ້າງອອກ. ເຊິ່ງເປັນພື້ນຖານໃຫ້ແກ່ການຂະຫຍາຍຕົວຂະແໜງອຸດສະຫະກຳ. ຍ້ອນແນວນັ້ນໃນທ້າຍສະຕະວັດທີ 19 ປະເທດອາເມຣິກາເລີ່ມຕົ້ນດຳເນີນການປະຕິວັດອຸດສະຫະກຳ, ດຳເນີນໄປຢ່າງໄວວາຈົນເຮັດໃຫ້ປະເທດອາເມຣິກາມີບົດບາດສູງຂຶ້ນເປັນປະເທດທີ່ຢູ່ໃນອັນດັບຕົ້ນຕົ້ນຂອງບັນດານາຍທຶນໃນໂລກ.

# ບົດທີ 9

# ສາກົນທີ 1



ກອງປະຊຸມສ້າງຕັ້ງສາກົນທີ 1

## I.ການຟື້ນຟູ ແລະ ການພັດທະນາຂອງການປະຕິວັດກຳມະຊີບໃນກາງສະຕະວັດທີ 19

ພາຍຫຼັງການປະຕິວັດໃນປີ 1848-1849 ປຣາໄຊລົງ, ລັດຖະບານປະຕິວັດ ຢູ່ບັນດາປະເທດເອີຣົບໄດ້ດຳເນີນການລຸຂຶ້ນຕໍ່ຕ້ານຢ່າງຮຸນແຮງ ຕາມຄວາມຕ້ອງການທະຫານຊົນຊັ້ນກຳມະຊີບ. ບັນດາຜູ້ນຳຈຳນວນໜຶ່ງຖືກຈັບເຂົ້າຄຸກ, ໂຮງໜັງສືພິມຂອງກຳມະກອນຖືກປິດຕົວລົງ. ກຳລະນິຄະດີຄວາມຢູ່ ເຄວນ (ປະເທດເຢຍລະມັນ) ໃນປີ 1852 ພາໃຫ້ເກີດມີຫຼາຍຄະດີຄວາມເພື່ອຕັດສິນຄວາມຜິດຂອງຊົນຊັ້ນກຳມະຊີບ. ບໍ່ພໍເທົ່າໃດເດືອນຕໍ່ມາ ພັນທະມິດຂອງຊົນຊັ້ນດຳມະຊີບກໍ່ພັງທະລາຍລົງ.

ວິກິດການທາງດ້ານເສດຖະກິດໃນປີ 1857-1859 ເຮັດໃຫ້ສັງຄົມເກີດມີຂໍ້ຂັດແຍ່ງກັນນັບມື້ນັບຮຸນແຮງ. ເຊິ່ງເກີດຂຶ້ນທຳອິດຢູ່ອາເມຣິກາ, ແຜ່ລາມເຂົ້າສູ່ປະເທດອັງກິດ ແລະ ແຜ່ລາມໄປສູ່ບັນດາປະເທດເອີຣົບ, ຂໍ້ຂັດແຍ່ງໂຮງຈັກໂຮງງານລົ້ມລະລາຍ, ຫຼາຍໂຮງງານຕ້ອງປິດຕົວລົງ. ໄພຫວ່າງງານ, ໄພອຶດຫິວແພລາມໄປທົ່ວທຸກບ່ອນ. ຢູ່ປະເທດອັງກິດຈຳນວນຜູ້ຫວ່າງງານເພີ່ມຂຶ້ນ 7 ເທົ່າ ໃນປີ 1853 ສະຖານະການດັ່ງກ່າວໄດ້ສ້າງເງື່ອນໄຂແບບພາວະວິໄຈໃຫ້ແກ່ການຟື້ນຟູການປະຕິວັດຊົນຊັ້ນກຳມະກອນ. ສະນວນສົງຄາມຂອງຊົນຊັ້ນກຳມະກອນໄດ້ລະເບີດຂຶ້ນ.

ກຳມະກອນຝຣັ່ງໄດ້ດຳເນີນການບຸກໂຈມຕີ ແລະ ບັງຄັບໃຫ້ລັດຖະບານນາໂປລີອົງ 3 ຕ້ອງລົບລ້າງກົດໝາຍຊາເຟີເລຍໃນປີ 1864. ຂະບວນການຕໍ່ສູ້ຂອງກຳມະກອນອັງກິດຮຽກຮ້ອງໃຫ້ກຳນົດເວລາເຮັດວຽກ 9 ຊົ່ວໂມງຕໍ່ວັນໃນປີ 1858 ໄດ້ປະກອບສ່ວນຊຸກຍູ້ຢ່າງແຂງແຮງໃຫ້ແກ່ການປະຕິວັດມີຄວາມເປັນເອກະພາບ, ສ້າງຕັ້ງ"ສະມາຄົມສະຫະພາບແຮງງານລອນດອນ" ແຕ່ວ່າການເຄື່ອນໄຫວຂອງສະມາຄົມ ດັ່ງກ່າວບໍ່ສາມາດຂ້າມຜ່ານພົນສະທ້ອນຂອງລັດທິແພ່ອຳນາດ. ປີ 1863 ກຳມະກອນເຢຍລະມັນໄດ້ສ້າງຕັ້ງພັນທະມິດກຳມະກອນເຢຍລະມັນຂຶ້ນທຳອິດ ແຕ່ຍອມຮັບຜົດສະທ້ອນຂອງລັດທິ ລາດຊານ, ລັດທິສັງຄົມນິຍົມ ເຮັດໃຫ້ພວກນາຍທຶນຂະໜາດນ້ອຍໄດ້ຮັບຄວາມອັນຕະລາຍ.

ຕໍ່ໜ້າສະພາບການທີ່ກຳລັງກຳມະກອນນັບມື້ນັບເຕີບໃຫຍ່, ຄວາມສາມັກຄີນັບມື້ນັບເພີ່ມຂຶ້ນສູງ ແຕ່ພັດຍັງຂາດອົງການຈັດຕັ້ງນຳພາທີ່ເຂັ້ມແຂງນັ້ນແມ່ນຈຸດບົກຜ່ອງທີ່ຕ້ອງເອົາໃຈໃສ່. ບັນດາແນວຄິດທຶນນິຍົມແບບໄຜ່ຝັນແຕ່ມັນກໍ່ຍັງສິ່ງຜົນສະທ້ອນບໍ່ໜ້ອຍຕໍ່ກັບຂະບວນການປະຕິວັດກຳມະກອນ. ບົດຮຽນອັນລ້ຳຄ່າຂອງການປະຕິວັດໃນປີ 1848-1849 ເຮັດໃຫ້ພວກເຂົາຮັບຮູ້ວ່າການຕໍ່ຕ້ານພວກນາຍທຶນໃຫຍ່, ຄວາມບໍ່ໝັ້ນຄົງ ແລະ ການຂາດຄວາມສາມາດໃນການນຳພາຂອງຊົນຊັ້ນນາຍທຶນນ້ອຍ. ຍ້ອນແນວນັ້ນ ຈຶ່ງຕ້ອງເຮັດໃຫ້ຊົນຊັ້ນກຳມະຊີບຮັບຮູ້ບົດບາດ, ຈຸດພິເສດ ແລະ ໜ້າທີ່ຂອງຕົນ.

ໃນຊ່ວງໄລຍະທີ່ຂະບວນການປະຕິວັດພວມດຳເນີນໄປຢ່າງດຸເດືອດຢູ່ທະວີບເອີຣົບນັ້ນ ມາກ ແລະ ອັງແກນໄດ້ຕິດຕາມ ແລະ ເຂົ້າຮ່ວມຂະບວນການລຸກຂຶ້ນຕໍ່ສູ້ຂອງຊົນຊັ້ນກຳມະກອນ. ພາຍຫຼັງປຣາໄຊ ບັນດາຜູ້ນຳຂອງຊົນຊັ້ນກຳມະຊີບຍັງສືບຕໍ່ຮັກສາຄັນທຸງແຫ່ງການປະຕິວັດ, ໂດຍທີ່ບໍ່ຮູ້ຈັກອິດເມື່ອຍເພື່ອກະກຽມຄວາມພ້ອມໃນການຕໍ່ສູ້ທີ່ຈະມາເຖິງນີ້.

ເດືອນມິຖຸນາ 1649 ມາກ ຖືກເນລະເທດອອກຈາກປະເທດຝຣັ່ງ, ທ່ານໄດ້ໜີໄພໄປລອນດອນ ແລະ ໃນປີຕໍ່ມາ ອັງແກນກໍ່ເດີນທາງມາອັງກິດ, ຢູ່ແມນເຊດເຕີ ທັງສອງທ່ານໄດ້ຮ່ວມກັນສັງເກດຄວາມເປັນໄປຂອງຂະບວນການປະຕິວັດຢ່າງໃກ້ຊິດຢູ່ເປັນປະຈຳ ແລະ ພົວພັນກັບບັນດາອ້າຍນ້ອງກຳມະກອນຢ່າງເປັນກັນເອງ ແມ່ນກະທັ້ງວັນທີ່ຂະບວນການປະຕິວັດພົບກັບຄວາມຫຍຸ້ງຍາກສັບສົນທີ່ສຸດ. ເດືອນມີນາ 1850 ບັນດາສາຂາຂອງພັນທະມິດໃນບັນດາປະເທດລ້ອນແຕ່ຮັບຮູ້ໄດ້ວ່າ " ຈົດໝາຍຄະນະບໍລິຫານງານສູນກາງທີ່ສົ່ງເຖິງພັນທະມິດຂອງຊົນຊັ້ນກຳມະຊີບ" ທີ່ມາກ ແລະ ອັງແກນໄດ້ຂຽນ. ນີ້ແມ່ນເອກະສານສຳຄັນ, ທີ່ວິເຄາະເຫດການໃນປີ 1848-1849 ໄດ້ຢ່າງເລິກເຊິ່ງ, ແລະ ອະທິບາຍແຜນຍຸດທະສາດຂອງພັກຂອງຊົນຊັ້ນກຳມະຊີບຂອງການປະຕິວັດໃນອະນາຄົດ ແລະຍົກໃຫ້ເຫັນບັນດາທິດສະດີການປະຕິວັດທີ່ບໍ່ຢຸດຢັ້ງໃນໄລຍະຕໍ່ມາ. ເລນິນໄດ້ສືບຕໍ່ພັດທະນາດ້ວຍການຫັນປ່ຽນຈາກການປະຕິວັດປະຊາທິປະໄຕໄປສູ່ການປະຕິວັດສັງຄົມນິຍົມ.

ໃນເວລານັ້ນມາກໄດ້ເອົາໃຈໃສ່ຄົ້ນຄວ້າກ່ຽວກັບຂະບວນການປະຕິວັດໃນປີ 1848 ໃນຝຣັ່ງ. ທ່ານໄດ້ສຳເລັດການຂຽນປື້ມ2 ເຫຼັ້ມ ທີ່ມີຊື່ວ່າ: ການຕໍ່ສູ້ຊົນຊັ້ນຢູ່ຝຣັ່ງ (1850) ແລະ ວັນທີ 18 ເດືອນແຫ່ງນ້ຳໝອກຂອງຫຼຸຍ ໂບນາປາກ(1852). ພ້ອມດຽວກັນນັ້ນ ອັງແກນກໍ່ໄດ້ຂ່າວຫຼາຍສະບັບ, ພາຍຫຼັງການສ້າງຕັ້ງ "ການປະຕິວັດແລະ ການຕໍ່ຕ້ານການປະຕິວັດຢູ່ເຢຍລະມັນ" (1851). ທັງສອງທ່ານໄດ້ສັງລວມບົດຮຽນຂອງການປະຕິວັດໃນໄລຍະຜ່ານມາ. ທຳອິດແມ່ນການນຳໃຊ້ແນວຄິດວັດຖຸນິຍົມພາວະວິໄສເຂົ້າໃນການຄົ້ນຄວ້າປະຫວັດສາດ ແລະ ການພັດທະນາບັນຫາກ່ຽວກັບທິດສະດີທີ່ສຳຄັນກ່ຽວກັບການປະຕິວັດກຳມະຊີບ ແລະ ລະບອບຜະເດັດການກຳມະຊີບ.

ປີ 1861 ມາກໄດ້ເລີ່ມຕົ້ນຂຽນຜົນງານກ່ຽວກັບ “ເສດຖະກິດທຶນນິຍົມ” ເຫຼັ້ມທຳອິດຖືກນຳອອກສູ່ສາທາລະນະຊົນໃນປີ 1867 ໃນຄຳນຳທ່ານໄດ້ຂຽນໄວ້ວ່າ: ຈຸດປະສົງສຸດທ້າຍຂອງປຶ້ມເຫຼັ້ມນີ້ ແມ່ນຍົກໃຫ້ເຫັນກົດໝາຍກ່ຽວກັບເສດຖະກິດໃນການເຄື່ອນໄຫວຂອງສັງຄົມໃນອະນາຄົດ ໝາຍຄວາມວ່າແມ່ນຜົນຂອງສັງຄົມລັດທິທຶນນິຍົມ. ໂດຍເລີ່ມຕົ້ນດ້ວຍການຄົ້ນຄວ້າກ່ຽວກັບສິນຄ້າ. ມາກໄດ້ຈຳແນກຮູບແບບການຜະລິດຕາມລັດທິທຶນນິຍົມ, ອະທິບາຍກ່ຽວກັບບັນດາຂໍ້ຂັດແຍ່ງພາຍໃນຂອງມັນ, ຄົ້ນຄວ້າໃຫ້ລະອຽດກ່ຽວກັບຂະບວນການກຳເນີດ, ການຂະຫຍາຍຕົວ ແລະ ການລົ້ມສະຫຼາຍຂອງລັດທິທຶນນິຍົມ. ໃນນັ້ນ ມາກຍັງໄດ້ຢັ້ງຢືນວ່າບົນພື້ນຖານວິທະຍາສາດວ່າ ລັດທິທຶນນິຍົມທີ່ຫຼ້າຫຼັງ ແລະ ໄຊຊະນະຂອງລັດທິສັງຄົມນິຍົມແມ່ນບໍ່ມີໄຊຊະນະຈະຍິ່ງໃຫຍ່ເທົ່າ.

ເຖິງວ່າໃນເບື່ອງຕົ້ນຈະສຸມໃສ່ໃນການຄົ້ນຄວ້າທິດສະດີ, ແຕ່ມາກ ແລະ ອັງແກນ ຍັງໄດ້ເອົາໃຈໃສ່ວຽກການສ້າງຕັ້ງອົງການຈັດຕັ້ງນຳພາຂອງຊົນຊັ້ນກຳມະຊີບ. ພາຍຫຼັງພັນທະມິດຂອງຊົນຊັ້ນກຳມະຊີບພັງທະລາຍລົງມາກ ແລະ ອັງແກນໄດ້ອອກແຮງໃນການປົກປັກຮັກສາແລະ ບຳລຸງບັນດາພະນັກງານຂອງການປະຕິວັດ, ຊ່ວຍເຫຼືອພວກເຂົາຮໍ່າຮຽນເອົາທິດສະດີ. ໃນເວລາທີ່ເຮັດວຽກໃນການຂຽນຂ່າວຂອງກົດບັດການປະຕິວັດ (ໜັງສືພິມປະຊາຊົນ) ຂອງຝ່າຍປະຊາທິປະໄຕນາຍທຶນ (ໜັງສືພິມ ນິວຢັອກ) ທັງສອງທ່ານສາມາດຍາດໄດ້ທຸກຄວາມສາມາດເພື່ອໂຄສະນາທິດສະດີຄອມມູນິດກ່ຽວກັບຄວາມອ່ອນແອຂອງການການປະຕິວັດສັງຄົມນິຍົມ. ເຫດການນັ້ນໄດ້ສຶກສາອົບຮົມ ແລະ ລວບລວມລັກສະນະຕັ້ງໜ້າທີ່ສຸດຂອງຊົນຊັ້ນກຳມະຊີບຢູ່ບັນດາປະເທດຕ່າງໆ. ໄດ້ສ້າງຕັ້ງອົງການຈັດຕັ້ງສາກົນຂຶ້ນແທນ ພັນທະມິດຂອງຊົນຊັ້ນກຳມະຊີບ ໃນກ່ອນໜ້ານີ້.

## II.ການສ້າງຕັ້ງສາກົນທີ 1, ຖະແຫຼງການ ແລະ ກົດບັດ

### 1. ການສ້າງຕັ້ງສາກົນທີ1

ວັນທີ 22 ກໍລະກົດ ປີ 1863 ກຳມະກອນຢູ່ເມືອງລອນດອນໄດ້ເຕົ້າໂຮມຊຸມນຸມຄັ້ງຍິ່ງໃຫຍ່ ເພື່ອສະແດງເຈດຈຳນົງເອກະພາບກັນກ່ຽວກັບການຕໍ່ສູ້ຂອງປະຊາຊົນ ໂປໂລຍ ໃນປີ 1863 ແລະ ຕໍ່ຕ້ານລັດຖະບານລັດຖະບານຢູ່ເອີຣົບທີ່ຊ່ວຍເຫຼືອພະເຈົ້າຊາລັດເຊຍໃນການປາບປາມຂະບວນການລຸກຮື້ຂຶ້ນຕໍ່ສູ້ນັ້ນ. ກອງປະຊຸມໄດ້ຍົກໃຫ້ເຫັນຄວາມຈຳເປັນທີ່ຈະຕ້ອງມີອົງການຈັດຕັ້ງສາກົນ ແລະ ປະກາດຮຽກຮ້ອງຕ້ອງການດັ່ງກ່າວນັ້ນອອກມາ. ປີຕໍ່ມາ ວັນທີ 28 ເດືອນກັນຍາ ປີ 1864 ກອງປະຊຸມຖືກຈັດຂຶ້ນທີ ລອນດອນ ກອງປະຊຸມໄດ້ຕົກລົງສ້າງຕັ້ງອົງການຈັດຕັ້ງກຳມະກອນສາກົນທີ່ໃສ່ຊື່ວ່າ ສະຫະພາບແຮງງານສາກົນ (ສາກົນທີ 1) , ໄດ້ເລືອກເອົາຄະນະບໍລິຫານງານສູນກາງທີ່ເຮັດໜ້າທີ່ໃນການຮ່າງຖະແຫຼງການ ແລະ ກົດບັດ. ມາກເປັນປະທານຂອງກອງປະຊຸມໄດ້ຮັບການຄັດເລືອກເປັນຜູ້ນຳໃນຄະນະບໍລິຫານງານສູນກາງໃນນາມນັກເຄື່ອນໄຫວປະຕິວັດຜູ້ທີ່ມີຊື່ສຽງໃນການປະຕິວັດເຢຍລະມັນ. ໃນເວລານັ້ນຍັງມີຕົວແທນທີ່ມີຄວາມເກັ່ງກາຮອບດ້ານຂອງສະຫະພາບອັງກິດ, ສະຫະພາບຝຣັ່ງ ແລະ ບັນດາປະເທດອື່ນໆສັງລວມໄດ້ປະມານ 32 ຄົນ. ການປະກາດຖະແຫຼງການ ແລະ ກົດບັດ ໄດ້ຖືກຖ່າຍທອດໄປຫຼາຍຄົນໃນນັ້ນມາກ ນັກປະຕິວັດຜູ້ທີ່ມີຊື່ສຽງ ແລະ ໄດ້ຮັບຄວາມເຊື່ອໝັ້ນອັນແຮງກ້າຈາກຊົນຊັ້ນກຳມະຊີບ.

ຈຸດປະສົງ ແລະ ເປົ້າໝາຍຂອງ ສາກົນທີ 1ແມ່ນ: ເຕົ້າໂຮມຄວາມສາມັກຄີໃນຊົນຊັ້ນກຳມະກອນທີ່ມີນໍ້າໃຈຕໍ່ສູ້ຢູ່ທະວີບເອີຣົບ ແລະ ທະວີບອາເມຣິກາເພື່ອກາຍເປັນກ້ອນກຳລັງທະຫານມີທີ່ຂະໜາດໃຫຍ່ ແລະ ມີຄວາມເປັນ

ເອກະພາບ[3]. ໃນເງື່ອນໄຂຕ່າງໆເຮັດໃຫ້ຊົນຊັ້ນກຳມະກອນຖືກຕັດແບ່ງອອກເປັນຫຼາຍຝ່າຍ, ຮັບອິດທິພົນຈາກຫຼາຍແນວຄວາມຄິດທີ່ແຕກຕ່າງກັນເຊິ່ງເຮັດໃຫ້ສາກົນທີ 1 ຕ້ອງມີ ຄວາມເຊື່ອທີ່ວ່າບໍ່ຄວນປິດປະຕູຈາກໂລກພາຍນອກເພື່ອເປັນການເຕົ້າໂຮມ ແລະ ຍົກສູງລະດັບຄວາມຮັບຮູ້ຂອງຊົນຊັ້ນກຳມະກອນກ່ຽວກັບການເມືອງ. ໂດຍການນຳໃຊ້ວິທີທີ່ມີການແບບຍືດຢູ່ນ ແລະ ສອດຄ່ອງກັບບັນດາທິດສະດີພື້ນຖານທີ່ໄດ້ກຳນົດໃນຖະແຫຼງການຂອງພັກຄອມມູນິດ, ມາກ ໄດ້ເຮັດຫຼ້ອນໜ້າທີ່ທີ່ຫຍຸ້ງຍາກດັ່ງກ່າວນັ້ນ. ວັນທີ 1 ພະຈິກ 1864 ຮ່າງຂໍ້ກຳນົດຂອງມາກໄດ້ຖືກຮັບຮອງເປັນເອກະພາບກັນໃນຄະນະກຳມະການສູນກາງ, ຕໍ່ມາໄດ້ກາຍເປັນຖະແຫຼງການ ແລະ ກົດບັດຢ່າງເປັນທາງການຂອງສາກົນທີ.

**2. ຖະແຫຼງການສ້າງຕັ້ງສາກົນທີ1 ແລະ ກົດບັດຂອງສາກົນທີ 1**

ໃນຖະແຫຼງການສ້າງຕັ້ງສາກົນທີ1, ມາກໄດ້ນຳໃຊ້ເອກະສານທີ່ມີລັກສະນະເວົ້າເຖິງການດຳເນີນການໂຈມຕີຂອງຊົນຊັ້ນນາຍທຶນໂດຍກ່າວວ່າ: ໃນຄວາມເປັນຈິງຖ້າຫາກຕົວເລກນຳເຂົ້າ ແລະ ສົ່ງອອກຂອງປະເທດອັງກິດແມ່ນເພີ່ມຂຶ້ນ 50% ນັ້ນສະແດງວ່າພວກເຮົາຈະບໍ່ປະສົບກັບບັນຫາຄວາມທຸກຍາກໃດໆອີກ. ໃນສັງຄົມທຶນນິຍົມ, ທຸກການປັບປຸງປ່ຽນແປງເຄື່ອງກົນ, ການນຳໃຊ້ວິທະຍາສາດເຂົ້າໃນການຜະລິດ ເພື່ອພິຊິດອະນານິຄົມ, ເປີດກວ້າງຕະຫຼາດຈຳໜ່າຍສິນຄ້າ ແລະ ດຳເນີນການຄ້າຂາຍຢ່າງອິດສະຫຼະ... ສິ່ງທີ່ບໍ່ສາມມາດລຶບລ້າງໄດ້ແມ່ນສະພາບຄວາມທຸກຍາກຂາດເຂີນຂອງມວນຊົນຊາວຜູ້ອອກແຮງງານ. ແຕ່ກົງກັນຂ້າມໃນທາມກາງຄວາມລຳບາກໃນເວລານັ້ນທຸກການຂະຫຍາຍຕົວໃໝ່ຂອງກຳລັງການຜະລິດ, ຂອງການອອກແຮງງານລ້ວນແຕ່ເປັນປັດໄຈຕັດສິນຄວາມຂັດແຍ່ງໃນສັງຄົມຢ່າງແນ່ນອນ ຂໍ້ບົກຜ່ອງໜຶ່ງອີກກໍ່ຄືການເປັນປໍລະປັກກັນໃນສັງຄົມ.

ພາຍຫຼັງທີ່ກ່າວເຖິງໄຊຊະນະຂອງຊົນຊັ້ນກຳມະກອນອັງກິດໃນການຕໍ່ສູ້ເພື່ອຮຽກຮ້ອງໃຫ້ກຳນົດເວລາເຮັດວຽກເປັນ 10 ຊົ່ວໂມງຕໍ່ວັນ. ຖະແຫຼງການຍັງໄດ້ຍົກໃຫ້ເຫັນອີກວ່າ ບັນຫາການກຳຈັດະບອບຢຶດຄອງກັບມະສິດກ່ຽວກັບວັດຖຸດິບໃນການຜະລິດ.

ຖ້າຕ້ອງກຳຈັດລະບອບຢຶດຄອງກຳມະສິດກ່ຽວກັບວັດຖຸດິບໃນການຜະລິດ ແລະ ຊົນຊັ້ນນາຍທຶນ, ຕ້ອງການລໄບລ້າງລະບອບຂ້າທາດຮັບຈ້າງເພື່ອປົດປ່ອຍປະຊາຊົນຊາວຜູ້ອອກແຮງງານຕ້ອງໄດ້ດຳເນີນການຕໍ່ສູ້ອອກເປັນວົງກວ້າງ. ຍ້ອນແນວນັ້ນຊົນຊັ້ນກຳມະຊີບຈິ່ງປະສົບກັບການຕໍ່ຕ້ານຢ່າງແຂງແຮງຂອງບັນດາກຸ່ມນາຍທຶນ ແລະ ເຈົ້າທີ່ດິນ. ແມ່ນພວກທີ່ຄ່ອຍໆນຳໃຊ້ສິດທາງດ້ານການເມືອງເພື່ອຄຸ້ມຄອງ ແລະ ປ້ອງກັນການສໍ້ໂກງກັນທາງດ້ານເສດຖະກິດ ພາໃຫ້ເກີດມີອຸປະສັກກີດຂວາງການດຳເນີນການປົດປ່ອຍຊາວຜູ້ອອກແຮງງານ. ສະນັ້ນກ່ອນອື່ນໝົດຕ້ອງຍາດແຍ່ງເອົາສິດອຳນາດທາງການເມືອງຈາກພວກນາຍທຶນເສຍກ່ອນ, ການຍາດແຍ່ງເອົາສິດທິທາງການເມືອງເປັນໜ້າທີ່ສຳຄັນຂອງຊົນຊັ້ນກຳມະກອນ.

ສຸດທ້າຍ ຖະແຫຼງການຍັງໄດ້ຢືນຢັນໜ້າທີ່ໃນການເຕົ້າໂຮມຄວາມສາມັກຄີກັບສາກົນຂອງຊົນຊັ້ນກຳມະຊີບ. ຖ້າຖືເອົາຄວາມເປັນພັນທະມິດຂອງອ້າຍນ້ອງຈຳເປັນຕ້ອງມີການຮ່ວມມືກັບບັນດາຊົນຊັ້ນກຳມະກອນກັບ

---

[3] ມາກ-ອັງແກນ, ບົດຮຽນຮຽງ, ເຫຼັ້ມທີ1, ໂຮງພິມ ຄວາມເປັນຈິງ, ຮ່າໂນ້ຍ, 1980, ໜ້າທີ524

ປະເທດອື່ນເພື່ອຮ່ວມກັນດຳເນີນການປົດປ່ອຍຕົນເອງໃນການໂຄ່ນລົ້ມຊົນຊັ້ນປົກຄອງໃຫ້ພັງທະລາຍລົງ. ພ້ອມດຽວກັນນັ້ນຊົນຊັ້ນກຳມະຊີບຍັງຕ້ອງດຳເນີນການຕໍ່ຕ້ານກັບການແຊກແຊງຮຸກຮານຈາກພາຍນອກ ແລະ ໃຫ້ການຊ່ວຍເຫຼືອແກ່ບັນດາປະເທດທີ່ດຳເນີນການຕໍ່ສູ້ເພື່ອປົດປ່ອຍຕົນເອງ, ຕ້ອງປົກປ້ອງ ແລະ ເຜີຍແຜ່ນະໂຍບາຍການຕ່າງປະເທດເພື່ອຕໍ່ຕ້ານກັບລັດຖະບານຂອງຕົນ ແລະ ໃຫ້ຖືວ່ານີ້ເປັນພາກສ່ວນໜຶ່ງຂອງການເຮັດສົງຄາມລວມໝູ່ເພື່ອປົດປ່ອຍຊົນຊັ້ນກຳມະກອນ. ຖະແຫຼງການໄດ້ຈົບລົງດ້ວຍການກ່າວເຖິງຄຳຂວັນທີ່ວ່າ ຊົນຊັ້ນກຳມະຊີບທັງໝົດໃນທຸກປະເທດຕ້ອງຮ່ວມມືສາມັກຄີກັນ. ເຊິ່ງໄດ້ຍົກໃຫ້ເຫັນໃນຖະແຫຼງການຂອງພັກຄອມມູນິດ.

ກົດບັດຂອງສາກົນເປັນຮ່າງຂໍ້ກຳນົດທຳອິດກ່ຽວກັບລະບອບລວມສູນປະຊາທິປະໄຕໃນການຈັດຕັ້ງຂອງຊົນຊັ້ນກຳມະກອນ. ສະພາແມ່ນອົງການຈັດຕັ້ງທີ່ມີອຳນາດສູງສຸດຂອງສາກົນ, ລະຫວ່າງ 2 ສະພານັ້ນຄະນະກຳມະການສູນກາງທີ່ສະເໜີເປັນຄົນເລືອກໃຫ້ເປັນຜູ້ນຳພາສາກົນທີ1. ສາກົນທີ1 ໄດ້ອີງໃສ່ອົງການຈັດຕັ້ງທີ່ມີກ່ອນແລ້ວຂອງຊົນຊັ້ນກຳມະກອນເພື່ອສ້າງເປັນບັນດາສາຂາຂອງການຈັດຕັ້ງນັ້ນ. ບັນດາສາຂາໃນແຕ່ລະປະເທດໄດ້ລວມກັນເປັນເປັນສະມາຄົມຜູ້ນຳພາ. ແຕ່ວ່າບັນດາສາຂາຍ່ອຍນັ້ນມີສິດໃນການການນຳພາການເຄື່ອນໄຫວຂອງຕົນ, ໜ້າທີ່ຂອງສະມາຊິກແມ່ນຕ້ອງພະຍາຍາມເຕົ້າໂຮມຄວາມເປັນເອກະພາບຂອງຊົນຊັ້ນກຳມະກອນທີ່ກຳລັງແຈກຢາຍໃນປະເທດຂອງຕົນເພື່ອໃຫ້ກາຍເປັນການຈັດຕັ້ງທີ່ເຮັດວຽກງານໃນທົ່ວປະເທດ.

ການປະກາດຮັບຮອງຖະແຫຼງການ ແລະ ກົດບັດໄດ້ກາຍເປັນເຄື່ອງໝາຍແຫ່ງໄຊຊະນະທຳອິດໃນການຕໍ່ສູ້ເພື່ອປົດປ່ອຍຕົນເອງຂອງຊົນຊັ້ນກຳມະກອນ ເຊິ່ງໃນນັ້ນກາກມາກ ໄດ່ປະກອບສ່ວນອັນໃຫຍ່ຫຼວງ. ສາມາດທ້ອນໂຮມອົງການຈັດຕັ້ງກຳມະກອນໃຫ້ກາຍເປັນອົງການຈັດຕັ້ງສາກົນນັ້ນກໍ່ຄືສາກົນທີ1 . ມາກ ແລະ ອັງແກນຍັງບໍ່ຢຸດຢັ້ງໃນການຕໍ່ສູ້ ພວກເພິ່ນໄດ້ສືບຕໍ່ດຳເນີນການຕໍ່ສູ້ເພື່ອຍົກສູງຄວາມຮູ້ຄວາມສາມາດຂອງກຳມະກອນ ແລະ ຕີເອົາຊະນະທຸກບັນດາທິດສະດີກ່ຽວກັບສັງຄົມຂ້າທາດຮັບຈ້າງທີ່ຫຼູ້າຫຼັ້ງ (ຂ້າທາດອະນາບິຄົມ).

ບັນດາສາຂາຂອງສາກົນທີ1 ຄ່ອຍໆໄດ້ຮັບການສ້າງຕັ້ງຂຶ້ນຢູ່ອັງກິດ, ຝຣັ່ງ, ສະວິດເຊີແລັນ, ແບຊິກ, ອາເມຣິກາ....ສະເພາະເຢຍລະມັນ ແລະ ປະເທດອື່ນຈຳນວນໜຶ່ງລະບອບຜະເດັດການຕຳຫຼວດບໍ່ອະນຸຍາດໃຫ້ມີການສ້າງຕັ້ງສາຂາຂອງສາກົນທີ1 ເຮັດໃຫ້ບັນດານັກເຄື່ອນໄຫວປະຕິວັດແຕ່ລະຄົນຢູ່ທີ່ນັ້ນຕ້ອງຕິດຕໍ່ພົວພັນໂດຍກົງຕໍ່ກັບຄະນະກຳມະການສູນກາງ. ທ້າຍລະດູຮ້ອນປີ 1865 ບັນດາສາຂາຂອງສາກົນທີ1 ໄດ້ຮັບການສ້າງຕັ້ງຂຶ້ນຢູ່ບັນດາປະເທດມະຫາອຳນາດໃຫຍ່ໃນທະວີບເອີຣົບ ແລະ ທະວີບອາເມຣິກາເໜືອ.

## III. ໄລຍະການເຄື່ອນໄຫວ ແລະ ການຕໍ່ສູ້ຂອງສາກົນທີ1

### 1. ຂະບວນການຕໍ່ສູ້ຕ້ານກັບລັດທິ ພຣຸດົງ

ໃນປີ 1865 ບັນດາສາຂາຂອງສາກົນທີ1 ໄດ້ຮັບການສ້າງຕັ້ງຂຶ້ນ ແຕ່ຍັງບໍ່ທັນເຂັ້ມແຂງ, ສະນັ້ນຍິ່ງຍັງບໍ່ທັນຄົບເງື່ອນໄຂທີ່ຈະດຳເນີນກອງປະຊຸມຕາມການຕົກລົງກັນ. ເດືອນກັນຍາ ມາກໄດ້ດຳເນີນກອງປະຊຸມຢູ່ລອນດອນມີຄະນະກຳມະການສູນກາງ ແລະ ພະນັກງານການນຳບັນດາສາຂາຂອງສາກົນທີ1ເຂົ້າຮ່ວມ. ກອງປະຊຸມໄດ້ຮັບຟັງການລາຍງານຂອງຄະນະບໍລິຫານງານສູນກາງ, ພ້ອມກັນຕັດສິນບັນຫາການເງິນ ແລະ ປະກາດວາລະຂອງກອງປຊຸມ

ທີ່ໃກ້ຈະມາເຖິງ. ບັນຫາທີ່ຮີບດ່ວນທີ່ສຸດໃນການປະຊຸມຂອງ ມາກ ໄດ້ຖືກບັນທຶກລົງໃນໂຄງການວ່າດ້ວຍການຮຽກຮ້ອງຄວາມເປັນເອກະລາດຂອງໂປແລນ. ຝ່າຍ ພຣືດົງ ເວົ້າວ່າ: ນັ້ນແມ່ນບັນຫາທາງດ້ານການເມືອງ ບໍ່ຄວນຖືກນໍາມາຂຽນເຂົ້າໃນວາລະຂອງກອງປະຊຸມຂອງຊົນຊັ້ນກໍາມະກອນ (ບໍ່ຄວນກ່າວໃນກອງປະຊຸມ). ເພື່ອປະຕິເສດຄໍາຮ້ອງຂໍດັ່ງກ່າວ ໃນຕົວຈິງແລ້ວ ຝ່າຍພຣືດົງ ໄດ້ໃຫ້ການສະໜັບສະໜູນຊ່ວຍເຫຼືອແກ່ລັດຖະບານຕໍ່ຕ້ານອັງກິດ ແລະ ຝຣັ່ງ. ຕໍ່ກັບໂປໂລຍຖືວ່າເປັນການຕໍ່ສູ້ເພື່ອປົດປ່ອຍປະຊາຊົນບັນດາເຜົ່າ.

ຂະບວນການຕໍ່ຕ້ານກັບຝ່າຍ ພຣືດົງ ຂອງສາກົນທີ1 ເລີ່ມຂຶ້ນນັບແຕ່ນັ້ນເປັນຕົ້ນມາ ແລະ ແກ່ຍາວເປັນເວລາ 3 ສະໄໝກອງປະຊຸມໃຫຍ່ນັບແຕ່ປີ 1866-1868. ທາດແທ້ຂອງຝ່າຍ ພຣືດົງແມ່ນການປົກປ້ອງ ແລະ ສະໜັບສະໜູນລັດທິທຶນນິຍົມ. ພວກເຂົາພຽງແຕ່ຕ້ອງການປັດກວາດສິ່ງບໍ່ດີອອກໄປຈາກລະບອບນັ້ນ ພ້ອມທໍາການສ້າງຕັ້ງສິ່ງທີ່ດີງາມແນໃສ່ເພື່ອເຮັດໃຫ້ລະບອບປົກຄອງກໍາມະສິດສ່ວນຕົວມີຄວາມໝັ້ນຄົງເຂັ້ມແຂງ. ຍ້ອນແນວນັ້ນພວກພຣືດົງຈິ່ງດໍາເນີນການແກ້ໄຂບັນຫາທາງສັງຄົມແບບສັນຕິວິທີໂດຍອີງໃສ່ວິທີການເອື້ອອໍານວຍທາງດ້ານເສດຖະກິດໃນຂົງເຂດການຜະລິດ. ສະຫະກອນ ແລະ ຫົວໜ່ວຍແລກປ່ຽນຂະໜາດນ້ອຍ ພວກເຂົາເລືອກທີ່ຈະປະຕິເສດການຕໍ່ສູ້ທາງດ້ານການເມືອງ ແລະ ທຸກຮູບການເຄື່ອນໄຫວຂອງລັດ ນັບທັງລະບອບຜະເດັດການກໍາມະຊົນ. ທິດສະດີຂອງພວກພຣືດົງມີອິດທິພົນຫຼາຍໃນປະເທດຝຣັ່ງ, ແບນຊິກ, ອີຕາລີ...ເຊິ່ງເປັນເຂດທີ່ການຜະລິດຂະໜາດຍ່ອຍມີບົດບາດສູງ ຂະບວນການຕໍ່ສູ້ຕ້ານກັບອິດທິພົນຂອງລັດທິ ພຣືດົງ ມີຄວາມຈໍາເປັນເພື່ອແນໃສ່ຍົກສູງຄວາມຮູ້ຄວາມສາມາດໃນການສ້າງຕັ້ງອົງການຈັດຕັ້ງຂອງຊົນຊັ້ນກໍາມະກອນ.

ກອງປະຊຸມໃຫຍ່ຄັ້ງທີ1 ໄຂຂຶ້ນທີ່ເຈນນີວານັບແຕ່ວັນທີ 3-8 ກັນຍາ 1866 ມີຜູ້ແທນເຂົ້າຮ່ວມ 60 ຄົນ ທີ່ມາຈາກ 25 ສາຂາຂອງສາກົນທີ1.

ກ່ຽວກັບບັນຫາທາງດ້ານເສດຖະກິດ-ສັງຄົມ ພວກພຣືດົງ ໄດ້ປະຕິເສດຄໍາຮຽກຮ້ອງຂອງກໍາມະກອນໃນການເຮັດວຽກມື້ລະ 8 ຊົ່ວໂມງ ແລະ ການກໍານົດວັນອອກແຮງງານຂອງເດັກນ້ອຍ ຍ້ອນພວກເຂົາຄິດວ່ານັ້ນແມ່ນສາຍພົວພັນສະເພາະທີ່ໄດ້ຮັບການຕົກລົງເຫັນດີໃນສະມາຄົມລະຫວ່າງເຈົ້າຂອງໂຮງງານກັບນາຍຊ່າງ, ພວກເຂົາປະຕິເສດຄໍາຮຽນຮ້ອງໃນການປົກປ້ອງການສິດທີໃນການອອກແຮງງານຂອງແມ່ຍິງ ເພາະພວກເຂົາຄິດວ່າຄວາມສາມາດຂອງແມ່ຍິງແມ່ນການລ້ຽງລູກ, ແຕ່ງຢູ່ຄືວກິນ, ປັດກວາດເຮືອນຊານເທົ່ານັ້ນ. ແຕ່ພວກມາກຊິດໄດ້ບັງຄັບໃຫ້ພວກເຂົາຕ້ອງກໍານົດມື້ເຮັດວຽກໃຫ້ກໍາມະກອນ, ເປັນຕົ້ນແມ່ນເດັກນ້ອຍ, ແລະ ແກ້ໄຂລະບອບການອອກແຮງງານກາງຄືນຂອງຜູ້ຍິງ, ຮຽກຮ້ອງໃຫ້ກໍາມະກອນສາມາດຮຽນໜັງສືໃນລະດັບສາມາດ ແລະ ລະດັບວິຊາຊີບ, ຄຸ້ມຄອງການອອກແຮງງານຂອງແມ່ຍິງ, ລົບລ້າງການເກັບພາສີທາງອ້ອມ, ຮຽກຮ້ອງໃຫ້ມີການປະກອບອາວຸດໃນໝູ່ມະຫາຊົນ.

ກ່ຽວກັບບັນຫາຂອງສະພັນກໍາມະກອນ, ກອງປະຊຸມໄດ້ເດັດດ່ຽວຢຶດໝັ້ນຕິຕ້ານທຸກກົນອຸບາຍຂອງພວກດົງທີ່ຕ້ອງການລົບລ້າງທຸກການຈັດຕັ້ງຂອງຊົນຊັ້ນກໍາມະກອນ ແລະ ຜ່ານມະຕິກອງປະຊຸມທີ່ມີຄວາມໝາຍສໍາຄັນຕໍ່ກັບສະຫະພັນກໍາມະກອນ. ມະຕິກອງປະຊຸມໄດ້ຢືນຢັນວ່າ: ສະຫະພັນກໍາມະກອນມີຄວາມຈໍາເປັນທີ່ສຸດຕໍ່ກັບການຕໍ່ສູ້ລະຫວ່າງພວກນາຍທຶນ ແລະ ຊາວຜູ້ອອກແຮງງານ ແລະ ມີຄວາມສໍາຄັນເປັນການເຕົ້າໂຮມກໍາລັງທີ່ມີ

ການຈັດຕັ້ງ, ເປັນກຳລັງອັນແຂ່ງແກ່ນໃນການລົບລ້າງລະບອບການອອກແຮງງານຮັບຈ້າງ. ການຜ່ານມະຕິກອງປະຊຸມກ່ຽວກັບສະຫະພັນເປັນໄຊຊະນະອັນໃຫຍ່ຫຼວງໜຶ່ງຂອງພວກມາກຊິດ ບໍ່ສະເພາະແຕ່ການເອົາຊະນະຝ່າຍພຣືດົງເທົ່ານັ້ນແຕ່ມັນຍັງແມ່ນການເອົາຊະນະພວກ ລາດຊານ ຢູ່ປະເທດເຢຍລະມັນ ແລະ ຜູ້ນຳພາສະພັນຢູ່ອັງກິດອີກດ້ວຍ.

ໃນມະຕິກ່ຽວກັບບັນຫາສະຫະກອນ ກາກມາກໄດ້ຍົກໃຫ້ເຫັນຢ່າງຈະແຈ້ງວ່າການຈັດຕັ້ງໃນການອອກແຮງງານມີທາດແທ້ທາດແທ້ສັງຄົມນິຍົມ ແມ່ນສາມາດປະຕິບັດໄດ້. ແນໃສ່ເພື່ອປົກປັກຮັກສາແນວຄິດທີ່ຖືວ່າສະຫະກອນເປັນເສັ້ນທາງດຽວທີ່ຈະສາມາດປົດປ່ອຍການອອກແຮງງານ ແລະ ມະຕິກ່ຽວກັບການປະພັນຕ່າງໆໄດ້. ຖ້າຫາກວ່າຊົນຊັ້ນກຳມະຊີບບໍ່ມີສິດກຳອຳນາດທາງການເມືອງໄດ້ແລ້ວນັ້ນຮູບແບບຂອງສະຫະກອນກໍ່ບໍ່ສາມາດປ່ຽນແປງ ແລະ ລົບລ້າງລັດທິທຶນນິຍົມໄດ້.

ກອງປະຊຸມຍັງໄດ້ປະກາດຖະແຫຼງການສ້າງກົດລະບຽບເພື່ອປາບປາມພວກທີ່ສົມຮູ້ຮ່ວມຄິດກັບຝ່າຍ ພຣູດົງ ກາກມາກຍັງໄດ້ສ້າງຄະນະກຳມະການຊີ້ນຳນຳພາຂອງສາກົນທີ1, ຄະນະບໍລິຫານງານສູນກາງໄດ້ຮັບການເລືອກຕັ້ງອີກຄັ້ງ ທີ່ມີໂຄງປະກອບຄືເກົ່າ.

ພາຍຫຼັງກອງປະຊຸມປິດລົງຂະບວນການນັດຢຸດງານໄໄດ້ເກີດຂຶ້ນໃນທົ່ວບັນດາປະເທດຕ່າງໆ ຍ້ອນຜົນມາຈາກວິກິດການທາງດ້ານເສດຖະກິດໃນປີ ຄ.ສ 1866. ໃນລະດູໃບໄມ້ປົ່ງຂອງປີດຽວກັນນັ້ນ ກຳມະກອນທີ່ທ່າເຮືອລອນດອນແລະ ເອດິນບົວ ໄດ້ທຳການນັດຢຸດງານ ຕໍ່ມາກໍ່ມີຂະບວນການນັດຢຸດງານຂອງກຳມະກອນເຢຍລະມັນ, ແບນຊິກ, ສະວິດເຊີແລນ ໄດ້ນັດຢຸດງານເຊັ່ນກັນ ມາຮອດເດືອນກຸມພາປີ ຄ.ສ 1867 ກຳມະການຢູ່ປະເທດຝຣັ່ງກໍ່ດຳເນີນການນັດຢຸດງານເຊັ່ນກັນ. ພາຍໃຕ້ການຊີ້ນຳຂອງມາກ ສາກົນທີ1 ໄດ້ໃຫ້ການສະໜັບສະໜູນທຸກຂະບວນການລຸກຂຶ້ນຕໍ່ສູ້ດ້ວຍຮູບການສະໜອງງົບປະມານ, ປະກາດໂຄສະນາ, ຂ່າວສານເພື່ອຊ່ວຍເຫຼືອເຊິ່ງກັນ ແລະ ກັນ. ພ້ອມດຽວກັນນັ້ນຂະບວນການຕໍ່ສູ້ທາງການເມືອງຂອງຊົນຊັ້ນກຳມະກອນສາມາດຍາດເອົາໄຊຊະນະມາໄດ້ໃນລະດັບໜຶ່ງ. ໃນປີ ຄ.ສ 1867 ກຳມະກອນຢູ່ທາງພາກເໜືອຂອງເຢຍລະມັນໄດ້ເຂົ້າຮ່ວມການເລືອກຕັ້ງ ແລະ ສາມາດສົ່ງຕົວແທນຂອງຕົນເຂົ້າຮ່ວມກອງປະຊຸມ ນັ້ນກໍ່ຄື ທ່ານ ວິນແຮັມ ລຽບສເນັກ ແລະ ອາວກຸກເຕ ເບແບນ. ໃນເວລາດຽວກັນນັ້ນລັດຖະບານອັງກິດໄດ້ປະກາດກົດໝາຍວ່າດ້ວຍການປະຕິຮູບການເລືອກຕັ້ງໂດຍອະນຸຍາດໃຫ້ກຳມະກອນມີສິດເຂົ້າຮ່ວມໃນການເລືອກຕັ້ງ. ບັນດາການເຄື່ອນໄຫວດັ່ງກ່າວນັ້ນໄດ້ເພີ່ມທະວີຄວາມສາມັກຄີຮ່ວມມືແບບສາກົນຂອງຊົນຊັ້ນກຳມະກອນ ແລະ ເປັນການຍົກສູງຖານະບົດບາດຂອງສາກົນທີ1ໃຫ້ສູງຂຶ້ນຕື່ມອີກ.

ກອງປະຊຸມໃຫຍ່ຄັ້ງທີ2 ໄຂຂຶ້ນທີ່ເມືອງໂລຊານ ປະເທດສະວິດເຊີແລນ ນັບແຕ່ວັນທີ 2-8 ກັນຍາ ປີ ຄ.ສ 1867 ມີຜູ້ແທນເຂົ້າຮ່ວມ 63 ທ່ານ.

ຝ່າຍພຣູດົງມີຄົນຝຣັ່ງ ແລະ ຄົນສະວິດເຊີແລນກວມຈຳນວນພົນຫຼາຍກວ່າໝູ່ ໃນທີ່ປະຊຸມຍັງໄດ້ບັງຄັບໃຫ້ທີ່ປະຊຸມຄົ້ນຄວ້າພິຈາລະນາກ່ຽວກັບບັນຫາການອອກແຮງງານຂອງກຳມະກອນທີ່ເປັນເພດຍິງ ແລະ ເດັກນ້ອຍ, ບັນຫາສະຫະກອນ ທີ່ໄດ້ມີການສະເໜີໃຫ້ແກ້ໄໄຂກ່ອນໜ້ານີ້ແລ້ວອີກຄັ້ງ. ພວກເຂົາເຮັດໃຫ້ກອງປະຊຸມຈຳເປັນໃຫ້ສັດຕະຍາບັນແຕ່ກໍ່ບໍ່ສາມາດຍາດໄດ້ໄຊຊະນະໃນການມີອຳນາດຊີ້ນຳນຳພາໃນສາກົນທີ1 ຄະບໍລິຫານຍັງໄດ້ຮັບການຄັດເລືອກໃຫ້ມີອຳນາດຄືເກົ່າ ແລະ ສຳນັກງານໃຫຍ່ແມ່ນຍັງມີທີ່ຕັ້ງຢູ່ລອນດອນຄືເກົ່າ.

ກອງປະຊຸມໄດ້ຜ່ານມະຕິກ່ຽວກັບການປະຕິຮູບບັນດາພາຫານະຄົມມະນາຄົມຂົນສົ່ງ, ກຳນົດສິດໃນຄວາມເປັນເຈົ້າຂອງແບບລວມສູນໃນການຄອບຄອງວັດຖຸດິບເພື່ອທຳການຜະລິດ ແຕ່ບັນຫາຈັກກະພັດປະຕິຮູບດິນນາກອງປະຊຸມຕ້ອງປະເຊີນກັບການຕໍ່ຕ້ານຂອງຝ່າຍພຣູດົງ ແລະ ຈຳເປັນຕ້ອງເລື່ອນກອງປະຊຸມອອກໄປທີ່ຫຼັງ.

ບັນດາມະຕິສຳຄັນອື່ນໜຶ່ງອີກແມ່ນມະຕິວ່າດ້ວຍການປົດປ່ອຍຊົນຊັ້ນກຳມະກອນ ແຕ່ດ້ານສັງຄົມແມ່ນບໍ່ສາມາດປະຕິບັດໄດ້ຖ້າຫາກວ່າບໍ່ປົດປ່ອຍບັນຫາທາງດ້ານການເມືອງໄດ້. ສະນັ້ນວຽກການການມີສິດອິດສະຫຼະພາບທາງການເມືອງ ຈຶ່ງຖືວ່າເປັນວຽກທີ່ຈະຕ້ອງທຳການດຳເນີນປົດປ່ອຍເປັນວຽກທຳອິດທີ່ສຳຄັນ ແລະ ຈຳເປັນ.

ກອງປະຊຸມໃຫຍ່ຄັ້ງທີ3 ເປີດທີ່ ບຸຍແຊນ ນັບແຕ່ວັນທີ 6-13ກັນຍາ ປີ ຄ.ສ 1868 ຜູ້ແທນເຂົ້າຮ່ວມກອງປະຊຸມເກືອບ 100 ຄົນ ບັນດາວາລະ ແລະ ບົດລາຍງານໃນແຕ່ລະປີຂອງສາກົນທີ 1 ກາກມາກໄດ້ກະກຽມມາເປັນຢ່າງດີ. ຂະບວນການຕໍ່ສູ້ມີຄວາມຮຸນແຮງຂຶ້ນເລື້ອຍໆ ແລະ ຂະບວນການນັດຢຸດງານແຜ່ລາມອອກກວ້າງຢູ່ປະເທດຝຣັ່ງ ແລະ ປະເທດແບນຊິກ ເຮັດໃຫ້ນ້ຳໃຈຕໍ່ສູ້ຂອງກຳມະກອນເພີ່ມທະວີສູງຂຶ້ນ ແລະ ຍັງສົ່ງຜົນສະທ້ອນຕໍ່ກັບພວກພຣູດົງອີກ. ສະພາບການດັ່ງກ່າວສົ່ງຜົນສະທ້ອນຕໍ່ກັບກອງປະຊຸມ.

ກອງປະຊຸມຍັງໄດ້ຄົ້ນຄວ້າ ແລະ ພິຈະລະນາຄືນບາງບັນຫາທີ່ໄດ້ນຳສະເໜີໃນກອງປະຊຸມໃຫຍ່ຄັ້ງທີ1 ຢູ່ເຈນນີວາອີກ ມີຂະບວນການນັດຢຸດງານ, ສ້າງຕັ້ງບັນດາສະມາຄົມຕ່າງໆ ຮຽກຮ້ອງໃຫ້ມີການເຮັດວຽກມື້ລະ 8 ຊົ່ວໂມງ.

ການສົນທະນາເລີ່ມດຸເດືອດຂຶ້ນເມື່ອກອງປະຊຸມໄດ້ເວົ້າເຖິງບັນຫາສິດທິໃນການຄອບຄອງທີ່ດິນ. ກອງປະຊຸມຈຶ່ງໄດ້ທຳການລົງຄະແນນສຽງສ່ວນໃຫຍ່ (ໃນນັ້ນມີ 130 ຄະແນນສຽງເຫັນດີ, 4 ຄະແນນສຽງບໍ່ເຫັນດີ ແລະບໍລົງຄະແນນສຽງ 15 ສຽງ). ໃນນັ້ນກອງປະຊຸມຍັງໄດ້ຜ່ານມະຕິສຳຄັນຈຳນວນໜຶ່ງເພື່ອປ່ຽນກຳມະສິດການຄອບຄອງທີ່ດິນ, ຄອງຊົນລະປະທານ, ເໝືອງແຮ່, ເສັ້ນທາງລົດໄຟ ແລະ ໄຟຟ້າແບບສ່ວນຕົວມາເປັນກຳມະສິດລວມໝູ່. ເຊິ່ງມັນດ້ກາຍເປັນຂີດໝາຍແຫ່ງໄຊຊະນະອັນໃຫຍ່ຫຼວງຂອງລັດທິສັງຄົມນິຍົມກຳມະຊີບຕໍ່ກັບກະແສແນວຄິດຂອງພວກນາຍທຶນນ້ອຍພາຍໃນສາກົນທີ1 . ເຖິງຢ່າງໃດກໍ່ຕາມພວກ ພຣູດົງ ດ້ອອກແຮງຕໍ່ຕ້ານເຮັດໃຫ້ກອງປະຊຸມຕັດສິນໃຈນຳເອົາບັນຫາດັ່ງກ່າວໄປແກ້ໄຂໃນກອງປະຊຸມຄັ້ງຕໍ່ໄປ.

ກອງປະຊຸມໃຫຍ່ທີ່ບຸນແຊນເປີດຂຶ້ນໃນທາມກາງສະພາບທະວີບເອີຣົບພວມເຄັ່ງຕຶງພວມປະເຊີນກັບໄພອັນຕະລາຍຈາກການເກີດສົງຄາມຄັ້ງໃໝ່. ຍ້ອນບັນຫາການຜັນແປຂອງສົງຄາມໄດ້ເກີດຂຶ້ນ ສຸດທ້າຍຈຶ່ງມີການລົງມະຕິກັນແບບປິດລັບໂດຍຖືເອົາການນັດຢຸດງານເປັນວິທີການໜຶ່ງທີ່ມີອິດທິພົນເພື່ອກຳຈັດໄພອັນຕະລາຍຈາກສົງຄາມໄດ້. ແຕ່ ກຸງລອນດອນ, ມາກກ່າວວ່າມະຕິດັ່ງກ່າວແມ່ນບັນດາຄຳສັ່ງ ແລະ ປະໂຫຍກສຸດທີ່ມີຄຸນຄ່າ. ໃນສະພາບການທີ່ຊົນຊັ້ນກຳມະກອນຍັງບໍ່ທັນມີເງື່ອນໄຂຄົບຖ້ວນພໍທີ່ຈະສົ່ງຜົນສະທ້ອນຕໍ່ກັບໄລຍະທີ່ມີການປ່ຽນແປງນັ້ນ. ກອງປະຊຸມໄດ້ມີການປະກາດຍົກເລີກ ແລະ ປະທ້ວງຕໍ່ຕ້ານສົງຄາມ.

ກອງປະຊຸມຍັງໄດ້ປະກາດຮຽກຮ້ອງໃຫ້ຊົນຊັ້ນກຳມະກອນຢູ່ໃນບັນດາປະເທດຕ່າງໆຈຶ່ງໄດ້ເອົາໃຈໃສ່ສຶກສາຄົ້ນຄວ້າບົດປະພັນຂອງກາກມາກທີ່ມີຊື່ວ່າ "ນາຍທຶນ" ທີ່ຫາກໍ່ພິມອອກມາໃນເດືອນສິງຫາ ປີ ຄ.ສ 1867 ແລະ ຕ້ອງການໃຫ້ຊ່ວຍແປປຶ້ມດັ່ງກ່າວເປັນພາສາຂອງຕົນ.

ກອງປະຊຸມບຸຍແຊນສາມາດຍາດເອົາໄຊຊະນະຂັ້ນພື້ນຖານຈາກລັດທິພຣູດົງ, ສາມາດທັບມ້າງທຸກຮູບການເຄື່ອນໄຫວທີ່ມີທາດແທ້ຕ້ອງການຟື້ນຟູລັດທິທຶນນະຍົມໃນສາກົນ ເຮັດໃຫ້ກຸ່ມພຣູດົງແຕກອອກເປັນຫຼາຍກຸ່ມ ແລລະ ເຮັດໃຫ້ມີກຸ່ມຕໍ່ຕ້ານນັບມື້ນັບເພີ່ມຂຶ້ນ ເປັນຕົ້ນແມ່ນ ອັກແລັງ (ຢູ່ປະເທດຝຣັ່ງ) ເດີປາບ( ຢູ່ເຢຍລະມັນ).

**2.ຂະບວນການຕໍ່ສູ້ຕ້ານກັບກຸ່ມສະຫະພາບແຮງງານອັງກິດ ແລະ ພວກລັດຊານຂອງເຢຍລະມັນ.**

ຄຽງຄູ່ກັບການຈັດປະຊຸມທັງ3 ຄັ້ງເພື່ອເພື່ອຕໍ່ສູ້ຕ້ານກັບລັດທິພຣູດົງນັ້ນ  ພວກມາກຊິດຍັງໄດ້ດໍາເນີນການຕໍ່ສູ້ບໍ່ຍອມຈໍານົນຕໍ່ກັບພວກຜູ້ນໍາທີ່ສວຍໂອກາດໃນສະຫະພາບອັງກິດ ແລະ ພວກລັດຊານ ຢູ່ປະເທດເຢຍລະມັນ. ໃນເວລານັ້ນຊົນຊັ້ນກໍາມະກອນອັງກິດມີສະຖານະພາບແຕກຕ່າງໄປຈາກກໍາມະກອນທີ່ທໍາການປົດປ່ອຍໃນຊຸມປີ 40 ຂອງສະຕະວັດທີ 19 ເຊິ່ງເວລານັ້ນເປັນຍຸກທີ່ລັດທິທຶນນິຍົມຢູ່ອັງກິດມີຄວາມຈະເລີນຮຸ່ງເຮືອງ ສະນັ້ນ ຊົນຊັ້ນກໍາມະກອນຈໍານວນໜຶ່ງທີ່ມີເງິນເດືອນສູງມີເງິນສະສົມຈຶ່ງກາຍເປັນຜູ້ມີອໍານາດໃນກຸ່ມຊົນຊັ້ນກໍາມະກອນດ້ວຍກັນເອີ້ນວ່າ “ຊົນຊັ້ນກໍາມະກອນຊຸນນາງ”  ຊະຕາກໍາຂອງພວກເຂົາຕິດພັນສະໜິດແໜ້ນກັບຊົນຊັ້ນນາຍທຶນ. ສະນັ້ນ ພວກເຂົາຈຶ່ງປະຖິ້ມແນວຄິດແຫ່ງການປະຕິວັດອັນຍິ່ງໃຫຍ່ທີ່ມີມາໃນເມື່ອກ່ອນ ຈຶ່ງເຮັດໃຫ້ຜູ້ນໍາຂອງຊົນຊັ້ນກໍາມະກອນບໍ່ຕ້ອງການສືບຕໍ່ນໍາພາກໍາລັງປະຕິວັດຂອງມວນຊົນອີກຕໍ່ໄປ. ມາໃນປີ ຄ.ສ 1866 ບັນດາລັດສະຫະພາບອັງກິດໄດ້ກ້າວເຂົ້າສູ່ຍຸກທີ່ອັງແກນຂະໜານນາມໃຫ້ວ່າ ແມ່ນຍຸກແຫ່ງການຫຼັບໄຫຼໃນລະດູໜາວຂອງອັງກິດ (ຍຸກມືດມົນ)ຂອງຊົນຊັ້ນກໍາມະຊີບ ເຊິ່ງແກ່ຍາວເວລາ ເກືອບ 40 ປີ. ໃນເວລານັ້ນ ບັນດາສະຫະພາບທີ່ສໍາຄັນຕົ້ນຕໍໄດ້ມີການລວມຕົວກັນລະຫວ່າງບັນດາວິຊາຊີບທີ່ມີລັກສະນະແຄບບໍ່ກວ້າງຂວາງ, ມີຄວາມສາມັກຄີກັນໜ້ອຍທີ່ສຸດ ການເຄື່ອນໄຫວວຽກງານມີຈຸດປະສົງພຽງແຕ່ດ້ານເສດຖະກິດເທົ່ານັ້ນ. ພວກເຂົາບໍ່ໄດ້ສົນໃຈທີ່ຈະເຮັດການຕໍ່ສູ້ທາງດ້ານການເມືອງເລີຍ, ບໍ່ມີຕໍ່ສູ້ເພື່ອຮຽກຮ້ອງສິດທິໃນການເລືອກຕັ້ງ ຕ້ານກັບກົດໝາຍວ່າດ້ວຍການຂົດຮີດ ພວກເຂົາຍອມຢູ່ໃຕ້ການປົກຄອງຂອງບັນດາພັກນາຍທຶນ ທີ່ເຂົາໃຫ້ສິດທິພິເສດແກ່ຊົນຊັ້ນກໍາມະກອນຊຸນນາງ. ໂດຍລວມແລ້ວພວກເຂົາຍັງບໍ່ສາມາດຫຼຸດພົ້ນອອກຈາກຂໍ້ຈໍາກັດຂອງລັດທິທຶນນິຍົມ. ບັນດາຜູ້ນໍາຂອງສະຫະພາບອັງກິດ ໄດ້ດໍາລົງຕໍ່ແໜ່ງສໍາຄັນໃນສາກົນທີ 1  ເຈອອດເຊີ ເປັນປະທານ ແລະ ຢູຄຣິເມເຣີ ດໍາລົງຕໍ່າແໜ່ງເປັນເລຂາທິການໃຫຍ່ແຫ່ງ ສາກົນທີ 1 ເຊິ່ງເປັນບ່ອນອີງສໍາຄັນໃຫ້ແກ່ພວກພຣູດົງຢ່າງເຫັນໄດ້ຊັດຈນ. ມາກ ບໍ່ໄດ້ລົດລະການຕໍ່ສູ້ເພື່ອຕ້ານກັບບັນດາອິດທິກໍາລັງຂອງລັດທິສວຍໂອກາດຂອງບັນດາຜູ້ນໍາສະຫະພາບອັງກິດ. ມາຮອດປີ ຄ.ສ 1867 ຕາມການຮຽກຮ້ອງຂອງມາກ ຄະນະບໍລິຫານງານສູນກາງໄດ້ຕັດສິນໃຈປົດຕໍາແໜງຂອງ ເຈອອດເຊີ ເຮັດໃຫ້ເຂົາຈໍາເປັນຕ້ອງລາອອກຈາກຕໍາແໜງປະທານພາຍຫຼັງການດໍາລົງຕໍ່າແໜ່ງໄດ້ 3 ປີທັນທີ.

ບັນຫາການເຮັດສົງຄາມທີ່ສໍາຄັນແມ່ນການຕໍ່ສູ້ເພື່ອປົດປ່ອຍຕົນເອງຂອງປະຊາຊົນບັນດາເຜົ່າຢູ່ ໄອແລນ ແລະ ໄດ້ຖືເອົາບົດຮຽນຄວາມຜິດພາດໃນຂະບວນການປົດປ່ອຍປະຊາຊົນບັນດາເຜົ່າຂອງພວກນາຍທຶນ ເຟຣນັງຢູ່ໄອແລນ ແມ່ນຂະບວນການຕໍ່ສູ້ເພື່ອແຍກຕົວອອກຈາກອັງກິດ. ມາກ ແລະ ອັງແກນໄດ້ຮຽກຮ້ອງໃຫ້ຊົນຊັ້ນກໍາມະກອນຈົ່ງໃຫ້ການສະໜັບສະໜູນຂະບວນການຕໍ່ສູ້ດັ່ງກ່າວນັ້ນ. ການປົດປ່ອຍເພື່ອແຍກຕົວອອກຈາກອັງກິດ. ການຕໍ່ສູ້ປົດປ່ອຍຕົນເອກອອກຈາກອັງກິດຂອງ ໄອແລນ ບໍ່ພຽງແຕ່ຈະມີຄວາມສໍາຄັນຕໍ່ກັບປະຊາຊົນໄອ ແລນເທົ່ານັ້ນ ແຕ່ມັນຍັງມີລັກສະນະການຕໍ່ສູ້ເພື່ອການປະຕິວັດເຊິ່ງເປັນເງື່ອນໄຂທໍາອິດໃນການປົດປ່ອຍຕົນເອງຂອງຊົນຊັ້ນກໍາມະກອນອັງກິດ. ສິ່ງນີ້ໄດ້ຍົກສູງນໍ້າໃຈກົນກໍາມະຊີບຂອງຊົນຊັ້ນກໍາມະກອນ, ລົບລ້າງອິດທິພົນຂອງລັດທິໂຊແວັງ. ກໍາຈັດທຸກຮູບແບບໃນການກົດຂີ່ຂູດຮີດຂອງຊົນຊັ້ນນາຍທຶນທີ່ໄດ້ທໍາການຊື້ຈ້າງຈອບອອຍກໍາມະກອນ

ຈຳນວນໜຶ່ງ. ຕາບໃດທີ່ໄອແລນບໍ່ໄດ້ຮັບການປົດປ່ອຍຕາບນັ້ນຊົນຊັ້ນກຳມະກອນອັງກິດກໍ່ບໍ່ໄດ້ຮັບການປົດປ່ອຍຄື ກັນ. ບັນດາຜູ້ນຳຂອງລັດທິສວຍໂອກາດອັງກິດ ບໍ່ໄດ້ດຳເນີນຕາມນະໂຍບາຍການຕໍ່ຕ້ານການສະໜັບສະໜູນການ ເປັນທາດ . ກາກມາກໄດ້ດຳເນີນການຕໍ່ສູ້ຢ່າງບໍ່ອິດເມື່ອໃນການຕໍ່ສູ້ຕ້ານຄືນ, ເພື່ອນຳສະເໜີຕໍ່ຄະນະກຳມະການ ບໍລິຫານການນຳພາໃນການເຮັດສົງຄາມເພື່ອປະທ້ວງຕ້ານການຈັກກຸມຄຸມຂັງ ສະມາຊິກຝ່າຍ ເພນັງຈຳນວນ 4 ຄົນ ໃນເດືອນພະຈິກ 1867, ຮຽກຮ້ອງໃຫ້ມີການການປະນາມການຮຸກຮານຂອງລັດຖະບານອັງກິດຢ່າງກວ້າງຂວາງ ແລະ ທວງໃຫ້ມີການອະໄພຍະໂທດໃຫ້ແກ່ບັນດານັກປະຕິວັດ ໄອແລນ.

ການຕໍ່ສູ້ຕ້ານກັບລັດທິສວຍໂອກາດໄດ້ເກີດຂຶ້ນຢູ່ເຢຍລະມັນຕະຫຼອດເວລາ, ລັດທິລັດຊານ ໄດ້ສິ່ງຜົນ ສະທ້ອນອັນໃຫຍ່ຫຼວງຕໍ່ກັບຊົນຊັ້ນກຳມະກອນ ໂດຍສະເພາະແມ່ນໃນ “ສະຫະພັນກຳມະກອນທົ່ວເຢຍລະມັນ” ຝ່າຍລັດຊານໄດ້ຮ່າງກົດໝາຍທີ່ມີຊື່ວ່າ” ກົດໝາຍເຫຼັກກ່ຽວກັບເງິນເດືອນ” ເພື່ອຕໍ່ຕ້ານກັບຮູບແບບການຕໍ່ສູ້ໂດຍ ການນັດຢຸດງານ ແລະ ການຕໍ່ສູ້ທາງດ້ານເສດຖະກິດ,ຕ້ານກັບການສ້າງຕັ້ງສະຫະພັນກຳມະກອນ. ທຸກ ການເຄື່ອນໄຫວຂອງພວກເຂົາລ້ວນແຕ່ເປັນການຈຳກັດສິດທິທົ່ວໄປໃນການປ່ອນເລືອກຕັ້ງ, ສ້າງຕັ້ງສະມາຄົມການ ຜະລິດພາຍໃຕ້ການຊ່ວຍເຫຼືອງຂອງກຸ່ມຕໍ່ຕ້ານໃນປະເທດປຣັດເຊຍ. ພວກເຂົາຕປະຕິເສດຄວາມສາມາດໃນການ ສ້າງສະຫະພັນກຳມະກອນ-ຊາວນາ ແລະ ເຫັນຊົນຊັ້ນອື່ນທີ່ບໍ່ແມ່ນກຳມະກອນແມ່ນການກຸ່ມຕໍ່ຕ້ານ ແຕ່ຍັງ ກາຍເປັນພັນທະມິດກັບພວກນາຍທຶນ ແລະ ຍັງໄດ້ຜູ້ສຳພັນທະໄມຕີກັບ ບິດມາກປາບປາມຂະບວນການຕໍ່ສູ້ຂອງ ມວນຊົນ.

ໃນຊຸມປີ 60 ຂະບວນການຕໍ່ສູ້ຂອງກະມະກອນເຢຍລະມັນໄດ້ຮັບການຟື້ນຕົວຂຶ້ນມາອີກຄັ້ງ, ຂະບວນການ ຕໍ່ສູ້ຕ້ານກັບອິດທິພົນຂອງພວກນາຍທຶນໃຫຍ່ເລີ່ມມີຄວາມແຂງແກ່ນຂຶ້ນຢ່າງບໍ່ຢຸດຢັ້ງ. . ຍ້ອນໄດ້ຮັບການຊ່ວຍເຫຼືອ ຈາກ ກາກມາກ ບັນດານັກປະຕິວັດເຢຍລະມັນນັ້ນກໍ່ຄື ອາວຊັດ ເບແບນ ແລະ ວິນແຮມ ລຽບສເນັກສ

|  |  |
|---|---|
| **ບິສມາກ Otto von Bismarck** | |
|  |  |
| ອໍກັດສ ເບແບລ August Bebel | |

ໄດ້ນຳພາກຳລັງມວນຊົນ, ກຳມະກອນ ເພື່ອລົບລ້າງອິດທິພົນຂອງລັດທິລັດຊານ. ໃນກອງປະຊຸມບຸຍແຊນລັດທິມາກສາມາດຍາດໄດ້ໄຊຊະນະອັນໃຫຍ່ຫຼວງໃນການປົດປ່ອຍກຳມະກອນເຢຍລະມັນ. ວັນທີ 6 ສິງຫາ 1866 ກອງປະຊຸມ ນູຢາແຣມແບ ຂອງບັນດາສະມາຄົມກຳມະກອນທີ່ປະກອບມີຜູ້ແທນກຳມະກອນກ້າວໜ້າຈຳນວນ 14.000 ຄົນທີ່ເດີນຕາມແນວທາງຂອງສາກົນທີ1. ໃນປີຕໍ່ມາ, ວັນທີ 6 ສິງຫາ 1869 ພັກກຳມະກອນປະຊາທິປະໄຕເຢຍລະມັນໄດ້ຮັບການສ້າງຕັ້ງຂຶ້ນ ຢູ່ ອາຍເຢີນັກສ  ເປັນການໄຂສັງກາດໃໝ່ແຫ່ງການຕໍ່ສູ້ຂອງກຳມະກອນໃນປະເທດເຢຍລະມັນ.

**3.ຂະບວນການຕໍ່ສູ້ຕ້ານກັບພວກບາກຸນິນ**





**ມິຄາອິນ ອາເລັກຊານໂດຣວິກ ບາກູນິນMikhail Aleksandrovich Bakunin**

ມິຄາອິນ ບາກຸນິນ (1814-1876) ກຳເນີດໃນຄອບຄົວຂຸນນາງ ແລະ ເຄີຍເປັນນາຍທະຫານ, ເປັນນັກປະຕິວັດຄົນໜຶ່ງຂອງຣັດເຊຍ ທີ່ຖືກຂັບໄລ່ອອກຈາກປະເທດ ທີ່ໄດ້ເຂົ້າຮ່ວມຂະບວນການຕໍ່ສູ້ຫຼາຍຂະບວນຢູ່ເອີຣົບຕາເວັນຕົກໃນຊຸມປີ 40. ໃນເດືອນພຶດສະພາປີຄ.ສ 1848 ບາກູນິນຖືກຈັບເຂົ້າຄຸກຢູ່ເດຣດສແດນ ປະເທດເຢຍລະມັນ ແລະ ຖືກສົ່ງກັບຄືນໃຫ້ທະຫານຣັດເຊຍ. ຢູ່ໃນຄຸກ ບາກຸນິນ ໄດ້ຂຽນ ຄຳສາລະພາບສົ່ງຫາກະສັດຣັດເຊຍ ເພື່ອ

ຂໍໂທດ. ທ່ານຖືກເນລະເທດໄປຢູ່ ຊີເບລີ ຕໍ່ມາທ່ານຈຶ່ງໂຕນໜີໄປຢູ່ຍີ່ປຸ່ນ ແລະ ອາເມຣິກາ. ລະດູໃບໄມ້ຫຼົ່ນຂອງປີ ຄ.ສ 1864 ໄດ້ເດີນທາງມາກຸງລອນດອນສຸດທ້າຍແມ່ນທ່ານໄດ້ເດີນທາງໄປປະເທດ ອີຕາລີ. ບາກູນິນ ໄດ້ກັບມາເຄື່ອນໄຫວໃນຂະບວນການຕໍ່ສູ້ຂອງກຳມະກອນ ແລະ ໄດ້ກາຍເປັນໃນຜູ້ທີ່ນຳສະເໜີແນວຄິດເສລານິຍົມຕໍ່ລັດຖະບານ ເອີ້ນວ່າ: ແນວຄິດບູການິນ.

ແນວຄິດ ບາກູນິນ ໄດ້ສະແດງໃຫ້ເຫັນແນວຄິດຕໍ່ຕ້ານຂອງພວກນາຍທຶນນ້ອຍຖືກທັບມ້າງພັງທະລາຍລົງຈົນບໍ່ມີແນວຄິດຕໍ່ຕ້ານຍັງຫຼົງເຫຼືອໄວ້ອີກ. ມັນໄດ້ເຮັດໃຫ້ຊົນຊັ້ນນາຍຊ່າງຫັດຖະກຳ, ນາຍທຶນນ້ອຍໃນຕົວເມືອງ ແລະ ຊາວກະສິກອນ ລົ້ມລະລາຍ, ສິ້ນຫວັງ ແລະ ບໍ່ພໍໃຈຢ່າງຍິ່ງ ຈຶ່ງແຍກຕົວອອກຈາກຊົນຊັ້ນກຳມະຊີບ. ມັນໄດ້ກ່າວປະນາມລັດຖະບານ, ຖືວ່າລັດຖະບານແລະ ສາສະໜາເປັນຕົ້ນເຫດແຫ່ງຄວາມທຸກຍາກຂອງມວນມະນຸດ. ຍ້ອນແນວນັ້ນມັນຈຶ່ງຄ້າຍຄືກັບນວຄິດຂອງຝ່າຍພຣູດົງ ຢູ່ບ່ອນວ່າ ເດີນຕາມເສັ້ນທາງໃນການແຍກຕົວອອກຈາກລັດຖະບານ. ຖ້າຫາວ່າພວກພຣູດົງໃຊ້ຄຳເວົ້າໃນການປະຕິຮູບແມ່ນພວກບາກູນິນຈະລົງມືເຮັດການປະຕິວັດທີ່ຮຸນແຮງ. ບຣາກູນິນໄດ້ຮຽກຮ້ອງໃຫ້ລົບລ້າງສິດທິທັງໝົດ ນັບທັງລະບອບຜະເດັດການກຳມະຊີບດ້ວຍການກໍ່ກະບົດ. ນັບທັງການເຄື່ອນໄຫວທັງໝົດທາງການເມືອງຂອງຊົນຊັ້ນກຳມະກອນ. ໄດ້ກາຍເປັນແນວທາງໃນການຕໍ່ສູ້ພາຍໃຕ້ຄຳຂວັນທີ່ວ່າ: ທຸກສິ່ງທຸກຢ່າງເພື່ອບຸກຄົນ ບໍ່ແມ່ນເພື່ອສ່ວນລວມ ນັ້ນໝາຍຄວາມວ່າການຕໍ່ສູ້ເປັນບຸກຄົນແມ່ນປັດໄຈສຳຄັນໃນການປົດປ່ອຍມວນຊົນ. ບາກູນິນຖືເອົາການລົບລ້າງສິດທິຂອງພວກນາຍທຶນເປັນວິທີການໜຶ່ງທີ່ຈະຈຳກັດລັດທິທຶນນິຍົມ. ແນວຄິດຂອງບາກູນິນ ໄດ້ຮັບການເຜີຍແຜ່ຢ່າງກວ້າຂວາງຢູ່ປະເທດ ອີຕາລີ, ສະເປນ, ສະວິດເຊີແລນແລະ ພາກໃຕ້ຂອງປະເທດຝຣັ່ງ ເຊິ່ງເປັນບ່ອນທີ່ຂະແໜງອຸດສະຫະກຳກຳລັງຂະຫຍາຍຕົວ, ພວກນາຍທຶນນ້ອຍກຳອຳນາດ, ການພົວພັນເຄິ່ງສັກດີນາຍັງຄົງຕົວຢູ່, ຊົ້ນຊັ້ນນາຍທຶນນ້ອຍຍັງມີຫຼາຍ.

ແນວຄິດຂອງບາກູນິນ ມີຄວາມຫຼ້າຫຼັງ ແລະ ກົງກັນຂ້າມກັບລັດທິມາກ. ໃນເວລາທີ່ພວກມາກຊິກກຳລັງຕໍ່ສູ້ເພື່ອສ້າງຕັ້ງລະບອບຜະເດັດການກຳມະຊີບ ແຕ່ ບາກູນິນ ພັດຍົກສູງຄັນທຸງຂອງລັດທິຕໍ່ຕ້ານກະບົດ. ໃນເວລາທີ່ຊົນຊັ້ນກຳມະຊີບຕໍ່ສູ້ເພື່ອກຳຈັດຊົນຊັ້ນທີ່ກົດຂີ່ຂູດຮີດ ແຕ່ ບາກູນິນ ພັດຍົກໃຫ້ເຫັນວ່າທຸກຊົນຊັ້ນຕ້ອງມີຄວາມສະເໝີພາບກັນ. ລັດທິມາກ ເຫັນຊົນຊັ້ນກຳມະຊີບເປັນກຳລັງແຮງຕົ້ນຕໍໃນການນຳພາຂະບວນການປະຕິວັດສັງຄົມນິຍົມ ແລະ ເປັນປັດໄຈສຳຄັນໃນການສ້າງຕັ້ງພັກການເມືອງ ແຕ່ບາກູນິນຍັງຊອກຫາກຳລັງຈາກພວກສໍ້ໂກງ, ບໍ່ຍຸດຕິທຳ.

ລະດູໃບໄມ້ປົ່ງຂອງປີ 1864 ບາກູນິນໄດ້ມາພົບປະກັບກາກມາກ ທີ່ກຸງລອນດອນ ແລະ ໄດ້ຕົກລົງກັນສ້າງຕັ້ງສາຢູ່ປະເທດອີຕາລີ. ແຕ່ວ່າບາກູນິນບໍ່ຍອມຮັບບັນດາຫຼັກການຂອງສາກົນ ຈຶ່ງໄດ້ເຮັດທຸກວິທີທາງເພື່ອຕໍ່ສູ້ກັບສາກົນທີ 1.

ກອງປະຊຸມໃຫຍ່ຄັ້ງທີ 4 ຂອງສາກົນທີ1 ໄດ້ໄຂຂຶ້ນ ທີ່ບາເລີ ໃນວັນທີ 6ຫາວັນທີ 11 ກັນຍາ ປີ 1869 ມີຜູ້ແທນເຂົ້າຮ່ວມ78 ຄົນທີ່ມາຈາອັງກິດ, ຝຣັ່ງ, ເຢຍລະມັນ, ສະວິດເຊີແລນ, ສະເປນ ເປັນຄັ້ງທຳອິດທີ່ມີຜູ້ແທນກຳມະກອນຈາກປະເທດອາເມຣິກາເຂົ້າຮ່ວມ. ຕາມຄວາມຕ້ອງການຂອງກຸ່ມຄົນນ້ອຍຄື: ພວກພຣູດົງ, ກອງປະຊຸມໄດ້ມີການປຶກສາຫາລືກັນກ່ຽວກັບບັນຫາສິດໃນການຄອບຄອງທີ່ດິນ. ກອງປະຊຸມໃຫ້ສັດຕະຍາບັນຕໍ່ກັບມະຕິ

ຕົກລົງຂອງກອງປະຊຸມທີ່ບຸຍແຊນກ່ຽວກັບຄວາມຈຳເປັນທີ່ຈະຕ້ອງລົບລ້າງລະບອບຢຶດຖືກຳມະສິດດິນນາ. ກອງປະຊຸມຍັງໄດ້ຕົກລົງເຫັນດີຮຽກຮ້ອງໃຫ້ກຳມະກອນທົ່ວທຸກບ່ອນຈົ່ງພ້ອມກັນລຸກຂຶ້ນຕໍ່ສູ້ຕ້ານກັບລະບອບການຂູດຮີດດ້ອຍພາສີ. ຄະນະກຳມະການບໍລິຫານສູນກາງສາກົນທີ1 ມີໜ້າທີ່ປະສານງານສົມທົບກັນລະຫວ່າງບັນດາສະຫະພັນທະລັດ. ກອງປະຊຸມຍັງໄດ້ອະພິປາຍກັນຢ່າງດຸເດືອດລະຫວ່າງພວກມາກຊິດ ກັບພວກບາກູນິນກ່ຽວກັບສິດທິໃນການສືບທອດມໍລະດົກ. ບາກູນິນເຫັນວ່າການລົບລ້າງສິດທິໃນການສືບທອດດ້ວຍກົດໝາຍໃນສັງຄົມຂອງນາຍທຶນ ແມ່ນວິທີການທີ່ຄ່ອຍໆຫັນປ່ຽນສິດທິໃນການຄອບຄອງທີ່ດິນສ່ວນບຸກຄົນມາເປັນທີ່ດິນແບບລວມໝູ່. ມາກໄດ້ຊີ້ແຈງໃຫ້ເຫັນວ່າມັນບໍ່ແມ່ນແບບນັ້ນທ່ານໄດ້ຍົກໃຫ້ເຫັນວ່າ ສິ່ງນັ້ນຈະບໍ່ສາມາດເກີດຂຶ້ນໄດ້ຢ່າງແນ່ນອນຖ້າຫາກວ່າພວກນາຍທຶນ ແລະ ເຈົ້າທີ່ດິນຍັງຄອບຄອງກຳມະສິດຢູ່. ນີ້ເປັນກົນອຸບາຍຂອງພວກບາກູນິນທີ່ຕ້ອງການໃຫ້ເຂົ້າໃຈຜິດ. ກອງປະຊຸມໄດ້ລົງຄະແນນສຽງເຫັນວ່າຄົນສ່ວນຫຼາຍມີທ່າອ່ຽງໄປກັບຝ່າຍຄ້ານ. ພໍເຖິງເວລາລົງມະຕິກ່ຽວກັບການສັບຊ້ອນບຸກຄະລາກອນເຂົ້າໃນການຈັດຕັ້ງ ບາກູນິນ ແມ່ນປຣາໄຊ ເຮັດໃຫ້ເຂົາໝົດໂອກາດໃນການກ້າວມາເປັນຜູ້ນຳຂອງສາກົນທີ 1ຢ່າງສິ້ນເຊີງ.

# ເອກະສານອ້າງອີງ

ວູ໊ເຢືອງນາມ ແລະ ຫງວຽນວັນໂຮ່ງ, ປະຫວັດສາດໂລກສະໄໝໃໝ່ (ປະຫວັດສາດໂລກຕາເວັນຕົກສະໄໝໃໝ່ ບົດທີ 6-ບົດທີ 9).

# ປະຫວັດຜູ້ແປ

## 1. ຂໍ້ມູນສ່ວນຕົວ.



| | |
|---|---|
| ຊື່ນາມສະກຸນ | ນາງ ສີງອໍາໄພ ພິມພາພອນ |
| ວັນ, ເດືອນ, ປີເກີດ | 25 ພຶດສະພາ 1984 |
| ສະຖານທີ່ເກີດ | ບ້ານເລົ່າງາມ ເມືອງເລົ່າງາມ ແຂວງສາລະວັນ. |
| ບ່ອນຢູ່ປັດຈຸບັນ | ບ້ານນາໂດນ ເມືອງສາລະວັນ ແຂວງສາລະວັນ. |

## 2. ປະຫວັດການສຶກສາ.

| | |
|---|---|
| ປະຖົມສຶກສາ | ໂຮງຮຽນປະຖົມບ້ານເລົ່າງາມ, ເມືອງເລົ່າງາມ, ແຂວງສາລະວັນ. |
| ມັດທະຍົມຕອນຕົ້ນ | ໂຮງຮຽນ ມ.ສ ເລົ່າງາມ, ເມືອງເລົ່າງາມ, ແຂວງສາລະວັນ. |
| ມັດທະຍົມຕອນປາຍ | ໂຮງຮຽນ ມ.ສ ເລົ່າງາມ, ເມືອງເລົ່າງາມ, ແຂວງສາລະວັນ. |
| ປະລິນຍາຕີ | ມະຫາວິທະຍາໄລແຫ່ງຊາດ, ຄະນະສຶກສາສາດ, ຄູປະຫວັດສາດ |
| ປະລິນຍາໂທ | ມະຫາວິທະຍາໄລສ້າງຄູຖາຍຫງວຽນ, ສສ ຫວຽດນາມ ສາຂາປະຫວັດສາດຫວຽດນາມ. |